# ການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ໃນພາກພື້ນອາຊີ ຕາເວັນອອກສຽງໃຕ້ ສໍາຫຼັບ ສປປ ລາວ - ງົບປະມານເພີ່ມເຕີມ

## ລະຫັດໂຄງການ ເລກທີ: P170945

## ກອບນະໂຍບາຍກ່ຽວກັບການຈັດສັນ ແລະ ຍົກຍ້າຍຍົກຍ້າຍ

ກະກຽມ ໂດຍ:
**ກົມທາງນໍ້າ ແລະ ສະຖາບັນຄົ້ນຄວ້າໂຍທາ ແລະ ຂົນສົ່ງ**
ກະຊວງໂຍທາທິການ ແລະ ຂົນສົ່ງ
ຖະໜົນ ລ້ານຊ້າງ
ນະຄອນຫຼວງວຽງຈັນ, ສປປ ລາວ

**ສະບັບຮ່າງ 27 ກັນຍາ 2019**

# ສາລະບານ


1.0 ຄຳນຳ ....................................................................................................1

1.1 ຄວາມເປັນມາ.................................................................................. 1

1.2 ລາຍລະອຽດຂອງອົງປະກອບ 1 ຂອງ ງົບປະມານເພີ່ມ AF.....................................3

2.0 ຫຼັກການພື້ນຖານຂອງການຈັດສັນຍົກຍ້າຍ ..........................................................4

3.0 ຂະບວນການ ຈັດສັນຍົກຍ້າຍ ແລະ ການອະນຸມັດ.................................................5

4.0 ປະເພດບຸກຄົນ ທີ່ຖືກຍົກຍ້າຍ ......................................................................8

5.0 ມາດຖານສິດທິຂອງຜູ້ທີ່ຖືກຍົກຍ້າຍ ...............................................................9

6.0 ການປະເມີນກົດໝາຍ ..................................................................................11

7.0 ການປະເມີນມູນຄ່າຊັບສິນ .........................................................................22

8.0 ການຈັດຕັ້ງຂັ້ນຕອນສຳຫຼັບການທົດແທນຄ່າເສຍຫາຍ ..........................................25

9.0 ການເຊື່ອມໂຍງການຈັດສັນຍົກຍ້າຍ ກັບການກໍ່ສ້າງ...............................................38

10.0 ກົນໄກການແກ້ໄຂຄຳຮ້ອງຮຽນ.......................................................................40

11.0 ການກະກຽມ ການລະດົມທຶນໃນການຈັດສັນຍົກຍ້າຍ ............................................44

12.0 ການມີສ່ວນຮ່ວມໃນການປຶກສາຫາລື..............................................................44

13.0 ການຕິດຕາມກວດກາ ແລະ ການລາຍງານ .........................................................45

14.0 ກອບການມອບທີ່ດິນແບບສະມັກໃຈ (VLD).......................................................47

15.0 ງົບປະມານ ເພື່ອຈັດຕັ້ງປະຕິບັດ ກອບນະໂຍບາຍການຈັດສັນຍົກຍ້າຍ.......................49

# ຕາຕະລາງ

ຕາຕະລາງ 1 ການວິເຄາະຊ່ອງຫວ່າງ ລະຫວ່າງ ນະໂຍບາຍການຈັດສັນຍົກຍ້າຍ ຂອງທະນາຄານໂລກ (OP/BP 4.12) ແລະ ດຳລັດ ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກ ໂຄງການພັດທະນາ. ....15

ຕາຕະລາງ 2 ໂຄງຮ່າງສິດທິ. ....21

# ແຜນວາດ

ແຜນວາດ 1 ຂະບວນການຮັບ ແລະ ແກ້ໄຂຄຳຮ້ອງ ຂອງປະຊາຊົນ (GRM) ....43

# ເອກະສານຊ້ອນທ້າຍ

ເອກະສານຊ້ອນທ້າຍ A1 ໂຄງຮ່າງ ແຜນການຈັດສັນຍົກຍ້າຍ

ເອກະສານຊ້ອນທ້າຍ A2 ຫຼັກການການມອບດິນ

ເອກະສານຊ້ອນທ້າຍ A3 ແບບຟອມການມອບດິນສະມັກໃຈ

# ຄຳຫຍໍ້

| | |
|---|---|
| **ARAP** | ແຜນດຳເນີນງານໃນການຈັດສັນຍົກຍ້າຍ ໂດຍຫຍໍ້ |
| **CBO** | ອົງການຈັດຕັ້ງທີ່ມີຊຸມຊົນເປັນຖານ |
| **CSO** | ອົງການຈັດຕັ້ງທາງສັງຄົມ |
| **DIA** | ອົງກອນທີ່ຖືກມອບໝາຍໃນການຈັດຕັ້ງປະຕິບັດ |
| **DOW** | ກົມໂຍທາທິການທາງນໍ້າ |
| **DPWT** | ພະແນກໂຍທາທິການ ແລະ ຂົນສົ່ງ |
| **EGEP** | ແຜນການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ |
| **EGEF** | ກອບການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ |
| **EPL** | ກົດໝາຍປົກປັກຮັກສາສິ່ງແວດລ້ອມ |
| **ESIA** | ການປະເມີນຜົນກະທົບດ້ານສິ່ງງແວດລ້ອມ ແລະ ສັງຄົມ |
| **ESMF** | ກອບຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ |
| **ESMP** | ແຜນຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ |
| **FGD** | ການສົນທະນາກຸ່ມ |
| **GoL** | ລັດຖະບານ ສປປ ລາວ |
| **GRC** | ຄະນະກຳມະການແກ້ໄຂຂໍ້ຮ້ອງຮຽນ |
| **ICT** | ເທັກໂນໂລຢີດ້ານຂໍ້ມູນ ແລະ ການສື່ສານ |
| **IDA** | ອົງກອນການພັດທະນາສາກົນ |
| **IEE** | ການປະເມີນດ້ານສິ່ງແວດລ້ອມ ເບື້ອງຕົ້ນ |
| **LRSP-2** | ໂຄງການຂະແໜງທາງ 2 ໃນ ລາວ |
| **M&E** | ການຕິດຕາມ ແລະ ການປະເມີນຜົນ |
| **MOF** | ກະຊວງການເງິນ |
| **MONRE** | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| **MoICT** | ກະຊວງຖະແຫລງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ |
| **MPI** | ກະຊວງແຜນການ ແລະ ການລົງທຶນ |
| **MPWT** | ກະຊວງໂຍທາທິການ ແລະ ຂົນສົ່ງ |
| **NPA** | ອົງການບໍ່ຫວັງຜົນກຳໄລ |
| **OP/BP** | ນະໂຍບາຍດຳເນີນງານຂອງທະນາຄານໂລກ |
| **PAH** | ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ |
| **PAP** | ບຸກຄົນທີ່ຖືກຜົນກະທົບຈາກໂຄງການ |
| **PDoNRE** | ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ |
| **PDR** | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ |
| **PDO** | ເປົ້າໝາຍພັດທະນາໂຄງການ |
| **PIU** | ໜ່ວຍງານຈັດຕັ້ງປະຕິບັດໂຄງການ |
| **PMU** | ໜ່ວຍງານຄຸ້ມຄອງໂຄງການ |
| **PRO** | ຫ້ອງການຈັດສັນຍົກຍ້າຍໂຄງການ |

| | |
|---|---|
| **RAP** | ແຜນດຳເນີນງານການຈັດສັນຍົກຍ້າຍ |
| **RPF** | ກອບນະໂຍບາຍດ້ານການຈັດສັນຍົກຍ້າຍ |
| **RoI** | ຂອບເຂດທີ່ໄດ້ຮັບຜົນສະທ້ອນ |
| **SDS** | ຊ່ຽວຊານພັດທະນາສັງຄົມ |
| **SEA** | ອາຊີຕາເວັນອອກຊຽງໃຕ້ |
| **SEA DRM** | ການຄຸ້ມຄອງຄວາມສ່ຽງຈາກໄພພິບັດໃນພາກອາຊີຕາເວັນອອກສ່ຽງໃຕ້ |
| **SIA** | ການປະເມີນຜົນກະທົບດ້ານສັງຄົມ |
| **ToR** | ຂອບເຂດໜ້າວຽກ |
| **VRS** | ບ້ານຈັດສັນຍົກຍ້າຍ ຂອງຊຸມຊົນຍ່ອຍ |
| **VLD** | ການມອບດິນແບບສະມັກໃຈ |
| **WB** | ທະນາຄານໂລກ |
| **WBG** | ກຸ່ມທະນາຄານໂລກ |

## ການອະທິບາຍ ຄຳສັບ ແລະ ນິຍາມ

**ຜູ້ທີ່ໄດ້ຮັບຜົນປະໂຫຍດ** - ບຸກຄົນ ຫຼື ຄົວເຮືອນ ໃນໝູ່ບ້ານ ທີ່ສະໝັກໃຈ ເປັນສ່ວນໜຶ່ງຂອງໂຄງການ.

**ການທົດແທນຄ່າເສຍຫາຍ** - ການທົດແທນໃນຮູບແບບເງິນສົດ ຫຼື ໃນຮູບແບບ ທົດແທນຕາມມູນຄ່າດ້ວຍຊັບສິນ.

**ມື້ປິດບັນຊີການລົງທະບຽນ** - ແມ່ນມື້ທີ່ກ່ອນ ທີ່ຈະມີການກຳນົດບຸກຄົນຜູ້ທີ່ຖືກຜົນກະທົບ ທີ່ນຳໃຊ້ທີ່ດິນ ຫຼື ດຳລົງຊີວິດຢູ່ໃນພື້ນທີ່ໂຄງການ ມື້ກຳນົດປິດການລົງທະບຽນຜູ້ທີ່ຖືກຜົນກະທົບນັ້ນ ແມ່ນມີຢູ່ໃນ ແຜນຈັດສັນຍົກຍ້າຍ (RAP). ຕາມທາມະດາແລ້ວຈະເຮັດພ້ອມກັນກັບການສຳຫຼວດຈຳນວນປະຊາກອນທີ່ຖືກຜົນກະທົບທີ່ຢູ່ໃນຂອບເຂດພື້ນທີ່ໂຄງການ, ຫຼືມື້ທີ່ປະກາດໃຫ້ກັບປະຊາຊົນກ່ຽວກັບວຽກງານການກໍ່ສ້າງອັນເປັນສາເຫດທີ່ຕ້ອງມີການຍົກຍ້າຍ. ບຸກຄົນ ທີ່ບໍ່ໄດ້ນອນໃນການສຳຫຼວດ, ຍ້ອນວ່າ ພວກເຂົາບໍ່ໄດ້ດຳລົງຊີວິດຢູ່ໃນພື້ນທີ່ດັ່ງກ່າວ, ບໍ່ມີຊັບສິນ, ຫຼື ບໍ່ມີລາຍຮັບ ຈາກ ເຂດໂຄງການ, ຈະບໍ່ມີສິດໄດ້ຮັບ ການທົດແທນຄ່າເສຍຫາຍ ແລະ ສິດຜົນປະໂຫຍດໃດໆທັງນັ້ນ.

**ບຸກຄົນທີ່ຈະໄດ້ຮັບການທົດແທນ** - ໝາຍເຖິງ ທຸກຄົນທີ່ ມີລາຍຊື່ໃນບັນຊີ ກິດຈະກຳ ທີ່ກ່າວມາຂ້າງເທິງ, ທີ່ມີ (1) ມາດຕະຖານການຄອງຊີບ ຖືກຜົນກະທົບ, ຫຼື (2) ສິດທິ, ໜັງສືກຳມະສິດ, ຫຼັງຄາເຮືອນ, ທີ່ດິນ (ລວມເຖິງທີ່ດິນ ເຮັດການກະເສດ, ທົ່ງຫ້ຍາລ້ຽງສັດ) ຫຼື ຊັບສິນ ອື່ນໆທີ່ ຄົງທີ່ ຫຼື ເຄື່ອນຍ້າຍໄດ້ ຫຼືການຄອບຄອງແບບຊົ່ວຄາວ ຫຼື ແບບຖາວອນ. (3) ການເຂົ້າເຖິງ ຊັບສິນເຮັດການຜະລິດທີ່ຖືກຜົນກະທົບ ແບບຊົ່ວຄາວ ຫຼື ຖາວອນ. ຫຼື (4) ທຸລະກິດ, ອາຊີບ, ວຽກເຮັດງານທຳ ຫຼື ທີ່ຢູ່ອາໄສໄດ້ຮັບຜົນກະທົບ; ຂອງ “ບຸກຄົນທີ່ຈະໄດ້ຮັບການທົດແທນ” ໝາຍເຖິງ ທຸກຄົນທີ່ໄດ້ມີການທົດແທນ.

**ຜູ້ຖືກຳມາສິດທີ່ດິນ** - ໝາຍເຖິງ ບຸກຄົນທີ່ຖືກຜົນກະທົບ ຊຶ່ງເປັນຜູ້ທີ່ (a) ມີໃບກຳມາສິດຄອບຄອງທີ່ດິນ; ຫຼື (b) ບໍ່ມີ ໃບກຳມາສິດຄອບຄອງທີ່ດິນ ແຕ່ ເປັນຄົນຈັບຈອງທີ່ດິນ ທີ່ສາມາດ ອອກໃບ ກຳມາສິດຄອບຄອງທີ່ດິນຕາມກົດໝາຍວ່າດ້ວຍທີ່ດິນ ແຫ່ງ ສປປ ລາວ ລວມເຖິງ ສິດທິທາງຜົນປະໂຫຍດຈາກທີ່ດິນດັ່ງກ່າວ.

**ສິດທິດ້ານການທົດແທນ** - ຂອບເຂດຂອງມາດຕະການ ລວມມີການທົດແທນຄ່າເສຍຫາຍ, ການສະໜັບສະໜູນຟື້ນຟູລາຍຮັບ, ການໃຫ້ຄວາມຊ່ວຍເຫຼືອ, ສິ່ງທີ່ທົດແທນລາຍຮັບ, ແລະ ການຊ່ວຍເຫຼືອການຍົກຍ້າຍແກ່ບຸກຄົນທີ່ຖືກຜົນກະທົບ, ແມ່ນຂຶ້ນກັບ ປະເພດການສູນເສຍຂອງແຕ່ລະບຸກຄົນ, ເພື່ອທີ່ຈະຟື້ນຟູ ສະພາບເສດຖະກິດ ແລະ ສັງຄົມໃຫ້ກັບພວກເຂົາ.

**ຄົວເຮືອນ** - ໝາຍເຖິງ ທຸກຄົນ ທີ່ອາໄສ ແລະ ກິນເຂົ້າ ນຳກັນໃນຫຼັງຄາເຮືອນດຽວກັນ ເປັນຫົວໜ່ວຍໜຶ່ງ ຂອງສັງຄົມ.

**ການຟື້ນຟູລາຍຮັບ** - ໝາຍເຖິງ ການສ້າງແຫຼ່ງລາຍຮັບ ແລະ ຊີວິດການເປັນຢູ່ ຂຶ້ນໃໝ່ ໃຫ້ກັບ ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ (PAHs) ຢ່າງໜ້ອຍໃຫ້ຢູ່ໃນລະດັບ ທີ່ເທົ່າກັບກ່ອນເກີດມີໂຄງການ.

**ການປັບປຸງ** - ການສ້າງຕັ້ງໂຄງຮ່າງ (ຫົວໜ່ວຍ, ຮົ້ວ, ຄອກໝູ, ສາລານັ່ງພັກຜ່ອນ, ສິ່ງອານວຍຄວາມສະດວກໃນຊຸມຊົນ, ຮ້າງຮ້ານ, ໂຮງເກັບເຄື່ອງ ແລະ ອື່ນໆ.) ແລະ ການປູກຜົນລະປູກ/ຕົ້ນໄມ້, ຄົວເຮືອນ, ສະຖາບັນ ຫຼື ອົງກອນ.

**ການຫຍັບຍ້າຍທີ່ດິນ** - ເປັນຂະບວນການ ທີ່ບຸກຄົນຕ້ອງສູນເສຍຄວາມເປັນເຈົ້າຂອງທີ່ດິນຂອງຕົນໄປ, ສູນເສຍການຊົມໃຊ້ ຫຼື ການເຂົ້າເຖິງພື້ນທີ່ດິນດັ່ງກ່າວແບບບໍ່ສະໝັກໃຈ ໃຫ້ກັບການພັດທະນາໂຄງການ. ການຫຍັບຍ້າຍທີ່ດິນ ອາດພາໃຫ້ມີຜົນກະທົບອື່ນໆທີ່ກ່ຽວຂ້ອງຕາມມາ, ລວມເຖິງ ການສູນເສຍທີ່ຢູ່ອາໄສ ຫຼື ຊັບສິນຄົງທີ່ອື່ນໆ (ຮົ້ວ , ນ້ຳສ້າງ, ສຸສານ, ຫຼື ສິ່ງປຸກສ້າງອື່ນໆ ຫຼື ການປັບປຸງຕ່າງໆ ທີ່ຢູ່ຕິດກັບພື້ນທີ່ດິນດັ່ງກ່າວ).

**ເຈົ້າໜ້າທີ່ຂອງໂຄງການ** - ໝາຍເຖິງ ກະຊວງໂຍທາທິການ ແລະ ຂົນສົ່ງ (MPWT), ກະຊວງແຜນການ ແລະ ການລົງທຶນ (MPI), ກະຊວງການເງິນ (MoF), ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (MoNRE), ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (MoICT).

**ບຸກຄົນ ທີ່ຖືກຜົນກະທົບ ຈາກໂຄງການ (PAP) ຫຼື ຄົວເຮືອນ ຖືກກະຜົນທົບຈາກໂຄງການ (PAH) -** ລວມທັງໝົດທຸກຄົນ, ຄົວເຮືອນ, ນິຕິບຸກຄົນ, ອົງກອນ, ບໍລິສັດ ຫຼື ສະຖາບັນເອກະຊົນ ຜູ້ທີ່ນອນຢູ່ໃນບັນຊີລາຍຊື່ທີ່ຈະຖືກຜົນກະທົບຈາກໂຄງການໃນດ້ານຕ່າງໆຂອງພວກເຂົາ: (i) ມາດຕະຖານການດຳລົງຊີວິດ ຖືກຜົນກະທົບ, (ii) ສິດທິ, ເອກະສານຄອບຄອງກຳມະສິດ, ຫຼື ຊັບສິນຕ່າງໆໃນແຕ່ລະຫຼັງຄາເຮືອນ, ທີ່ດິນ (ລວມເຖິງ ທີ່ຢູ່ອາໄສ, ການຄ້າຂາຍ, ການກະສິກຳ, ປ່າໄມ້, ສວນ, ທົ່ງຫຍ້າລ້ຽງສັດ, ແລະ/ການຈັດການທີ່ດິນ), ແຫຼ່ງນ້ຳ, ໜອງປາ, ບໍລິເວນຫາສັດນ້ຳຂອງຊຸມຊົນ, ໄມ້ໃຫ້ໝາກ ແລະ ຕົ້ນໄມ້, ຫຼື ຊັບສິນທີ່ສາມາດເຄື່ອນທີ່ ຫຼື ຄົງທີ່, ການຄອບຄອງ, ການຈຳກັດ, ຫຼື ຜົນກະທົບອື່ນໆທັງໃນໄລຍະຊົ່ວຄາວ ຫຼື ຖາວອນ (iii) ທຸລະກິດ, ວຽກເຮັດງານທຳ, ສະຖານທີ່ເຮັດວຽກຫຼືທີ່ຢູ່ອາໄສ, ຫຼືທີ່ຢູ່ອາໄສຖືກຜົນກະທົບ ທັງແບບຊົ່ວຄາວ ຫຼື ຖາວອນ, ນັບທັງ ພາກສ່ວນທີ່ຖືກຜົນກະທົບທີ່ບໍ່ໄດ້ມີການຍົກຍ້າຍ .

**ການຟື້ນຟູ** - ໝາຍເຖິງ ການຊ່ວຍເຫຼືອ ຜູ້ທີ່ໄດ້ຮັບຜົນກະທົບທີ່ຮ້າຍແຮງ ຍ້ອນການສູນເສຍຊັບສິນທີ່ໃຫ້ຜົນຜະລິດ, ລາຍຮັບ, ວຽກເຮັດງານທຳ ຫຼື ແຫຼ່ງຂອງການດຳລົງຊີວິດ, ເພື່ອເສີມກັບການທົດແທນຄ່າເສຍຫາຍຂອງຊັບສິນ, ເພື່ອໃຫ້ການຟື້ນຟູ ມາດຕະຖານການດຳລົງຊີວິດ ແລະ ຄຸນນະພາບຊີວິດທີ່ເຕັມຮູບແບບ. ຊຶ່ງລຳພັງອາໄສແຕ່ການທົດແທນຄ່າເສຍຫາຍ ແມ່ນຈະບໍ່ໄດ້ເຮັດໃຫ້ການຟື້ນຟູທີ່ເຕັມສ່ວນ.

**ການປະເມີນມູນຄ່າທົດແທນ** - ເປັນວິທີການປະເມີນມູນຄ່າຂອງຊັບສິນ ທີ່ກຳນົດຈຳນວນມູນຄ່າທົດແທນທັງໝົດ ເພື່ອຈະທົດແທນໃຫ້ແກ່ຊັບສິນທີ່ສູນເສຍໄປ, ລວມເຖິງທຸກລາຍການໃຊ້ຈ່າຍໃນການດຳເນີນທຸລະກຳຂອງຊັບສິນດັ່ງກ່າວ. ໄດ້ມີການກຳນົດ ການທົດແທນຄ່າເສຍຫາຍ ດັ່ງຕໍ່ໄປນີ້: ສຳລັບດິນກະສິກຳ, ມັນແມ່ນ ກ່ອນໂຄງການ ຫຼື ກ່ອນການຍົກຍ້າຍ, ອັນໃດສູງກ່ວາ, ມູນຄ່າຕາມທ້ອງຕະຫຼາດ ຂອງ ທີ່ດິນທີ່ມີທ່າແຮງໃນການເພາະປູກ ຫຼື ໃຊ້ດິນທີ່ຖືກຜົນກະທົບໃນບໍລິເວນອ້ອມຂ້າງ, ບວກກັບ ຄ່າໃຊ້ຈ່າຍ ໃນການກະກຽມ ທີ່ດິນ ໃນລະດັບໃກ້ຄຽງກັນແທນທີ່ດິນທີ່ຖືກຜົນກະທົບ, ບວກກັບ ຄ່າໃຊ້ຈ່າຍຕ່າງໆ ໃນການລົງທະບຽນ ແລະ ພາສີອາກອນ. ສຳລັບດິນໃນເຂດຕົວເມືອງ, ມູນຄ່າຕາມ ທ້ອງຕະຫຼາດ ແລະ ຂຶ້ນກັບ ຂະໜາດ ແລະ ການນຳໃຊ້ ໃນຊ່ວງກ່ອນການຍົກຍ້າຍ, ໃຫ້ໃກ້ຄຽງ ຫຼື ປັບປຸງ ສິ່ງອຳນວຍຄວາມສະດວກ ໃຫ້ແກ່ ລະບົບໂຄ່ງລາງພື້ນຖານ ແລະ ການ ບໍລິການ ແລະ ຕັ້ງຢູ່ໃນບໍລິເວນອ້ອມຂ້າງດິນຖືກຜົນກະທົບ, ບວກກັບ ຄ່າໃຊ້ຈ່າຍຕ່າງໆ ໃນການລົງທະບຽນ ແລະ ພາສີອາກອນ. ສຳລັບບ້ານ ຫຼື ສິ່ງປູກສ້າງຕ່າງໆ, ວັດສະດຸໃນການກໍ່ສ້າງສິ່ງປູກສ້າງທີ່ຈະຍົກຍ້າຍໄປ ແມ່ນຕາມລາຄາທ້ອງຕະຫຼາດ, ໃນສະຖານທີ່ ແລະ ຄຸນນະພາບ ໃກ້ຄຽງ ຫຼືດີກ່ວາ ສິ່ງປຸກສ້າງໂຕຖືກຜົນກະທົບ, ຫຼືປ້ອແປງ ສິ່ງປຸກສ້າງມທີ່ຖືກຜົນກະທົບ, ບວກກັບຄ່າຂົນສົ່ງວັດສະດຸກໍ່ສ້າງ ເຖິງສະຖານທີ່ປຸກສ້າງ, ບວກກັບຄ່າແຮງງານກຳມະກອນ ແລະ ຄ່າທຳນຽມຜູ້ຮັບ ເໝົາ, ບວກກັບ ຄ່າໃຊ້ຈ່າຍຕ່າງໆ ໃນການລົງທະບຽນ ແລະ ພາສີອາກອນ. ໃນການກຳນົດ ຄ່າທົດແທນ, ຄ່າເຊື່ອມໂຊມ ແລະຄ່າຟື້ນຟູ ຂອງຊັບສິນ ບໍ່ໄດ້ນຳເຂົ້າໃນການຄິດໄລ່ຄ່າທົດແທນ, ບໍ່ໄດ້ເປັນມູນຄ່າຜົນປະໂຫຍດທີ່ຈະໄດ້ຮັບຈາກໂຄງການ, ຊຶ່ງມູນຄ່ານີ້ຈະຖືກຕັດອອກ ຈາກລາຍການທົດແທນຄ່າເສຍຫາຍ. ໃນບ່ອນທີ່

ກົດໝາຍພາຍໃນປະເທດ ບໍ່ຊອດຄ່ອງກັບມາດຕະຖານຂອງການທົດແທນຄ່າເສຍຫາຍ ເຕັມຮູບແບບ, ການທົດແທນຄ່າເສຍຫາຍ ພາຍໃຕ້ກົດໝາຍໃນປະເທດ ຈະມີມາດຕະການເພີ່ມເຕີມ ເພື່ອໃຫ້ ເປັນໄປຕາມ ມາດຕະຖານການທົດແທນຄ່າເສຍຫາຍ. ການຊ່ວຍເຫຼືອເພີ່ມເຕີມດັ່ງກ່າວ ແຕກຕ່າງຈາກ ມາດຕະການໃນການຈັດສັນຍົກຍ້າຍທີ່ຢູ່ພາຍໃຕ້ ນະໂຍບາຍເລກທີ OP 4.12, Para. 6.

**ການສຶກສາຕົ້ນທຶນທົດແທນ (RCS)** - ເປົ້າໝາຍຫຼັກຂອງ RCS ຄືການກໍານົດອັດຕາທີ່ດິນຕາມການບັນທຶກການໂອນມອບທີ່ເກີດຂຶ້ນ, ຂອງໂຄງສ້າງ ແລະ ຊັບສິນອື່ນໆ ທີ່ໄດ້ຮັບຜົນກະທົບຫຼັກ ແລະ ສໍາຮອງ[1] . ການສຶກສານີ້ຄວນຈັດຕັ້ງປະຕິບັດ ໂດຍພາກສ່ວນອິດສະຫຼະ. ອີງຕາມຜົນຂອງ RCS, ຄອບຄົວທີ່ໄດ້ຮັບຜົນກະທົບຈາກໂຄງການຈະໄດ້ການທົດແທນຕາມລາຄາທ້ອງຕະຫຼາດ (ຈາກລາຄາຕະຫຼາດ) ຈາກ RoUM ຈາກການສູນເສຍທີ່ດິນ ແລະ ຊັບສິນ ເນື່ອງຈາກໂຄງການຍ່ອຍ . RCS ຈະຖືກຈັດຕັ້ງປະຕິບັດໃນຊ່ວງ DMS.

**ການຈັດສັນຍົກຍ້າຍ** - ໝາຍເຖິງ ທຸກມາດຕະການ ຄວນຖືກນໍາໃຊ້ ເພື່ອຫຼຸດຜ່ອນ ຜົນກະທົບ ຈາກໂຄງການ ຕໍ່ກັບ ຊັບສິນ ແລະ/ຫຼື ຊີວິດການເປັນຢູ່ຂອງຜູ້ຖືກຜົນກະທົບ, ລວມເຖິງ ການທົດແທນຄ່າເສຍຫາຍ, ການຍ້າຍຖິ່ນຖານ (ທີ່ກ່ຽວຂ້ອງ) ແລະ ການຟື້ນຟູຕາມຄວາມຈໍາເປັນ.

**ຫົວໜ່ວຍລາຄາຂອງທີ່ດິນ** - ຜົນກະທົບຂອງດິນສ່ວນບຸກຄົນ ມັກຕົກຢູ່ພາຍໃຕ້ປະເພດທີ່ດິນ ທີ່ຢູ່ອາໄສ ຫຼື ດິນ ຄ້າຂາຍ. ວິທີການຫາຂໍ້ມູນ ຈາກອັດຕາທ້ອງຕະຫຼາດ ຄືຂະບວນການເກັບກໍາຂໍ້ມູນການຂາຍທີ່ດິນລ່າສຸດ ໃນບໍລິເວນດິນໃກ້ຄຽງໂຄງການຍ່ອຍ. ວິທີການສໍາລັບເກັບກໍາຂໍ້ມູນ ລວມທັງການສໍາພາດໂດຍກົງ (i) ຕົວແທນໜ່ວຍງານຄ້າຂາຍທີ່ດິນໃນເຂດສູນກາງທຸລະກິດ CBD, (ii) ເຈົ້າຂອງທີ່ດິນທີ່/ບໍລິເວນໃກ້ຄຽງໂຄງການຍ່ອຍ ຜູ້ທີ່ເປັນຄອບຄົວຖືກກະທົບຈາກໂຄງການການ ແລະ ຄອບຄົວທີ່ບໍ່ຖືກຜົນກະທົບຈາກໂຄງການ, ແລະ (iii) ອໍານາດການປົກຄອງທ້ອງຖິ່ນທີ່/ບໍລິເວນໃກ້ຄຽງໂຄງການຍ່ອຍ. ຕາມຜົນໄດຮັບຂອງ RCS, ລາຄາທີ່ດິນຈະລວມທັງຫຼັກຖານການເປັນເຈົ້າຂອງ, ສິ່ງປຸກສ້າງ ແລະ ຊັບສິນອື່ນໆໃນທີ່ດິນ.

**ລາຄາສໍາລັບສິ່ງປຸກສ້າງ** - ເຮືອນ/ໂຄງສ້າງທີ່ຖືກກະທົບຈາກໂຄງການຍ່ອຍ ຈະຖືກຈັດໃນສອງປະເພດຫຼັກ - ເຮືອນ/ທີ່ຢູ່ອາໄສ ແລະ ໂຄງສ້າງອື່ນໆ. ວິທີໃນການກໍານົດລາຄາ ເຮືອນ/ ໂຄງສ້າງ ລວມເອົາ ການສໍາຫຼວດ ຈໍານວນ ແລະການວັດແທກລະອຽດ ຂອງອົງປະກອບຕ່າງໆຂອງໂຄງສ້າງ ແລະ ກໍານົດລາຄາ ຂອງເຮືອນ/ໂຄງສ້າງຕາມລາຄາທ້ອງຕະຫຼາດ. ສິ່ງປຸກສ້າງອື່ນ ເຊັ່ນ: ນໍ້າສ້າງ ແລະ ຮົ້ວ, ແລະ ຊັບສິນດ້ານວັດທະນາທໍາເຊັ່ນ ທາດ, ຈະຖືກຊົດເຊີຍຕາມລາຄາທ້ອງຕະຫຼາດ, ແລະ ຈະມີການກໍານົດຜົນຂອງອັດຕາລາຄາ ໂຄງສ້າງສະເພາະ.

**ກຸ່ມທີ່ມີຄວາມອ່ອນໄຫວງ່າຍ (ກຸ່ມທີ່ດ້ອຍໂອກາດ)** - ແມ່ນ ກຸ່ມທີ່ແຕກຕ່າງ ຈາກກຸ່ມຄົນທົ່ວໄປ ເປັນກຸ່ມຄົນ ທີ່ຍອມທົນຕໍ່ກັບຄວາມບໍ່ສະເໝີພາບ ແລະ ປະເຊີນໜ້າກັບຄວາມດ້ອຍໃນສັງຄົມ ຈາກການຈັດສັນຍົກຍ້າຍໂດຍສະເພາະແມ່ນ: (i) ຫົວ ໜ້າຄອບຄົວທີ່ເປັນຜູ້ຍິງ, ຜູ້ສູງອາຍຸ ຫຼື ຄົນພິການ (ii) ຄົວເຮືອນທີ່ມີຖານະທຸກຈົນ, (iii) ຜູ້ບໍ່ມີທີ່ຢູ່ອາໄສ, ແລະ (iv) ກຸ່ມຊົນເຜົ່າ (OP4.10).

---

[1] ນີ້ລວມທັງ ຮົ້ວ, ນໍ້າສ້າງ, ຫ້ອງນໍ້າ, ເຮືອນຄົວ ແລະ ອື່ນໆ

# ຄຳນຳ

ເອກະສານສະບັບນີ້ເອີ້ນວ່າ ກອບນະໂຍບາຍການຍົກຍ້າຍຈັດສັນ (RPF) ໂຄງການງົບປະມານເພີ່ມການຄຸ້ມຄອງຄວາມສ່ຽງໄພພິບັດ ສຳລັບ ສປປ ລາວ ( LDRM-AF ຫຼື ໂຄງການ) ແລະ ຈະໄດ້ນຳໃຊ້ກັບທຸກໆການລົງທຶນທີ່ໄດ້ຮັບການສະໜັບສະໜູນຈາກທະນາຄານໂລກ (WB) ທີ່ກ່ຽວຂ້ອງກັບການຄອບຄອງທີ່ດິນ ແລະ ຈຳກັດການເຂົ້າເຖິງແຫຼ່ງຊັບພະຍາກອນຕາມທີ່ໄດ້ກຳນົດຢູ່ໃນກອບນະໂຍບາຍຄຸ້ມຄອງການຍົກຍ້າຍຈັດສັນໂດຍບໍ່ໄດ້ສະມັກໃຈ (OP/BP 4.12). ກອບນະໂຍບາຍການຍົກຍ້າຍຈັດສັນ (RPF) ນີ້ແມ່ນໄດ້ປັບປຸງຈາກໂຄງການເດີມທີ່ໄດ້ຄຳນຶງເຖິງກິດຈະກຳທີ່ສະເໜີ ເພື່ອໃຫ້ໄດ້ຮັບການສະໜັບສະໜູນດ້ານທຶນຮອນພາຍໃຕ້ຂອງໂຄງການງົບປະມານເພີ່ມ (AF) ແລະ ເປັນສ່ວນໜຶ່ງຂອງກອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF) ສາລັບໂຄງການງົບປະມານເພີ່ມເພື່ອການຄຸ້ມຄອງຄວາມສ່ຽງໄພພິບັດ ສຳລັບ ສປປ ລາວ.

ໜ່ວຍງານຄຸ້ມຄອງໂຄງການ(PMU) ຂອງກົມທາງນ້ຳ (DOW) ຂອງກະຊວງໂຍທາທິການ ແລະ ຂົນສົ່ງ (MPWT) ແລະ ໜ່ວຍງານຈັດຕັ້ງປະຕິບັດໂຄງການທີ່ກ່ຽວຂ້ອງ (PIUs) ກັບຂະແໜງທາງນ້ຳຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງ PWT ໂດຍໄດ້ຮັບການສະໜັບສະໜູນ ແລະ ດ້ານເຕັກນິກຈາກພະແນກຄົ້ນຄວ້າສິ່ງແວດລ້ອມ ແລະ ຄວບຄຸມໄພພິບັດຂອງສະຖາບັນໂຍທາທິການ ແລະ ຂົນສົ່ງ (EDPD / PTRI) ເປັນຜູ່ຮັບຜິດຊອບໃນການຈັດຕັ້ງປະຕິບັດອົງປະກອບໂດຍສະເພາະ,ຮັບປະກັນໃຫ້ມີຄວາມສອດຄ່ອງກັບ CRPF ແລະ ESMF, ລວມທັງການເກັບຮັກສາເອກະສານທີ່ຖືກຕ້ອງໄວ້ໃນບ່ອນເກັບມ້ຽນເອກະສານໂຄງການເພື່ອການກວດສອບໂດຍທະນາຄານໂລກ..

ເອກະສານສະບັບນີ້ຖືວ່າເປັນເອກະສານດິບ ແລະ ສາມາດດັດແປງ ແລະ ປ່ຽນແປງໃໝ່ໄດ້ຕາມສະພາບການ ຫລືຂອບເຂດຂອງກິດຈະກຳ. ໄດ້ມີການປຶກສາຫາລືຢ່າງໃກ້ຊິດກັບທະນາຄານໂລກ ແລະຈຳເປັນຕ້ອງມີການປັບປຸງໃໝ່

1.0 ສະພາບລວມຂອງໂຄງການ

## 1.1 ຄວາມເປັນມາ

ໂຄງການຄຸ້ມຄອງຄວາມສ່ຽຈາກໄພພິບັດໃນພາກພື້ນອາຊີຕາເວັນອອກຊ່ຽງໃຕ້ ສະເພາະ ໃນ ສປປ ລາວ, ທີ່ ກຳລັງຈັດຕັ້ງປະຕິບັດ ໂດຍໄດ້ຮັບທຶນຈາກທະນາຄານໂລກ (WB) ໄດ້ມີຈຸດປະສົງເພື່ອ "ຊ່ວຍຫຼຸດຜ່ອນຄວາມສ່ຽງຈາກໄພນ້ຳຖ້ວມ ແລະ ເຊື່ອມໂຍງທ່າແຮງໃນການລະດົມທຶນຮອນ ເຂົ້າໃນວຽກງານການຄຸ້ມຄອງໄພພິບັດ ສຳລັບ ສປປ ລາວ. ໂຄງການໄດ້ຮັບການອະນຸມັດໃນວັນທີ 6 ກໍລະກົດ 2017 ແລະ ມີຜົນບັງຄັບໃຊ້ໃນວັນທີ 11 ຕຸລາ 2017, ໂດຍມີພັນທະສັນຍາກູ້ຢືມ ຈຳນວນ 30 ລ້ານໂດລາສະຫະລັດ. ໄດ້ມີຈຸດປະສົງການພັດທະນາໂຄງການ (PDO) ເພື່ອຊ່ວຍຫຼຸດຜ່ອນຜົນກະທົບຈາກໄພນ້ຳຖ້ວມ ຢູ່ເມືອງໄຊ ແຂວງອຸດົມໄຊ ແລະ ຍົກສູງຄວາມສາມາດຂອງລັດຖະບານແຫ່ງສປປລາວ (GoL) ເພື່ອສະໜອງການບໍລິການດ້ານອຸຕຸນິຍົມ ແລະ ການຕອບໂຕ້ໄພພິບັດ.ໂຄງການ SEA DRM ໃນ ສປປ ລາວ ປະກອບດ້ວຍ ຫ້າ ອົງປະກອບ ຄື:

**ອົງປະກອບທີ 1 ການຄຸ້ມຄອງຄວາມສ່ຽງໄພນ້ຳຖ້ວມໃນຕົວເມືອງແບບປະສົມປະສານ (13,5 ລ້ານໂດລາສະຫະລັດ).** ອົງປະກອບນີ້ ໂຄງການດັ່ງກ່າວແມ່ນຊ່ວຍໃນການທົດລອງແນວຄວາມຄິດໃນການຄຸ້ມຄອງຄວາມສ່ຽງຈາກໄພນ້ຳຖ້ວມແບບຮອບດ້ານໃນເທດສະບານ ເມືອງໄຊ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ

ຂອງອົງການຈັດຕັ້ງທີ່ປະຕິບັດເພື່ອການວາງແຜນໃນການປັບຕົວ. ອົງປະກອບທີ 1 ແມ່ນຈັດຕັ້ງປະຕິບັດໂດຍກົມທາງນໍ້າ (DOW) ຢູ່ພາຍໃຕ້ກະຊວງໂຍທາທິການ ແລະ ຂົນສົ່ງ (MPWT).

**ອົງປະກອບທີ 2 - ລະບົບທີ່ທັນສະໄໝ ແລະ ລະບົບເຕືອນໄພລ່ວງໜ້າ (10 ລ້ານໂດລາສະຫະລັດ).** ເພື່ອສະໜັບສະໜູນການກະກຽມພ້ອມ ແລະ ຊ່ວຍຫລີກລ້ຽງຄວາມເສຍຫາຍ ແລະ ການສູນເສຍທີ່ບໍ່ຈຳເປັນ, ໂຄງການສະໜັບສະໜູນການປັບປຸງລະບົບທີ່ທັນສະໄໝ ແລະ ລະບົບເຕືອນໄພລ່ວງໜ້າໃນລະດັບຊາດ, ພ້ອມການຕິດຕັ້ງທາງກາຍຍະພາບລວມທັງອ່າງໂຕ່ງນໍ້າອູ,ຊຶ່ງຕັ້ງຢູ່ເມືອງໄຊ. ການລົງທຶນທັງສອງປະເພດຈະເປັນຕົວຢ່າງສຳລັບເມືອງອື່ນໆ ແລະ ອ່າງນໍ້າໃນປະເທດ. ສ່ວນປະກອບທີ 2 ແມ່ນຈັດຕັ້ງປະຕິບັດໂດຍກົມອຸຕຸນິຍົມ ແລະ ອຸທົກກະສາດ (DMH) ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (MONRE),

**ອົງປະກອບທີ່ 3 - ການວາງແຜນທາງດ້ານການເງິນ ເພື່ອການປັບຕົວໄພພິບັດ (5ລ້ານໂດລາສະຫະລັດ).** ເພື່ອສ້າງຄວາມເຂັ້ມແຂງໃນການຄຸ້ມຄອງດ້ານການເງິນ, ໂຄງການຈະຊ່ວຍກຳນົດວິທີການຄວບຄຸມໃນການສະໜອງທຶນ ແລະ ການປະກັນໄພຄວາມສ່ຽງໄພພິບັດ, ເພື່ອພັດທະນາຍຸດທະສາດ DRFI ແຫ່ງຊາດ ແລະໃຫ້ການເຂົ້າເຖິງການປະກັນໄພຄວາມສ່ຽງໄພພິບັດພາຍໃຕ້ອົງປະກອບທີ 3, ຈັດຕັ້ງປະຕິບັດໂດຍແມ່ນກົມສະສົມແຫ່ງລັດ (SRD) ກະຊວງການເງິນ (MOF).

**ປະກອບທີ່ 4 - ການສ້າງຄວາມຮູ້ ແລະ ການປະສານງານ ( 1,5ລ້ານ ໂດລະສະຫະລັດ)** ຈັດຕັ້ງປະຕິບັດໂດຍ ກົມແຜນການ ກະຊວງແຜນການ ແລະ ການ ລົງທຶນ, ອົງປະກອບທີ 4 ;ສະ ໜັບສະໜູນ ການປະສານງານ ແລະ ການຄຸ້ມຄອງໂຄງການໂດຍລວມ, ການສຶກສາ ເພື່ອການເຊື່ອມໂຍງ ກ່ຽວກັບການຄຸ້ມຄອງຄວາມສ່ຽງໄພພິບັດ (DRM) ເຂົ້າໃນການວາງແຜນ ແລະ ການລົງທຶນ, ແລະ ການສະ ໜັບ ສະໜູນການຈັດຕັ້ງປະຕິບັດປະຈຳວັນ.

**ອົງປະກອບທີ 5 - ການຕອບໂຕ້ເຫດການສຸກເສີນ (US$0).** ອົງປະກອບທີ 5 ອະນຸຍາດໃຫ້ຈັດສັນເອົາຕາມເປີເຊັນທີ່ໄດ້ຮັບຈາກອົງປະກອບອື່ນໆ ເພື່ອໃຫ້ການສະໜັບສະໜູນການຟື້ນຟູສຸກເສີນ ແລະ ການກໍ່ສ້າງຄືນໃໝ່ ຫຼັງຈາກເກີດວິກິດການທີ່ເໝາະສົມ

ອົງປະກອບນີ້ຈະໄດ້ພັດທະນາໂດຍຮ່ວມມືກັບກະຊວງການເງິນ ແລະ ກະຊວງຕ່າງໆເພື່ອຮັບປະກັນການປະສານງານທາງນອນໃນລະດັບຊາດໃຫ້ມີປະສິດຕິພາບໃນການກຽມພ້ອມ ແລະ ຕອບໂຕ້ໄພພິບັດ. ສ່ວນປະກອບນີ້ບໍ່ມີຄ່າໃຊ້ຈ່າຍຫຍັງເລີຍ.

ໃນປີ 2018, ສປປລາວໄດ້ປະສົບກັບໄພນໍ້າຖ້ວມຢ່າງແຜ່ຫຼາຍ, ເຊິ່ງສິ່ງຜົນກະທົບຢ່າງຫຼວງຫຼາຍຕໍ່ກັບປະຊາຊົນ ແລະ ເສດຖະກິດ. ເພື່ອຊ່ວຍລຶດຊ່ອງວ່າງທາງດ້ານການເງິນ ແລະ ເພີ່ມຄວາມພະຍາຍາມໃນການຕອບສະໜອງ, ການຈັດຫາງົບປະມານເພີ່ມເຕີມ (AF) ປະມານ 25 ລ້ານໂດລາສະຫະລັດ ທີ່ກຳລັງສະເໜີໃຫ້ອົງປະກອບ 1 ຈັດຕັ້ງປະຕິບັດກິດຈະກຳ ທີ່ຄ້າຍຄືກັນໃນ 2 ແຂວງເພີ່ມເຕີມເຊັ່ນ: ຫຼວງພະບາງ (LPB) ແລະ ບໍລິຄຳໄຊ (BKX). ລາຍລະອຽດຂອງອົງປະກອບ 1 ຂອງເອກະສານ AF ແມ່ນມີໄວ້ໃນພາກ 1.2 ຂ້າງລຸ່ມນີ້.

### 1.2 ລາຍລະອຽດຂອງອົງປະກອບ 1 ຂອງ ງົບປະມານເພີ່ມ AF

ອົງປະກອບ **1** ຈະດຶງເອົາງົບປະມານເພີ່ມ ຈຳນວນ **25** ລ້ານໂດລາສະຫະລັດເພື່ອສ້າງຄວາມເຂັ້ມແຂງໃນການປ້ອງກັນນໍ້າຖ້ວມ ແລະ ການວາງຜັງເມືອງທີ່ມີຄວາມຢືດຢຸ່ນ, ຂະຫຍາຍກິດຈະກຳໂຄງການແມ່ບົດຢູ່ແຂວງອຸດົມໄຊ, ແລະ ເພີ່ມການລົງທຶນໃນການປ້ອງກັນນໍ້າຖ້ວມສອງແຂວງຕື່ມອີກ, ແຂວງຫລວງພະບາງແລະບໍລິຄຳໄຊ

ການປ່ຽນແປງແມ່ນຂຶ້ນກັບອົງປະກອບທີ 1 - ການຄຸ້ມຄອງຄວາມສ່ຽງນໍ້າຖ້ວມໃນຕົວເມືອງແບບປະສົມປະສານລວມມີດັ່ງນີ້:

(ກ) ອົງປະກອບ 1.1 ການລົງທຶນດ້ານໂຄງສ້າງ: ສ່ວນປະກອບນີ້ຈະໄດ້ຮັບການປັບປຸງແກ້ໄຂໃໝ່ ເພື່ອການສະ ໜັບ ສະ ໜູນ ທາງດ້ານການເງິນໃນການກໍ່ສ້າງເຂດປ້ອງກັນຕະຝັ່ງເຈື່ອນ, ການຟື້ນຟູສະພາບອາກາດທີ່ຍືດຢຸ່ນຂອງໂຄງລ່າງພື້ນຖານປ້ອງກັນນໍ້າຖ້ວມ ແລະ ຄູກັນນໍ້າລວມທັງສິ່ງທີ່ເສຍຫາຍຈາກໄພນໍ້າ ຖ້ວມປີ 2018 ຢູ່ບັນດາແຂວງຕໍ່ໄປນີ້

(i) **ຢູ່ແຂວງຫຼວງພະບາງ** ງົບປະມານເພີ່ມ AF ຈະໃຫ້ເງິນຊ່ວຍເຫລືອການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນ ຕາມລຽບແມ່ນໍ້າຄານຕອນລຸ່ມ (ເບື້ອງຂວາ ແລະ ເບື້ອງຊ້າຍ) ເປັນໄລຍະຍາວທັງ ໝົດ 3 ກິໂລແມັດ ແລະ ຕິດຕັ້ງ ປະຕູນໍ້າ 4 ແຫ່ງ ແລະ ປ້ຳນໍ້າ ທີ່ກ່ຽວຂ້ອງ.

(ii) **ຢູ່ໄຊແຂວງອຸດົມໄຊ**, ພື້ນຖານໂຄງລ່າງການຄຸ້ມຄອງຄວາມສ່ຽງນໍ້າຖ້ວມໄດ້ມີການວາງແຜນທີ່ຈະຍົກລະດັບໃຫ້ເປັນ **1** ໃນ **20** ປີ ຜົນຕອບແທນ ໄລຍະເວລາມາດຕະຖານການອອກແບບ. ການວິເຄາະດ້ານການຄຸ້ມຄອງຄວາມສ່ຽງຈາກໄພນໍ້າຖ້ວມແມ່ນໄດ້ດຳເນີນການກະກຽມໂຄງການຂອງແມ່ນໍ້າເຊິ່ງຖືວ່າເປັນວິທີແກ້ໄຂທີ່ມີຜົນປະໂຫຍດສູງ, ງົບປະມານເພີ້ມ(**AF**) ຈະເສີມແຜນການລົງທຶນທີ່ມີໂຄງສ້າງລວມທັງການປ້ອງກັນຕະຝັ່ງເຈື່ອນ, ການຂຸດດິນ, ແລະ ຄວາມໜ້າຢູ່ຂອງຕົວເມືອງເຊັ່ນ ເສັ້ນທາງຍ່າງຂ້າມລຽບຕາມແມ່ນໍ້າ ແລະ ການປູກຕົ້ນໄມ້.

(iii) **ຢູ່ແຂວງ ບໍລິຄໍາໄຊ** ຈະມີການລົງທຶນຈຳກັດ ແລະ ຮີບດ່ວນຈະໄດ້ຮັບການຄຸ້ມຄອງ ເຊິ່ງປະກອບດ້ວຍການປ້ອງກັນຕະຝັ່ງເຈື່ອນ ປະມານ 0,8 ກມ ຢູ່ ລຽບຕາມແຄມນໍ້າຂອງໃນເມືອງປາກຊັນ. ນອກຈາກນີ້, ການປະເມີນຄວາມສ່ຽງໄພນໍ້າ ຖ້ວມລາຍລະອຽດຈະເປັນພື້ນຖານ ສຳ ລັບການລົງທຶນໃນການຄຸ້ມຄອງຄວາມສ່ຽງໄພນໍ້າຖ້ວມຂະ ໜາດໃຫຍ່ໃນອະນາຄົດ, ນອກຂອບເຂດຂອງໂຄງການນີ້.

**(ຂ)** ສ່ວນປະກອບ **1.2:** ການລົງທຶນທີ່ບໍ່ມີໂຄງສ້າງ: ການສຶກສາດ້ານເຕັກນິກ ແລະ ການສໍາຫຼວດທີ່ກ່ຽວຂ້ອງກັບການຄຸ້ມຄອງຄວາມສ່ຽງຈາກໄພນໍ້າ ຖ້ວມ ແລະ ຄວາມຕ້ານທານກັບໄພພິບັດຈະຖືກດຳເນີນການເພື່ອກຳນົດວິທີແກ້ໄຂທີ່ມີໂຄງສ້າງ (ວິສະວະກອນ) ແລະ ວິທີແກ້ໄຂທີ່ບໍ່ເປັນໂຄງສ້າງ (ບໍ່ໄດ້ຮັບການອອກແບບ) ໃນແບບປະສົມປະສານ. ການສຶກສາກ່ຽວກັບນະຄອນຫຼວງວຽງຈັນ ແລະ ບໍລິຄໍາໄຊ: ການສຶກສາດ້ານວິຊາການແລະການ ສຳ ຫຼວດທີ່ກ່ຽວຂ້ອງກັບການຄຸ້ມຄອງຄວາມສ່ຽງຈາກໄພນໍ້າ ຖ້ວມ ແລະ ຄວາມຕ້ານທານກັບໄພພິບັດຈະຖືກດຳເນີນການເພື່ອ ກຳ ນົດວິທີແກ້ໄຂທີ່ມີໂຄງສ້າງ (ວິສະວະກອນ) ແລະ ວິທີການທີ່ບໍ່ເປັນໂຄງສ້າງ (ບໍ່ມີວິສະວະກອນ) ແບບປະສົມປະສານ. ວິທີແກ້ໄຂພື້ນຖານໂຄງລ່າງທີ່ເປັນທຳມະຊາດ ແລະ ສີຂຽວຈະຖືກລວມເຂົ້າໃນການອອກແບບການປັບປຸງພື້ນຖານໂຄງລ່າງ ສຳ ລັບການລົງທຶນທັງ ໝົດ ໂດຍພາຍໃຕ້ງົບປະມານເພີ່ມ (**AF**), ໂດຍມີການສຶກສາຄວາມເປັນໄປໄດ້ກ່ຽວກັບການປັບປຸງພື້ນທີ່ດິນຊຶມນໍ້າໃນເຂດຕົວເມືອງຢູ່ແຂວງຫລວງພະບາງ. ລະບົບພື້ນຖານໂຄງລ່າງ ແລະ ການເກັບກຳ ຂໍ້ມູນ: ຈະໄດ້ຮັບການສະ ໜັບ ສະ ໜູນ ໃຫ້ແກ່ **DOW** ເພື່ອຍົກລະດັບສາງຊັບສິນພື້ນຖານໃນປະຈຸບັນໃຫ້ເປັນລະບົບຄຸ້ມຄອງຊັບສິນທີ່ມີລະບົບປະຕິບັດການອັດຕະໂນມັດແລະຂໍ້ມູນສະພາບການ. ການວາງແຜນຕົວເມືອງ: ການສຶກສາດ້ານວິຊາການເພື່ອທົບທວນນະໂຍບາຍ ແລະ ກອບການວາງແຜນຜັງເມືອງໃນປະຈຸບັນ, ແລະ ແຈ້ງການວາງແຜນຢູ່ບັນດາແຂວງອຸດົມໄຊ ແລະ ບໍລິຄໍາໄຊ, ລວມທັງການກະກຽມແຜນທີ່ພື້ນຖານ **GIS** ພ້ອມກັບແຜນທີ່ມີຢູ່ທັງໝົດ, ການປະເມີນທາງກວ້າງຂອງພື້ນທີ່, ແລະ ແຜນການພື້ນຖານໂຄງລ່າງ ກົນໄກແລະອຸປະກອນໃນການເຝົ້າລະວັງ ແລະ ເຕືອນໄພນໍ້າຖ້ວມ ແລະ ການວາງແຜນສຸກເສີນ: ຕາມຄວາມຕ້ອງການທີ່ໄດ້ລະບຸສາມາດຈັດຫາອຸປະກອນທາງເຕັກນິກພ້ອມກັບການເສີມສ້າງຂີດຄວາມສາມາດຂອງສະຖາບັນເພື່ອກຽມພ້ອມ, ຈັດການ ແລະ ຟື້ນຟູຄືນຈາກໄພພິບັດໄດ້ດີເທື່ອລະກ້າວ. ການໃຫ້ຄຳປຶກສາຈະໄດ້ຮັບການປະຕິບັດພາຍໃຕ້ໂຄງການແມ່ບົດ ຢູ່ໃນສ່ວນປະກອບຍ່ອຍ **1.2.** ເຊິ່ງຈະ ກຳ ນົດຊ່ອງຫວ່າງແລະຄວາມຕ້ອງການສະເພາະ

ພາຍໃຕ້ອົງປະກອບຍ່ອຍນີ້, AF ຍັງຈະສະໜັບສະໜູນກິດຈະກຳທົດລອງທີ່ສາມາດດຳເນີນໂດຍອຳນາດການປົກຄອງທ້ອງຖິ່ນດ້ວຍການມີສ່ວນຮ່ວມຢ່າງຕັ້ງໜ້າຂອງຊຸມຊົນທ້ອງຖິ່ນກ່ຽວກັບການນຳໃຊ້ວິທີແກ້ໄຂພື້ນຖານໂຄງລ່າງພື້ນຖານ / ສີຂຽວທີ່ສາມາດອອກແບບ ແລະ ຈັດຕັ້ງປະຕິບັດພາຍໃຕ້ອົງປະກອບຍ່ອຍ 1.1 ແລະ / ຫຼືພາຍໃຕ້ອົງປະກອບຍ່ອຍນີ້ຂຶ້ນກັບລັກສະນະ ແລະ ຄ່າໃຊ້ຈ່າຍຂອງກິດຈະກຳທີ່ສະເໜີ. ອົງປະກອບຍ່ອຍ(1.2)ນີ້ຈະສະໜັບສະໜູນກິດຈະກຳທີ່ສາມາດສົ່ງເສີມຂະບວນການວາງແຜນແບບມີສ່ວນຮ່ວມ (ກອງປະຊຸມ, ການສຳຫຼວດ ຫຼື ການເກັບກຳຂໍ້ມູນ, ການໄປຢ້ຽມຢາມການສຶກສາແລະອື່ນໆ) ເພື່ອກຳນົດຄວາມຕ້ອງການບູລິມະສິດ ແລະ ການພັດທະນາແຜນປະຕິບັດງານພ້ອມທັງການຈັດຕັ້ງປະຕິບັດການລົງທຶນຂະໜາດ ນ້ອຍທີ່ຊຸມຊົນທ້ອງຖິ່ນສາມາດປະຕິບັດເພື່ອການສາທິດ. ການສະໜັບສະໜູນຢ່າງແຂງແຮງຈາກພາກເອກະຊົນ ແລະ ການເຂົ້າຮ່ວມ/ການນຳ ຂອງອົງການຈັດຕັ້ງມະຫາຊົນທີ່ສຳຄັນເຊັ່ນ: ສະຫະພັນແມ່ຍິງລາວ (LWU), ກຸ່ມຊາວໜຸ່ມຈະໄດ້ຮັບການຊຸກຍູ້. ຢູ່ເມືອງໄຊ, ຊຸມຊົນທ້ອງຖິ່ນ 2-3 ແຫ່ງ ທີ່ຢູ່ແຄມຕະຝັ່ງເບື້ອງຊ້າຍຂອງແມ່ນ້ຳ ມາວ-ຄຳ ຈະໄດ້ມີສ່ວນຮ່ວມໃນການສ້າງແຜນການປະຕິບັດງານເພື່ອຫ້າມບໍ່ໃຫ້ປ່ອຍສິ່ງເສດເຫລືອ (ຂອງແຂງ ແລະ ຂອງແຫຼວ) ລົງສູ່ແມ່ນ້ຳ ພ້ອມທັງຈັດຕັ້ງປະຕິບັດການປ້ອງກັນແຄມຝັ່ງແມ່ນ້ຳໃຊ້ ພື້ນຖານໂຄງລ່າງທີ່ອີງໃສ່ ທຳມະຊາດ ແລະ ສີຂຽວ. ຢູ່ແຂວງຫຼວງພະບາງ, ຄາດວ່າພື້ນທີ່ທົດລອງຈະໄດ້ຮັບການຄັດເລືອກ 2-3 ແຫ່ງເພື່ອສະແດງໃຫ້ເຫັນວ່າການນຳໃຊ້ປະໂຫຍດຈາກໂຄງລ່າງພື້ນຖານ ທີ່ເປັນມິດກັບທຳມະຊາດ/ ສີຂຽວອ່ອນ ເພື່ອປົກປ້ອງຕະຝັ່ງເຈື່ອນ ຈະມີຄວາມພະຍາຍາມເພື່ອຫຼຸດຜ່ອນການຜະລິດ ແລະ ປ່ອຍສິ່ງເສດເຫຼືອ (ສິ່ງເສດເຫຼືອທີ່ເປັນຂອງແຫຼວ ແລະ ຂອງແຂງ) ລົງໃນແມ່ນ້ຳໂດຍກົງ

ເພື່ອຫລີກລ້ຽງຜົນກະທົບທາງລົບອາດຈະເກີດຂຶ້ນຕໍ່ກັບຄອບຄອງທີ່ດິນ, ການຊົດເຊີຍ, ແລະ ຂໍ້ຈຳກັດການນຳໃຊ້ຊັບພະຍາກອນ ແລະ ເພື່ອປະຕິບັດຕາມກອບນະໂຍບາຍກ່ຽວກັບການຍົກຍ້າຍຈັດສັນໂດຍບໍ່ໄດ້ສະມັກໃຈ (OP/BP 4.12). ກອບນະໂຍບາຍການຊົດເຊີຍ (RPF) ໄດ້ພັດທະນາ ແລະ ຈະນຳໃຊ້ເຂົ້າໃນທຸກໆກິດຈະກາໂຄງການງົບປະມານເພີ່ມຂອງການຄຸ້ມຄອງຄວາມສ່ຽງໄພພິບັດ ແຫ່ງ ສປປ ລາວ LDRM-AF. ສາລັບກິດຈະກຳ/ໂຄງການຍ່ອຍໃໝ່ທີ່ຈະລະບຸໃນລະຫວ່າງການຈັດຕັ້ງປະຕິບັດຂັ້ນຕອນການກວດກາກອບການປົກປ້ອງຕາມທີ່ໄດ້ກຳນົດໄວ້ໃນກອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF) ແລະ ມີລາຍການທີ່ຈະກວດສອບທາງສັງຄົມຄວນບັນທຶກ ແລະ ເກັບຮັກສາໄວ້ໃນຟາຍເອກະສານຂອງໂຄງການ ເພື່ອການກວດກາຄືນຫຼັງຈາກ WB. ກອບນະໂຍບາຍການຍົກຍ້າຍຈັດສັນ RPF ຍັງປະຕິບັດຕາມດຳລັດຂອງລັດຖະບານ ແຫ່ງ ສປປລາວ (GoL)ກ່ຽວກັບການຊົດເຊີຍ ແລະ ການຍົກຍ້າຍປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ(ສະບັບເລກທີ 84 / ລບ, ວັນທີ 5 ເມສາ 2016).

## 2.0 ຫຼັກການພື້ນຖານຂອງການຈັດສັນຍົກຍ້າຍ

ກອບນະໂຍບາຍການຈັດສັນຍົກຍ້າຍ ຫຼື RPF ໄດ້ຖືກກະກຽມ ໃຫ້ເປັນອົງປະກອບໜຶ່ງຂອງ ບົດກອບການຄຸ້ມຄອງ ສິ່ງແວດລ້ອມ ແລະ ສັງຄົມ (ESMF) ໃຫ້ແກ່ ໂຄງການງົບປະມານເພີ່ມ ການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ປະຈຳພາກພື້ນ ອາຊີຕາເວັນອອກສຽງໃຕ້ ໃນ ສປປ ລາວ (Lao PDR SEA DRM). ກອບໜ້າວຽກນະໂຍບາຍການຈັດສັນຍົກຍ້າຍ ຈະໄດ້ໃຫ້ຄຳແນະນຳ ຊ່ວຍໃນຂະບວນການຕັດສິນໃຈ ຖ້າ ໃນກໍລະນີ ການສະເໜີໂຄງການຍ່ອຍ ມີຄວາມຈຳເປັນຈະໄດ້ມີການຫຍັບຍ້າຍທີ່ດິນນຳໃຊ້ແບບຊົ່ວຄາວ ຫຼື ຖາວອນ ເພື່ອການປະຕິບັດການລິເລີ່ມໂຄງການຄຸ້ມຄອງຄວາມສ່ຽງຈາກໄພນ້ຳຖ້ວມໃນຕົວເມືອງ. ດັ່ງນັ້ນ, RPF ໄດ້ຖືກກະກຽມຂຶ້ນ ເພື່ອ ສ້າງນະໂຍບາຍ ແລະ ຂະບວນການ ເພື່ອ ປ້ອງກັນ (ຫຼີກລ້ຽງ), ຈຳກັດ, ແກ້ໄຂບັນເທົາ ແລະ ການທົດແທນຄ່າເສຍຫາຍໃຫ້ກັບຜົນກະທົບທາງລົບ (ຂໍ້ຫຍຸ້ງຍາກ) ເຊິ່ງເກີດຈາກການຫັຍບຍ້າຍທີດິນ ຈາກການສະເໜີໂຄງການຍ່ອຍ.

ເປົ້າໝາຍຂອງກອບນະໂຍບາຍການຈັດສັນຍົກຍ້າຍ ຫຼື RPF ເພື່ອຫຼຸດຜ່ອນການຈັດສັນຍົກຍ້າຍແບບບໍ່ສະໝັກໃຈ ແລະ ສະໜອງກອບເຄື່ອງມືແນະນຳ ໃນການປະເມີນ ຄວາມວິຕົກກັງວົນຂອງ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ເຊັ່ນ ເລື່ອງການສູນເສຍວິຖີການດຳລົງຊີວິດ, ຊັບສິນບັດ ແລະ ຄວາມຢູ່ດີກິນດີ. ນະໂຍບາຍຈັດສັນຍົກຍ້າຍ ແບບບໍ່ສະໝັກໃຈຂອງ ທະນາຄານໂລກ (OP/BP-4.12) ຈະຖືກນຳມາໃຊ້ກໍ່ຕໍ່ເມື່ອ ໂຄງການພັດທະນາ (ຫຼືໂຄງການຍ່ອຍ) ອາດກໍ່ໃຫ້ ປະຊາຊົນສູນເສຍທີ່ດິນ, ຊັບສິນອື່ນໆ, ຫຼື ການເຂົ້າເຖິງແຫຼ່ງເຮັດການຜະລິດຢຸດສະງັກລົງ, ຫຼື ສູນເສຍວິຖີການດຳລົງຊີວິດ (ຕົວຢ່າງ: ຊັບສິນ ແລະ ສິ່ງຂອງອື່ນໆ), ຄວາມຢູ່ດີກິນດີ ແລະ ຫຼື ສິດທິອື່ນໆ. RPF ຈະເປັນເຄື່ອງມືຊ່ວຍໃນຂະບວນການຕັດສິນໃຈ ພ້ອມກັບ ຂໍ້ແນະນຳ ແລະ ຂະບວກການເພື່ອຮັບປະກັນ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ຈະໄດ້ຮັບການປັບປຸງຊີວິດການເປັນຢູ່ ແລະ ຄວາມຢູ່ດີກິນດີ ຫຼື, ຢ່າງໜ້ອຍ, ກໍ່ຕ້ອງໄດ້ມີການຟື້ນຟູເຮັດໃຫ້ຊີວິດການເປັນຢູ່ຂອງພວກເຂົາຢູ່ໃນລະດັບກ່ອນມີການເລີ່ມຕົ້ນໂຄງການ.

ລາຍລະອຽດຂອງເຄື່ອງມື ແລະ ແຜນ ຂອງ ກອບນະໂຍບາຍການຈັດສັນຍົກຍ້າຍ (RPF) ຈະຖືກກະກຽມ, ຈະຖືກນຳໃຊ້ໃນຊ່ວງຂັ້ນຕອນສະເພາະ ຂອງການອອກແບບໂຄງການຍ່ອຍ ແລະ ການປະເມີນຄວາມເປັນໄປໄດ້, ແລະພາຍຫຼັງການຈັດຕັ້ງປະຕິບັດ. RPF ກຳນົດແນວທາງໃນການທົດແທນຄ່າເສຍຫາຍທີ່ເໝາະສົມ ແລະ ຄາອະທິບາຍໃນກໍລະນີໃດທີ່ຈະບໍ່ໄດ້ຮັບການທົດແທນຄ່າເສຍຫາຍ. RPF (ກົງກັນຂ້າມກັບແຜນປະຕິບັດການຈັດສັນຍົກຍ້າຍ) ເປັນເຄື່ອງມືທີ່ເໝາະສົມ ໃນຂັ້ນຕອນທີ່ ຍັງຢູ່ໃນຊ່ວງ ການວາງແຜນ ແລະ ລັດຖະບານລາວ ແລະ ກຸ່ມທະນາຄານໂລກ ຍັງບໍ່ທັນໄດ້ຕັດສິນໃຈອະນຸມັດທຶນ, ທີ່ຕັ້ງ ຫຼືການອອກແບບ ເພື່ອການດຳເນີນບັນດາ ໂຄງການຍ່ອຍ ເຫຼົ່ານັ້ນເທື່ອ, ການກຳນົດ ຈະມີກໍ່ຕໍ່ເມື່ອ ໂຄງການຢູ່ໃນຊ່ວງການຈັດຕັ້ງປະຕິບັດ ໃນເວລານັ້ນຂໍ້ມູນມີຄົບຖ້ວນ ແລະ ຂໍ້ມູນຂອງໂຄງການກໍ່ໄດ້ຮັບການດັດແກ້ ແລະ ສາມາດນຳໃຊ້ໄດ້, ແລະ ແຜນດຳເນີນການຈັດສັນຍົກຍ້າຍ (ຫຼື ການຈັດສັນຍົກຍ້າຍໂດຍຫຍໍ້) ສາມາດໄດ້ກະກຽມ.

RPF ຈະພິຈາລະນາ ນຳໃຊ້ ຖ້າ ການສະເໜີການ ໂຄງການຍ່ອຍ ມີຜົນກະທົບຕໍ່ກັບ ຄົວເຮືອນ ແລະ ຊຸມຊົນ ທີ່ອາດຕ້ອງໄດ້ຍົກຍ້າຍ, ເຖິງຈະເປັນການຍົກຍ້າຍແບບຊົ່ວຄາວກໍ່ຕາມ. ສະຖານະການທີ່ອາດມີການຫຍັບຍ້າຍທີ່ດິນ ຫຼື ຈັດສັນຍົກຍ້າຍ ຄົນ ແລະ ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການກໍ່ສ້າງພື້ນຖານໂຄງລ່າງ ເພື່ອຄຸ້ມຄອງຄວາມສ່ຽງຈາກໄພນ້ຳຖ້ວມໃນຕົວເມືອງ, ລວມທັງ ໜ້າວຽກກາຍະພາບ, ເຊັ່ນ ການກໍ່ສ້າງ ແລະ ການບູລະນະ ຕາຝັ່ງກັນເຈື່ອນ, ລະບົບຮ່ອງ ແລະ ປະຕູນ້ຳ, ແລະ ສວນສາທາລະນະແຄມນ້ຳ (ຫຼາຍແຫ່ງ). ໃນສະຖານະການນີ້, ການໄຕ່ຕອງ ປັດໄຈເຫຼົ່ານີ້ ຈະຊ່ວຍຂະບວນການຕັດສິນໃຈ ກຳນົດ ມາດຕະການ ເພື່ອປ້ອງກັນ (ຫຼືກລ້ຽງ) ຫຼື ບັນເທົາຜົນກະທົບ.

## 3.0 ຂະບວນການ ຈັດສັນຍົກຍ້າຍ ແລະ ການອະນຸມັດ

ມາດຕະການຫຼຸດຜ່ອນຜົນກະທົບ ທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງທະນາຄານໂລກ ໃຫ້ປະເທດກູ້ຢືມ (ສປປ ລາວ) ຕ້ອງໄດ້ກະກຽມບົດກອບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF) ແລະ ກອບໜ້າວຽກນະໂຍບາຍການຈັດສັນຍົກຍ້າຍ (RPF) ໃຫ້ສອດຄອງກັບ ກົດໝາຍ ຂອງ ລັດຖະບານ ລາວ ແລະ ຄຳແນະນຳ ແລະ ສົນທິສັນຍາຕ່າງໆ ທີ່ໄດ້ປະກາດນຳໃຊ້, ເຊັ່ນ ຂໍ້ຕົກລົງ ແມ່ນ້ຳຂອງ ປີ1995, ຊຶ່ງພົວພັນເຖິງການແບ່ງປັນນ້ຳ. ເອກະສານມາດຕະການປ້ອງກັນເຫຼົ່ານີ້ ຕ້ອງໄດ້ຖືກກະກຽມ, ເຜີຍແຜ່ອອກສູ່ມວນຊົນໃຫ້ໄດ້ເຂົ້າເຖິງຂໍ້ມູນໂດຍບໍ່ເສຍຄ່າໃຊ້ຈ່າຍໃດໆໂດຍການເຫັນດີນຳກັນຈາກຫຼາຍຝ່າຍ ລ່ວງໜ້າກ່ອນການແຈ້ງການຈັດຕັ້ງປະຕິບັດເພື່ອຮັບປະກັນ ການສະເໜີຜົນກະທົບຈາກ ໂຄງການຍ່ອຍ (ຜົນກະທົບດ້ານບວກ ແລະ ລົບ) ຈະຕ້ອງໄດ້ມີການປຶກສາຫາລື ກ່ອນການປະເມີນໂຄງການຍ່ອຍ. ຖ້າມີ ໜ້ອຍ ກວ່າ 40 ຄົວເຮືອນ (ຫລື 200 ຄົນ) ໄດ້ຮັບຜົນກະທົບຈາກ

ໂຄງການຍ່ອຍ, ມາດຕະການປົກປ້ອງຄຸ້ມຄອງທີ່ ເໝາະ ສົມແມ່ນ ARAP. ເຖິງຢ່າງໃດກໍ່ຕາມ, ຖ້າວ່າປະຊາຊົນຫຼາຍກວ່າ 40 ຄົວເຮືອນໄດ້ຮັບຜົນກະທົບຈາກການພັດທະນາໂຄງການຍ່ອຍ, ທີ່ທາງອຳນາດການປົກຄອງສະເໜີມາທາງໂຄງການຈຳເປັນຕ້ອງໄດ້ກະກຽມ RAP ເພື່ອສະເໜີ ຕໍ່ທະນາຄານໂລກກ່ອນຈະມີການຈະມີການກໍ່ສ້າງໃດໆ.

RPF ຈະສຸມໃສ່ ການໃຫ້ຄຳແນະນຳ ໃນການພັດທະນາ ເຂດສະເພາະເພື່ອ ARAP/RAP (OP/BP 4.12) ໃນຊ່ວງດຳເນີນການສະເໜີການຈັດຕັ້ງປະຕິບັດໂຄງການຍ່ອຍ. ດັ່ງທີ່ກ່າວໄປແລ້ວ, ການຈັດສັນຍົກຍ້າຍແບບບໍ່ສະໝັກໃຈ ຄາດວ່າຈະບໍ່ມີ, ແຕ່ເຖິງຢ່າງໃດກໍ່ຕາມ, ບຸກຄົນ ຫຼື ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ ຜູ້ທີ່ອາໄສຢູ່ໃນເຂດກໍ່ສ້າງຄັນຄູກັນນ້ຳ, ຝາຍ, ແລະ ສ່ວນແຄມນ້ຳ (ຫຼາຍແຫ່ງ) ຈະຖືກຍົກຍ້າຍເປັນຜົນຈາກການສະເໜີ ໂຄງການຍ່ອຍ. ນອກຈາກນັ້ນແລ້ວ, ການຫັຍບຍ້າຍທີ່ດິນ ຊົ່ວຄາວ ຫຼື ຖາວອນ ອາດເກີດຂຶ້ນ, ໃນກໍລະນີນີ້, ດຳລັດການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນທີ່ຖືກຜົນກະທົບຈາກໂຄງການພັດທະນາ, ເລກທີ 192/ນຍ (2016) ; ແລະ ນະໂຍບາຍປ້ອງກັນ ຂອງທະນາຄານໂລກ (OP/BP 4.12) ຮຽກຮ້ອງ ໃຫ້ ARAP/RAP ຕ້ອງສ້າງບົດແນະນຳການຈັດຕັ້ງປະຕິບັດ.

ກະຊວງໂຍທາທິການ ແລະ ຂົນສົ່ງ ພ້ອມກັບບັນດາກະຊ່ວງຕ່າງໆທີ່ກ່ຽວຂ້ອງ ເຊັ່ນ ກະຊວງ ແຜນການ ແລະ ການລົງທຶນ (MPI), ກະຊວງການເງິນ, ກະຊວງຊັບພະຍາກອນທາມະຊາດ ແລະ ສິ່ງແວດລ້ອມ ຈະໄດ້ໃຫ້ທິດຊີ້ນຳໂດຍລວມ ເພື່ອການວາງແຜນ ການຍົກຍ້າຍ ແລະ ຂະບວນການຫຍັບຍ້າຍ, ຮັບປະກັນການປະສານງານ ລະຫວ່າງຜູ້ມີສ່ວນໄດ້ເສຍຫຼາຍພາກສ່ວນທີ່ກ່ຽວຂ້ອງກັບໂຄງການ, ຊຶ່ງລວມເອົາ ການປະສານສົມທົບໂດຍຕົງ ໃນການຈັດຕັ້ງການປະຕິບັດ ຂອງການຍົກຍ້າຍຖິ່ນຖານ ແລະ ການຕິດຕາມກວດກາ. ໃນເວລາລິເລີ່ມ ຂອງໂຄງການຍ່ອຍ, ຜູ້ມີສ່ວນໄດ້ເສຍຈະໄດ້ເຮັດການປຶກສາຫາລືກັນກ່ຽວກັບ ຫຼັກການການວາງແຜນ, ການຈັດສັນໜ້າວຽກ ເພື່ອແນໃສ່ການລະບຸ ແລະ ການຫຼຸດຜ່ອນຜົນກະທົບຕໍ່ສັງຄົມ ຈາກການ ໂຄງການຍ່ອຍ.ເອກະສານຊ້ອນທ້າຍທີ 1 ໄດ້ເວົ້າເຖິງເນື້ອໃນ ຂອງ ເອກະສານ ARAP/RAP ຊຶ່ງເປັນໂຄ່ງຮ່າງຂອງຂໍ້ມູນ ທີ່ຈະຕ້ອງໄດ້ມາຈາກການລົງເກັບກຳຂໍ້ມູນພື້ນຖານ, ການປະເມີນມູນຄ່າຊັບສິນ, ແລະ ການກຳນົດການທົດແທນຄ່າເສຍຫາຍ, ບໍ່ວ່າຈະຢູ່ໃນການຍົກຍ້າຍແບບຊົ່ວຄາວ ຫຼື ຖາວອນ ແລະ ການທົດແທນຄ່າເສຍຫາຍ ຫຼື ໃນສະພາບການ ທີ່ຕ້ອງໄດ້ຫຼຸດຜ່ອນຜົນກະທົບຈາກໂຄງການຍ່ອຍຕໍ່ສັງຄົມ.

ການກະກຽມ ARAP/RAP ຕ້ອງລວມມີ ບັນດາມາດຕະການເພື່ອ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ດັ່ງຕໍ່ໄປນີ້:

- ແຈ້ງໃຫ້ປະຊາຊົນໄດ້ຮັບຮູ້ເຖິງທາງເລືອກ ແລະ ສິດທິຂອງພວກເຂົາ ກ່ຽວກັບການຍົກຍ້າຍ ແລະ ການທົດແທນຄ່າເສຍຫາຍ;
- ປຶກສາຫາລື, ສະເໜີວິທີທາງຕ່າງໆ, ແລະ ສະໜອງຂໍ້ມູນທາງເລືອກ ດ້ານເຕັກນິກ ແລະ ເສດຖະກິດ ທີ່ມີຄວາມເປັນໄປໄດ້ໃນການຍົກຍ້າຍ ແລະ/ຫຼື ທາງເລືອກໃນການທົດແທນຄ່າເສຍຫາຍ; ແລະ
- ການຈ່າຍຄ່າທົດແທນທີ່ທັນການ ແລະ ມີປະສິດທິພາບ ແບບເຕັມຮູບແບບຂອງການທົດແທນຕໍ່ກັບການສູນເສຍ ສັບຊົນ ແລະ ການເຂົ້າເຖິງອັນເນື່ອງມາຈາກຜົນກະທົບຂອງໂຄງການ.

ມີການປຶກສາຫາລືຮ່ວມກັບສິ່ມວນຊົນຢ່າງເໝາະສົມ ແລະ ການມີສ່ວນຮ່ວມຈາກພາກສ່ວນຕ່າງໆ ໃນຂະບວນການຂອງ ARAP/RAP. ນອກເໜືອຈາກນັ້ນ, ບຸກຄົນ ແລະ ຄົວເຮືອນທີ່ຖືກຜົນກະທົບຈະໂຄງການ ຈະຕ້ອງຄຳນຶງເຖິງ:

- ທາງເລືອກ ແລະ ສິດທິຂອງປະຊາຊົນ ໃນການປະກອບສ່ວນທີ່ດິນ, ການຍົກຍ້າຍ ແລະ/ຫຼື ການທົດແທນຄ່າເສຍຫາຍ.
- ດ້ານເຕັກນິກສະເພາະ ແລະ ທາງເລືອກເສດຖະກິດທີ່ມີຄວາມເປັນໄປໄດ້ ແລະ ທາງເລືອກໃນການຍົກຍ້າຍ ຫຼື ພື້ນທີ່ຈັດສັນຍົກຍ້າຍ.
- ຂະບວກການ ແລະ ການສະເໜີເວລາ ຂອງການຍົກຍ້າຍ, ຈັດສັນຍົກຍ້າຍ ແລະ ຫຼື ການທົດແທນຄ່າເສຍຫາຍ.
- ອັດຕາການທົດແທນຄ່າເສຍຫາຍທີ່ເໝາະສົມ ໃນອັດຕາເຕັມຂອງມູນຄ່າການຍົກຍ້າຍ ຍ້ອນການສູນເສຍຊັບສິນ ແລະ ການບໍລິການ; ແລະ
- ສະເໜີ ມາດຕະການ ແລະ ມູນຄ່າ ໃນການບູລະນະ ຫຼື ປັບປຸງ ຄຸນນະພາບການດໍາລົງຊີວິດ ແລະ ສຸຂະພາບ.

ໜ່ວຍງານຄຸ້ມຄອງໂຄງການ PMU ກະຊວງໂຍທາທິການ ແລະ ຂົນສົ່ງ - ກົມໂຍທາທິການທາງນໍ້າ ຈະມີສອງຜູ້ຊ່ຽວຊານດ້ານການພັດທະນາຊຸມຊົນ (SDS)ມາ ເຮັດວຽກຮ່ວມກັບ ໜ່ວຍງານບໍລິຫານໂຄງການ (PMU). ໃຫ້ການຊ່ວຍເຫຼືອທາງດ້ານວິຊາການ ແລະ ສະໜັບສະໜູນຈາກ EDPD/PTRI ໃນບັນດາວຽກງານຕ່າງໆ, ໜ້າວຽກຂອງຊ່ຽວຊານດ້ານການພັດທະນາຊຸມຊົນແມ່ນ ເພື່ອຕິດຕາມ ການຈັດຕັ້ງປະຕິບັດ ກອບໜ້າວຽກນະໂຍບາຍການຈັດສັນຍົກຍ້າຍ (RPF) ແລະ ເຂດຈຸດສຸມ (ຕົວຢ່າງ: ເຂດໄດ້ຮັບຜົນສະທ້ອນ [ROI]) ARAP/RAP ແມ່ນເພື່ອ ຮັບປະກັນ ການຈັດຕັ້ງປະຕິບັດ ໄດ້ຮັບການແກ້ໄຂຢ່າງເໝາະສົມ ໃນການຫຍັບຍ້າຍທີ່ດິນ, ບັນຫາ ການຍົກຍ້າຍ ຫຼື ການຈັດສັນຍົກຍ້າຍ. ເມື່ອ RPF ໄດ້ຮັບການອະນຸມັດ, ຜົນກະທົບດ້ານສິ່ງຄົມທີ່ອາດຈະເກີດຂຶ້ນ ຈາກການລິເລີ່ມ ແຕ່ລະໂຄງການຍ່ອຍ ທີ່ ຈໍາເປັນຕ້ອງມີການຫຍັບຍ້າຍທີ່ດິນ (ລວມທັງດິນທີ່ໄດ້ຮັບການປະກອບສ່ວນ). ການຍົກຍ້າຍ ຫຼື ຈັດສັນຍົກຍ້າຍ ຈະໄດ້ຮັບການແກ້ໄຂ. ການນໍາໃຊ້ ວິທີການມີສ່ວນຮ່ວມຈາກບັດາຄູ່ຮ່ວມງານ, ອົງການຈັດຕັ້ງມະຫາຊົນ (CSO) ແມ່ນຄວາມສໍາຄັນ, ບຸກຄົນ ແລະ ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ ແມ່ນຈະຖືກຮັບປະກັນວ່າ ມີຄວາມພໍໃຈໃນການສະເໜີ ໂຄງການຍ່ອຍ ໃນເຂດທີ່ໄດ້ຮັບຜົນສະທ້ອນ (ROI).

ຂະບວນການ ການພິຈາລະນາ ແລະ ກວດສອບ ຄວນຖືກນໍາໃຊ້ໃນການຫຍັບຍ້າຍທີ່ດິນ, ຍົກຍ້າຍ ແລະ ຈັດສັນຍົກຍ້າຍ, ແລະ ຂະບວນການວາງແຜນຈ່າຍ ການທົດແທນຄ່າເສຍຫາຍ, ຖ້າຈໍາເປັນ. ເປົ້າໝາຍຂອງ ຂະບວນການການພິຈາລະນາ ແລະ ກວດສອບ ເພື່ອກໍານົດ ການຫຍັບຍ້າຍທີ່ດິນ, ຍົກຍ້າຍ ຫຼື ຈັດສັນຍົກຍ້າຍ, ແລະ ຫຼື ບັນຫາການທົດແທນຄ່າເສຍຫາຍ ປະສານສົມທົບກັບ ການສະເໜີການໂຄງການຍ່ອຍ ໃນບໍລິເວນທີ່ໄດ້ຮັບຜົນສະທ້ອນຈາກໂຄງການ. ເພື່ອໃຫ້ການວາງແຜນອອກມາດີທີ່ສຸດ ແລະ ການພິຈາລະນາ ຄວນຈັດຕັ້ງຂຶ້ນໃນລະຫວ່າງ ຊ່ວງຕົ້ນຂອງການເຮັດ RFP, ຈາກນັ້ນ ຊ່ຽວຊານດ້ານການພັດທະນາຊຸມຊົນ ຈະໄດ້ຮັບຂໍ້ມູນທີ່ຄົບຖ້ວນໃນການພັດທະນະເຂດທີ່ມີຜົນສະທ້ອນຕໍ່ ARAP/RAP. ARAP/RAP ຮຽກຮ້ອງຕ້ອງມີ ຈຸດທີ່ຕັ້ງ ແນ່ນອນ, ຕ້ອງມີ ຮູບຮ່າງໂຄງການຍ່ອຍ ຫຼື ເຂດທີ່ໄດ້ຮັບຜົນສະທ້ອນ, ຂໍ້ມູນທີ່ຄົບຖ້ວນ ເພື່ອທີ່ຈະກໍານົດ ຄ່າຕ່າງໆ ຄື:

- ບຸກຄົນ ທີ່ຖືກຜົນກະທົບ (ດ້ານບວກ ຫຼື ລົບ) ຍ້ອນການລິເລີ່ມ ໂຄງການຍ່ອຍ;
- ຜູ້ທີ່ມີສິດໄດ້ຮັບການທົດແທນ ຄ່າເສຍຫາຍ ແລະ ຄວາມຊ່ວຍເຫຼືອ; ແລະ
- ປະເພດຂອງການທົດແທນ ຄ່າເສຍຫາຍ ແລະ ການຊ່ວຍເຫຼືອ ທີ່ຈໍາເປັນ.

ຫຼັງຈາກເຮັດສົມບູນແລ້ວ, ARAP/RAPຈະຖືກ ຮັບຮອງໂດຍ DIA ແລະ ສິ່ງຕໍ່ເພື່ອຂໍອະນຸມັດ ເຫັນດີ ຈາກທະນາຄານໂລກ.

ໂຄງການຍ່ອຍ ທີ່ກະທົບເຖິງ ທີ່ໜ້ອຍກວ່າ 50 ຄົວເຮືອນ (200 ຄົນ) ແລະ ຕໍ່າກວ່າ 10 ເປີເຊັນຂອງຊັບສິນຜະລິດຕະພັນຂອງພວກເຂົາຈະສູນເສຍໄປ ແຜນການຈັດຕັ້ງປະຕິບັດການຈັດສັນຍົກຍ້າຍສະບັບຫຍໍ້(ARAP) ຕ້ອງຖືກຈັດຕັ້ງ. ARAP ຈະລວມມີຂໍ້ມູນດັ່ງຕໍ່ໄປນີ້: (i) ບົດສະເໜີໂຄງການໂດຍຫຍໍ້, ສະຖານທີ່ ແລະ ບັນດາຜົນກະທົບຂອງມັນ; (ii) ການປຶກສາຫາລືກັບ ບຸກຄົນທີ່ທີ່ຖືກຜົນກະທົບຈາກໂຄງການ (PAP) ແລະ ຄົວເຮືອນຖືກຜົນກະທົບຈາກຕໍ່ໂຄງການ (PAH); (iii) ຖານຂໍ້ມູນຂອງ ບຸກຄົນທີ່ຖືກຜົນກະທົບຈາກໂຄງການ (PAP) ແລະ ຄົວເຮືອນຖືກຜົນກະທົບຈາກໂຄງການ (PAH); (iv) ການຈັດປະເພດ ແລະ ລະດັບ ໄດ້ຮັບຜົນກະທົບ ຂອງ ບຸກຄົນທີ່ຖືກຜົນກະທົບຈາກໂຄງການ (PAP) ແລະ ຄົວເຮືອນຖືກຜົນກະທົບຈາກໂຄງການ (PAH); (v) ສິດໃນການໄດ້ຮັບການທົດແທນຄ່າເສຍຫາຍ, ຄ່າເບ້ຍລ້ຽງ ແລະ ການຟື້ນຟູທີ່ຢູ່ອາໄສ ຫຼື ການຊ່ອຍເຫຼືອຟື້ນຟູຊີວິດການເປັນຢູ່ ໂດຍຂຶ້ນກັບລະດັບໄດ້ຮັບຜົນກະທົບໃນຕາຕະລາງການທົດແທນຄ່າເສຍຫາຍ; (vi) ຂໍ້ມູນກ່ຽວກັບສະຖານທີຈະຍ້າຍໄປ, ແລະ ມາດຕະການໃນການເລືອເຟັ້ນ; (vii) ກົນໄກຮັບຜິດຊອບ ໃນການຈັດຕັ້ງ ແລະ ຕິດຕາມ; (viii) ຂະບວນການແກ້ໃຂຄຳຮ້ອງ; (ix) ການປະເມີນຄ່າໃຊ້ຈ່າຍ ໃນການຈັດສັນຍົກຍ້າຍ ແລະ ງົບປະມານປະຈຳປີ; ແລະ (x) ແຜນເວລາໃນການຈັດຕັ້ງປະຕິບັດ.

ໂຄງການຍ່ອຍ ທີກະທົບເຖິງຫຼາຍກ່ວາ 50 ຄົວເຮືອນ(200 ຄົນ) ແລະ ຕໍ່າກວ່າ 10 ເປີເຊັນຂອງຊັບສິນຜະລິດຕະພັນຂອງພວກເຂົາຈະສູນເສຍໄປ ໃຫ້ມີ ແຜນດຳເນີນການຈັດສັນຍົກຍ້າຍ (RAP)ຕ້ອງຖືກຈັດຕັ້ງ. ໂດຍປົກກະຕິ, RAP ຈະລວມມີຂໍ້ມູນດັ່ງຕໍ່ໄປນີ້: (i) ບົດສະເໜີໂຄງການໂດຍຫຍໍ້, ສະຖານທີ່ ແລະ ບັນດາຜົນກະທົບຂອງມັນ; (ii) ຫຼັກການ ແລະ ເປົ້າໝາຍ ການກະກຽມແຜນການຈັດສັນຍົກຍ້າຍ ແລະ ການຈັດຕັ້ງປະຕິບັດ; (iii) ກອບກົດໝາຍ; (iv) ຖານຂໍ້ມູນຂອງ ບຸກຄົນທີ່ຖືກຜົນກະທົບຈາກໂຄງການ (PAP) ແລະ ຄົວເຮືອນຖືກຜົນກະທົບຈາກໂຄງການ (PAH); (v) ການຈັດປະເພດ ແລະ ລະດັບ ໄດ້ຮັບຜົນກະທົບ ຂອງ ບຸກຄົນທີ່ຖືກຜົນກະທົບຈາກໂຄງການ (PAP) ແລະ ຄົວເຮືອນຖືກຜົນກະທົບຈາກໂຄງການ (PAH); (vi) ສິດໃນການໄດ້ຮັບການທົດແທນຄ່າເສຍຫາຍ, ຄ່າເບ້ຍລ້ຽງ ແລະ ການຟື້ນຟູທີ່ຢູ່ອາໄສ ຫຼື ການຊ່ອຍເຫຼືອຟື້ນຟູຊີວິດການເປັນຢູ່ ໂດຍຂຶ້ນກັບລະດັບໄດ້ຮັບຜົນກະທົບໃນຕາຕະລາງການທົດແທນຄ່າເສຍຫາຍ; (vii) ຂໍ້ມູນ ຂອງຈຸດຈັດສັນຍົກຍ້າຍ ຄຽງຄູ່ກັບ ເງື່ອນໃຂເສດຖະກິດສັງຄົມ ຂອງ PAP ແລະ PAH ແລະ ຊຸມຊົນ ບ້ານເຈົ້າພາບ; (viii) ລະບົບກົນໄກວາງແຜນ ແລະຈັດຕັ້ງປະຕິບັດ; ກົນໄກຮັບຜິດຊອບ ໃນການຈັດຕັ້ງ ແລະ ຕິດຕາມ; (ix) ຂະບວນການມີສ່ວນຮ່ວມ ໃນລະຫ່ວາງການວາງແຜນ ແລະ ຈັດຕັ້ງປະຕິບັດ; (x) ຂະບວນການແກ້ໃຂຄຳຮ້ອງ; (xi) ການປະເມີນຄ່າໃຊ້ຈ່າຍ ໃນການຈັດສັນຍົກຍ້າຍ ແລະ ງົບປະມານປະຈຳປີ; (xii) ແຜນເວລາໃນການຈັດຕັ້ງປະຕິບັດ; ແລະ (xiii) ຂະບວນການຕິດຕາມຈາກພາຍໃນ ແລະ ພາຍນອກ, ລວມທັງ ກອບໜ້າວຽກ (TOR) ຂອງ ພາກສ່ວນຕິດຕາມ ແລະ ປະເມີນຜົນ ຈາກພາຍນອກ.

ເອກະສານຊ້ອນທ້າຍ A1 ຈະໃຫ້ຂໍ້ມູນເພີ່ມເຕີມ ໝາກຜົນທີຄາດຫວັງ ຈາກ ການຍົກຍ້າຍຈັດສັນ ລວມເຖິງເອກະສານ ແຜນດຳເນີນງານໃນການຈັດສັນຍົກຍ້າຍ ໂດຍຫຍໍ້ (ARAP) ແລະ ແຜນດຳເນີນງານການຈັດສັນຍົກຍ້າຍ (RAP).

## 4.0 ປະເພດບຸກຄົນ ທີ່ຖືກຍົກຍ້າຍ

Lao PDR ສະເໜີການ ໂຄງການຍ່ອຍ ຈະມີທັງຜົນກະທົບດ້ານບວກ ແລະ ລົບ ຕໍ່ປະຊາຊົນ ທີ່ແຂວງ ອຸດົມໄຊ, ຫຼວງພະບາງ ແລະ ບໍລິຄຳໄຊ ແຂວງອຸດົມໄຊ ແລະ ເຂດອອບຂ້າງ ບ່ອນທີ່ ມີແຜນຈະສ້າງການປ້ອງກັນໄພນໍ້າຖ້ວມ

ໃນຕົວເມືອງ. ມັນມີເຫດຜົນ ທີ່ຈະເຂົ້າໃຈວ່າ ຄົວເຮືອນ, ຮ້ານຄ້າບໍລິສັດ, ລະບົບໂຄງລາງພື້ນຖານ (ຕົວຢ່າງ: ໂຮງຮຽນ, ສຸກສາລາ ແລະໂຮງໝໍ, ຫ້ອງການລັດ, ເຂດຊາຍແດນຮົ້ວ) ເຊິ່ງເປັນບັນດາສິ່ງປຸກສ້າງ ທີ່ຢູ່ໃກ້ກັບໃນເຂດກໍ່ສ້າງຄັນຄູກັນນໍ້າ, ຮ່ອງລະບາຍນໍ້າ ແລະ ປະຕູນໍ້າ, ຝາຍ ແລະ ສ່ວນແຄມນໍ້າ (ຫຼາຍແຫ່ງ) ມີຄວາມສ່ຽງທີ່ຈະໄດ້ຮັບຜົນກະທົບທາງລົບ.

ເມື່ອມີການກໍານົດ ທີ່ຕັ້ງໂຄງການຍ່ອຍ, ການຫຍັບຍ້າຍ ທີ່ດິນ ຫຼື ກ່ຽວພັນກັບ ຜົນກະທົບທີ່ກ່ຽວຂ້ອງ ມີການກໍານົດ, ແຜນການຈັດສັນຍົກຍ້າຍ ຕ້ອງໄດ້ເລີ່ມຈັດຕັ້ງປະຕິບັດ ໂດຍ ໜ່ວຍງານຄຸ້ມຄອງໂຄງການ ໃຫ້ການຊ່ວຍເຫຼືອທາງດ້ານວິຊາການ ແລະ ສະໜັບສະໜູນຈາກ ພະແນກສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ/ສະຖາບັນຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ EDPD/PTRI. ໜ່ວຍງານຈັດຕັ້ງປະຕິບັດຈະຮັບພາລະໜ້າທີ່ນີ້, ຫຼື ຜັກດັນການລົງສໍາຫຼວດປະຊາກອນ ເພື່ອກໍານົດແລະລະບຸ ຈໍານວນບຸກຄົນ ແລະ ຄົວເຮືອນທັງໝົດທີ່ໄດ້ຮັບຜົນກະທົບຈາກໂຄງການ , ແລະ ການລົງສໍາຫຼວດ ເສດຖະກິດ ແລະ ສັງຄົມ ເພື່ອ ກໍານົດ ລະດັບຄວາມເສຍຫາຍໃນເຂດໄດ້ຮັບຜົນສະທ້ອນຈາກໂຄງການ. ການລົງສໍາຫຼວດ, ອາດມີການເຮັດແຍກກັນ ຫຼື ເຮັດໄປພ້ອມກັນ ເພື່ອກໍານົດ ARAP ຫຼື RAP ແມ່ນມີຄວາມຈໍາເປັນ.

ເຖິງແມ່ນວ່າ ກິດຈະກໍາທັງໝົດ ແມ່ນມີຄວາມສ່ຽງ ຈະກະທົບ ເຖິງ ທຸກຄົນ ໃນເຂດໄດ້ຮັບຜົນສະທ້ອນຂອງໂຄງການ (ບໍ່ວ່າຈະຢູ່ໃນໝວດໝູ່ໃດ: ເຊື້ອຊາດ, ສາດສະໜາ, ຊົນເຜົ່າ, ເພດ, ອາຍຸ, ສະຖານະດ້ານເສດຖະກິດ, ກໍາມະສິດຄອບຄອງທີ່ດິນ ແລະອື່ນໆ), ມີພຽງແຕ່ບັນດາກິດຈະກໍາ ທີ່ຕ້ອງມີການຍົກຍ້າຍ ທັງໃນແບບຊົ່ວຄາວ ແລະ ຖາວອນ ຈະຖືກພິຈາລະນາ ເພາະອາດມີບັນຫາໃນເວລາການຍົກຍ້າຍ. ກອບໜ້າວຽກນະໂຍບາຍການຈັດສັນຍົກຍ້າຍ ຄໍານຶງວ່າ ກຸ່ມຄົນບາງຈໍານວນ ອາດຂາດຄວາມສາມາດໃນການຟື້ນຟູເງື່ອນໄຂຊີວິດການເປັນຢູ່, ການດໍາລົງຊີວິດ ແລະ ລະດັບລາຍຮັບ; ແລະ ດັ່ງນັ້ນ, ເຂົາອາດຈະມີຄວາມສ່ຽງຕໍ່ຄວາມທຸກຍາກ ຫຼາຍຂຶ້ນ ໃນເວລາທີ່ເຂົາສູນເສຍທີ່ດິນ ແລະ ຊັບສິນ ທີ່ຖືກຜົນກະທົບ. ໃນລະຫວ່າງ ທີ່ ARAP/RAP ມີການປະເມີນ ດ້ານສັງຄົມ, ໂຄງການຈະລະບຸ ບັນດາມາດຕະການຈໍາເປັນອື່ນໆ ຫຼື ຂໍ້ກັງວົນ ທີ່ອາດຕ້ອງໄດ້ຮັບການພິຈາລະນາ ເພື່ອກຸ່ມຄົນທີ່ແຕກຕ່າງກັນ (ກຸ່ມຊົນເຜົ່າ ແລະ ກຸ່ມທີ່ບໍ່ສາມາດຊ່ວຍໂຕເອງໄດ້- ແມ່ຍິງ ແລະ ຊາວໜຸ່ມຍິງ-ຊາຍ ແລະ ເດັກນ້ອຍ, ຜູ້ມີອາຍຸ , ຜູ້ເສຍອົງຄະ ແລະ ຜູ້ທຸກ, ອື່ນໆ) ແຕ່ບໍ່ໄດ້ໝາຍເຖິງການຊ່ວຍເຫຼືອ. ບັນຫາເລື່ອງເພດ ຈະໄດ້ຮັບການພິຈາລະນາໃນລະຫ່ວາງການວາງແຜນ ແລະ ຈັດຕັ້ງປະຕິບັດ ກອບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF), ກອບນະໂຍບາຍ ແຜນວຽກ ກອບໜ້າວຽກນະໂຍບາຍການຈັດສັນຍົກຍ້າຍ (RPF) ແລະ ກອບການມີສ່ວນຮ່ວມຂອງຊົນເຜົ່າສ່ວນນ້ອຍ (EGEF).

## 5.0. ມາດຖານສິດທິຂອງຜູ້ທີ່ຖືກຍົກຍ້າຍ

ຕາມກົດໝາຍ ແລະ ຂໍ້ກໍາໜົດກົດລະບຽບຕ່າງໆ ແຫ່ງ ສປປ ລາວ ວ່າດ້ວຍການຫຍັບຍ້າຍ, ຕາມ ນະໂຍບາຍການຈັດສັນຍົກຍ້າຍ ແບບບໍ່ສະໝັກໃຈ ຂອງທະນາຄານໂລກ (OP/BP 4.12), ຫຼັກການພື້ນຖານຂອງ ການຫຍັບຍ້າຍ ແລະ ການປະກອບສ່ວນ ມອບດິນ ໃຫ້ໂຄງການ ຈະລວມ ມີຄຸນນະສົມບັດດັ່ງຕໍ່ໄປນີ້:

- ຈໍາກັດຜົນກະທົບດ້ານລົບ ໃຫ້ຫນ້ອຍ ທີ່ສຸດ;
- ຈັດຕັ້ງປະຕິບັດ ການ ຈັດສັນ ທີ່ດິນ, ການທົດແທນຄ່າເສຍຫາຍ ຫຼື ການປັບປຸງ ຫຼື, ຢ່າງນ້ອຍສຸດ, ແມ່ນການ ຟື້ນຟູ ລາຍຮັບ ແລະ ມາດຕະຖານຊີວິດການເປັນຢູ່ ຂອງບຸກຄົນ ຫຼື ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ ໃຫ້ຄືເກົ່າ ກັບ ຊ່ວງເວລາກ່ອນທີ່ໂຄງການຈະເຂົ້າມາ;

- ຮັບປະກັນ ສິດເສລີ, ການຮູ້ເວລາ ທີ່ຈະມີການ ຍິນຍອມ ກັບ ບຸກຄົນ ຫຼື ຄົວເຮືອນທີ່ຖືກຜົນກະທົບຈາກ ໂຄງການ ກ່ຽວກັບ ການປະກອບສ່ວນ ມອບດິນ ແລະ ແຜນການ ທົດແທນຄ່າເສຍຫາຍ, ແລະ ຮັບປະກັນ ຂະບວນການ ແມ່ນມີເອກະສານອ້າງອີງ; ແລະ

- ການມອບ ການທົດແທນຄ່າເສຍຫາຍ, ຖ້ານຳໃຊ້, ສຳລັບ ຊັບສິນສ່ວນບຸກຄົນ ແມ່ນໃສ່ຕາມອັດຕາ ຂອງ ຊ່ວງເວລາການຍົກຍ້າຍ, ໃນຊ່ວງເວລາກ່ອນ ການເລີ່ມຕົ້ນ ໂຄງການ ການລົງທຶນລະບົບໂຄ່ງລ່າງ ແລະ ການຄຸ້ມຄອງຄວາມສ່ຽງຈາກໄພນໍ້າຖ້ວມໃນຕົວເມືອງ.

ບຸກຄົນຖືກຍົກຍ້າຍ ອາດຈຳແນກອອກເປັນສາມກຸ່ມດັ່ງນີ້:

a) ຜູ້ມີສິດຕາມກົດໝາຍໃນການຄອບຄອງທີ່ດິນ (ລວມທັງສິດທິຕາມທຳນຽມ ແລະ ປະເພນີ ທີ່ໄດ້ຮັບການຍອມຮັບພາຍໃຕ້ກົດໝາຍຂອງປະເທດ); ຈະໄດ້ຮັບຄ່າຊົດເຊີຍສຳຫຼັບທີ່ດິນທີ່ສູນເສຍ, ຊັບສິນທັງໝົດທີ່ຕັ້ງເທິງທີ່ດິນ, ລວມທັງມາດຕະການຟື້ນຟູລາຍຮັບ;

b) ຜູ້ທີ່ບໍ່ມີສິດຕາມກົດໝາຍຢ່າງເປັນທາງການໃນການຄອບຄອງດິນໃນຊ່ວງເວລາການລົງສຳຫຼວດ ແຕ່ມີການອ້າງສິດການຄອບຄອງ ດິນ ຫຼືຊັບສິນ - ຖືວ່າໄດ້ຮັບການຍອມຮັບວ່າການຮຽກຮ້ອງດັ່ງກ່າວໄດ້ຮັບການຍອມຮັບພາຍໃຕ້ກົດໝາຍຂອງປະເທດ ຫຼືໄດ້ຮັບການຍອມຮັບຜ່ານຂະບວນການທີ່ລະບຸໄວ້ໃນແຜນການຈັດສັນຍົກຍ້າຍຈະເປັນໄປໄດ້ຈະໄດ້ຮັບຄ່າຊົດເຊີຍສຳລັບທີ່ດິນທີ່ສູນເສຍ, ຊັບສິນທັງໝົດທີ່ຕັ້ງຢູ່ເທິງທີ່ດິນ , ລວມທັງມາດຕະການຟື້ນຟູລາຍຮັບ; ແລະ

c) ຜູ້ທີ່ບໍ່ມີສິດຕາມກົດໝາຍ ຫຼື ຮຽກຮ້ອງສິດຈາກທີ່ດິນທີ່ຄອບຄອງ, ຈະມີສິດໄດ້ຮັບການຊົດເຊີຍຊັບສິນທີ່ຕັ້ງຢູ່ເທິງດິນນັ້ນ, ລວມທັງມາດຕະການຟື້ນຟູລາຍຮັບ. ໃນກໍລະນີເນື້ອດິນສ່ວນທີ່ເຫຼືອບໍ່ສາມາດໃຊ້ວຽກໃດ້ອີກຕໍ່ໄປ ພວກເຂົາມີສິດໄດ້ຮັບດິນທົດແທນຢູ່ບ່ອນໃໝ່.

ບຸກຄົນທີ່ນອນໃນປະເພດ a) ແລະ b) ຈະໄດ້ຮັບການທົດແທນຄ່າເສຍຫາຍ ສຳລັບທີ່ດິນທີ່ສູນເສຍ, ແລະ ການຊ່ວຍເຫຼືອອື່ນໆ ຕາມ para. 6. ບຸກຄົນທີ່ນອນໃນປະເພດ c) ຈະໄດ້ຮັບຄວາມຊ່ວຍເຫຼືອໃນການຕັ້ງ=ຖິ່ນຖານແທນຄ່າຊົດເຊີຍສຳລັບທີ່ດິນທີ່ຕົນຄອບຄອງ, ແລະ ການຊ່ວຍເຫຼືອອື່ນໆ ທີ່ຈຳເປັນ, ເພື່ອໃຫ້ບັນລຸເປົ້າໝາຍທີ່ກຳນົດໄວ້ໃນນະໂຍບາຍ, ຖ້າພວກເຂົາຄອບຄອງທີ່ດິນເຂດໂຄງການຍ່ອຍ ກ່ອນມື້ລົງທະບຽນຊັບສິນຜູ້ເສຍຫາຍ ຈາກຜູກູ້ຢືມ ແລະ ການຍອມຮັບຈາກທະນາຄານໂລກ.

ທຸກຄົນ ແລະ ທຸກຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ (ຖ້າພວກເຂົາມີສິດຕາມກົດໝາຍ ແລະ ໃນລາຍຊື່ເວລາລົງສຳຫຼວດລາຍຊື່ຜູ້ຖືກຜົນກະທົບ) ຈະໄດ້ຮັບສິດເທົ່າທຽມກັນ ໃນການໄດ້ຜົນປະໂຫຍດ ການທົດແທນຄ່າເສຍຫາຍ (ເບິ່ງ ຕາຕະລາງ 2: ໂຄງຮ່າງກ່ຽວກັບສິດທິ), ແລະ ມາດຕະການການຟື້ນຟູທີ່ຢູ່ອາໄສ ແລະ ຊີວິການເປັນຢູ່, ຖ້າ: (i) ຜົນກະທົບ ເຖິງດິນ ເຮັດການຜະລິດ ເທົ່າກັບ 10 ເປີເຊັນ ຫຼື ຫຼາຍກ່ວານັ້ນ, ການໃຫ້ບູລິມາສິດ, ການຍົກຍ້າຍ ແລະ ທົດແທນທີ່ດິນ ທີ່ມີສະພາບ ແລະ ເງື່ອນໃຂຂອງ ດິນ ໃກ້ຄຽງກັນ, ມີຈຸດທີ່ຕັ້ງ ໃກ້ກັບໝູ່ບ້ານ ແລະ ຈະມີການອອກໜັງສືຢັ້ງຢືນສິດໃນການນຳໃຊ້ທີ່ດິນໃຫ້; ຫຼື ຈາກການຮຽກຮ້ອງຂອງ ບຸກຄົນ ຫຼື ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ວ່າດ້ວຍ ການ ມອບຄ່າທົດແທນຄ່າເສຍຫາຍເປັນເງິນສົດ ແລະ ການຊ່ວຍເຫຼືອ ການຈັດຊື້ ແລະ ລົງທະບຽນ ຂໍນຳໃຊ້ທີ່ດິນ; (ii) ແຫຼ່ງລາຍຮັບ ຖືກຜົນກະທົບ; (iii) ທີ່ຢູ່ອາໄສ ສ່ວນໜຶ່ງ ຫຼື ທັງໝົດ ຖືກເສຍຫາຍ; ແລະ (iv) ສັບສິນອື່ນໆ (ເຊັ່ນ: ຜົນລະປູກ, ຕົ້ນໄມ້ ແລະ ເຄື່ອງ ມືທຳການຜະລິດ) ຫຼື ການເຂົ້າເຖິງ ສັບສິນເຫຼົ່ານີ້ ຈະຖືກຫຼຸດຜ່ອນລົງ ຫຼື ໄດ້ຮັບຜົນເສຍຫາຍ ຈາກ ການຫຍັບຍ້າຍ. ການ ທີ່ບໍ່ມີເອກະສານອ້າງກຳມະສິດຕ່າງໆ ຫຼື ເອກະສານ ທີ່ດິນ ຈະມີສິດພຽງແຕ່ຮຽກຮ້ອງ ການທົດແທນຄ່າເສຍຫາຍ ຈາກການສູນເສຍຊັບສິນ ຂອງພວກ

ເຂົາເຊັ່ນ ບ້ານຫຼື ສິ່ງປູກສ້າງ, ຕົ້ນໄມ້ ແລະ/ຫຼື ຜົນລະປູກ ແລະ ບໍ່ແມ່ນການທົດແທນຄ່າເສຍຫາຍ ເລື່ອງທີ່ດິນ[2]. ຕາຕະລາງທີ 1 ສົມທຽບ ການນໍາໃຊ້ລະບຽບຫຼັກການ ຂອງລັດຖະບານ ແລະ ທະນາຄານໂລກ ວ່າດ້ວຍນະໂຍບາຍ ການຈັດສັນຍົກຍ້າຍ ແບບບໍ່ສະມັກໃຈ(OP/BP 4.12).

ດັ່ງນັ້ນ, ການຫຍັບຍ້າຍທີ່ດິນ ແລະ/ຫຼື ການສິ່ງຄືນທີ່ດິນ ແລະ ຜົນກະທົບ ເຖິງ ແຫຼ່ງລາຍຮັບ ທັງແບບຊົ່ວຄາວ ແລະ ຖາວອນ ຕາມຫຼັກການແລ້ວຈະຕ້ອງໄດ້ລະບຸຢູ່ໃນບົດສະເໜີ ໂຄງການຍ່ອຍ ທີ່ຢູ່ພາຍໃຕ້ໂຄງການ Lao PDR SEA DRM ໂດຍບໍ່ມີການຄໍານຶງວ່າ ໂຄງການໄດ້ຮັບທຶນຊ່ວຍເຫຼືອຈາກທະນາຄານໂລກ ຫຼື ບໍ່. ນະໂຍບາຍດັ່ງກ່າວ ຈະໄດ້ປະຕິບັດຕໍ່ກັບ ທຸກຄົນ ຫຼື ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ ເຖິງແມ່ນວ່າມັນຈະນໍາມາຍັງຜົນກະທົບ ທີ່ຫຼວງຫຼາຍ.

ດັ່ງທີ່ກ່າວໄປແລ້ວ, ການເອົາໃຈໃສເປັນພິເສດ ເພື່ອ ຊ່ວຍເຫຼືອ ກຸ່ມຄົນ (ກຸ່ມຊົນເຜົ່າ ແລະ ກຸ່ມທີ່ບໍ່ສາມາດຊ່ວຍໂຕ ເອງໄດ້ - ແມ່ຍິງ ແລະ ຊາວໜຸ່ມ ແລະ ເດັກນ້ອຍ, ຜູ້ເຖົ້າ ແລະ ຜູ້ເສຍອົງຄະ, ຜູ້ບໍ່ມີທີ່ຢູ່ອາໄສ ແລະ ຜູ້ທຸກ, ອື່ນໆ).

## 6.0 ການປະເມີນກົດໝາຍ

ຜົນກະທົບດ້ານສັງຄົມ ແລະ ສິ່ງແວດລ້ອມ ຢູ່ໃນລະດັບປານກາງ ຈາກ ການສະເໜີ ການຄຸ້ມຄອງຄວາມສ່ຽງຈາກ ໄພນໍ້າຖ້ວມໃນຕົວເມືອງ ໂດຍການລົງທຶນໃສລະບົບໂຄ່ງລ່າງ ຈະຕ້ອງໄດ້ມີການຫຍັບຍ້າຍ ທີ່ດິນຊົ່ວຄາວ ຫຼື ຖາວອນ, ບຸກຄົນ ຫຼື ຄົວເຮືອນ ທີ່ຖືກຜົນກະທົບ ອາດຈະຖືກຮຽກຮ້ອງໃຫ້ມີການຍົກຍ້າຍ ຖ້າກົດຈະກໍາການສ້າງ ສວນສາທາລະນະແຄມນໍ້າ ລວມຢູ່ໃນບົດສະເໜີໂຄງການ. ການສຶກສາຄວາມເປັນໄປໄດ້ໃນຂັ້ນຕໍ່ໄປ ແລະ ການສຶກ ສາອອກແບບ ຈະຈັດຕັ້ງປະຕິບັດຕາມ ບັນດາເອກະສານວ່າດ້ວຍມາດຕະການຫຼຸດຜ່ອນຜົນກະທົບຂອງ ທະນະຄານ ໂລກ ແລະ ສົມທົບກັບ ນະໂຍບາຍວ່າດ້ວຍການຈັດສັນຍົກຍ້າຍແບບບໍ່ສະມັກໃຈ.

ກົດໝາຍ ແລະ ຂໍ້ກໍາໜົດກົດລະບຽບຕ່າງໆ ຂອງ ສປປລາວ ກ່ຽວຂ້ອງກັບ ການຈັດການ ດ້ານສັງຄົມ ແລະ ສິ່ງແວດລ້ອມ ທີ່ກ່ຽວຂ້ອງ ລວມມີ:

- ລັດຖະທໍາມະນູນຂອງ ສປປລາວ ( 1991, ສະບັບດັດແກ້ 2003 ແລະ 2015);
- ກົດໝາຍການປົກປັກຮັກສາສິ່ງແວດລ້ອມ (2013);
- ຂໍ້ແນະນໍາຂອງກະຊວງເລກທີ *8030/*ຊທສວ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ(2013);
- ຄູ່ມືແນະນໍາການມີສ່ວນຮ່ວມຈາກສາທາລະນາຊົນ (2012);
- ກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ (1996);
- ກົດໝາຍປ່າໄມ້ (2007);
- ກົດໝາຍ ຄຸ້ມຄອງສັດປ່າ ແລະ ສັດນໍ້າ (2007);
- ດໍາລັດການຊົດເຊີຍ ແລະ ການຈັດສັນຍົກຍ້າຍປະຊາຊົນທີ່ຖືກຜົນກະທົບຈາກໂຄງການພັດທະນາ (ເລກທີ 84/ລບ, 5 ເມສາ2016);
- ກົດໝາຍທີ່ດິນ (2003);

ສປປ ລາວ ໄດ້ມີ ການສ້າງ ບັນດາກົດໝາຍ, ດໍາລັດ, ລະບຽບຫຼັກການ ແລະ ຂໍ້ແນະນໍາຕ່າງໆ ກ່ຽວກັບການ ສະຫງວນ ແລະ ປົກປັກຮັກສາ ສິ່ງແວດລ້ອມ, ໂດຍສະເພາະແມ່ນ ກ່ຽວກັບທີ່ດິນ, ປ່າໄມ້, ແຫຼ່ງນໍ້າ, ສັດນໍ້າ ແລະ

[2] ກອງທຶນ ໂຄງການ ຄຸ້ມຄອງຄວາມຊ່ຽງໄພພິບັດຂອງ ສປປລາວ ອາດນໍາໃຊ້ເພື່ອທົດແທນຄ່າເສຍຫາຍ ໃນການຫຍັບຍ້າຍທີ່ດິນ ພາຍໃຕ້ໂຄງການ ແລະ ເຊັ່ນດຽວກັບການ ໃຊ້ໃນການຟື້ນຟູລາຍຮັບ ແລະ ຄ່າເບ້ຍລ້ຽງ ໃນການການຍົກຍ້າຍສໍາລັບຜູ້ຢູ່ອາໄສຢ່າງເປັນທາງການ ແລະ ບໍ່ເປັນທາງການ ໃນເຂດໄດ້ຮັບຜົນກະທົບ.

ສັດປ່າ. ການແກ້ໄຂກົດ ໝາຍວ່າດ້ວຍການປົກປັກຮັກສາ ສິ່ງແວດລ້ອມ (2013) ແມ່ນ ເປັນກົດໝາຍຫຼັກ ລະດັບຊາດ. ກົດໝາຍວ່າດ້ວຍການປົກປັກຮັກສາ ສິ່ງແວດລ້ອມ ສ້າງຂຶ້ນໃຫ້ເປັນ ເອກະພາບໃນ ການຄຸ້ມຄອງ ສິ່ງແວດລ້ອມ ເຊັ່ນ ຊັບພະຍາກອນທໍາມະຊາດ ໂດຍແນ່ໃສ ເພື່ອການນໍາໃຊ້ຊັບພະຍາກອນທໍາມາະຊາດແບບຍືນ ຍົງ. ກົດໝາຍວ່າດ້ວຍການປົກປັກຮັກສາ ສິ່ງແວດລ້ອມ ລວມເອົາບັນດາມາຕະການໃນການປົກປ້ອງ, ປັບປຸງ, ຫຼຸດຜ່ອນຜົນກະທົບ ແລະ ຟື້ນຟູ ສິ່ງແວດລ້ອມ ແລະ ເປັນບົດແນະນໍາການຄຸ້ມຄອງ ແລະ ຕິດຕາມ ສິ່ງແວດລ້ອມ. ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ (MoNRE) ແມ່ນໜ່ວຍງານ ຮັບຜິດຊອບ ແລະ ຈັດຕັ້ງ ປະຕິບັດ ກົດໝາຍວ່າດ້ວຍການປົກປັກຮັກສາ ສິ່ງແວດລ້ອມ ແລະ ບັນດາກະຊວງຕ່າງໆ ກໍ່ ໄດ້ມີການປະກອບ ແນວທາງ ເພື່ອ ດໍາເນີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປົກປັກຮັກສາ ສິ່ງແວດລ້ອມ.

ສປປລາວ ນໍາໃຊ້ ບັນດາກົດລະບຽບ ຕ່າງໆ ເພື່ອໂຄງການພັດທະນາໂຄງລ່າງຕ່າງໆ ເຊັ່ນ: ຄູ່ມືລັດຖະມົນຕີ ເລກທີ. 8030/ກຊສ(2013) ແລະ ຄູ່ມືແນະນໍາ ການປະເມີນຜົນດ້ານສິ່ງແວດລ້ອມ (2012) ທີ່ໄດ້ໃຫ້ ທິດທາງ ເພື່ອ ຂະບວນການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ໃນ ສປປ ລາວ. ນອກເໜືອຈາກນັ້ນ, ຄູ່ມື ລັດຖະມົນຕີ ວ່າດ້ວຍຂະບວນການມີສ່ວນຮ່ວມຂອງຈາກທຸກພາກສ່ວນ ໃນຂັ້ນຕອນການປະເມີນຜົນກະທົບດ້ານ ສິ່ງແວດລ້ອມ ຂອງການລົງທຶນໂຄງການ ໄດ້ມີການເພີ່ມເຕີມ ຄໍາແນະນໍາ ໃນຂັ້ນ ຕອນການປະເມີນ ສິ່ງແວດລ້ອມ ແລະ ສັງຄົມ.

ສ້າງຂຶ້ນໃນປີ 2005 ແລະ ແກ້ໄຂ ປີ 2016, ດໍາລັດ ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍາຍ ປະຊາຊົນ ຈາກໂຄງການພັດທະນາ ເຊິ່ງ ມັນພົວພັນເຖິງໂຄງ ການ Lao PDR SEA DRM . ດໍາລັດນີ້ເວົ້າ ເຖິງ ຫຼັກການ, ກົດລະບຽບ ແລະ ມາດຕະການ ເພື່ອຫຼຸດຜ່ອນຜົນກະທົບ ເຖິງສັງຄົມ ແລະ ເພື່ອ ທົດແທນຄ່າເສຍຫາຍ ຈາກຜົນກະທົບ ການຫຍັບຍ້າຍ ທີ່ບໍ່ສະໝັກໃຈ ຫຼື ການຄອບຄອງທີ່ດິນ, ຊັບສິນຄົງທີ່ ຫຼື ເຄື່ອນທີ່, ນັບທັງ ການ ປ່ຽນທີ່ດິນ, ແລະ ຫຼື ຂໍ້ຈໍາກັດ ຂອງການເຂົ້າຫາ ຊຸມຊົນ ຫຼື ຊັບພະຍາກອນທໍາມະຊາດ ທີ່ ກະທົບເຖິງ ຊີວິດການ ເປັນຢູ່ຂອງ ປະຊາຊົນ ແລະ ແຫຼ່ງລາຍຮັບ. ດໍາລັດນີ້ ແມ່ນມີຈຸດປະສົງເພື່ອ ບຸກຄົນ ແລະ ຄົວເຮືອນທີ່ຖືກຜົນ ກະທົບຈາກໂຄງການ ໄດ້ຮັບການທົດແທນຄ່າເສຍຫາຍ ແລະ ໄດ້ຮັບການຊ່ວຍເຫຼືອ ປັບປຸງ ຫຼື ຟື້ນຟູ ຊີວິດການເປັນ ຢູ່ ຂອງປະຊາຊົນ ໃຫ້ຄືເກົ່າ ຫຼື ດີກ່ວາຊ່ວງກ່ອນໂຄງການ. ຂໍ້ກໍານົດເຫຼົ່ານີ້ຈະຖືກນໍາໃຊ້ ໃນຊ່ວງ ການກະກຽມ ແລະ ການຈັດຕັ້ງປະຕິບັດ ການປະເມີນຜົນກະທົບດ້ານສັງຄົມ (SIA), ແຜນຫຼຸດຜ່ອນ ແລະ ຕິດຕາມ ຜົນກະທົບຕໍ່ ສັງຄົມ (SMMP), ແລະ ຫຼື ແຜນຈັດສັນຍົກຍ້າຍສະບັບຫຍໍ້ (ARAP) / ແຜນດໍາເນີນການຈັດສັນຍົກຍ້າຍ (RAP).

ທະນາຄານໂລກ ກໍານົດໄວ້ວ່າ ການພັດທະນາເສດຖະກິດ ຕ້ອງນໍາໃຊ້ຫຼາຍມາດຕະການ, ສະໜັບສະໜູນດ້ານໂຄ່ງ ລາງ ແລະ ສິ່ງອໍານວຍຄວາມສະດວກ ທີ່ຈະປັບປຸງ ຊີວິດການເປັນຢູ່ ແລະ ດ້ານສາທາລະນະສຸກ ໂດຍການ ຂະຫຍາຍ ໂອກາດທາງດ້ານເສດຖະກິດ. ການລົງທຶນ ໂຄງການຂອງ ກຸ່ມທະນາຄານໂລກ ຕ້ອງຜ່ານບົດທົດສອບ ແລະ ເປັນໄປຕາມນະໂຍບາຍ ກ່ຽວກັບ ການຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ຈາກ ປະເທດກູ້ຢືມ ເພື່ອ ຈະໄດ້ຮັບທຶນໃຫ້ໂຄງການຍ່ອຍ. ມາດຕະການການຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ຊ່ວຍໃນການຕັດສິນ ເພື່ອກໍານົດ, ແຈ້ງເຕືອນ-ປ້ອງກັນ, ຫຼຸດຜ່ອນຜົນກະທົບເຖິງ ຄົນ ແລະ ສິ່ງແວດລ້ອມໃຫ້ນ້ອຍສຸດ. ມາດຕະການ ການຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງ ທະນາຄານໂລກ ໄດ້ຮຽກຮ້ອງໃຫ້ລັດຖະບານຜູ້ກູ້ຢືມ ( ລັດຖະບານແຫ່ງ ສປປ ລາວ) ຕ້ອງແກ້ໄຂ ຄວາມສ່ຽງ ສະເພາະດ້ານສິ່ງແວດລ້ອມ ແລະ ສັງຄົມ ແມ່ນ ໜຶ່ງໃນຄໍາຮຽກຮ້ອງ ກ່ອນ ການອະນຸມັດເງິນລົງທຶນຈາກກຸ່ມ ທະນາຄານໂລກ ເພື່ອ ພັດທະນາໂຄງການ.

ໂຄງການ ຖືກຈັດໃນປະເພດ ຈຳນວນ ຂອງການສະເໜີການລິເລີ່ມໂຄງການ ກັບ ການ ບໍ່ມີລາຍລະອຽດ ໃນລາຍການສະບັບສຸດທ້າຍ ຂອງການລິເລີ່ມໂຄງການລົງທຶນພັດທະນາໂຄງລ່າງ ແລະ ຄຸ້ມຄອງຄວາມສ່ຽງຈາກໄພນ້ຳຖ້ວມໃນຕົວເມືອງ. ກອບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF) ຈະໃຫ້ ຄຳແນະນຳ ໂດຍລວມ ກ່ຽວກັບເອກະສານຫຼຸດຜ່ອນ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ການບໍລິຫານຈັດການ, ຂະບວກການ ແລະ ເຄື່ອງມືສະເພາະ ທີ່ແນະນຳ ແລະ ແຈ້ງບອກ ການເຮັດ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMP), ແຜນຈັດສັນຍົກຍ້າຍສະບັບຫຍໍ້ (ARAP) / ແຜນດຳເນີນການຈັດສັນຍົກຍ້າຍ (RAP) ແລະ ແຜນພັດທະນາຂອງຊົນເຜົ່າສ່ວນນ້ອຍ (EGDP), ແລະ ເຄື່ອງມື ຫຼຸດຜ່ອນຜົນກະທົບອື່ນໆ (ຖ້ານຳໃຊ້) ໃນລະຫ່ວາງ ໂຄງການຍ່ອຍ ເຮັດການສຶກສາຄວາມເປັນໄປໄດ້ໃນການລົງທຶນ ແລະ ການສຶກສາອອກແບບ.

ເກືອບທັງໝົດຂອງນະໂຍບາຍ ວ່າດ້ວຍການຈັດສັນຍົກຍ້າຍແບບບໍ່ສະມັກໃຈ ຂອງ ທະນາຄານໂລກ (OP/BP 4.12) ແມ່ນມີຄວາມສອດຄ່ອງ ກັບລະບຽບກົດໝາຍແຫ່ງສປປລາວ. ເປົ້າໝາຍທັງໝົດຂອງໂຄງການ LDRM ທີ່ພົວພັນເຖິງ ທີ່ດິນ ແລະ ຊັບສິນ ທີ່ຕ້ອງຫຍັບຍ້າຍ ແມ່ນຈະໄດ້ ຊ່ວຍເຫຼືອ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບ ເພື່ອ ຟື້ນຟູຊີວິດການເປັນຢູ່, ຢ່າງນ້ອຍສຸດ ໃຫ້ທຽບເທົ່າກັບລະດັບ ກ່ອນການເຂົ້າມາຂອງໂຄງການ. ຫຼັກການທີ່ນຳໃຊ້ ແມ່ນລວມມີ:

- ການລົງທຶນລະບົບໂຄງລ່າງເພື່ອ ການຄຸ້ມຄອງໄພຄວາມສ່ຽງຈາກໄພນ້ຳຖ້ວມໃນຕົວເມືອງ ຄວນຫຼີກລ້ຽງການກະທົບເຖິງ ເຂດທີ່ຢູ່ອາໄສ ໃຫ້ໜ້ອຍສຸດ ເພື່ອ ຫຼຸດຜ່ອນການຍົກຍ້າຍ ຈຳນວນຄົນ ແລະ ຄົວເຮືອນທີ່ຖືກຜົນກະທົບ ໃຫ້ໜ້ອຍສຸດ ແລະ ເລືອກເຂດທີ່ຈະກໍ່ສ້າງ ທີ່ຈະມີການຫຍັບຍ້າຍທີ່ດິນ, ຊັບສິນ, ສະຖານທີ່ສາທາລະນະໃຫ້ໜ້ອຍສຸດ;
- ຮັບປະກັນມາດຕະຖານການອອກແບບ ຫຼຸດຜ່ອນຄວາມຈຳເປັນໃນການນຳໃຊ້ທີ່ດິນ ໃນບໍລິເວນອ້ອມຂ້າງໃຫ້ໜ້ອຍສຸດ;
- ຂັ້ນຕອນການພັດທະນາມີຄວາມຍຸດຕິທຳ ແລະ ໂປ່ງໃສ, ດັ່ງທີ່ໄດ້ນິຍາມ ໃນ ໂຄ່ງຮ່າງກ່ຽວກັບກຳມະສິດຂອງ ກອບໜ້າວຽກນະໂຍບາຍການຈັດສັນຍົກຍ້າຍ ເພື່ອກຳນົດ ການທົດແທນຄ່າເສຍຫາຍ ໃຫ້: (i) ການສູນເສຍທີ່ດິນ ຊົ່ວຄາວ ຫຼື ຊັບສິນ ໃນລະຫວ່າງ ການເຮັດ ຕາຝັ່ງກັນເຈື່ອນ, ການກໍ່ສ້າງ ແລະ ວຽກບູລະນະຊ້ອມແປງ; (ii) ການຫຍັບຍ້າຍທີ່ດິນ ຫຼື ຊັບສິນ ແບບ ຖາວອນ; ແລະ (iii) ຂໍ້ຈຳກັດ ຂອງການນຳໃຊ້ ທີ່ດິນ ທີ່ອາດນຳໃຊ້ ໃນບໍລິເວນອ້ອມຂ້າງຂອງ ໂຄງການຍ່ອຍ ໃນເຂດ ສະຫງວນແຄມນ້ຳ ແລະ ເຂດ ທີ່ຈະໄດ້ຮັບຜົນສະທ້ອນຈາກການກໍ່ສ້າງ.
- ການຫຍັບຍ້າຍທີ່ດິນ (ຫຼືສິດໃນການນຳໃຊ້ທີ່ດິນ) ໂດຍ ຜ່ານການຕົກລົງ ເຈລະຈາ ແລະ ການນຳໃຊ້ອຳນາດຂອງ ອົງກອນ ທີ່ກ່ຽວຂ້ອງ ເປັນທາງອອກສຸດທ້າຍ.
- ພາຍຫຼັງສຳເລັດລະບົບໂຄງລ່າງຄຸ້ມຄອງໄພຄວາມສ່ຽງຈາກໄພນ້ຳຖ້ວມໃນຕົວເມືອງໂດຍການເຮັດຕາຝັ່ງກັນເຈື່ອນ, ກໍ່ສ້າງ ແລະ ວຽກບູລະນະຊ້ອມແປງ, ຟື້ນຟູທີ່ດິນ ໃຫ້ດີທີ່ສຸດ ໃຫ້ໃກ້ຄຽງກັບສະພາບເດີມ ໃນກໍລະນີ ທີ່ມີການຢຸດສະງັກ ຂອງວຽກ ຊົ່ວຄາວ ເຈົ້າຂອງດິນ/ຜູ້ນຳໃຊ້ທີ່ດິນ/ຜູ້ເຊົ່າ ເພື່ອໃຫ້ເຂົາໄດ້ກັບມາດຳເນີນກິດຈະກຳຂອງພວກເຂົາຄືນ.
- ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ, ແລະ ຊຸມຊົນ ໃຫ້ເຂົາໄດ້ຮັບຮູ້ຂໍ້ມູນຂ່າວສານຢ່າງຄົບຖ້ວນ ກ່ຽວກັບ ໂຄງການຍ່ອຍ, ຂະບວນການ ຫຍັບຍ້າຍ ແລະ ການທົດແທນຄ່າເສຍຫາຍ, ແລະ ສິດທິ ຂອງພວກເຂົາ ແລະ ແນວທາງໃນການແກ້ໄຂ;

- ຮັບປະກັນບຸກຄົນ ຫຼື ຄົວເຮືອນທີ່ຖືກຜົນກະທົບ ທີ່ໄດ້ຮັບຜົນເສຍຫາຍ ຈະໄດ້ຮັບການທົດແທນ ແລະ ມີທາງເລືອກໃຫ້ ບັນຫາ ຖືກບັນຈຸເຂົ້າໃນແຜນ ແລະ ຫຼັກການຂອງ ກອບໜ້າວຽກນະໂຍບາຍການຈັດສັນຍົກຍ້າຍ. ແລະ, ສຳຄັນໄປຫຼາຍກ່ວານັ້ນ ແມ່ນ ໄດ້ຈັດຕັ້ງນຳໃຊ້;
- ທຸກຄົນ ແລະ ທຸກຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ, ທີ່ບໍ່ມີສິດໃນການຄອບຄອງທີ່ຢູ່ອາໄສຕາມກົດໝາຍ, ຈະໄດ້ຮັບການແກ້ໄຂ ແລະ ຊ່ວຍເຫຼືອ ໃນຫຼາຍຮູບແບບ, ເຊັ່ນໃນໂຄງຮ່າງກຳນົດສິດທິ ໄດ້ລະບຸໄວ້(ເບິ່ງພາກທີ 8.0, ຕາຕະລາງ 2), ເພື່ອຊ່ວຍເຫຼືອ ແລະ ຟື້ນຟູ ຊີວິດການເປັນຢູ່ ແລະ ສາທາລະນະສຸກຂອງພວກເຂົາໃຫ້ ຄືກັບຊ່ວງກ່ອນ ໂຄງການ LDRM. ທຸກຄົນ ແລະ ທຸກຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ ຜູ້ທີ່ ມີບັນຫາກ່ຽວກັບການຄອບຄອງທີ່ດິນທີ່ບໍ່ຖືກລະບຽບຫຼັກການ (ລຸກລ້ຳທີ່ດິນສາທາລະນະ) ຈະບໍ່ໄດ້ຮັບການທົດແທນຄ່າເສຍຫາຍ ໃນການສູນເສຍທີ່ດິນ ແຕ່ຈະໄດ້ຮັບການທົດແທນຄ່າເສຍຫາຍຈາກການສູນເສຍຊັບສິນ ທີ່ພວກເຂົາເປັນຜູ້ອອກທຶນເຮັດຂຶ້ນເອງ, ແລະ ສຳລັບການສູນເສຍລາຍຮັບ ທີ່ພວກເຂົາໃຊ້ໃນການດຳລົງຊີວິດ ແລະ ສຸຂະພາບ. ລາຍລະອຽດຂອງບັນດາມາດຕະການ ທີ່ຈະຖືກຈັດຕັ້ງປະຕິບັດ ຈະຖືກກຳນົດ ໂດຍອີງໃສ ການສຳຫຼວດປະຊາກອນໃນເຂດທີ່ໄດ້ຮັບຜົນສະທ້ອນ ແລະ ການລົງສຳຫຼວດຂໍ້ມູນດ້ານ ເສດຖະກິດ ແລະ ສັງຄົມ ທີ່ຈະຖືກຈັດຕັ້ງປະຕິບັດ ໃນຂັ້ນຕອນການພັດທະນາ ແຜນຈັດຕັ້ງປະຕິບັດແຜນຈັດສັນຍົກຍ້າຍສະບັບຫຍໍ້ (ARAP) / ແຜນດາເນີນການຈັດສັນຍົກຍ້າຍ (RAP)
- ທຸກຄົນ ແລະ ທຸກຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ ຈະໄດ້ຮັບການແຈ້ງຂ່າວສານ ຕາມແຜນວຽກແລະປຶກສາຫາລື ຈາກການຈັດຕັ້ງປະຕິບັດໂຄງການ ຕາມຫຼັກການ ຂອງການຫຍັບຍ້າຍ ແລະ ການສູນເສຍ , ຫຼື ເສຍຫາຍ, ເຖິງຊັບສິນ; ແລະ
- ຄວາມເສຍຫາຍຕໍ່ຊັບສິນ, ເຊັ່ນຕົ້ນໄມ້ຢືນຕົ້ນ, ຕົ້ນໄມ້, ຮົ້ວ ແລະ ຮ້ານຮ້ານ, ແລະ ສູນເສຍລາຍຮັບ (ລວມເຖິງ ສູນເສຍການເກັບກ່ຽວ) ຈະຖືກຈຳກັດໃຫ້ນ້ອຍສຸດ, ແຕ່ສິ່ງທີ່ຫຼີກລ້ຽງບໍ່ໄດ້, ແລະ ຈະຖືກທົດແທນຄ່າເສຍຫາຍເຖິງຈະບໍ່ມີສິດການຄອບຄອງທີ່ດິນທີ່ຖືກກົດໝາຍກໍ່ຕາມ, ເຊິ່ງມັນສະແດງໃນຕາຕະລາງ 1 ກ່ຽວກັບ ການສະແດງໂຄງຮ່າງ ສິດທິ.

ໃນ ປີ2016 ໄດ້ມີການປັບປຸງ ດຳລັດວ່າດ້ວຍການ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ ປະຊາຊົນຜູ້ຖືກຜົນກະທົບ ຈາກໂຄງການພັດທະນາໃດ້ ມີຫຼັກການ, ກົນໄກ ແລະ ຂະບວນການ ເພື່ອຫຼຸດຜ່ອນ ຜົນກະທົບທາງດ້ານສັງຄົມ ແລະ ການ ທົດ ແທນຄ່າເສຍຫາຍ ເຊິ່ງເກີດຈາກການຫຍັບຍ້າຍທີ່ດິນແບບບໍ່ສະມັກໃຈ ຫຼື ການຄອບຄອງທີ່ຊັບສິນ ຄົງທີ ຫຼື ເຄື່ອນຍ້າຍໃດ້. ດຳລັດ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ (C&R) ແມ່ນມີຈຸດປະສົງເພື່ອ ຮັບປະກັນ ບຸກຄົນທີ່ຖືກຜົນກະທົບຈາກໂຄງການ (PAP) ແລະ ຄົວເຮືອນຖືກຜົນກະທົບຈາກໂຄງການ (PAH) ໃດ້ຮັບການທົດແທນຄ່າເສຍຫາຍ ແລະ ໃດ້ຮັບການຊ່ອຍເຫຼືອ ຟື້ນຟູ ລາຍຮັບ ແລະ ຊີວິດການເປັນຢູ່ ໃຫ້ຄື ກັບຕອນທີ່ໂຄງການຍັງບໍ່ເຂົ້າມາ. ແລະ ບໍ່ເຮັດໃຫ້ ຊີວິດການເປັນຢູ່ຂອງພວກເຂົາ ຫຍຸ້ງຍາກຂຶ້ນກ່ວາເກົ່າ. ດຳລັດ (ເລກທີ.84/ລບ, 2016) ແມ່ນມີເນື້ອໃນສ່ວນໃຫ່ຍສອດຄ່ອງກັບ ນະໂຍບາຍຂອງທະນາຄານໂລກ ວ່າດ້ວຍການ ຈັດສັນຍົກຍ້າຍແບບບໍ່ສະມັກໃຈ (OP/BP 4.12). ຕາຕະລາງທີ່ 1 ສົມທຽບ ນະໂຍບາຍຂອງທະນາຄານໂລກ ວ່າດ້ວຍການ ຈັດສັນຍົກຍ້າຍແບບບໍ່ສະມັກໃຈ (OP/BP 4.12) ແລະ ດຳລັດ ເລກທີ.84/ລບ, 2016 ຂອງ ສປປ ລາວ.

**ຕາຕະລາງ1 ການວິເຄາະຊ່ອງຫວ່າງ ລະຫວ່າງ ນະໂຍບາຍການຈັດສັນຍົກຍ້າຍ ຂອງທະນາຄານໂລກ (OP/BP 4.12) ແລະ ດຳລັດ ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ**

| ຫົວຂໍ້ | OP 4.12 | ດຳລັດ ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ ເລກທີ 84/ລບ (2016) | ຊ່ອງຫວ່າງ/ມາດຕະການໂຄງການ |
|---|---|---|---|
| ***1. ຊັບສິນທາງດ້ານທີ່ດິນ*** | | | |
| 1.1. ວັດຖຸປະສົງຂອງນະໂຍບາຍ | PAPs (ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ) ຄວນໄດ້ຮັບການຊ່ວຍເຫຼືອໃນຄວາມພະຍາຍາມທີ່ຈະປັບປຸງຊີວິດການເປັນຢູ່ ແລະ ມາດຕະຖານການເປັນຢູ່ທີ່ດີ ຫຼື ຢ່າງໜ້ອຍກໍຊ່ວຍເຫຼືອຟື້ນຟູຊີວິດການເປັນຢູ່ຂອງເຂົາເຈົ້າ, ໃນຄວາມເປັນຈິງແລ້ວ ໃນລະດັບກ່ອນການເຄື່ອນຍ້າຍ ຈົນໄປເຖິງ ລະດັບທີ່ມີຢູ່ ກ່ອນທີ່ຈະເລີ່ມຕົ້ນຈັດຕັ້ງປະຕິບັດໂຄງການ ຫຼື ຫຼາຍກວ່ານັ້ນ. | ຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການ ໄດ້ຮັບຄ່າຊົດເຊີຍ ແລະ ການຊ່ວຍເຫຼືອໃນການປັບປຸງ ຫຼື ຟື້ນຟູ ລາຍຮັບ ແລະ ຊີວິດການເປັນຢູ່ກ່ອນທີ່ຈະເລີ່ມຕົ້ນໂຄງການ ແລະ ບໍ່ໄດ້ເຮັດໃຫ້ຄຸນະພາບຊີວິດຂອງເຂົາເຈົ້າ ຕົກຕ່ຳໄປກວ່າເກົ່າ ໃນຕອນທີ່ບໍ່ມີໂຄງການພັດທະນາ. | ນະໂຍບາຍການດຳເນີນງານ ຂໍ້ທີ OP 4.12 ຈະຕ້ອງໄດ້ນຳເອົາເຂົ້າມາໃຊ້ - ການຊົດເຊີຍເປັນເງິນສົດ ສຳລັບຄ່າປ່ຽນແທນ ທີ່ເປັນທີ່ດິນ ແລະ ສິ່ງປຸກສ້າງ ຈະຕ້ອງໄດ້ຖືກຈ່າຍ ໂດຍບໍ່ມີການຫັກຄ່າຫຼຸ້ຍຫ້ຽນ ຫຼື ວັດສະດຸຊື່ອຄາວ.<br>ນອກຈາກນີ້, ລາຍຮັບ ທີ່ຕ້ອງໄດ້ຈ່າຍເພີ່ມ ເພື່ອເປັນການເພີ່ມຄືນ ລາຍໄດ້, ຜົນລະປູກ, ຕົ້ນໄມ້ ຖືໄດ້ວ່າ ເປັນຄ່າໃຊ້ຈ່າຍເຄື່ອນທີ່. |
| 1.2. ສະໜັບສະໜູນຄອບຄົວທີ່ໄດ້ຮັບຜົນກະທົບ ສຳລັບຜູ້ທີ່ ບໍ່ໄດ້ຖືຄອງທີ່ດິນ ຕາມກົດໝາຍ ຫຼື ຜູ້ທີ່ມີພຽງແຕ່ສິດຊົມໃຊ້ເທົ່ານັ້ນ. | ການໃຫ້ການຊ່ວຍເຫຼືອທາງການເງິນແກ່ຜູ້ທີ່ໄດ້ຮັບຜົນກະທົບ ເພື່ອໃຫ້ບັນລຸວັດຖຸປະສົງຂອງນະໂຍບາຍ (ປັບປຸງຊີວິດການເປັນຢູ່ ແລະ ລະມາດຕະຖານການດຳລົງຊີວິດຂອງເຂົາເຈົ້າ ຫຼື ຢ່າງໜ້ອຍກໍໃຫ້ດີທີ່ສຸດ. ໃນສະພາບຄວາມເປັນຈິງ, ໃນລະດັບກ່ອນການເຄື່ອນຍ້າຍ ຈົນໄປເຖິງ ລະດັບທີ່ມີຢູ່ ກ່ອນທີ່ | ຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການ, ຜູ້ທີ່ບໍ່ມີໃບຕາດິນ ແລະ ສິດນຳໃຊ້ຕາມກົດໝາຍ ຫຼື ເອກະສານ ທີ່ຮັບຮອງວ່າ ພວກເຂົາມີສິດນຳໃຊ້ທີ່ດິນທີ່ຖືກຕ້ອງ ເຊິ່ງໃນນັ້ນປະກອບມີ ທີ່ດິນທີ່ນຳໃຊ້ຕາມຮີດຄອງປະເພນີ ຕາມທີ່ໄດ້ປະຕິບັດກັນມາ ນັ້ນ ແມ່ນຈະໄດ້ພຽງແຕ່ຄ່າທົດແທນທີ່ເປັນຊັບສິນທີ່ຖືກຜົນກະທົບເທົ່ານັ້ນ ເຊັ່ນ ບ້ານເຮືອນ/ສິ່ງປຸກສ້າງ, ຕົ້ນໄມ້ ຫຼື ຜົນລະປູກ ແຕ່ຈະບໍ່ແມ່ນທີ່ດິນ. | ຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການ, ຜູ້ທີ່ບໍ່ມີໃບຕາດິນ ແລະ ສິດນຳໃຊ້ຕາມກົດໝາຍ ຫຼື ເອກະສານ ທີ່ຮັບຮອງວ່າ ພວກເຂົາມີສິດນຳໃຊ້ທີ່ດິນທີ່ຖືກຕ້ອງ, ແຕ່ພວກເຂົາຍັງມີສິດ ທີ່ຈະໄດ້ຮັບການຊ່ວຍເຫຼືອທາງການເງິນ ເພື່ອໃຫ້ບັນລຸວັດຖຸປະສົງຂອງນະໂຍບາຍດຳເນີນງານຂອງທະນາຄານໂລກ ວ່າດ້ວຍການຍົກຍ້າຍຈັນສັນ ດ້ວຍຄວາມບໍ່ສະໝັກໃຈ (ປັບປຸງຊີວິດການ |

| | | | |
|---|---|---|---|
| | ຈະເລີ່ມຕົ້ນຈັດຕັ້ງປະຕິບັດໂຄງການ ຫຼື ຫຼາຍກວ່ານັ້ນ) | | ເປັນຢູ່ ແລະ ລະມາດຕະຖານການດຳລົງຊີວິດ ຂອງເຂົາເຈົ້າ ຫຼື ຢ່າງໜ້ອຍກໍໃຫ້ດີທີ່ສຸດ. ໃນສະພາບຄວາມເປັນຈິງ, ໃນລະດັບກ່ອນການເຄື່ອນຍ້າຍ ຈົນໄປເຖິງ ລະດັບທີ່ມີຢູ່ ກ່ອນທີ່ຈະເລີ່ມຕົ້ນຈັດຕັ້ງປະຕິບັດໂຄງການ ຫຼື ຫຼາຍກວ່ານັ້ນ)<br><br>ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ທີ່ເປັນຄົນດ້ອຍໂອກາດ ຈະຕ້ອງໄດ້ຮັບການຊ່ວຍເຫຼືອພິເສດ.<br><br>ນະໂຍບາຍການດຳເນີນງານ ຂໍ້ທີ OP 4.12 ຈະຕ້ອງໄດ້ນຳເອົາເຂົ້າມາໃຊ້ |
| 1.3. ການທົດແທນຄ່າເສຍຫາຍ ຕາມກອບລະບຽບກົດໝາຍ | ການທົດແທນຄ່າເສຍຫາຍ ທີ່ຈະຖືກຈ່າຍຄ່າປ່ຽນແທນ ເຕັມຈຳນວນ ໂດຍບໍ່ຄຳນຶງເຖິງ ສະຖານະພາບທາງດ້ານກົດໝາຍ ຂອງທີ່ດິນ ແລະ ສິ່ງປຸກສ້າງ ຂອງຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການ. | ຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການ, ຜູ້ທີ່ບໍ່ມີໃບຕາດິນ ແລະ ສິດນຳໃຊ້ຕາມກົດໝາຍ ຫຼື ເອກະສານ ທີ່ຮັບຮອງວ່າ ພວກເຂົາມີສິດນຳໃຊ້ທີ່ດິນທີ່ຖືກຕ້ອງ ເຊິ່ງໃນນັ້ນປະກອບມີ ທີ່ດິນທີ່ນຳໃຊ້ຕາມຮີດຄອງປະເພນີ ຕາມທີ່ໄດ້ປະຕິບັດກັນມານັ້ນ ແມ່ນຈະໄດ້ພຽງແຕ່ຄ່າທົດແທນທີ່ເປັນຊັບສິນທີ່ຖືກຜົນກະທົບເທົ່ານັ້ນ ເຊັ່ນ ບ້ານເຮືອນ/ສິ່ງປຸກສ້າງ, ຕົ້ນໄມ້ ຫຼື ຜົນລະປູກ ແຕ່ຈະບໍ່ແມ່ນທີ່ດິນ. | ການທົດແທນຄ່າເສຍຫາຍ ທີ່ຈະຖືກຈ່າຍຄ່າປ່ຽນແທນ ເຕັມຈຳນວນ ຈະຈ່າຍໃຫ້ກັບທຸກໆປະເພດສິ່ງປຸກສ້າງ ທີ່ໄດ້ຮັບຜົນກະທົບ ໂດຍບໍ່ຄຳນຶງເຖິງ ສະຖານະພາບທາງດ້ານກົດໝາຍຂອງທີ່ດິນ ແລະ ສິ່ງປຸກສ້າງ.<br><br>ຈັດຫາຄ່າຊົມເຊີຍ ສຳລັບຊັບສິນປະເພດສິ່ງປຸກສ້າງ.<br><br>ນະໂຍບາຍການດຳເນີນງານ ຂໍ້ທີ OP 4.12 ຈະຕ້ອງໄດ້ນຳເອົາເຂົ້າມາໃຊ້. |

ຕາຕະລາງ1 (ຕໍ່)

| ຫົວຂໍ້ | OP 4.12 | ດຳລັດ ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ ເລກທີ 84/ລບ (2016) | ຊ່ອງຫວ່າງ/ມາດຕະການໂຄງການ |
|---|---|---|---|
| ***2. ການທົດແທນຄ່າເສຍຫາຍ*** | | | |
| 2.1. ວິທີການ ກຳນົດຄ່າປ່ຽນແທນ | ຄ່າຊົດເຊີຍ ທີ່ດິນ ແລະ ຊັບສິນປະເພດອື່ນ ທີ່ຈະຕ້ອງຈ່າຍ ເຕັມຄ່າປ່ຽນແທນ. | ມາດຕາ 2<br>▪ ການທົດແທນຄ່າເສຍຫາຍ ແມ່ນການທົດແທນ ເປັນທີ່ດິນ, ວັດຖຸ ຫຼື ເປັນເງິນ ສຳລັບ ທີ່ດິນ, ສິ່ງປຸກສ້າງ, ພືນລະປູກ, ສັດລ້ຽງ ແລະ ລາຍຮັບ ທີ່ໄດ້ຮັບຜົນກະທົບ ຈາກໂຄງການພັດທະນາ ດ້ວຍມູນຄ່າປ່ຽນແທນ.<br>ມາດຕາ 4<br>▪ ມູນຄ່າປ່ຽນແທນ ໝາຍເຖິງ ມູນຄ່າທີ່ຄິດໄລ່ເປັນ ວັດຖຸ, ເງິນ ຫຼື ທີ່ດິນ ທີ່ຈຳເປັນ ຕ້ອງນຳໃຊ້ ເພື່ອປ່ຽນແທນທີ່ດິນ, ສິ່ງປຸກສ້າງ, ພືນລະປູກ, ສັດລ້ຽງ ແລະ ລາຍຮັບ ທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາ.<br>ມາດຕາ 9<br>▪ ເຈົ້າຂອງໂຄງການ ໂດຍປະສານສົມທົບກັບ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ປະຈຳທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງດຳເນີນການຕີລາຄາ ແລະ ປະເມີນມູນຄ່າປ່ຽນແທນ ສຳລັບ ທີ່ດິນ, ສິ່ງປຸກສ້າງ, ພືນລະປູກ, ສັດລ້ຽງ ແລະ ລາຍຮັບທີ່ຕ້ອງໄດ້ຮັບ ການທົດແທນຄ່າເສຍຫາຍ ພ້ອມທັງ ປຶກສາຫາລື ເປັນເອກະພາບ ກັບຜູ້ທີ່ໄດ້ຮັບຜົນກະທົບ ໂດຍກຳນົດເອົາທາງເລືອກທີ່ຖືກຕ້ອງ ແລະ ເໝາະສົມ ບົນພື້ນຖານການປະເມີນ | ຜູ້ປະເມີນລາຄາອິດສະຫຼະ ຈະເປັນຜູ້ກຳນົດລາຄາ ຄ່າປ່ຽນແທນ ຂອງຊັບສິນ ທຸກປະເພດທີ່ໄດ້ຮັບຜົນກະທົບ ເພື່ອຄ່າຄ່າຊົດເຊີຍ ໂດຍ IRC/GDR ເພື່ອໃຫ້ແນ່ໃຈວ່າ ຄ່າປ່ຽນແທນ ຈະຖືກນຳໃຊ້.<br><br>ນະໂຍບາຍການດຳເນີນງານ ຂໍ້ທີ OP 4.12 ຈະຕ້ອງໄດ້ນຳເອົາເຂົ້າມາໃຊ້ |

| | | | |
|---|---|---|---|
| | | ລາຄາຂອງລັດ, ລາຄາຊື້-ຂາຍໃນທ້ອງຕະຫຼາດ ຫຼື ເປັນລາຄາສະເລ່ຍໃນໄລຍະເວລານັ້ນ ຂອງແຕ່ລະເຂດ, ແຕ່ລະປະເພດ ແລະ ແຕ່ລະທ້ອງຖິ່ນ.<br>▪ ສໍາລັບລາຄາຂອງລັດ (ລາຄາກາງ) ແມ່ນໄດ້ກໍານົດໄວ້ໃນລະບຽບການສະເພາະ ໂດຍມອບໝາຍໃຫ້ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຄົ້ນຄວ້າກໍານົດ ຢ່າງຖືກຕ້ອງ ແລະ ເໝາະສົມ ໃນແຕ່ລະໄລຍະ. | |
| 2.2. ການທົດແທນຄ່າເສຍຫາຍ ຈາກການສູນເສຍແຫຼ່ງລາຍໄດ້ ຫຼື ສະພາບຊີວິດການເປັນຢູ່ໂດຍລວມ | ການສູນເສຍແຫຼ່ງລາຍໄດ້ ຄວນທີ່ຈະໄດ້ຮັບການຊົດເຊີຍ (ວ່າຈະເປັນຜູ້ທີ່ໄດ້ຮັບຜົນກະທົບ ທີ່ຈະຍ້າຍໄປຢູ່ບ່ອນອື່ນຫຼືບໍ່) | ມາດຕາ 9<br>▪ ສະໜອງທີ່ດິນກະສິກໍາ ສໍາລັບການຜະລິດຕາມຄວາມເໝາະສົມ ພ້ອມທັງ ສ້າງອາຊີບ ໃໝ່ ແລະ ອາຊີບເສີມທີ່ໝັ້ນຄົງ ພ້ອມທັງ ສິ່ງເສີມພູມປັນຍາຂອງຊາວບ້ານ. ນອກຈາກອາຊີບທີ່ຕິດພັນກັບການຜະລິດກະສິກໍາ ໃຫ້ຜູ້ທີ່ໄດ້ຮັບຜົນກະທົບ. | ນະໂຍບາຍການດໍາເນີນງານ ຂໍ້ທີ OP 4.12 ຈະຕ້ອງໄດ້ນໍາເອົາເຂົ້າມາໃຊ້ – ການສູນເສຍລາຍໄດ້ ຈະຕ້ອງໄດ້ຮັບການຟື້ນຟູ ຕາມອັດຕາ ກ່ອນການຍົກຍ້າຍ ໂດຍບໍ່ຄໍານຶງເຖິງສະຖານະພາບທາງດ້ານກົດໝາຍຂອງຜູ້ໄດ້ຮັບຜົນກະທົບ. |

**ຕາຕະລາງ1 (ຕໍ່)**

| ຫົວຂໍ້ | OP 4.12 | ດຳລັດ ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ ເລກທີ 84/ລບ (2016) | ຊ່ອງຫວ່າງ/ມາດຕະການໂຄງການ |
|---|---|---|---|
| 2.4. ການຊ່ວຍເຫຼືອ ແລະ ຟື້ນຟູຊີວິດການເປັນຢູ່ | ໃຫ້ການຊ່ວຍເຫຼືອ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ເພື່ອໃຫ້ບັນລຸຕາມຈຸດປະສົງຂອງນະໂຍບາຍ. | ມາດຕາ 13<br>▪ ໄປຄຽງຄູ່ກັບການສ້າງແຜນການຈັດສັນຍົກຍ້າຍປະຊາຊົນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ຂອງດຳລັດສະບັບນີ້, ເຈົ້າຂອງໂຄງການ ຕ້ອງປະສານສົມທົບກັບ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນປະຈຳທ້ອງຖິ່ນ ເກັບກຳຂໍ້ມູນ ກ່ຽວກັບ ອາຊີບທຳມາຫາກິນ ລວມທັງແຫຼ່ງລາຍຮັບຕ່າງໆ ຂອງຜູ້ທີ່ໄດ້ຮັບຜົນກະທົບ ຢ່າງລະອຽດ ເພື່ອສ້າງເປັນແຜນຟື້ນຟູຊີວິດການເປັນຜູ່ຂອງປະຊາຊົນ ປະກອບເຂົ້າໃນແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການທີ່ຕົນພັດທະນາ. | ເນື່ອງຈາກຜົນກະທົບທີ່ຄາດວ່າເກີດ ອາດຈະໜ້ອຍ, ການຟື້ນຟູລາຍໄດ້ ຈະຖືກຍົກເອົາມາເປັນແຕ່ລະກໍລະນີໄປ ບວກກັບ ການຈ່າຍເງິນ ເພື່ອຟື້ນຟູລາຍໄດ້ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ຈະອີກຕາມອັດຕາຄ່າຊົດເຊີຍກ່ອນການຍົກຍ້າຍ. |
| *2.5. ການປຶກສາຫາລື ແລະ ເຜີຍແຜ່ຂໍ້ມູນໃຫ້ມວນຊົນ* | ການມີສ່ວນຮ່ວມ ໃນການວາງແຜນ ແລະ ຈັດຕັ້ງປະຕິບັດ ໂດຍສະເພາະການຕົກລົງເຫັນດີ ກັບຄ່າທົດແທນຄ່າເສຍຫາຍ ແລະ ຊ່ວຍເຫຼືອ ໃນການເຂົ້າເຖິງ ກົນໄກການແກ້ໄຂຄຳຮ້ອງຮຽນ. | ມາດຕາ 5<br>ການທົດແທນຄ່າເສຍຫາຍ  ແລະ ການຈັດສັນຍົກຍ້າຍປະຊາຊົນ ໃຫ້ປະຕິບັດຕາມຫຼັກການພື້ນຖານດັ່ງນີ້:<br>1. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ໄດ້ຮັບຜົນກະທົບ;<br>2. ມີຄວາມສະເໝີພາບ, ຖືກຕ້ອງ, ໂປ່ງໃສ, ເປີດເຜີຍ ແລະ ຍຸຕິທຳ;<br>3. ມີການປະສານສົມທົບ, ປຶກສາຫາລື ແລະ ເຂົ້າຮ່ວມ ລະຫວ່າງເຈົ້າຂອງໂຄງການ, ຜູ້ໄດ້ຮັບຜົນກະທົບ, ການຈັດຕັ້ງພາກລັດ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ. | ຂະຫຍາຍການປຶກສາຫາລື ແລະ ການມີສ່ວນຮ່ວມ ໃນທຸກໆຂັ້ນຕອນຂອງການວາງແຜນ ແລະ ຈັດຕັ້ງປະຕິບັດ ແຜນງານການຈັດສັນຍົກຍ້າຍ.<br><br>ນະໂຍບາຍການດຳເນີນງານ ຂໍ້ທີ OP 4.12 ຈະຕ້ອງໄດ້ນຳເອົາເຂົ້າມາໃຊ້ |
| ***3. ກົນໄກການແກ້ໄຂຄຳຮ້ອງຮຽນ*** | | | |

| | | | |
|---|---|---|---|
| ຂັ້ນຕອນການບັນທຶກ ແລະ ຄັດກອງຄຳຮ້ອງຮຽນ | ກົນໄກການແກ້ໄຂຄຳຮ້ອງຮຽນ ຢູ່ພາຍໃນຄວາມຮັບຜິດຊອບຂອງລັດຖະບານ ທີ່ຂະແກ້ໄຂບັນຫາ ໃນການເຮັດໃຫ້ຂັ້ນຕອນການບັນທຶກ ແລະ ຄັດກອງຄຳຮ້ອງຮຽນ ມີຄວາມໂປ່ງໃສ | ມາດຕາ 23<br>ໃນກໍລະນີ ຜູ້ໄດ້ຮັບຜົນກະທົບເຫັນວ່າ ເຈົ້າຂອງໂຄງການ ບໍ່ປະຕິບັດຕາມ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຕາມດຳລັດສະບັບນີ້ ຫຼື ແຜນການອື່ນໆ ທີ່ກ່ຽວຂ້ອງ ເຊິ່ງແຕະຕ້ອງເຖິງຜົນປະໂຫຍດຂອງຕົນ, ກໍມີສິດສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂ ໄປຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນ ມາດຕາ 24 ຂໍ້ 1 ຂອງດຳລັດສະບັບນີ້. | ຄຳຮ້ອງຮຽນຈາກ PAP ແລະ PAHs ຈະເຊື່ອມໂຍງ ເຂົ້າໃນຂະບວນການຈັດຕັ້ງປະຕິບັດແຜນງານການຈັດສັນຍົກຍ້າຍ ຜ່ານວຽກງານການເຈລະຈາ ເພື່ອໃຫ້ບັນໄດ້ເຖິງຂໍ້ຕົກລົງຮ່ວມກັນ. ຄຳຮ້ອງທຸກ ຈະຜ່ານ ສາມ ຂັ້ນຕອນ ກ່ອນທີ່ຈະອຸທອນໄປຫາ ສານປະຊາຊົນສູງສຸດ ເຊິ່ງເປັນທາງເລືອກສຸດທ້າຍ. |
| ***4. ການຕິດຕາມກວດກາ ແລະ ປະເມີນຜົນ*** | | | |
| | ຈຳເປັນທີ່ຈະຕ້ອງມີການຕິດຕາມກວດກາ ອິດສະຫຼະ ທັງພາຍໃນ ແລະ ພາຍນອກ | ມາດຕາ 27<br>▪ ເຈົ້າຂອງໂຄງການ ຕ້ອງສ້າງຕັ້ງ ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ເພື່ອຮັບຜິດຊອບ ເປັນເຈົ້າການໃນການຕິດຕາມກວດກາດ້ວຍຕົນເອງກ່ອນພາກສ່ວນອື່ນໝົດ ໂດຍມີການສະຫຼຸບ ແລະ ລາຍງານສະພາບການ ຕິດຕາມກວດກາ, ການຈັດຕັ້ງປະຕິບັດ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຂອງໂຄງການພັດທະນາ ຕາມທີ່ໄດ້ກຳນົດໄວ້ ໃນແຜນການທັງໝົດ ໃຫ້ແກ່ພາກສ່ວນຕິດຕາມກວດກາຂອງພາກລັດ ເປັນແຕ່ລະໄລຍະ. | ໜ່ວຍງານຄຸ້ມຄອງໂຄງການ ປະສານສົມທົບໃກ້ຊິດກັບ GDR-IRC ດຳເນີນການຕິດຕາມກວດກາພາຍໃນ ຂອງການຈັດຕັງປະຕິບັດແຜນການຈັດສັນຍົກຍ້າຍ. ໃນແຜນການຕິດຕາມກວດກາ ລວມເອົາບົດລາຍງານຄວາມຄືບໜ້າ, ສະຖານະຂອງການປະຕິບັດແຜນງານການຈັດສັນຍົກຍ້າຍ, ຂໍ້ມູນທີ່ຕັ້ງ ແລະ ຈຳນວນຂອງປະຊາຊົນທີ່ໄດ້ຮັບຜົນກະທົບ, ຄ່າຊົດເຊີຍທີ່ໄດ້ຈ່າຍ ໃນແຕ່ລະຫົວໜ່ວຍ ແລະ ການຊ່ວຍເຫຼືອໃຫ້ກັບ PAHs. ບົດລາຍງານຂອງຜົນການຕິດຕາມກວດກາ ຈະຕ້ອງກະກຽມໂດຍ MRD ແລະ ສົ່ງໃຫ້ IRC ແລະ WB ໃນທຸກໆໄຕມາດ. |

ບາງຫຼັກການຕ້ອງໄດ້ຮັບການຊ່ວຍເຫຼືອ ເພື່ອແກ້ໃຂຊ່ອງຫວ່າງ ບົດບັນຍັດຕາມກົດໝາຍແຫ່ງສປປ ລາວ. ກອບນະໂຍບາຍການຈັດສັນຍົກຍ້າຍ ແມ່ນຖືກອີງຕາມ ຫຼັກການຂອງໂຄງການ ທີ່ຕ້ອງ ຕອບສະໜອງຄວາມຕ້ອງການຂອງປະຊາຊົນ ແລະ ຮັບປະກັນ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ຕ້ອງພໍໃຈກັບການຈັດຕັ້ງປະຕິບັດໂຄງການຍ່ອຍ ເຊັ່ນກ່ອນການເລີ່ມຕົ້ນການສະໝັກການລົງທຶນໃນລະບົບໂຄ່ງລ່າງເພື່ອຄຸ້ມຄອງຄວາມສ່ຽງຈາກໄພນ້ຳຖ້ວມໃນຕົວເມືອງ. ຊຶ່ງມັນສາມາດຮັບປະກັນໄດ້ຕາມເປົ້າໝາຍ ຕ່າງໆລຸ່ມນີ້:

- ຫຼີກລ້ຽງການຈັດສັນຍົກຍ້າຍແບບບໍ່ສະໝັກໃຈ ທີ່ສາມາດເປັນໄປໄດ້ ແລະ ຫຼຸດຜ່ອນການຈັດສັນຍົກຍ້າຍໃຫ້ໜ້ອຍສຸດ ແລະ ບໍ່ຍ້າຍໄປບ່ອນທີ່ ປະຊາຊົນບໍ່ເຫັນດີຍົກຍ້າຍໄປ;
- ຮັບປະກັນຄົນທີ່ຖືກຍົກຍ້າຍໄດ້ຮັບການທົດແທນຄ່າເສຍຫາຍ, ການຊ່ວຍເຫຼືອ ແລະ ຟື້ນຟູ ຊີວິດການເປັນຢູ່ ດັ່ງນັ້ນ ຈະຊ່ວຍໃຫ້ຜູ້ຍົກຍ້າຍພໍໃຈ ແລະ ສະໝັກໃຈຈະຍົກຍ້າຍ;
- ບຸກຄົນ ແລະ ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ ຈະໄດ້ຮັບຜົນປະໂຫຍດຈາກໂຄງການຍ່ອຍ;
- ໂຄງການຄູ່ຮ່ວມງານ (ລວມທັງບຸກຄົນ ແລະ ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ) ໄດ້ຮັບການປຶກສາຫາລື ແລະ ໃຫ້ຄຳຄິດເຫັນ (ໃນທາງປະຕິບັດ) ໃນການອອກແບບ, ຈັດຕັ້ງປະຕິບັດ ແລະ ການເຄື່ອນໃຫວຂອງ ໂຄງການຍ່ອຍ; ແລະ
- ບູລິມະສິດໃຫ້ການຊ່ວຍເຫຼືອ ແລະ ການທົດແທນຄ່າເສຍຫາຍ (ເງິນສົດ ຫຼື ຮູບແບບອື່ນ) ໄດ້ຮັບການແຈກຢາຍ ໃຫ້ແກ່ບຸກຄົນ ແລະ ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ, ແລະ ປະຊາຊົນກຸ່ມອື່ນໆຜູ້ທີ່ມີສິດ ນຳໃຊ້ທີ່ດິນ ຫຼື ແຫຼ່ງຊັບພະຍາກອນອື່ນໆ ທີ່ຈະຖືກຜົນກະທົບຈາກໂຄງການຍ່ອຍ.

## 1.0 ການປະເມີນມູນຄ່າຊັບສິນ

ລັດຖະບານໄດ້ເຫັນດີໃນວິທີການ ປະເມີນຊັບສິນທີ່ຖືກຜົນກະທົບ ເຊັ່ນດຽວກັບຂອງທາງທະນາຄານໂລກ - ທີ່ໄດ້ໃຫ້ທຶນ ໃນໂຄງການ ຂະແໜງທາງ 2 (LRSP-2). ດັ່ງນັ້ນ, ໄປຕາມຫຼັກການທີ່ໃຊ້ໃນໂຄງການ ຂະແໜງທາງ 2 (LRSP-2) ແມ່ນຕົວຢ່າງທີ່ດີຂອງການສຶກສາ ການຈັດຕັ້ງປະຕິບັດ RPF ແລະ ຄົບຖ້ວນ ໂດຍຜ່ານການລົງສຶກສາພາກສະໜາມ ເຊິ່ງເປັນສ່ວນໜຶ່ງຂອງ ການກຳໜົດ ພາລະບົດບາດ, ຄູ່ຮ່ວມງານ ແລະ ລົງປຶກສາຫາລືກັບ ຊຸມຊົນ , ແລະ ການປະເມີນຄວາມເປັນຊ່ຽວຊານ.

ໂຄງການຍ່ອຍອາດກະທົບເຖິງບຸກຄົນທີ່ໄດ້ຮັບຜົນກະທົບຈາກໂຄງການໂດຍທາງກົງຫຼືທາງອ້ອມ ແລະ ອາດບໍ່ສາມາດປະຕິເສດວ່າຈະບໍ່ມີການຫຍັບຍ້າຍທີ່ດິນ. ເຖິງວ່າ ການຈັດສັນຍົກຍ້າຍແບບບໍ່ສະໝັກໃຈ ຄາດວ່າຈະບໍ່ເກີດຂຶ້ນ ໃນຊ່ວງປະຕິບັດໂຄງການຍ່ອຍ, ມັນມີຄວາມເປັນໄປໄດ້ ທີ່ຊຸມຊົນທ້ອງຖິ່ນ, ບຸກຄົນ ແລະ ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ ຈະມອບດິນທີ່ຖືກຜົນກະທົບໃຫ້ໂຄງການໂດຍບໍ່ເອົາການທົດແທນຄ່າເສຍຫາຍ. ໃນກໍລະນີນີ້ , ໂຄງການຍ່ອຍ ຕ້ອງແກ້ໄຂບັນຫາການບໍລິຈາກດິນແບບສະມັກໃຈ. ມັນຈະຖືກຍອມຮັບກໍ່ຕໍ່ເມືອໝັ້ນໃຈວ່າ ມີຜົນປະໂຫຍດ ເຖິງ ບຸກຄົນ ແລະ ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ ແລະ ມັນມີຜົນກະທົບເຖິງທີ່ດິນໜ້ອຍກວ່າ 10%ຂອງດິນທັງໝົດ. ຂະບວນການປຶກສາຫາລື ຄວນໄດ້ຮັບການຈັດຕັ້ງປະຕິບັດຢ່າງເປີດເຜີຍ ແລະ ໂປ່ງໃສ ແລະ ນຳພາຈັດຕັ້ງປະຕິບັດໂດຍຫົວໜ້າກຸ່ມຈັດສັນຍົກຍ້າຍຂັ້ນບ້ານ (VRS) ກັບການຕັດສິນ ການປະກອບສ່ວນແບບສະຫມັກໃຈ ບົນພື້ນຖານບໍ່ມີຄ່າໃຊ້ຈ່າຍໃດໆ, ການປຶກສາຫາລືແບບອິດສະຫຼະ ແລະ ໃດ້ຮັບຂໍ້ມູນການປຶກສາຫາລືກ່ອນ ກັບ ບຸກຄົນ ແລະ ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ. ອຳນາດການປົກຄອງທ້ອງຖິ່ນ ຕ້ອງເຮັດເອກະສານຢືນຢັນຂະບວນການການປຶກສາຫາລື ແລະ ຂໍ້ຕົກລົງ ເຊິ່ງເປັນສ່ວນໜຶ່ງ ຂອງການລົງທຶນໂຄ່ງລ່າງເພື່ອຄຸ້ມຄອງຄວາມສ່ຽງຈາກໄພນ້ຳຖ້ວມໃນຕົວເມືອງ ແລະ ເຂດອ້ອມຂ້ອງ.. ກອບນະໂຍບາຍການຈັດສັນຍົກຍ້າຍ ຕ້ອງບໍ່

ຄັດກັບ ດຳລັດເລກທີ 84/ລບ,2016 ຂອງລັດຖະບານລາວ ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ ໃຫ້ບຸກຄົນ ແລະ ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ. ເຖິງຢ່າງໃດກໍຕາມ, ການເອົາໃຈໃສ ບຸກຄົນ ແລະ ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການຕ້ອງຊອດຄ່ອງກັບ ນະໂຍບາຍ ແລະ ຂະບວນການຂອງທະນາຄານໂລກ.

ມີຄວາມເປັນໄປໄດ້ວ່າ ກຸ່ມຊົນເຜົ່າ ຈະຖືກຜົນກະທົບ ທາງກົງ ຫຼື ທາງອ້ອມ ຈາກ ການສະເໜີ ໂຄງການຍ່ອຍ ໃນກໍລະນີນີ້, ແຜນການພັດທະນາຂອງກຸ່ມຊົນເຜົ່າ (EGDP) ຖືກກະກຽມຂຶ້ນ ເປັນຄູ່ມືແນະນຳສະເພາະອີງໄສກອບວຽກງານການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ (EGEF). ຂອງໂຄງການ. ສະຖານທີ່ ທີ່ສະເໜີເຮັດ ໂຄງການຍ່ອຍ ຈະມີຜົນກະທົບ ທັງທາງກົງ ຫຼື ທາງອ້ອມ ເຖິງກຸ່ມຊົນເຜົ່າ, ດັ່ງນັ້ນຈິ່ງຈຳເປັນຕ້ອງມີ ເຄື່ອງມືປ້ອງກັນ ແລະ ມາດຕະການ ການຫຼຸດຜ່ອນຜົນກະທົບ ແລະ ຈະຖືກພັດທະນາຂຶ້ນ ເພື່ອໃຊ້ໃນການແນະນຳ ຂັ້ນຕອນການການສຶກສາຄວາມເປັນໄປໄດ້ ແລະ ການສຶກສາອອກແບບ ກອນການປະເມີນຜົນໂຄງການ. ອີງຕາມຂະບວນການປຶກສາຫາລື ແລະ ແຜນໃນການປ້ອງກັນຕ່າງໆ (ການຫຼີກລ້ຽງ) ຫຼື ມາດຕະການຫຼຸດຜ່ອນ ຜົນກະທົບຕ້ອງເຮັດເປັນເອກະສານຂຶ້ນມາ. ຖ້າກຸ່ມຊົນເຜົ່າ ທີ່ຖືກຜົນກະທົບ ຈາກ ໂຄງການຍ່ອຍ ອັນເນື່ອງຈາກການຫຍັບຍ້າຍທີ່ດິນຫຼື, ຜົນກະທົບດ້ານລົບ ອື່ນໆ (ຕົວຢ່າງ: ສູຍເສຍການທຳມາຫາກິນ, ຊັບສິນ, ສຸຂະພາບ ແລະ ຫຼື ສິດຜົນປະໂຫຍດອື່ນໆ) ຫຼັງ ຈາກນັ້ນ , EGEF ຄວນມີການສົນທະນາ ກ່ຽວກັບຜົນກະທົບທາງກົງ ຫຼື ທາງອ້ອມ ແລະ ເຮັດເຄື່ອງມືແນະນຳ ໃນການພັດທະນາ ມາດຕະການຫຼຸດຜ່ອນຜົນກະທົບດ້ານສັງຄົມ. ກອບນະໂຍບາຍການຈັດສັນຍົກຍ້າຍ ຊ່ວຍໃຫ້ການແນະນຳ ການຫຍັບຍ້າຍ ທີ່ດິນ ແລະ ຊັບສິນ ເຊິ່ງອາດເກີດຈາກການຢຸດສະງັກ ຫຼື ສູນເສຍ ການທຳມາຫາກິນ ແລະລາຍຮັບຂອງບຸກ ຄົນ ແລະ ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ.

RPF ໄດ້ລວມທັງບັນດາການແນະນຳກ່ຽວກັບການຫຍັບຍ້າຍທີ່ດິນຫຼືຊັບສິນອື່ນໆ ແບບສະມັກໃຈ (ລວມທັງ ຂໍ້ຈຳກັດໃນການໃຊ້ຊັບສິນ) ຍ້ອນໂຄງການ ແລະ ການຈັດຕັ້ງປະຕິບັດໂຄງການຍ່ອຍ ໂດຍການມອບໃຫ້ລ້າ ຫຼື ການທົດແທນຄ່າເສຍຫາຍໂດຍຊຸມຊົນ; ມັນໄດ້ອະທິບາຍໃນພາກ 14.0 ແລະ ເອກະສານຊ້ອນທ້າຍ A2 ຂອງບົດລາຍງານນີ້. ກະຊວງແຜນການ ແລະ ການລົງທຶນ ຈະສ້າງຫຼັກການ ແລະ ຂັ້ນຕອນ ເພື່ອຮັບປະກັນໃຫ້ເກີດຄວາມເທົ່າທຽມກັນໃນການຮັກສາ ແລະ ຟື້ນຟູຜູ້ທີ່ໄດ້ຮັບຜົນກະທົບຈາກການຈັດຕັ້ງປະຕິບັດໂຄງການ.

ສອງຮູບແບບ ຂອງການຫຍັບຍ້າຍທີ່ດິນ ຈະຖືກພິຈາລະນາ ພາຍໃຕ້ ໂຄງການ Lao PDR SEA DRM ລວມມີ:

- ການປະກອບສ່ວນຢ່າງສະໝັກໃຈ: ຈະຖືກຍອມຮັບ ໃນເງື່ອນໄຂບໍ່ເສຍຄ່າໃຊ້ຈ່າຍໃດໆ, ກ່ອນ ແລະ ຫຼັງມີການແຈ້ງການ ຂອງຂະບວນການປຶກສາຫາລື (FPIC) ຕ້ອງໄດ້ຕິດຕາມ ແລະ ປະຕິບັດຕາມ, ເອກະສານອ້າງອີງຈາກອຳນາດການປົກຄອງທ້ອງຖິ່ນ ເຊັ່ນ ບຸກຄົນ ແລະ ທຸກຄົວເຮືອນທີ່ຖືກຜົນກະທົບຈາກໂຄງການທີ່ມີສິດໃນການປະກອບສ່ວນ ທີ່ດິນ ຫຼື ຊັບສິນອື່ນໆ ຂອງພວກເຂົາ ໂດຍບໍ່ເອົາ ການທົດແທນຄ່າເສຍຫາຍໃດໆ. ການປະກອບສ່ວນທີ່ດິນ ສາມາດພິສູດໄດ້ ເວລາການສະເໜີໂຄງການຍ່ອຍ ອາດມີຜົນປະໂຫຍດທາງກົງໃຫ້ບຸກຄົນຫຼືຄົວເຮືອນທີ່ໄດ້ຮັບຜົນກະທົບ, ແລະ ເວລາທຣທີ່ຕັ້ງຂອງໂຄງການຍ່ອຍບໍ່ແນ່ນອນໃນພື້ນທີ່. ເຖິງຢ່າງໃດກໍ່ຕາມ, ປະກອບສ່ວນດິນ ແລະ ຫຼື ຊັບສິນ ແບບສະໝັກໃຈ ຈະບໍ່ຖືກຮັບພິຈາລະນາ ຖ້າ ໂຄງການຍ່ອຍ ຈະສ້າງຜົນກະທົບຢ່າງຫຼວງຫຼາຍເຖິງການດຳລົງຊີວິດ ແລະ ສຸຂະພາບເຖິງແຕ່ລະບຸກຄົນ ຫຼື ຜູ້ຊົມໃຊ້ (ຕົວຢ່າງ: ການຫຍັບຍ້າຍທີ່ດິນ ກະທົບເກີນ 10 ເປີເຊັນຂອງແຫຼ່ງລາຍຮັບຈາກຊັບສິນໃນການທຳມາຫາກິນ ຫຼືກ່ຽວຂ້ອງກັບສິ່ງປຸກສ້າງທີ່ຢູ່ອາໄສ ຂອງບຸກຄົນ ແລະ ທຸກຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ ເບິ່ງໃນຕາຕະລາງ 1),; ແລະ

- ການປະກອບສ່ວນຢ່າງສະໝັກໃຈ ພ້ອມກັບການທົດແທນຄ່າເສຍຫາຍ: ບຸກຄົນ ທີ່ປະກອບສ່ວນ ທີ່ດິນ ແລະ ຊັບສິນອື່ນໆ ມີສິດ ໄດ້ຮັບການທົດແທນຄ່າເສຍຫາຍ[3]. ໃນກໍລະນີດັ່ງກ່າວ, ຄະນະກໍາມາການຂອງ ໂຄງການ ຈະ ຮັບປະກັນ ຫຼັກການ ການທົດແທນຄ່າເສຍຫາຍ ຖືກຕົກລົງເຫັນດີ ກ່ອນ ທີ່ ໂຄງການຍ່ອຍ ຈະຖືກຈັດຕັ້ງປະຕິບັດ. ຫຼັກການ ການທົດແທນຄ່າເສຍຫາຍ ລວມມີ:
    - ການທົດແທນທີ່ດິນ ທີ່ມີສະພາບໃກ້ຄຽງກັນ ຫຼື ຊັບສິນການຜະລິດອື່ນໆທີ່ໃກ້ຄຽງກັນ;
    - ວັດຖຸ ແລະ ການຊ່ວຍເຫຼືອ ເພື່ອທົດແທນໂຄງສ້າງທີ່ຈະຖືກມ້າງເພດ້ອຍ ໂຄງສ້າງໃໝ່ທີ່ໝັ້ນຄົງ.
    - ທົດແທນຜົນລະປູກທີ່ເສຍຫາຍ ແລະ ຕົ້ນໄມ້ເສດຖະກິດ ຕາມລາຄາທ້ອງຕະຫຼາດ; ແລະ
    - ການທົດແທນຄ່າເສຍຫາຍໃນຮູບແບບຕ່າງໆ ທີ່ຍອມຮັບໄດ້.

ໃນກໍລະນີທີ່ ດິນຈະຖືກຊື້ຂາຍ, ການທົດແທນລາຄາຕ້ອງໄດ້ຮັບການຈ່າຍ. **ລາຄາທົດແທນ** - ແມ່ນວິທີການຂອງ ປະເມີນຄ່າຊັບສິນເຊິ່ງກໍານົດຈໍານວນເງິນທົດແທນມີພຽງພໍທີ່ຈະທົດແທນຊັບສິນທີ່ເສຍໄປ, ລວມທັງຄ່າໃຊ້ຈ່າຍ ການການໂອນຕ່າງໆ. ການທົດແທນຄ່າເສຍຫາຍໃນລະດັບລາຄາທົດແທນຖືກນິຍາມດັ່ງນີ້: ສໍາຫຼັບດິນກະສິກໍາ, ມັນ ມີຢູ່ກ່ອນຊ່ວງກ່ອນໂຄງການຍ່ອຍ ຫຼື ກ່ອນການຍົກຍ້າຍ, ສົມທຽບລາຄາອັນໃດສູງກວ່າ, ລະຫວ່າງ ມູນຄ່າຂອງດິນ ເຮັດການຜະລິດ ຕາມທ້ອງຕະຫຼາດ ຫຼື ລາຄາດິນທີ່ຢູ່ບໍລິເວດໃກ້ຄຽງເຂດຖືກກະທົບ, ບວກກັບຄ່າໃຊ້ຈ່າຍການ ກະກຽມທີ່ດິນ ໃນຂັ້ນໃກ້ຄຽງ ກັບດິນທີ່ຖືກກະທົບ, ບວກກັບຄ່າໃຊ້ຈ່າຍໃນການລົງທະບຽນຕ່າງໆ ແລະ ເສຍພາສີ. ສໍາຫຼັບເຮືອນ ແລະ ສິ່ງປຸກສ້າງອື່ນໆ, ແມ່ນຕາມລາຄາທ້ອງຕະຫຼາດ ກ່ຽວກັບວັດສະດຸ ໃນການກໍ່ສ້າງ ທົດແທນ ໃນ ບໍລິເວນ ທີ່ມີຄຸນນະພາບໃກ້ຄຽງ ຫຼືດີກວ່າ ສິ່ງປຸກສ້າງທີ່ຖືກຜົນກະທົບ, ຫຼື ເພື່ອຊ້ອມແປງ ສ່ວນໃດໜຶ່ງຂອງສິ່ງປຸກ ສ້າງ, ບວກກັບຄ່າໃຊ້ຈ່າຍໃນການຂົນສິ່ງວັດສະດຸກໍ່ສ້າງ ຫາສະຖານທີ່ກໍ່ສ້າງ, ບວກກັບຄ່າໃຊ້ຈ່າຍແຮງງານກໍາ ມະກອນ ແລະ ຜູ້ຮັບເໝົາ, ບວກກັບຄ່າໃຊ້ຈ່າຍໃນການລົງທະບຽນຕ່າງໆ ແລະ ເສຍພາສີ. ໃນການກໍານົດລາຄາທົດ ແທນ, ຄ່າລຸ້ຍຫ້ຽນຊັບສິນ ແລະ ມູນຄ່າວັດສະດຸກໍ່ສ້າງ ບໍ່ໄດ້ຄິດໄລ່ເຂົ້າ, ແລະ ບໍ່ແມ່ນຜົນປະໂຫຍດທີ່ຈະໄດ້ຮັບ ຈາກໂຄງການລົບຈາກມູນຄ່າຂອງຊັບສິນທີ່ໄດ້ຮັບຜົນກະທົບ. ໃນກໍລະນີທີ່ກົດໝາຍພາຍໃນ ບໍ່ເປັນໄປຕາມ ມາດຕະຖານການທົດແທນຄ່າເສຍຫາຍຕາມ ມູນຄ່າການທົດແທນເຕັມຮູບແບບ, ການທົດແທນຄ່າເສຍຫາຍພາຍ ໃຕ້ກົດໝາຍພາຍໃນຈະໄດ້ຮັບການເສີມດ້ວຍມາດຕະການເພີ່ມເຕີມເພື່ອໃຫ້ເປັນໄປຕາມມາດຕະຖານຄ່າທົດແທນ.

ລາຄາທົດແທນ ຈະຖືກຄິດໄລ່ ບົນພື້ນຖານ ການສຶກສາລາຄາທົດແທນ. ເປົ້າໝາຍຫຼັກຂອງ RCS ແມ່ນເພື່ອກໍານົດ ອັດຕາ ລາຄາດິນ ອີງຕາມການບັນທຶກຂາຍໂອນດິນ ແລະ ຊັບສິນອື່ນໆ ໃນເຂດຖືກກະທົບຫຼັກ ແລະ ສໍາຮອງ[4] . ການ ສຶກສານີ້ ຄວນຈັດຕັ້ງປະຕິບັດໂດຍພາກສ່ວນອິດສະຫຼະ. ຈາກຜົນຈັດຕັ້ງປະຕິບັດຂອງ RCS, ຄົວເຮືອນທີ່ຖືກຜົນ ກະທົບຈາກໂຄງການ ຈະໄດ້ຮັບການທົດແທນຄ່າເສຍຫາຍ ຈາກການສູນເສຍທີ່ດິນ ແລະ ຊັບສິນ ຈາກໂຄງການຍ່ອຍ ໃນມູນຄ່າທົດແທນ (ອີງຕາມລາຄາໃນທ້ອງຕະຫຼາດ) ຈາກ RoUM. RCS ຈະຈັດຕັ້ງປະຕິບັດໃນຊ່ວງ ຈັດຕັ້ງ ປະຕິບັດ DMS.

ໃນກໍລະນີທີ່ຈໍາເປັນ, ລັດຖະບານລາວ ຈະໃຫ້ຄວາມຊ່ວຍເຫຼືອເປັນພິເສດໃນຮູບແບບຂອງທີ່ດິນທີ່ເໝາະສົມ, ການ ທົດແທນຄ່າເຊົ່າ, ຊົດເຊີຍການຟື້ນຟູຊີວິດການເປັນຢູ່, ການຈ່າຍພິເສດໃຫ້ປະຊາຊົນຜູ້ອ່ອນແອທີ່ຖືກກະທົບຈາກ ໂຄງການ (ຄົນຊົນເຜົ່າ, ຜູ້ຍິງ ແລະ ຊາວໜຸ່ມ ຍິງ-ຊາຍ ແລະເດັກນ້ອຍ, ຜູ້ສູງອາຍຸ ແລະ ຜູ້ເສຍອົງຄະ, ຜູ້ບໍ່ມີທີ່ຢູ່

---

[3] ກອງທຶນ ໂຄງການ ຄຸ້ມຄອງຄວາມຊ່ຽງໄພພິບັດຂອງ ສປປລາວ ອາດນໍາໃຊ້ເພື່ອທົດແທນຄ່າເສຍຫາຍ ໃນການຫຍັບຍ້າຍທີ່ດິນ ພາຍໃຕ້ໂຄງການ ແລະ ເຊັ່ນດຽວກັບການ ໃຊ້ໃນການຟື້ນຟູລາຍຮັບ ແລະ ຄ່າເບ້ຍລ້ຽງ ໃນການການຍົກຍ້າຍສໍາລັບຜູ້ຢູ່ອາໄສຢ່າງເປັນທາງການ ແລະ ບໍ່ເປັນທາງການ ໃນເຂດໄດ້ຮັບຜົນກະທົບ.

[4] ນີ້ລວມທັງ ຮົ້ວ, ນໍ້າສ້າງ, ຫ້ອງນໍ້າ, ເຮືອນຄົວ ແລະ ອື່ນໆ.

ອາໄສ ແລະ ຜູ້ທຸກ, ອື່ນໆ). ຫຼັກການຫຼັກ ແມ່ນ ບຸກຄົນ ແລະ ຄົວເຮືອນທີ່ຖືກຜົນກະທົບ ຈະບໍ່ໄດ້ຮັບຜົນກະທົບໜັກໜ່ວງ ຈາກການຈັດຕັ້ງປະຕິບັດການສະເໜີໂຄງການຍ່ອຍ.

## 2.0 ການຈັດຕັ້ງຂັ້ນຕອນສຳຫຼັບການທົດແທນຄ່າເສຍຫາຍ

ໜ່ວຍງານຄຸ້ມຄອງໂຄງການ (PMU) ກົມໂຍທາທິການທາງນ້ຳ DOW ກະຊວງໂຍທາທິການ ແລະ ການຂົນສົ່ງ (MPWT) ເປັນໜ່ວຍງານຮັບຜິດຊອບຫຼັກ ຂອງໂຄງການຍ່ອຍ ການລົງທຶນລະບົບໂຄ່ງລ່າງເພື່ອຄຸ້ມຄອງຄວາມສ່ຽງຈາກໄພນ້ຳຖ້ວມໃນຕົວເມືອງ ທີ່ເມືອງ ໄຊ ແຂວງ ອຸດົມໄຊ ແລະ ການຈັດຕັ້ງປະຕິບັດ ກອບໜ້າວຽກນະໂຍບາຍການຈັດສັນຍົກຍ້າຍ (RPF). ກະຊວງໂຍທາທິການ ແລະຂົນສົ່ງ (MPWT), ກົມທາງນ້ຳ (DoW) ໂດຍການເຮັດວຽກຮ່ວມກັບ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງອຸດົມໄຊ, ຫຼວງພະບາງ ແລະ ບໍລິຄຳໄຊ ກົມໂຍທາທິການທາງນ້ຳ ໜ່ວຍງານຈັດຕັ້ງປະຕິບັດໂຄງການ ຈະເປັນຜູ້ພັດທະນາ ແລະ ຈັດຕັ້ງປະຕິບັດແຜນຈັດສັນຍົກຍ້າຍສະບັບຫຍໍ້ (ARAP) / ແຜນດຳເນີນການຈັດສັນຍົກຍ້າຍ (RAP) ໃນ ໂຄງການຍ່ອຍ ຕາມນະໂຍບາຍ ແລະ ຂະບວນການທີ່ກ່ຽວຂ້ອງໃນ RPF, ກົດໝາຍ ແລະ ດຳລັດ ແຫ່ງ ສປປ ລາວ, ແລະ ນະໂຍບາຍຫຼຸດຜ່ອນຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ຂອງທະນາຄານໂລກ (OP 4.12).

ນອກຈາກ ກົມໂຍທາທິການທາງນ້ຳ - ກະຊວງໂຍທາທິການ ແລະ ຂົນສົ່ງ, ຈຳນວນຂອງບັນດາກົມກອງຕ່າງໆ ຈະມີບົດບາດ ໃນການອອກແບບ, ກໍ່ສ້າງ ແລະ ເຄື່ອນໄຫວ ໂຄງການ, ໂຄງການຍ່ອຍ ແມ່ນ ໂຄງການ ຄຸ້ມຄອງຄວາມສ່ຽງຈາກໄພນ້ຳຖ້ວມໃນຕົວເມືອງ ຕາມລະບຽບກົດ ໝາຍ ທີ່ມີຢູ່ໃນປະຈຸບັນ, MONRE ມີໜ້າທີ່ຮັບຜິດຊອບກ່ຽວກັບບັນຫາສິ່ງແວດລ້ອມ. ກະຊວງແຜນການ ແລະ ການລົງທຶນ ຮັບຜິດຊອບກ່ຽວກັບ ກົດໝາຍການຖືຄອງທີ່ດິນ ແລະ ການຫຍັບຍ້າຍທີ່ດິນ. ຕາຕະລາງ2 ສະແດງ ສິດທິຕ່າງໆ ສຳລັບການທົດແທນຄ່າເສຍຫາຍ ແລະ ແນວທາງການໃຫ້ຄວາມຊ່ວຍເຫຼືອ ແລະ ຟື້ນຟູ ສຳລັບໂຄງການ. ເຖິງຢ່າງໃດກໍ່ຕາມ ແຜນຈັດສັນຍົກຍ້າຍສະບັບຫຍໍ້ (ARAP) / ແຜນດຳເນີນການຈັດສັນຍົກຍ້າຍ (RAP) ອາດໃຫ້ລາຍລະອຽດ ສະເພາະ ແລະ ກ່ຽວກັບ ເບ້ຍລ້ຽງເພີ່ມເຕີມ.

ໜ່ວຍງານຄຸ້ມຄອງໂຄງການ - ກົມໂຍທາທິການທາງນ້ຳ (DoW) ເປັນຜູ້ຮັບຜິດຊອບ ໃນການກຳກັບເບິ່ງແຍງທາງດ້ານວິຊາການ ແລະ ແລະ ສະໜັບສະໜູນຈາກພະແນກສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ/ສະຖາບັນຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ EDPD/PTRI ໃນການຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ, ລວມທັງ: ກອບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF). ແຜນຈັດສັນຍົກຍ້າຍສະບັບຫຍໍ້ (ARAP) / ແຜນດຳເນີນການຈັດສັນຍົກຍ້າຍ (RAP) ແລະ ແຜນການພັດທະນາຂອງຊົນເຜົ່າ (EGDP). ການທົດແທນຄ່າເສຍຫາຍ ຈະຖືກຈັດຕັ້ງປະຕິບັດ ແລະ ຄຸ້ມຄອງໂດຍ ຄະນະກຳມະການ ການຈັດສັນຍົກຍ້າຍຂັ້ນແຂວງ ແລະ ເມືອງ. ຄະນະກຳມະການ ການຈັດສັນຍົກຍ້າຍຂັ້ນບ້ານ (VRS) ຈະຖືກສ້າງຕັ້ງຂຶ້ນໃນເຂດບ້ານ ທີ່ມີການຫຍັບຍ້າຍທີ່ດິນ ແລະ ຜົນກະທົບຂອງການຈັດສັນຍົກຍ້າຍອອກ ແລະ ຄະນະກຳມະການ ການຈັດສັນຍົກຍ້າຍຂັ້ນບ້ານ ຈະເປັນຜູ້ອຳນວຍຄວາມສະດວກ ແລະ ໃຫ້ຄຳປຶກສາກັບບຸກຄົນທີ່ໄດ້ຮັບຜົນກະທົບ ແລະ ກະກຽມຂະບວນການແກ້ໄຂຄຳຮ້ອງຂັ້ນບ້ານ. ຄະນະກຳມະການ ການຈັດສັນຍົກຍ້າຍຂັ້ນບ້ານ ຈະຖືກສ້າງຂຶ້ນໃນບ້ານທີ່ມີການຫຍັບຍ້າຍທີ່ດິນ ແລະ ຜົນກະທົບຈາກການຈັດສັນ.

ມັນເປັນໜ້າທີ່ຂອງ ໜ່ວຍງານບໍລິຫານໂຄງການ PMU ທີ່ໃຫ້ການຊ່ວຍເຫຼືອ ການກໍ່ຕັ້ງ ຄະນະກຳມະການ ການຈັດສັນຍົກຍ້າຍ ແລະ ຈະຊ່ວຍການເຝິກອົບຮົມສ້າງຄວາມສາມາດ ທີ່ກ່ຽວຂ້ອງກັບ ສິດທິ ຂອງການໄດ້ຮັບການທົດແທນຄ່າເສຍຫາຍ ແລະ ແຜນຈັດສັນຍົກຍ້າຍສະບັບຫຍໍ້ (ARAP) / ແຜນດຳເນີນການຈັດສັນຍົກຍ້າຍ (RAP).

ໜ່ວຍງານບໍລິຫານໂຄງການ PMU ໂດຍພາຍໃຕ້ການສະໜັບສະໜູນຈາກ ພະແນກສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ/ສະຖາບັນຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ EDPD/PTRI ຈະມີບົດບາດໃນການເປັນຜູ້ຕິດຕາມ ແລະ ຮັບປະກັນ ເນື້ອໃນຂໍ້ກໍານົດໃນ ແຜນຈັດສັນຍົກຍ້າຍສະບັບຫຍໍ້ (ARAP) / ແຜນດໍາເນີນການຈັດສັນຍົກຍ້າຍ (RAP) ໄດ້ຮັບການ ປະຕິບັດ, ຕິດຕາມ ແລະ ລາຍງານ.

ກະຊວງໂຍທາທິການ ແລະ ການຂົນສົ່ງ (MPWT), ກົມໂຍທາທິການທາງນໍ້າ (DoW) ຈະເປັນຜູ້ຮັບຜິດຊອບໃນການສ້າງໂຄ່ງຮ່າງຈັດຕັ້ງ ຄຽງຄູ່ກັບ ການຈັດຕັ້ງປະຕິບັດ ການໃຫ້ສິດທິຕ່າງໆ ທີ່ກ່ຽວຂ້ອງ ເພື່ອຫຼຸດຜ່ອນຜົນກະທົບ ແລະ ການທົດແທນຄ່າເສຍຫາຍ. ຂະບວນການໃນການຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນຜົນກະທົບຄວນຈະລວມມີ:

- ກໍານົດຖ້າການຫຍັບຍ້າຍທີ່ດິນ ແລະ ສູນເສຍຊັບສິນຕ່າງໆ ຈະເກີດຂຶ້ນ ຫຼື ການມອບຄືນທີ່ດິນ ແບບສະໝັກໃຈ ຫຼື ການຮຽກຮ້ອງໃຫ້ມີການຍົກຍ້າຍຖິ່ນຖານ (ການສໍາຫຼວດປະຊາກອນ ແລະ ການສໍາຫຼວດລະອຽດດ້ານເສດຖະກິດ ແລະ ສັງຄົມ ຕ້ອງໄດ້ ຈັດຕັ້ງສໍາຫຼວດ ກັບບຸກຄົນທີ່ໄດ້ຮັບຜົນກະທົບ ໃນບໍລິເວນທີ່ໄດ້ຖືກຜົນສະທ້ອນຈາກໂຄງການ ຫຼັງຈາກມີການ ຢືນຢັນ ການ ໂຄງການຍ່ອຍ );
- ພັດທະນາລາຍຊື່ ລະອຽດ ຂອງ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງງການ ໃນບໍລິເວນທີ່ໄດ້ຖືກຜົນສະທ້ອນຈາກໂຄງການ;
- ກໍານົດ ແຕ່ລະ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງງການ ຜູ້ໃດຈະສູນເສຍ ແຫຼ່ງທໍາມາຫາກິນ, ຜູ້ໃດຈະສູນເສຍຊັບສິນ(ທີ່ດິນ, ຕົ້ນໄມ້, ພືນລະປູກ);
- ກໍານົດກອບເວລາ ໃນການທົດແທນຄ່າເສຍຫາຍ, ຖ້າມີ;
- ເຮັດແຜນຈັດສັນຍົກຍ້າຍສະບັບຫຍໍ້ (ARAP) ⁄ແຜນດໍາເນີນການຈັດສັນຍົກຍ້າຍ (RAP) ແລະ ສົ່ງໃຫ້ທະນາຄານໂລກມີຄໍາເຫັນເພື່ອ“ບໍ່ຄັດຄ້ານ“ ໃນການດໍາເນີນການ;
- ມອບການທົດແທນຄ່າເສຍຫາຍເປັນ ວັດຖຸ ຫຼື ເງິນສົດ, ຖ້າໄດ້ນໍາໃຊ້; ແລະ
- ກໍານົດການທົດແທນຄ່າເສຍຫາຍ ທີ່ປະຊາຊົນຕ້ອງການ, ຕ້ອງຮັບປະກັນ ທຸກຄົນມີສ່ວນຮ່ວມໃນການໃຫ້ຄໍາເຫັນ.

**ຕາຕະລາງ 2 ໂຄງຮ່າງສິດທິ**

| **ລາຍການທີ່ຖືກຜົນກະທົບ** | **ສິດທິຂອງບຸກຄົນ** | **ສິດທິ** | **ບັນຫາການຈັດຕັ້ງປະຕິບັດ** |
|---|---|---|---|
| *A.* ສູນເສຍທີ່ດິນ | | | |
| ດິນທີ່ຢູ່ອາໄສ | ເຈົ້າຂອງສິດທີ່ຖືກລະບຸໃນຊ່ວງການລົງສຳຫຼວດປະຊາກອນ ແລະ ຊ່ວງເຮັດ ການວັດແທກ. | ▪ ຖ້າ ດິນທີ່ເຫຼືອຈາກການຫຍັບຍ້າຍ ຍັງສາມາດສ້າງບ້ານຫຼືສິ່ງປຸກສ້າງອື່ນໆ: (i) ການທົດແທນຄ່າເສຍຫາຍເປັນເງິນສົດ ຕາມລາຄາໃນເວລາທົດແທນ ທີ່ຊອດຄ່ອງກັບລາຄາຕາມທ້ອງຕະຫຼາດ ລາຄາທີ່ດິນ ໃນໝູ່ບ້ານ, ບໍ່ມີການເສຍຄ່າໃຊ້ຈ່າຍໃນການໂອນມອດ(ພາສີ, ຄ່າທຳນຽມ) ແລະ (ii) ອຳນາດການປົກຄອງເມືອງ ຈະມາພັດທະນາດິນທີ່ຍັງເຫຼືອໂດຍທີ່ໃຫ້ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງງການກັບມານຳໃຊ້ດິນທີ່ເຫຼືອນັ້ນໂດຍ ບໍ່ມີຄ່າໃຊ້ຈ່າຍໃດໆ.<br>▪ ດິນທີ່ຖືກຫຍັບຍ້າຍບໍເຫຼືອເພື່ອໃຫ້ການສ້າງ ບ້ານ ຫຼື ສິ່ງປຸກສ້າງອື່ນໆ: (i) ການທົດແທນທີ່ດິນທີ່ມີຄຸນນະສົມບັດໃກ້ຄຽງກັບດິນໂຕເກົ່າ , ບໍ່ມີການເສຍຄ່າໃຊ້ຈ່າຍໃນການໂອນມອດ ເຊັ່ນ ພາສີ, ຄ່າທຳນຽມ ແລະ ໃຫ້ໃບຄອບຄອງກຳມະສິດທີ່ດິນ (ໂດຍສົມມຸດຕິຖານວ່າ ໃບຄອບຄອງກຳມະສິດທີ່ດິນ ມີພ້ອມ ໃນເຂດນີ້). ຖ້າຂະບວນການເຮັດໃບຄອບຄອງກຳມະສິດທີ່ດິນ ພວມຈັດຕັ້ງປະຕິບັດ. ຖ້າບໍ່,ຄວນມີການເຮັດໃບຢັ້ງຢືນສິດນຳໃຊ້ໃຫ້ປະຊາຊົນ, ຫຼື ( ii) ) ການທົດແທນຄ່າເສຍຫາຍເປັນເງິນສົດ ຕາມລາຄາໃນເວລາທົດແທນ ທີ່ຊອດຄ່ອງກັບລາຄາຕາມທ້ອງຕະຫຼາດ, ລາຄາທີ່ດິນ ໃນໝູ່ບ້ານ, ບໍ່ມີການເສຍຄ່າໃຊ້ຈ່າຍໃນການໂອນມອດ (ພາສີ, ຄ່າທຳນຽມ) ແລະ ຕ້ອງມີການຊ່ວຍເຫຼືອໃນການ ຈັດຊື້ ແລະ ເຮັດໃບຄອບຄອງກຳມະສິດທີ່ດິນ ໂຕໃໝ່. | ▪ ເຈົ້າຂອງສິດແມ່ນບຸກຄົນທີ່ມີໃບນຳໃຊ້ທີ່ດິນ ຫຼື ໃບຕາດິນ ທີ່ຕັ້ງຢູ່ໃນເຂດໂຄງການ.<br>▪ ການປະກອບສວນແບບສະໝັກໃຈ ຖ້າເປັນຈຳນວນທີ່ດິນບໍ່ຫຼາຍຈະໄດ້ຮັບການຍອມຮັບຈາກໂຄງການແຕ່ຕ້ອງດຳເນີນໄປຕາມຂະບວນການເຫຼົ່ານີ້ຢ່າງເຄັ່ງຄັດ: (i)ເນື້ອທີ່ ທີ່ຢູ່ອາໄສຂອງບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ຈະຕ້ອງມີບໍ່ຕ່ຳກວ່າ 300 ຕາແມັດ, (ii) ຖ້າກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການມີ ເນື້ອທີ່ທີ່ຢູ່ອາໄສ ຫຼາຍກ່ວາ 300ຕາແມັດ, ການມອບຄືນທີ່ດິນຕ້ອງບໍ່ການ5ເປີເຊັນຂອງເນື້ອທີ່ດິນທັງໝົດ; ແລະ (iii) ຢູ່ດິນທີ່ຈະປະກອບສ່ວນບໍ່ມີສິ່ງປຸກສ້າງ ຫຼື ຊັບສິນຄົງທີ່ໃດໆທັງນັ້ນ.<br>▪ ປະກອບສວນແບບສະໝັກໃຈຈະດຳເນີນໄປຕາມຂະບວນການ ຂອງທະນະຄານໂລກວ່າດ້ວຍນະໂຍບາຍການຈັດຕັ້ງປະຕິບັດ, ແລະ ດຳລັດ192/ນຍ/2005. |

*B.* ສູນເສຍໂຄງສ້າງ

| | | | |
|---|---|---|---|
| ເຮືອນຫຼືຮ້ານຄ້າຖືກຜົນກະທົບທັງໝົດ, ແລະ ສິ່ງປູກສ້າງສຳຮອງ (ເຮືອນຄົວ, ເລົ້າເຂົ້າ)<br>ເຮືອນຫຼືຮ້ານຄ້າຖືກຜົນກະທົບບາງສ່ວນ ແຕ່ບໍ່ສາມາດນຳໃຊ້ໄດ້ອີກ (ຈະຖືກຮຽກຮ້ອງໃຫ້ຍົກຍ້າຍ) | ເຈົ້າຂອງເຮືອນທີ່ຖືກຜົນກະທົບ ຫຼື ເຈົ້າຂອງທີ່ດິນທີ່ຖືກຜົນກະທົບ | ▪ ການທົດແທນຄ່າເສຍຫາຍເປັນເງິນສົດໃນການຍົກຍ້າຍ ສຳລັບສິ່ງປຸກສ້າງທີ່ຖືກຜົນກະທົບທັງໝົດ ແມ່ນຈະອີງໃສ່ລາຄາໃນທ້ອງຕະຫຼາດ (i) ວັດສະດຸ ແລະ ຄ່າແຮງ, ໂດຍບໍ່ມີການຫັກຄ່າເຊື່ອມໂຊມຂອງໂຄງສ້າງ (ii) ຄ່າຂົນສົ່ງວັດສະດຸກໍ່ສ້າງ, ແລະ (iii) ຄ່າແຮງງານໃນການມ້າງຖອນ, ຍົກຍ້າຍ ແລະ ຊ້ອມແປງ; ແລະ<br>▪ ສະໜອງລົດຂົນສົ່ງສິ່ງຂອງໃຫ້ທັນເວລາໂດຍທີ່ ບຸກຄົນທີ່ຖືກຜົນກະທົບຈາກໂຄງການຈະບໍ່ເສບຄ່າໃຊ້ຈ່າຍໃດໆ.<br>▪ | ▪ ມີໄລຍະເວລາທີ່ພຽງພໍ ເພື່ອບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ໄດ້ສ້າງຫຼືຊ້ອມແປງສິ່ງປຸກສ້າງຄືນໃໝ່.<br>▪ ເຮືອນ ແລະ ຮ້ານຄ້າທີ່ຖືກຜົນກະທົບ ທີ່ບໍ່ສາມາດໃຊ້ໄດ້ອີກຕໍ່ໄປ ຈຳພວກ ທີ່ຫຼົງເຫຼືອຈາກຜົນກະທົບສ່ວນໜຶ່ງແຕ່ກໍ່ບໍ່ສາມາດໃຊ້ໄດ້.<br>▪ |

**ຕາຕະລາງ 2 (ຕໍ່)**

| **ລາຍການທີ່ຖືກຜົນກະທົບ** | **ສິດທິຂອງບຸກຄົນ** | **ສິດທິ** | **ບັນຫາການຈັດຕັ້ງປະຕິບັດ** |
|---|---|---|---|
| *B.* ສູນເສຍໂຄງສ້າງ(ຕໍ່) | | | |
| ເຮືອນ ຫຼື ຮ້ານຄ້າຖືກຜົນກະທົບບາງສ່ວນ , ແລະ ສິ່ງປູກສ້າງສຳຮອງ (ທີ່ບໍ່ຈຳເປັນຕ້ອງມີການຍົກຍ້າຍ) | ເຈົ້າຂອງເຮືອນທີ່ຖືກຜົນກະທົບ ຫຼື ເຈົ້າຂອງທີ່ດິນທີ່ຖືກຜົນກະທົບ | ▪ ການທົດແທນຄ່າເສຍຫາຍເປັນເງິນສົດໃນການຍົກຍ້າຍ ເພື່ອໂຄງສ້າງ ທີ່ຖືກຜົນກະທົບຈາກໂຄງການແມ່ນຈະອີງຕາມລາຄາທ້ອງຕະຫຼາດ (i) ວັດສະດຸ ແລະ ຄ່າແຮງ, ໂດຍບໍ່ມີການຫັກຄ່າເຊື່ອມໂຊມຂອງໂຄງສ້າງ (ii) ຄ່າຂົນສົ່ງວັດສະດຸກໍ່ສ້າງ, ແລະ (iii) ຄ່າໃຊ້ຈ່າຍໃນການຊ້ອມແປງພາກສ່ວນທີ່ບໍ່ຖືກຜົນກະທົບ; | |
| ເສົາໄຟຟ້າ | ບໍລິສັດໄຟຟ້າ | ▪ ການທົດແທນຄ່າເສຍຫາຍເປັນເງິນສົດເພື່ອເປັນຄ່າໃຊ້ຈ່າຍໃນການຮື້ຖອນ, ໂອນມອບ ແລະ ກໍ່ສ້າງ. | |
| *C.* ສູນເສຍ ການທຳມາຫາກິນ ລວມເຖິງຜົນລະປູກ, ຕົ້ນໄມ້ ແລະ ໜອງປາ | | | |
| ດິນກະສິກຳ (ໄຮ່, ສວນ , ປ່າໄມ້ສັກ) | ເຈົ້າຂອງສິດທິທີ່ຖືກລະບຸໃນຊ່ວງການລົງສຳຫຼວດ ປະຊາກອນ ແລະ ຊ່ວງເຮັດ ການວັດແທກ. | ▪ ສຳລັບການສູນເສຍທີ່ດິນ 10ເປີເຊັນ, ການທົດແທນຄ່າເສຍຫາຍເປັນເງິນສົດ ຕາມລາຄາໃນເວລາທົດແທນ ທີ່ຊອດຄ່ອງກັບລາຄາຕາມທ້ອງຕະຫຼາດ ລາຄາທີ່ດິນ ໃນໝູ່ບ້ານ, ປະເພດທີ່ໃກ້ຄຽງກັນ, ກຳລັງຜົນຜະລິດຂອງດິນໃກ້ຄຽງກັນ, ບໍ່ມີການເສຍຄ່າໃຊ້ຈ່າຍໃນການໂອນມອດ(ພາສີ, ຄ່າທຳນຽມ), ຫຼື | ▪ ເຈົ້າຂອງສິດແມ່ນບຸກຄົນທີ່ມີໃບນຳໃຊ້ທີ່ດິນ ຫຼືໃບຕາດິນທີ່ຕັ້ງຢູ່ໃນເຂດໂຄງການ. |
| | | ▪ ການທົດແທນທີ່ດິນໃໝ່ທີ່ມີຄວາມໃກ້ຄຽງກັບດິນເດີມ, ກຳລັງການຜະລິດຂອງດິນນັ້ນບໍ່ຕ່າງກັນ ແລະ ດິນດັ່ງກ່າວແມ່ນຢູ່ໃກ້ໝູ່ບ້ານ, ແລະໃຫ້ໃບຄອບຄອງກຳມະສິດທີ່ດິນ. | ▪ ການປະກອບສ່ວນຢ່າງສະໝັກໃຈ ຈະບໍ່ຖືກຍອມຮັບກັບທຸກຮູບແບບຂອງຊັບສິນ ຍົກເວັ້ນ ການສູນເສຍພຽງນ້ອຍດຽວ ຊຶ່ງມັນໄດ້ກຳນົດຢູ່ໃນ ກອບໜ້າວຽກນະໂຍບາຍການຈັດສັນຍົກຍ້າຍ (RPF). |

- ຖ້າຜົນກະທົບຂອງໂຄງການເຖິງດິນເຮັດການຜະລິດ ເທົ່າກັບ10 ເປີເຊັນ ຫຼືຫຼາຍ ກ່ວານັ້ນ, ຈະໄດ້ໃຫ້ບູລິມະສິດການທົດແທນທີ່ດິນ ທີ່ມີຄຸນນະສົມບັດໃກ້ຄຽງກັບດິນໂຕເກົ່າ ແລະ ດິນດັ່ງກ່າວແມ່ນຢູ່ ໃກ້ໝູ່ບ້ານ, ແລະໃຫ້ໃບຄອບຄອງກຳມະສິດທີ່ດິນ, ກັບໃບຕາດິນ (ໂດຍສົມມຸດຕິຖານ ວ່າ ໃບຄອບຄອງກຳມະສິດທີ່ດິນ ໄດ້ເຮັດ ອອກ ໃນເຂດນີ້ແລ້ວ). ຖ້າຂະບວນການເຮັດໃບຄອບຄອງກຳມະ ສິດທີ່ດິນ ພວມຈັດຕັ້ງປະຕິບັດ. ຖ້າບໍ່,ຄວນມີການເຮັດໃບຢັ້ງຢືນ ສິດນຳໃຊ້ໃຫ້ປະຊາຊົນ. ອີກທາງໜຶ່ງ, ຖ້າມີການຮຽກຮ້ອງຈາກ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງງການ ໃຫ້ມີການ ທົດແທນເປັນເງິນສົດ ແມ່ນໃຫ້ຈ່າຍຕາມມູນຄ່າຂອງດິນໃນຂະນະ ນັ້ນ ຕາມລາຄາຕະຫຼາດ.

| ລາຍການທີ່ຖືກຜົນກະທົບ | ສິດທິຂອງບຸກຄົນ | ສິດທິ | ບັນຫາການຈັດຕັ້ງປະຕິບັດ |
|---|---|---|---|
| *C.* ສູນເສຍ ການທຳມາຫາກິນ ລວມເຖິງຜົນລະປູກ, ຕົ້ນໄມ້ ແລະ ໜອງປາ (ຕໍ່) | | | |
| ໜອງປາ (ເປັນໜອງທີ່ຍັງມີການລ້ຽງປາ ຢູ່ ແລະ ມີປາໃນໜອງເພື່ອນຳຂາຍ) | ເຈົ້າຂອງໜອງປາທີ່ຖືກຜົນກະທົບ | ▪ ການທົດແທນຄ່າເສຍຫາຍດ້ວຍເງິນສົດ ໃຫ້ເທົ່າກັບລາຄາຕາມທ້ອງຕະຫຼາດ, ໜອງປາ, ແຮງງານ ແລະ ຄ່າເຊົ່າລົດຈັກໜອງປາ, , ບໍ່ມີການເສຍຄ່າໃຊ້ຈ່າຍໃນການໂອນມອດ(ພາສີ, ຄ່າທຳນຽມ). | ▪ ມີເວລາທີ່ພຽງພໍໃຫ້ຄົນທີ່ໄດ້ຮັບຜົນກະທົບໄດ້ເກັບກ່ຽວປາຂອງພວກເຂົາ. |
| | | ▪ ຖ້າຊ່ວງໂຄງການເລີ່ມມີການຫຍັບຍ້າຍ ແລະ ຈຳນວນປາໃນໜອງຍັງບໍ່ທັນໄດ້ມີການເກັບກ່ຽວ, ຕ້ອງໄດ້ມີການທົດແທນຄ່າເສຍຫາຍຂອງຈຳນວນປາທີ່ມີຢູ່ໃນຂະນະນັ້ນ. | ▪ ໂຄງການຈະບໍ່ຍອມຮັບຮູບແບບການປະກອບສວນໜອງປາແບບສະໝັກໃຈ. |
| | | ▪ ອຳນາດການປົກຄອງເມືອງ ຈະໄດ້ຟື້ນຟູຫຼືຊ້ອມແປງ ໜອງປາທີ່ເຫຼືອຢູ່. ຖ້າເຈົ້າຂອງກໍ່ສ້າງບໍ່ສາມາດໃຫ້ການຊ່ວຍເຫຼືອ, ບຸກຄົນທີ່ຖືກຜົນກະທົບຈາກໂຄງການ ມີສິດໃນການຢືມເຄື່ອງມືມາໃຊ້ເຂົ້າໃນການ ຟື້ນຟູ ຫຼື ຊ້ອມແປງ ໜອງປາທີ່ເຫຼືອຢູ່. | |
| ຜົນລະປູກ ຫຼື ຕົ້ນໄມ້ | ເຈົ້າຂອງ ຜົນລະປູກ ແລະ ຕົ້ນໄມ້ ຫຼືເຈົ້າຂອງທີ່ດິນ | ▪ ຖ້າເປັນພືດຢືນຕົ້ນ ທີ່ພວມມີຜົນລະປູກແຕ່ຍັງບໍ່ທັນເກັບກ່ຽວໄດ້, ອີງໃສ່ລາຄາ ໃນຊ່ວງເວລາການຍົກຍ້າຍ ຊຶ່ງຈະປະເມີນມູນຄ່າຕາມການຄິດໄລ່ໃນຊ່ວງ3ປີຜ່ານມາ ປີທີ່ຕົ້ນໄມ້ນັ້ນ ໃຫ້ຜົນຜະລິດຫຼາຍສຸດ ແລະ ລາຄາຂອງຜົນລະປູກໃນຂະນະນັ້ນ. | |
| | | ▪ ສຳລັບພືດຜົນລະປູກ, ແມ່ນຈະມີການທົດແທນຄ່າເສຍຫາຍເປັນເງິນສົດ ອີງໃສ່ລາຄາ ໃນຊ່ວງເວລາການຍົກຍ້າຍ ແລະ ລາຄາຕາມທ້ອງຕະຫຼາດ ຊຶ່ງຈະປະເມີນມູນຄ່າຕາມຊະນິດ, ອາຍຸ ແລະກຳລັງຂອງຜົນຜະລິດ. | |

- ສຳລັບຕົ້ນໄມ້ເສດຖະກິດ, ແມ່ນຈະມີການທົດແທນຄ່າເສຍຫາຍເປັນເງິນສົດ ອີງໃສ່ລາຄາ ໃນຊ່ວງເວລາການຍົກຍ້າຍ ແລະ ລາຄາຕາມທ້ອງຕະຫຼາດ ຊຶ່ງຈະປະເມີນມູນຄ່າຕາມຊະນິດ, ອາຍຸ ແລະ ຂະໜາດຂອງຕົ້ນໄມ້.

Error! Reference source not found. **(ຕໍ່)**

| **ລາຍການທີ່ຖືກຜົນກະທົບ** | **ສິດທິຂອງບຸກຄົນ** | **ສິດທິ** | **ບັນຫາການຈັດຕັ້ງປະຕິບັດ** |
|---|---|---|---|
| *C.* ສູນເສຍ ການທຳມາຫາກິນ ລວມເຖິງຜົນລະປູກ, ຕົ້ນໄມ້ ແລະ ໜອງປາ (ຕໍ່) | | | |
| ສູນເສຍແຫຼ່ງລາຍຮັບໃນຊ່ວງຍົກຍ້າຍ ຫຼື ຊ່ວງ ຮື້ຖອນ/ຊ້ອມແປງ ສ່ວນທີ່ຖືກຜົນກະທົບ (ທີ່ບໍ່ໄດ້ມີການຍົກຍ້າຍ) | ເຈົ້າຂອງຮ້ານຄ້າ | ▪ ສຳລັບທຸລະກິດ(ຮ້ານຄ້າ) ແມ່ນຈະມີການທົດແທນຄ່າເສຍຫາຍເປັນເງິນສົດ ອີງໃສ່ອັດຕາກຳໄລປະຈຳວັນຂອງທຸລະກິດ ເທົ່າກັບ12 ເດືອນກ່ອນໜ້ານີ້. | ▪ ມັນຈະໃຊ້ເວລາ1ວັນໃນການຍ້າຍຮ້ານຄ້າ ຖ້າຮ້ານຄ້ານັ້ນເຮັດດ້ວຍວັດສະດຸພື້ນເມືອງ(ໄມ້ໄຜ່)ຫຼືສິ່ງທີ່ສາມາດເຄື່ອນຍ້າຍໄດ້(ສາມາດຍົກໄປໄດ້ໂດຍບໍ່ຈຳເປັນຕ້ອງມີການຖອນມ້າງ) ແລະ ມັນຈະໃຊ້ເວລາປະມານ ຖອາທິດ-ສູງສຸດ- ເພື່ອ ສ້າງຮ້ອນຄ້າຄືນໃໝ່ ໃນສະຖານທີ່ແຫ່ງໃໝ່. ມັນຈະໃຊ້ເວລາປະມານ 2ວັນໃນການໃນການຍ້າຍຫຼືຊ້ອມແປງ ຮ້ານຄ້າ ຖ້າຮ້ານຄ້ານັ້ນເຮັດດ້ວຍວັດສະດຸທີ່ມີຄວາມທົນທານ(ໄມ້ຫຼືຊີມັງ). ຍ້ອຍສິ່ງປຸກສ້າງເຫຼົ່ານີ້ບໍ່ຖືກຍົກຍ້າຍ, ທຸລະກິດສາມາດເລີ່ມຕົ້ນໃດ້ໄວຫຼັງຈາກການຊ້ອມແປງແລ້ວ. |
| | | | ▪ ການກຳນົດອັດຕາກຳໄລຈະຖືກກຳນົດ ໂດຍການລົງສຳພາບແບບບໍ່ເປັນທາງການກັບບັນດາເຈົ້າຂອງຮ້ານຄ້າ ເພື່ອເກັບກຳ ຜົນກຳໄລຕໍ່ມື້. |
| ຜົນກະທົບຢ່າງຮູນແຮງເຖິງກຸ່ມຄົນຖືກຜົນກະທົບຈາກໂຄງການທີ່ບໍ່ສາມາດຊ່ວຍໂຕເອງ | ກຸ່ມຄົນຫຼືຄົວເຮືອນ ຖືກຜົນກະທົບຈາກໂຄງການທີ່ບໍ່ສາມາດຊ່ວຍໂຕເອງໄດ້ເຊັ່ນຄອບຄົວທຸກຍາກ, | ▪ ແຈກເຂົ້າສານ ໃນເດືອນທຳອິດຕໍ່ຄົນ ຕາມຫົວໜ່ວຍຈຳນວນຄົນໃນຄົວເຮືອນ | ▪ ຄົນທຸກຍາກ ທີ່ຢູ່ຕ່ຳກ່ວາເສັ້ນລະດັບຄວາມທຸກຍາກແຫ່ງຊາດ ຄືກັນກັບການກຳນົດກຸ່ມທຸກຍາກຕາມຂໍ້ຕົກລົງຂອງທະນາຄານໂລກ. |
| | | ▪ ມີຄວາມສະເໝີພາບໃນການເຂົ້າຮ່ວມການຟື້ນຟູລາຍຮັບ. | |

| | | |
|---|---|---|
| ໄດ້ (ບຸກຄົນທີ່ຖືກຜົນກະທົບຈາກໂຄງການຕ້ອງຍ້າຍ ແລະ ສູນເສຍເຄື່ອງມືເຮັດການຜະລິດເທົ່າກັບຫຼືຫຼາຍກ່ວາ 10%) | ຫຼືຄອບຄົວທີ່ມີຫົວໜ້າຄອບຄົວເປັນຜູ້ຍິງ, ຜູ້ເຖົ້າ, ຜູ້ເສຍອົງຄະ ແລະ ກຸ່ມຊົນເຜົ່າ. | ▪ ຜູ້ຮັບເໝົາກໍ່ສ້າງ ຈະເປັນຜູ້ຮັບເລືອກຮັບສະມັກຄົນທີ່ຖືກຜົນກະທົບ ແລະ ກຸ່ມທີ່ບໍ່ສາມາດຊ່ວຍໂຕເອງໄດ້ມາເຮັດເປັນກຳມະກອນຊ່ວຍໃນການສ້າງທາງ ຫຼື ສ້ອມແປງທາງ. |
| ຄ່າເບ້ຍລ້ຽງ ໃນການດຳລົງຊີວິດ | ການຍົກຍ້າຍຄົວເຮືອນ-ການຍົກຍ້າຍດິນທີ່ຢູ່ອາໄສ ຫຼື ຈຸດອື່ນໆ. | ▪ ການຍົກຍ້າຍທີ່ຢູ່ອາໄສຂອງບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງງການ ທີ່ບໍ່ມີຜົນກະທົບເຖິງທຸລະກິດ ຫຼື ແຫຼ່ງລາຍຮັບຈະໄດ້ຮັບການຊ່ວຍເຫຼືອດ້ວຍເງິນສົດຫຼືປັດໄຈອື່ນ ທີ່ເທົ່າກັບເຂົ້າ 16 ກິໂລຕໍ່ຄົນ ຕາມລາຄາທ້ອງຕະຫຼາດ ຕໍ່ ຫົວໜ່ວຍຈຳນວນສະມະຊິກຄົວເຮືອນໜຶ່ງ ໃນໄລຍະເວລາ3ເດືອນ. |
| | ບຸກຄົນທີ່ຖືກຜົນກະທົບຈາກໂຄງການ ສູນເສຍທີ່ດິນເຮັດການຜະລິດເທົ່າກັບຫຼືຫຼາຍກ່ວາ 10%. | ▪ ການຍົກຍ້າຍທີ່ຢູ່ອາໄສຂອງບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງງການ ທີ່ມີຜົນກະທົບເຖິງແຫຼ່ງລາຍຮັບ (ຕົວຢ່າງ: ທຸລະກິດ) ຫຼື ບຸກຄົນ ທີ່ຖືກຜົນກະທົບ ສູນເສຍທີ່ດິນເຮັດການກະເສດຫຼາຍກ່ວາ 10ເປີເຊັນຈະໄດ້ຮັບການຊ່ວຍເຫຼືອດ້ວຍເງິນສົດ ຫຼື ປັດໄຈອື່ນ ທີ່ເທົ່າກັບເຂົ້າ 16 ກິໂລຕໍ່ຄົນ ຕາມລາຄາທ້ອງຕະຫຼາດ ຕໍ່ ຫົວໜ່ວຍຈຳນວນ ສະມະຊິກຄົວເຮືອນໜຶ່ງໃນໄລຍະເວລາ6 ເດືອນ. |

Error! Reference source not found. **(ຕໍ່)**

| **ລາຍການທີ່ຖືກຜົນກະທົບ** | **ສິດທິຂອງບຸກຄົນ** | **ສິດທິ** | **ບັນຫາການຈັດຕັ້ງປະຕິບັດ** |
|---|---|---|---|
| *D.* ສູນເສຍ ຊັບພະຍາກອນຊັບສິນສ່ວນລວມ | | | |
| ການສູນເສຍ ຊັບພະຍາກອນດ້ານວັດທະນະທຳ ຊົ່ວຄາວ/ ສຸກສາລາບ້ານ/ ໝູ່ບ້ານ ຫຼືການເປັນເຈົ້າຂອງ ຮ່ວມກັນ. | ຊຸມຊົນ ຫຼື ຄົວເຮືອນໃນໝູ່ບ້ານ | ▪ ການທົດແທນຄ່າເສຍຫາຍ ແມ່ນຈະອີງໃສ່ລາຄາ ໃນຊ່ວງເວລາການຍົກຍ້າຍສຳລັບໂຄງສ້າງບ້ານເຮືອນຕ່າງໆ. | |
| ສຸສານທີ່ຕັ້ງຢູ່ໃນເຂດຖືກຜົນກະທົບຈາກໂຄງການ | ເຈົ້າຂອງສຸສານ | ▪ ການທົດແທນຄ່າເສຍຫາຍເປັນເງິນສົດໃຫ້ກັບແຕ່ລະຄອບຄົວທີ່ຖືກຜົນກະທົບເພື່ອເປັນຄ່າໃຊ້ຈ່າຍໃນການຂຸດຈົກ, ຍົກຍ້າຍ, ແລະອື່ນໆ | |
| *E.* ຜົນກະທົບຊົ່ວຄາວ ຍ້ອນການກໍ່ສ້າງໂຄງການຍ່ອຍ ຫຼື ການຊ້ອມແປງ | | | |

| | | | |
|---|---|---|---|
| ດິນທີ່ນຳໃຊ້ຊົ່ວຄາວ | ເຈົ້າຂອງຕາມກົດໝາຍ ຫຼື ຜູ້ຄອບຄອງ | ▪ ສຳລັບດິນກະສິກຳ ແລະ ດິນທີ່ຢູ່ອາໄສ ຈະຖືກຈັດການໂດຍ ຜູ້ຮັບເໝົາກໍ່ສ້າງ ເພື່ອເຮັດເສັ້ນທາງເຂົ້າຫຼືກຽມພື້ນທີ່ໃນການກໍ່ສ້າງ, (i)ການເຊົ່າ ແມ່ນຕ້ອງໄດ້ຮັບການຕົກລົງເຫັນດີ ລະຫ່ວາງຜູ້ຮັບເໝົາ ແລະ ເຈົ້າຂອງດິນ ແຕ່ມູນຄ່າຕ້ອງບໍ່ຕໍ່າກວ່າ ລາຍຮັບທີ່ອາດເກີດຂຶ້ນໃນຊ່ວງມີການກໍ່ສ້າງ. (ii) ການທົດແທນຄ່າເສຍຫາຍເປັນເງິນສົດໃນການຍົກຍ້າຍທີ່ກະທົບເຖິງຊັບສິນຄົງທີ່(ຕົວຢ່າງ: ສິ່ງປຸກສ້າງ, ຕົ້ນໄມ້, ຜົນລະປູກ); ແລະ (iii) ການຟື້ນຟູທີ່ດິນ ທີ່ໄດ້ມີການປິດຊົ່ວຄາວໃນຊ່ວງ 1ເດືອນເພື່ອຂົນຍ້າຍວັດສະດຸກໍ່ສ້າງອອກຈາກພື້ນທີ່ ເຊິ່ງເປັນໄປຕາມເງື່ອນໄຂຕົກລົງລະຫ່ວາງເຈົ້າຂອງທີ່ດິນ ແລະ ຜູ້ຮັບເໝົາກໍ່ສ້າງ. | ▪ ການຕິດຕາມ ແລະ ໃຫ້ຄໍາປຶກສາການກໍ່ສ້າງແມ່ນເພື່ອຮັບປະກັນວ່າ: (i) ສະຖານການກໍ່ສ້າງໂຄງການແມ່ນເປັນບ່ອນທີ່ຈະມີ ຜົນກະທົບດ້ານສັງຄົມໜ້ອຍສຸດ; (ii) ເຈົ້າຂອງດິນທີ່ຖືກຍົກຍ້າຍໄດ້ຮັບການແຈ້ງແລະ ຮັບຮູ້ສິດທິຜົນປະໂຫຍດຂອງພວກເຂົາຕາມນະໂຍບາຍການຈັດສັນຍົກຍ້າຍ; ແລະ (iii) ຕ້ອງມີການຕົກລົງເຫັນດີຈາກທັງສອງຝ່າຍຄືເຈົ້າຂອງທີ່ດິນແລະ ຜູ້ຮັບເໝົາກໍ່ສ້າງ. |
| ຄ່າຂົນຍ້າຍ | ການຍ້າຍຄົວເຮືອນໄປຢູ່ຈຸດອື່ນ. | ▪ ສະໜັບສະໜູນລົດບັນທຸກໃນການຂົນຍ້າຍວັດສະດຸກໍ່ສ້າງ ທັງເກົ່າ ແລະ ໃໝ່ ແລະ ສັບສິນສ່ວນບຸກຄົນ. | ▪ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການອາດຈະໄດ້ຮັບການຊ່ວຍເຫຼືອໃນຮູບແບບເງິນສົດ. ຍອດເງິນ (ຄ່າແຮງງານ ແລະ ເຄື່ອນຍ້າຍແຕ່ຈຸດເກົ່າເຖິງຈຸດທີ່ຕັ້ງໃໝ່) ຈະຖືກກຳນົດໃນຊ່ວງຈັດຕັ້ງປະຕິບັດ. |

ກະຊວງໂຍທາທິການ ແລະ ການຂົນສົ່ງ (MPWT) - ກົມໂຍທາທິການທາງນໍ້າ (DoW) ແມ່ນໜ່ວຍງານຈັດຕັ້ງປະຕິບັດ (DIA) ຈະຮັບຜິດຊອບໃນການ ເຮັດກອງປະຊຸມປຶກສາຫາລື ແລະ ເຜີຍແຜ່ຂໍ້ມູນ ໃນລະດັບຊາດ ແລະ ລະດັບແຂວງ, ຄູ່ຮ່ວມງານ ແລະ ອົງການຈັດຕັ້ງມະຫາຊົນຕ່າງໆ (ອົງການບໍ່ຫວັງຜົນກຳໄລ, ອົງການຈັດຕັ້ງ ໂດຍຊຸມຊົນ), ຊຸມຊົນ ແລະ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ. ການປຶກສາຫາລື ແລະ ການມີສ່ວນຮ່ວມຂອງຊຸມຊົນ ຕ້ອງຈັດຕັ້ງປະຕິບັດຢ່າງເປັນປະຈຳ ຕະຫຼອດຊ່ວງສ້າງແຜນໃຫ້ການລິເລີ່ມໂຄງການຍ່ອຍ, ຊ່ວງການອອກແບບ ແລະ ຈັດຕັ້ງປະຕິບັດ. ການວາງແຜນ ແລະ ການຫຍັບຍ້າຍທີ່ດິນ ແລະ ຊັບສິນອື່ນໆ ຂອງ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ຈະດຳເນີນພາຍໃຕ້ຂະບວນການທີ່ບໍ່ເສຍຄ່າໃຊ້ຈ່າຍໃດໆ, ຊ່ວງກ່ອນ ແລະ ຫຼັງ ການປຶກສາຫາລື ຕ້ອງມີການເຮັດບົດບັນທຶກໄວ້. ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ຈະໄດ້ຮັບຂໍ້ມູນລ່ວງໜ້າ ກ່ຽວກັບແບບຟອມການທົດແທນຄ່າເສຍຫາຍ (ຖ້າມີການນຳໃຊ້), ການຍົກຍ້າຍທີ່ຢູ່ອາໄສ ແລະ ການໃຫ້ຄວາມຊ່ວຍເຫຼືອ ອື່ນໆແກ່ພວກເຂົາ, ລວມມີ:

- ລາຍລະອຽດກ່ຽວກັບໂຄງການຍ່ອຍ;
- ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ແລະ ລະດັບ ຜົນກະທົບ ຈາກໂຄງການຍ່ອຍ.
- ລາຍລະອຽດຂອງສິດທິຜົນປະໂຫຍດ ພາຍໃຕ້ ແຜນຈັດສັນຍົກຍ້າຍສະບັບຫຍໍ້ (ARAP) ⁄ແຜນດຳເນີນການຈັດສັນຍົກຍ້າຍ (RAP) ແລະ ການຮຽກຮ້ອງ ວິທີການໄດ້ຮັບສິດທິຜົນປະໂຫຍດຂອງ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ;
- ອັດຕາ ແລະ ຂະບວນການການທົດແທນຄ່າເສຍຫາຍ;
- ການຍົກຍ້າຍທີ່ຢູ່ອາໄສ ແລະ ການປຶກສາຫາລືໃນການພັດທະນາເຂດຈັດສັນຍົກຍ້າຍທີ່ຈະໄດ້ຮັບຟື, ແຈ້ງຂໍ້ຕົກລົງໃນການປຶກສາຫາລື ແລະ ສະໜັບສະໜູນ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການໃຫ້ມີສ່ວນຮ່ວມໃນຂະບວນການປຶກສາຫາລື;
- ໄລຍະເວລາໃນການຈັດຕັ້ງປະຕິບັດໃຫ້ເໝາະສົມວ່າດ້ວຍການມອບສິດທິຜົນປະໂຫຍດ; ແລະ
- ຂໍ້ມູນຂ່າວສານ ທີ່ກ່ຽວຂ້ອງກັບກົນໄກການແກ້ໄຂຄຳຮ້ອງຮຽນ ແລະ ວິທີການນຳໃຊ້.

## 3.0 ການເຊື່ອມໂຍງການຈັດສັນຍົກຍ້າຍ ກັບການກໍ່ສ້າງ

ດັ່ງທີ່ກ່າວໄປແລ້ວ, ໂຄງການ ຖືກຄາດໄວ້ວ່າຈະມີການຍົກຍ້າຍທີ່ຢູ່ອາໄສ ເຊິ່ງເປັນຜົນຈາກ ການສະເໜີໂຄງການຍ່ອຍ ທີ່ກ່ຽວຂ້ອງ ກັບ ການລົງທຶນລະບົບໂຄ່ງລ່າງເພື່ອຄຸ້ມຄອງຄວາມສ່ຽງຈາກໄພນໍ້າຖ້ວມໃນຕົວເມືອງ ທີ່ ເມືອງໄຊ ແຂວງອຸດົມໄຊ ແລະ ບໍລິເວນໃກ້ຄຽງ. ການລິເລີ່ມລະບົບໂຄ່ງລ່າງເພື່ອຄຸ້ມຄອງຄວາມສ່ຽງຈາກໄພນໍ້າຖ້ວມໃນຕົວເມືອງ ອາດຈະມີການນຳໃຊ້ທີ່ດິນບາງສ່ວນ ແບບຖາວອນ ໃນການສ້າງຕາຝັ່ງກັນເຈື່ອນ, ຄັນຄູກັນນໍ້າ, ການປັບປຸງຮ່ອງລະບາຍນໍ້າ ແລະ ປະຕູນໍ້າ, ຝາຍ, ແລະ ບັນດາສວນແຄມນໍ້າ. ຊຶ່ງສິ່ງກໍ່ສ້າງເຫຼົ່ານີ້ ຈະໄດ້ມີການຫຍັບຍ້າຍທີ່ດິນ. ນອກເໜືອຈາກນັ້ນ, ຈະມີການນຳໃຊ້ທີ່ດິນບາງສ່ວນ ເປັນການຊົ່ວຄາວ ເພື່ອ ເຮັດຊຸມ ຫຼື ບ່ອນຈັດການສິ່ງເສດເຫຼືອຈາກການກໍ່ສ້າງຊຶ່ງເກີດຈາກການທີ່ບໍ່ໄດ້ຄາດຫັວງ ຈະມີການຜົນກະທົບໃນລະດັບຕໍ່າ, ລວມເຖິງການປິດທາງເຂົ້າຊົ່ວຄາວ ຫຼື ຜົນກະທົບເຖິງຊັບສິນ (ຕົວຢ່າງ: ທີ່ດິນ ແລະ ສິ່ງປຸກສ້າງ). ການລິເລີ່ມລະບົບໂຄ່ງລ່າງເພື່ອຄຸ້ມຄອງຄວາມສ່ຽງຈາກໄພນໍ້າຖ້ວມໃນຕົວເມືອງ ອາດຕ້ອງ ໄດ້ເຮັດການຫຍັບຍ້າຍ ສິ່ງປຸກສ້າງຊົ່ວຄາວ, ການສູນເສຍການເຮັດກະເສດຊົ່ວຄາວເຊິ່ງ ອາດເກີດຈາກ ການ ສູນເສຍຜົນລະປູກ ແລະ ຕົ້ນໄມ້ ໃນເຂດກໍ່ສ້າງຄັນຄູກັນນໍ້າ, ຮ່ອງລະບາຍນໍ້າ ແລະ ປະຕູນໍ້າ, ຝາຍ ແລະ ສ່ວນແຄມນໍ້າ (ຫຼາຍແຫ່ງ)ຫຼື ເຂດທີ່ໄດ້ຮັບຜົນສະທ້ອນ.

ການຫຍັບຍ້າຍທີ່ດິນຄວນມີການກຳນົດໃນຊ່ວງ ການຈັດຕັ້ງປະຕິບັດ ການອອກແບບລະບົບໂຄ່ງລ່າງຄຸ້ມຄອງຄວາມສ່ຽງຈາກໄພນ້ຳຖ້ວມໃນຕົວເມືອງສະບັບສຸດທ້າຍໄດ້ເຮັດສຳເລັດ ແລະ ຫຼັງຈາກນັ້ນ ການຮຽກຮ້ອງ ການຂະຫຍາຍເນື້ອທີ່ດິນຫຍັບຍ້າຍ ແລະ ຜົນກະທົບຂອງມັນຕໍ່ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ. ເຖິງຢ່າງໃດກໍ່ຕາມ, ມີການຄາດການວ່າ ການເຄື່ອນຍ້າຍຊົ່ວຄາວ ຫຼື ການຢຸດສະງັກຂອງທຸລະກິດ ໃນເວລາສັ້ນ ອາດສົ່ງຜົນກະທົບ ທາງສັງຄົມ ເຖິງຊຸມຊົນ ແລະ ປະຊາຊົນກຸ່ມຕ່າງໆ.

ຊຸມຊົນທ້ອງຖິ່ນ, ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ອາດເລືອກການປະກອບສ່ວນທີ່ດິທີ່ຖືກຜົນກະທົບແບບສະໝັກໃຈ ໂດຍບໍ່ມີການທົດແທນຄ່າເສຍຫາຍ. ສະຖານະການນີ້ຈະຖືກຍອມຮັບພຽງກໍລະນີດຽວຄື ຜົນກະທົບໜ້ອຍ ໃນຂະນະທີ່ຜົນປະໂຫຍດ ເຖິງ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການໄດ້ຮັບການຢືນຢັນ. ຂະບວນການປຶກສາຫາລື ແລະ ທ່າແຮງໃນ ການປະກອບສ່ວນ ຈະຕ້ອງດຳເນີນໄປ ຢ່າງໂປ່ງໃສ, ເປີດເຜີຍ ແລະ ນຳພາໂດຍ ຄະນະກຳມະການ ການຈັດສັນຍົກຍ້າຍ ກັບການຕັດສິນໃຈ ພາຍໃຕ້ ການປະກອບສ່ວນແບບສະໝັກໃຈ ບົນພື້ນຖານ ເສລີ ແລະ ໄດ້ຮັບຮູ້ຂໍ້ມູນຂອງການປຶກສາຫາລື ແລະ ບໍ່ມີການເລືອກປະຕິບັດກັບຜູ້ຖືກຜົນກະທົບ.

ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ, ທີ່ບໍ່ໄດ້ຢູ່ໃນສະຖານະພາບທຸກຍາກ, ຈະໄດ້ຮັບການຊ່ວຍເຫຼືອໃນຫຼາຍດ້ານ, ຕາມຫຼັກການທີ່ໄດ້ກ່າວໃນໂຄ່ງຮ່າງສິດທິ, ເພື່ອຊ່ວຍເຫຼືອພວກເຂົາໃນການຟື້ນຟູ ຊີວິດການເປັນຢູ່ ແລະ ສຸຂະພາບ ໃຫ້ຄື ກັບຊ່ວງກ່ອນທີ່ໂຄງການ Lao PDR SEA DRM ເຂົ້າມາ. ສຳລັບບຸກຄົນທີ່ຄອບຄອງທີ່ດິນໂດຍບໍ່ຖືກຕາມລະບຽບຫຼັກການ(ຕົວຢ່າງ: ລຸກລ້ຳດິນລັດ) ຈະບໍ່ໄດ້ຮັບການທົດແທນຄ່າເສຍຫາຍ ຈາກການສູນເສຍທີ່ດິນ ແຕ່ຈະໄດ້ການທົດແທນຄ່າເສຍຫາຍ ຈາກການສູນເສຍຊັບສິນ ທີ່ພວກເຂົາເປັນຄົນສ້າງຂຶ້ນຈາກເງິນສ່ວນໂຕ, ແລະ ສຳລັບການສູນເສຍລາຍຮັບ ແມ່ນພວກເຂົາຈະໄດ້ຮັບການຊ່ວຍເຫຼືອ ໃນການຟື້ນຟູ ຊີວິດການເປັນຢູ່ ແລະ ສຸຂະພາບ. ມາດຕະການລະອຽດ ເພື່ອຈັດຕັ້ງປະຕິບັດ ຈະຖືກກຳນົດ ໂດຍອີງໃສການສຳຫຼວດປະຊາກອນ ແລະ ການສຳຫຼວດ ເສດຖະກິດ-ສັງຄົມ ທີ່ຈະຈັດຕັ້ງປະຕິບັດ ໃນຊ່ວງພັດທະນາ ແຜນການຈັດຕັ້ງປະຕິບັດການຈັດສັນຍົກຍ້າຍສະບັບຫຍໍ້ (ARAP) ຫຼື ແຜນດຳເນີນການຈັດສັນຍົກຍ້າຍ (RAP).

ບຸກຄົນ ທີ່ຖືກຜົນກະທົບຈາກໂຄງການ ຈະຖືກບັນທຶກໃນໄລຍະເວລຈັດຕັ້ງປະຕິບັດໂຄງການ ຍ່ອຍ ແລະ ຈະໄດ້ໃຫ້ຄຳປຶກສາຫາລື ຫຼັກການ ການຫຍັບຍ້າຍທີ່ດິນ ແລະ ການສູນເສຍ ຫຼື ເສຍຫາຍ ເຖິງຊັບສິນ. ບັນດາການເສຍຫາຍເຖິງຊັບສິນ, ເຊັ່ນ: ພຶດຢືນຕົ້ນ, ຕົ້ນໄມ້, ຮົ້ວຫຼືຮ້ານຄ້າ, ແລະສູນເສຍລາຍຮັບ, ລວມເຖິງການສູນເສຍການເກັບກ່ຽວຜົນລະປູກທີ່ຈະຖືກຫຼຸດນ້ອຍລົງ, ແລະ ຊ່ວງເວລາຢຸດສະງັກຂອງບັນດາກິດຈະກຳຕ່າງໆ ເປັນສິ່ງທີ່ຈະຫຼີກລ້ຽງບໍ່ໄດ້. ການສູນເສຍວຽກເຮັດງານທຳ, ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ຈະໄດ້ຮັບການທົດແທນຄ່າເສຍຫາຍໂດຍຈະບໍ່ຄຳນຶງເຖິງສະຖານະທາງກົດ ໝາຍ ຂອງເຈົ້າຂອງສິດ ໂດຍອີງຕາມ ໂຄງຮ່າງສິດທິຜົນປະໂຫຍດ ທີ່ໄດ້ລະບຸໄວ້ ໃນ ກອບໜ້າວຽກນະໂຍບາຍການຈັດສັນຍົກຍ້າຍ (RPF) ຕາຕະລາງ2.

ການສຳຫຼວດຕະຫຼາດ ຈະໄດ້ຈັດຕັ້ງປະຕິບັດ ເພື່ອຈະໄດ້ຮັບຂໍ້ມູນດ້ານລາຄາຕ່າງໆໃນທ້ອງຕະຫຼາດເຊັ່ນ: ລາຄາທີ່ດິນ, ລາຄາວັດສະດຸກໍ່ສ້າງສຳລັບ ສິ່ງປຸກສ້າງທີ່ໄດ້ຮັບຜົນກະທົບ, ລາຄາຜົນລະປູກ ແລະ ລາຍການອື່ນໆ ທີ່ອາດຈະໄດ້ນຳໃຊ້ ເປັນຫົວໜ່ວຍ ໃນການການກຳນົດ ການທົດແທນຄ່າເສຍຫາຍ. ກິດຈະກຳນີ້ ແມ່ນເພື່ອ ຮັບປະກັນ ຊຸມຊົນ ແລະ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ມີຄວາມສາມາດໃນການຈັດຊື້ທີ່ດິນແຫຼ່ງໃໝ່ໄດ້ໃນລາຄາໃກ້ຄຽງກັນ.ການສູນເສຍລາຍຮັບ ແລະ ຊັບສິນ ຈະໄດ້ຮັບການທົດແທນຄ່າເສຍຫາຍ ເປັນຈຳນວນເງິນຖ້ວນໂດຍບໍ່ມີພາສີ ຫຼື ຄ່າທຳນຽມໃດໆ.

***ຂັ້ນທະບຽນສິດຂອງຜູ້ໄດ້ຮັບຜົນກະທົບ ສໍາລັບສິດທິ***

ການສໍາຫຼວດຈໍານວນປະຊາກອນ ແລະ ການສໍາຫຼວດຄົວເຮືອນ ຈະໄດ້ຮັບການຈັດຕັ້ງປະຕິບັດທັນທີ່ ໃນເວລາທີ່ ໂຄງການຍ່ອຍ ວ່າດ້ວຍການຄຸ້ມຄອງໄພນໍ້າຖ້ວມໃດ້ຮັບການຢືນຢັນ ເພື່ອ ສຶກສາຜົນກະທົບຈາໂຄງການ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ແລະ ຫົວໜ່ວຍທຸລະກິດ. ວັນເວລາຂຶ້ນທະບຽນສິດຂອງຜູ້ໄດ້ຮັບ ຜົນກະທົບ ຈະໄດ້ແຈ້ງທັນທີ່ ຫຼັງຈາກ ໂຄງການຍ່ອຍໃດ້ຮັບການຢັ້ງຢືນ.

ການສໍາຫຼວດຄົວເຮືອນ ແມ່ນເພື່ອນໍາໃຊ້ບັນທຶກການສູນເສຍຊັບສິນທີ່ເກີດຈາກການປະຕິບັດໂຄງການ. ເຄື່ອງມື ທາງກົດໝາຍຈະຖືກນໍາໃຊ້ເພື່ອບັນທຶກລາຍການຊັບສິນ ທັງໝົດ ແລະ ຈະໄດ້ເຊັນຮັບຮູ້ໂດຍ ບຸກຄົນ ແລະ ຄົວ ເຮືອນ ທີ່ຖືກຜົນກະທົບຈາກໂຄງການ, ເພື່ອນບ້ານ, ແລະຕົວແທນຈາກອໍານາດການປົກຄອງທ້ອງຖິ່ນ. ຄ່າຕອບ ແທນທີ່ຈະຈ່າຍໃຫ້ ແຕ່ລະຫົວໜ່ວຍໃດ້ຮັບຜົນກະທົບ ຈະຖືກອີງຕາມເຄື່ອງມືທາງກົດໝາຍ ແລະ ລາຍລະອຽດ ຂອງວິທີການ ຄິດໄລ່ ການທົດແທນຄ່າເສຍຫາຍ ທີ່ລະບຸໃວ້ໃນ ແຜນຈັດສັນຍົກຍ້າຍສະບັບຫຍໍ້ (ARAP) / ແຜນ ດໍາເນີນການຈັດສັນຍົກຍ້າຍ (RAP)

***ການຍົກຍ້າຍ/ການຄອບຄອງພື້ນທີ່/ການເລີ່ມວຽກກໍ່ສ້າງ***

ເມື່ອມີການລົງລາຍເຊັນຕາມກົດໝາຍ, ການທົດແທນຄ່າເສຍຫາຍ ແລະ ການຊ່ວຍເຫຼືອອື່ອງ (ຍົກຍ້າຍທີດິນ, ການ ຂົນຍ້າຍ, ແລະ ອື່ນໆ) ຕ້ອງກະກຽມໃວ້ (ພາຍໃນເວລາໜຶ່ງເດືອນ), ແລະ ສອດຄ່ອງກັບຫຼັກການທີ່ກໍານົດໃວ້ໃນ ແຜນດໍາເນີນການຈັດສັນຍົກຍ້າຍ. ໜ່ວຍງານຄຸ້ມຄອງໂຄງການ ບໍ່ສາມາດຄອບຄອງທີ່ດິນໄດ້ ຈົນກ່ວາ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ໄດ້ຮັບ ການທົດແທນຄ່າເສຍຫາຍ ແລະ ການຊ່ວຍເຫຼືອອື່ນໆ ທີ່ໄດ້ລະບຸ ໃວ້ຕາມກົດໝາຍກໍານົດ. ແລະ ການກໍ່ສ້າງ ກໍ່ຈະບໍ່ສາມາດ ເລີ່ມຕົ້ນໄດ້ ຈົນກ່ວາໜ່ວຍງານຄຸ້ມຄອງໂຄງການຈະ ຄອບຄອງດິນໂຄງການໄດ້ທັງໝົດ.

## 4.0 ກົນໄກການແກ້ໄຂຄໍາຮ້ອງຮຽນ

ໃນຖານະທີ່ເປັນໜ່ວຍງານບໍລິຫານໂຄງການ PMU ຂອງ ກົມໂຍທາທິການທາງນໍ້າ ກະຊວງ ໂຍທາທິການ ແລະ ຂົນສົ່ງ ຈະໄດ້ສ້າງຄະນະກໍາມະການແກ້ໄຂຄໍາຮ້ອງຮຽນ ຂັ້ນບ້ານ, ຂັ້ນເມືອງ ແລະ ຂັ້ນແຂວງ. ຄະນະກໍາມະການ ເຫຼົ່ານີ້ ຖືກສ້າງຂຶ້ນເພື່ອ ແກ້ໄຂບັນຫາຄໍາຮ້ອງຮຽນ ທີ່ກ່ຽວຂ້ອງ ກັບການຈັດສັນຍົກຍ້າຍ. ຊຸມຊົນເຫຼົ່ານີ້ຈະໄດ້ຮັບ, ການປະເມີນຜົນ ແລະ ອໍານວຍຄວາມສະດວກ ໃນການແກ້ໄຂບັນຫາຂໍ້ຂ້ອງໃຈ ແລະ ການຮ້ອງຮຽນຕ່າງໆ ຂອງຜູ້ ຖືກຜົນກະທົບ. ຄະນະກໍາມະການແກ້ໄຂຄໍາຮ້ອງຮຽນ ຈະປະກອບມີ ຕົວແທນຈາກ ປະຊາຊົນ ແລະ ຄົວເຮືອນທີ່ ຖືກຜົນກະທົບ, ຜູ້ນໍາຊຸມຊົນ ແລະ ອົງກອນຈັດຕັ້ງທາງສັງຄົມ (ອົງການ ບໍ່ຫວັງຜົນກໍາໄລ) ນອກຈາກນັ້ນ ກໍຍັງມີ ຕົວແທນຈາກຂັ້ນບ້ານ ແລະ ຂັ້ນ ເມືອງ ແລະ ເຈົ້າໜ້າທີ່ຈາກ ບໍລິຫານໂຄງການ PMUແລະ ໜ່ວຍງານການດໍາເນີນ ການໂຄງການ. ຖ້າການຮ້ອງຮຽນກ່ຽວຂ້ອງກັບບັນຫາການປະເມີນມູນຄ່າຂອງຊັບສິນ ຈາກໜ່ວຍງານຈັດຕັ້ງ ປະຕິບັດໂຄງການ ຈາກນັ້ນ ຈະໃດ້ຮັບການປະເມີນຈາກຜູ້ປະເມີນອິດສະຫຼະເພີ່ມເຕີມເພື່ອແຈ້ງ ໃຫ້ຄະນະ ກໍາມະການແກ້ໄຂຄໍາຮ້ອງຮຽນຕັດສິນ. ຄະນະກໍາມະການແກ້ໄຂຄໍາຮ້ອງຮຽນຈະເຮັດໜ້າທີ່ ເພື່ອຜົນປະໂຫຍດຂອງ ປະຊາຊົນ ແລະ ຄົວເຮືອນທີ່ຖືກຜົນກະທົບ ຕະຫຼອດໄລຍະເວລາອາຍຸຂອງໂຄງການຍ່ອຍ ລວມທັງໄລຍະເວລາທີ່ ປົກຜ່ອງໃນໜ້າທີ່.

ການປຶກສາຫາລືກັບ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ຈະໄດ້ຈັດຂຶ້ນກ່ອນຂະບວນການວາງ ແຜນຂອງ ໂຄງການ. ກ່ອນການເລີ່ມຕົ້ນໂຄງການຍ່ອຍ, ຜູ້ນໍາໝູ່ບ້ານ ຈະໄດ້ເຮັດການສໍາຫຼວດທີ່ດິນ ແລະ ຊັບສິນ ຂອງປະຊາຊົນຜູ້ທີ່ຖືກຜົນກະທົບໂດຍທາງກົງ. ຜູ້ນໍາໝູ່ບ້ານຈະໃດ້ມີການປຶກສາຫາລືຢ່າງອິດສະຫຼະ ແລະ ມີການ

ແຈ້ງຂໍ້ມູນໃຫ້ຮູ້ກ່ອນ ກັບກຸ່ມຄົນຜູ້ທີ່ຖືກຜົນກະທົບ, ລວມທັງ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ເພື່ອສົນທະນາ ທາງເລືອກໃນກໍລະນີຕ້ອງມີການຫຍັບຍ້າຍທີ່ດິນ ແລະ ການມອບທີ່ດິນ. ຂະບວນການທັງໝົດຈະໄດ້ເຮັດເປັນລາຍລັກອັກສອນ.

ທຸກໆການຮ້ອງຮຽນຈະຕ້ອງເປັນລາຍລັກອັກສອນ ຫຼື ການຮ້ອງຮຽນດ້ວຍປາກເປົ່າ ກໍ່ຕ້ອງໄດ້ຮັບການບັນທຶກໃນເວລາ ແລະ ສະຖານທີ່ ຈາກ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ແລະ ໄດ້ຮັບການບັນທຶກຢ່າງເໝາະສົມ ຈາກ ຄະນະກຳມະການແກ້ໄຂຄຳຮ້ອງຮຽນ. ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການຈະໄດ້ຮັບການຍົກເວັ້ນຈ່າຍຄ່າທຳນຽມການບໍລິຫານ ແລະ ກົດໝາຍທັງໝົດທີ່ເກີດຂຶ້ນໃນຂະບວນການແກ້ໄຂຄຳຮ້ອງ. ການແກ້ໄຂຄຳຮ້ອງຮຽນ ທີ່ກ່ຽວຂ້ອງກັບທຸກຮູບແບບຂອງການດຳເນີນກິດຈະກຳໂຄງການຍ່ອຍ ຈະໄດ້ຮັບການດຳເນີນການໂດຍການເຈລະຈາກັນ ຈົນເກີດມີຄວາມເພິ່ງພໍໃຈທີ່ສຸດ. ຂະບວນການແກ້ໄຂຄຳຮ້ອງຮຽນ ແມ່ນເພື່ອສະໜອງ ການກຳນົດເວລາ ແລະ ກົນໄກຄວາມໂປ່ງໃສ ເພື່ອນຳສະເໜີ ແລະ ແກ້ໄຂ ທຸກໆຄວາມຂ້ອງໃຈ ຂອງສັງຄົມ ແລະ ສິ່ງແວດລ້ອມ ທີ່ກ່ຽວຂ້ອງກັບການດຳເນີນກິດຈະກຳໂຄງການຍ່ອຍ. ຂະບວນການແກ້ໄຂຄຳຮ້ອງຮຽນນີ້ ບໍ່ໄດ້ໝາຍເຖິງຂະບວນການແກ້ໄຂການຮ້ອງຮຽນຂອງລັດຖະບານ ຫຼື ການສະໜອງກົດໝາຍແຫ່ງຊາດ ແຕ່ວ່າເປັນການແກ້ໄຂບັນຫາຄວາມຂ້ອງໃຈຕ່າງໆຂອງບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ, ການຮ້ອງຮຽນແບບທັນເວລາ, ເຮັດໃຫ້ພ້ອມສາມາດດຳເນີນການໄດ້ ແລະ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ແລະ ກຸ່ມຄົນ ອື່ນໆ ເຊິ່ງມີ ຂະໜາດທີ່ແຕກຕ່າງກັບຄວາມສ່ຽງ ແລະ ຜົນກະທົບ ຈາກການດຳເນີນກິດຈະກຳໂຄງການຍ່ອຍ.

ບຸກຄົນ ຫຼື ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ຈະມີການສ້າງແນວທາງ ສຳຫຼັບ ບຸກຄົນ ຫຼື ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການແລະ ທຸລະກິດທີ່ຈະຕ້ອງໄດ້ຫຍັບຍ້າຍ ເພື່ອນຳສະເໜີເລື່ອງຮ້ອງຮຽນຕໍ່ໜ່ວຍງານໂຄງການທີ່ກ່ຽວຂ້ອງ. ຂັ້ນຕອນແກ້ໄຂຄຳຮ້ອງຄວນລວມເຖິງມາດຕະຖານປະຕິບັດວຽກຢ່າງສົມເຫດສົມຜົນ ລວມທັງເວລາທີ່ຕ້ອງໃຊ້ເພື່ອແກ້ໄຂຄຳຮ້ອງຮຽນ ແລະ ການດຳການແກ້ໄຂທຸກຢ່າງ ຕ້ອງບໍ່ມີຄ່າທຳນຽມໃດໃດທັງນັ້ນສຳລັບທີຍົກຍ້າຍ. ບຸກຄົນ/ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ຄວນລະບຸແນວທາງອື່ນໆທີ່ພ້ອມໃຊ້ໃນກໍລະນີຂະບວນການແກ້ໄຂຕຳຮ້ອງບໍ່ສາມາດປະຕິບັດການແກ້ໄຂຄຳຮ້ອງໄດ້. ດຳລັດເລກທີ 23 ແລະ 24 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ (ເລກທີ 84, 2016) ກຳນົດໃຫ້ໂຄງການຈັດຕັ້ງກົນໄກທີມີປະສິດທິພາບສຳຫຼັບການແກ້ໄຂຄຳຮ້ອງ. ດຳລັດໄດ້ກຳນົດໃຫ້ ຜູ້ສະໜັບສະໜູນໂຄງການຍ່ອຍ, ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ອຸດົມໄຊ ຫ້ອງການ ໂຍທາທິການທາງນໍ້າ, ເປັນຜູ້ຮັບຜິດຊອບໃນການຕັ້ງກົນໄກການແກ້ໄຂຄຳຮ້ອງຮຽນ ແລະ ປະຕິບັດການການແກ້ໄຂປັນຫາຕ່າງໆ.

ກອບການຄຸ້ມຄອງທາງສິ່ງແວດລ້ອມ ແລະ ສັງຄົມ ລວມມີບັນດາລາຍະອຽດ ດ້ານກົນໄກການແກ້ໄຂຄຳຮ້ອງຮຽນຂອງ ໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດຂອງ ສປປ ລາວ. ການຮ້ອງຮຽນຕ່າງໆ ທີ່ກ່ຽວຂ້ອງກັບບັນຫາສິ່ງແວດລ້ອມ ແລະ ສັງຄົມ ຈາກກຸ່ມຊົນເຜົ່າທີ່ຖືກຜົນກະທົບໂດຍທາງກົງ ຫຼື ໂດຍທາງອ້ອມ ຈາກການຈັດຕັ້ງປະຕິບັດກິດຈະກຳໂຄງການຍ່ອຍ ຈະໄດ້ຮັບການແກ້ໄຂໂດຍຄະນະກຳມະການແກ້ໄຂຄຳຮ້ອງຮຽນ (GRC) ໂດຍຜ່ານ ກົນໄກການແກ້ໄຂຄຳຮ້ອງຮຽນ ຂອງ ໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດຂອງ ສປປ ລາວ ມີຢູ່ໃນແຜນວາດ 1.

ເຖິງຢ່າງໃດກໍ່ຕາມ, ຜູ້ຮ້ອງຮຽນມີສິດໃນການສະເໜີຄຳຮ້ອງຮຽນໂດຍກົງ ຫາຫ້ອງການໜ່ວຍງານດຳເນີນການໂຄງການ ຂອງ ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ ຫຼື ສະພາແຫ່ງຊາດ, ດັ່ງທີ່ໄດ້ລະບຸໄວ້ ໃນກົດໝາຍຂອງ ສປປ ລາວ. ລາຍລະອຽດຂອງແຕລະຂັ້ນຂອງການຮ້ອງຮຽນ, ການປຶກສາຫາລື ແລະ ຜົນໄດ້ຮັບ ຈະໄດ້ຮັບການ

ບັນທຶກ ແລະ ເກັບເປັນລາຍລັກອັກສອນໄວ້ໃນປື້ມບັນທຶກການແກ້ໄຂຄຳຮ້ອງຮຽນ. ສະພາບຂອງການສະເໜີຄຳຮ້ອງຮຽນ ແລະ ການແກ້ໄຂຄຳຮ້ອງຮຽນ ຈະໄດ້ລາຍງານເປັນບົດລາຍງານປະຈຳເດືອນໃຫ້ ໜ່ວຍງານໂຍທາທິການທາງນ້ຳ ຂອງ ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ ອຸດົມໄຊ. ເພື່ອເປັນການແກ້ໄຂຄຳຮ້ອງຮຽນຕ່າງໆ ຂອງປະຊາຊົນ ແລະ ຄົວເຮືອນທີ່ຖືກຜົນກະທົບ ໃຫ້ວ່ອງໄວ ແລະ ມີປະສິດທິພາບ ເຊິ່ງຈະລວມມີຂັ້ນຕອນດັ່ງນີ້:

- ຂັ້ນຕອນທີ 1: ຖ້າຫາກສະມາຊິກຂອງຊຸມຊົນກຸ່ມຊົນເຜົ່າ ບໍ່ເພິ່ງພໍໃຈຕໍ່ກັບແຜນການຍົກຍ້າຍ ຫຼື ການດຳເນີນການ, ເຂົາ ສາມາດຮ້ອງຮຽນເປັນຄຳເວົ້າ ຫຼື ເປັນໜັງສື ຕໍ່ກັບຄະນະກຳມະການແກ້ໄຂຄຳຮ້ອງ ຂັ້ນເມືອງ ຫຼື ຂັ້ນແຂວງ. ຖ້າເປັນການຮ້ອງຮຽນ ໂດຍທາງປາກເປົ່າ, ບ້ານຈະຕ້ອງແກ້ໄຂບັນຫາດັ່ງກ່າວ ແລະ ບັນທຶກຄຳຮ້ອງໄວ້ ເປັນລາຍລັກອັກສອນ. ຄະນະກຳມະການແກ້ໄຂຄຳຮ້ອງ ຂັ້ນເມືອງ ຫຼື ຂັ້ນແຂວງ ຄວນຈະຕ້ອງ ແກ້ໄຂ ຫຼື ພິຈາລະນາ ບັນຫາຄຳຮ້ອງທຸກ ພາຍໃນໄລຍະເວລາ 2 ອາທິດ;
- ຂັ້ນຕອນທີ 2: ຖ້າຫາກວ່າຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ບໍ່ພໍໃຈກັບຜົນການຕັດສິນໃນຂັ້ນຕອນທີ 1, ຜູ້ທີ່ໄດ້ ຮັບຜົນກະທົບຈາກໂຄງການ ສາມາດຍື່ນອຸທອນຂຶ້ນຫາ ຫ້ອງການຈັດສັນຍົກຍ້າຍໂຄງການ (PRO) ເພື່ອໃຫ້ພິຈາລະນາ ແລະ ຕັດສິນຄືນໃໝ່. ຫ້ອງການຈັດສັນຍົກຍ້າຍໂຄງການ ຈະພິຈາລະນາ ພາຍໃນໄລຍະເວລາ 2 ອາທິດ;
- ຂັ້ນຕອນທີ 3: ຖ້າຫາກເຂົາ ບໍ່ເພິ່ງພໍໃຈຕໍ່ກັບຜົນການແກ້ໄຂຄຳຮ້ອງຮຽນຢູ່ໃນຂັ້ນຕອນທີ 2, ເຂົາ ສາມາດຮ້ອງຮຽນເຖິງ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເພື່ອຕັດສິນພາຍຫຼັງທີ່ໄດ້ຮັບຜົນການປຶກສາຫາລືຈາກ ຄະນະກຳມະການແກ້ໄຂຄຳຮ້ອງ ຂັ້ນໂຄງການ. ຄະນະກຳມະການຕັດສິນຄວນຈະດຳເນີນການ ຕັດສິນ ພາຍໃນເວລາ 20 ວັນ; ແລະ
- ຂັ້ນຕອນທີ 4: ຖ້າຫາກເຂົາເຈົ້າ ຍັງບໍ່ເພິ່ງພໍໃຈຕໍ່ກັບຜົນການແກ້ໄຂຄຳຮ້ອງຮຽນ ຈາກ ຄະນະກຳມະການແກ້ໄຂຄຳຮ້ອງຮຽນ, ເຂົາເຈົ້າ ສາມາດ ຮ້ອງຟ້ອງ ເຖິງສານໄດ້ ໂດຍອີງຕາມກົດໝາຍ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງ ໃນ ສປປ ລາວ.

**ແຜນວາດ 1 ຂະບວນການຮັບ ແລະ ແກ້ໄຂຄຳຮ້ອງ ຂອງປະຊາຊົນ (GRM)**




ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ສາມາດເຮັດຄຳຮ້ອງ ຫຼື ຄຳອຸທອນໃນທຸກເລື່ອງ ແລະ ກັບທຸກພາກສ່ວນຂອງການລິເລີ່ມໂຄງການຍ່ອຍ ທີ່ກ່ຽວຂ້ອງກັບການອອກແບບ ແລະ ຈັດຕັ້ງປະຕິບັດ, ລວມເອົາບັນຫາທີ່ພົວພັນເຖິງການຈັດສັນຍົກຍ້າຍ. ແບບຟອມ ຄຳຮ້ອງ ຫຼື ການມີຄຳເຫັນກ່ຽວກັບ ຂໍ້ຂັດຂ້ອງຈະຖືກພັດທະນາຂຶ້ນພາຍໃຕ້ໂຄງການ ແລະ ຈະມີພ້ອມໃຊ້ ທີ່ເມືອງໄຊ ແຂວງອຸດົມໄຊ ແລະ ບໍລິເວນອ້ອມຂ້າງ, ລວມເຖິງສະຖານທີ່ທີ່ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ອາໄສຢູ່, ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ຈະໄດ້ໃຊ້ເພື່ອປະເມີນຄຳຮ້ອງ ຫຼື ຂໍ້ຂັດຂ້ອງ. ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ຈະໄດ້ຮັບຄຳກະຈ່າງແຈ້ງ ກ່ຽວກັບຄຳຮ້ອງຮຽນ ຫຼື ຄຳອຸທອນຂອງພວກເຂົາໂດຍຜ່ານກອງປະຊຸມຂັ້ນບ້ານ ແລະ ໃນຮູບແບບການສົນທະນາສື່ສານປະເພດອື່ນໆ. ເຕັກນິກໃນການສື່ສານ ແລະ ເຄື່ອງມືໃນການສື່ສານ ອື່ນໆ

ຄວນໃຊ້ ເພື່ອ ສື່ສານ ແລະ ໃຫ້ຂໍ້ມູນ ບັນດາບັນຫາ ແລະ ຂໍ້ມູນຕ່າງໆ. ແນວຄິດ ແລະ ຄຳແນະນຳ ກ່ຽວກັບການຍົກຍ້າຍຈັດສັນ ທີ່ໄດ້ຈາກຄວາມກັງວົນຂອງປະຊາຊົນ ຫຼື ອົງການຈັດຕັ້ງ ຄວນເຮັດເປັນເອກະສານ ແລະ ອົງການຈັດສັນຍົກຍ້າຍໃນຂັ້ນຕ່າງໆ ຄວນ ສຶກສາ ແລະ ແກ້ໃຂບັນຫາໃຫ້ທັນກັບເວລາທີ່ລະບຸໄວ້.

ບັນດາອົງການຈັດຕັ້ງເພື່ອການແກ້ໃຂ ຄຳຮ້ອງຂອງ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ແລະ ຂັ້ນຕອນ ອຸທອນບໍ່ຄວນ ມີຄ່າໃຊ້ຈ່າຍໃດໆແລະ ດຳເນີນການ ຊ່ວຍເຫຼືອ ລ້າໃຫ້ ຜູ້ຮ້ອງທຸກ ແລະ ການແກ້ໃຂຄຳຮ້ອງ.
ໜ່ວຍງານຄຸ້ມຄອງໂຄງການ ແລະ ໜ່ວຍງານຈັດຕັ້ງປະຕິບັດ ໂຄງການ PMU and PIUs ຈະເປັນ ໜ່ວຍງານຮັບຜິດຊອບ ຄ່າໃຊ້ຈ່າຍຕ່າງໆທີ່ອາດ ເກີດຂຶ້ນ ໃນຊ່ວງເຮັດຄຳຮ້ອງ ແລະ ຄຳອຸທອນ ການຈັດຫາທຶນເພື່ອການຈັດສັນຍົກຍ້າຍ.

## 5.0 ການກະກຽມ ການລະດົມທຶນໃນການຈັດສັນຍົກຍ້າຍ

ແຜນດຳເນີນການຈັດສັນຍົກຍ້າຍ (RAP) ຈະລວມເອົາລາຍລະອຽດຂໍ້ມູນ ຄ່າໃຊ້ຈ່າຍໃນການທົດແທນຄ່າເສຍຫາຍ ແລະ ສິດທິຜົນປະໂຫຍດໃນການຟື້ນຟູ ເຊິ່ງເປັນສ່ວນໜຶ່ງຂອງ ຂັ້ນຕອນ ການທົດແທນຄ່າເສຍຫາຍ ໃນການຍົກຍ້າຍ PAP ແລະ PAH. ການກະກຽມ ແມ່ນຈະເຮັດເພື່ອ ຈັດປະເພດ ທີ່ຢູ່ອາໄສ ແລະ ຊັບສິນຂອງ PAP ແລະ PAH ເຊິ່ງ ໂດຍພື້ນຖານ ແມ່ນ ດິນກະສິກຳ, ດິນທີ່ຢູ່ອາໄສ, ດິນເຮັດການຄ້າຂາຍ, ເຮືອນ, ຊັບສິນເຮັດການຄ້າຂາຍ ແລະ ອື່ນໆ. ລາຍລະອຽດການປະເມີນງົບປະມານ ຈະເຮັດ ໃຫ້ກະກຽມເງິນສຳຮອງພຽງພໍ ແລະ ແຜນການຈັດຕັ້ງປະຕິບັດການຈັດສັນຍົກຍ້າຍສະບັບຫຍໍ້ (ARAP) ແລະ ແຜນດຳເນີນການຈັດສັນຍົກຍ້າຍ (RAP) ຈະໄດ້ສ້າງແຫຼ່ງທຶນຂຶ້ນ ແບບຈະແຈ້ງ ເພື່ອໃຫ້ມີງົບປະມານພຽງພໍ ຕໍ່ກັບຄວາມຮຽກຮ້ອງ. ARAP/RAP ຈະຮັບປະກັນການໄຫຼວຽນຂອງງົບປະມານ ຈະສອດຄອງກັບຕາຕະລາງເວລາ ສຳລັບການຈ່າຍ ການທົດແທນຄ່າເສຍຫາຍ ແລະ ໃຫ້ ການຊ່ວຍເຫຼືອຕ່າງໆ. ຄ່າໃຊ້ຈ່າຍໃນການຍົກຍ້າຍຈັດສັນ (ການທົດແທນສຳລັບທີ່ດິນ, ສິ່ງປຸກສ້າງ, ການຟື້ນຟູຊີວິດການເປັນຢູ່ ແລະ ອື່ນໆ) ຈະຖືກຈ່າຍໂດຍ ກອງທຶນ IDA ໃນວົງເງິນສູງສຸດ 900,000 ໂດລາອາເມລິກາ. ຄ່າໃຊ້ຈ່າຍລະອຽດໃນການຍົກຍ້າຍຈັດສັນ ແມ່ນຍັງບໍ່ຮູ້ໃນຂັ້ນຕອນນີ້ ແຕ່ວ່າ ຈະມີການກຳນົດ ຕາມດຳລັດ 84 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ຈັດສັນຍົກຍ້າຍ ສຳລັບໂຄງການພັດທະນາ ແລະ ລະບຽບຂອງທະນາຄານໂລກ OP 4.12 ການຈັດສັນຍົກຍ້າຍແບບບໍ່ສະມັກໃຈ.

## 6.0 ການມີສ່ວນຮ່ວມໃນການປຶກສາຫາລື

ດັ່ງທີ່ໃດກ່າວໄປຂ້າງເທິງ, ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ຈະມີສ່ວນຮ່ວມ ໃນການພັດທະນາແລະຂະບວນການຈັດຕັ້ງປະຕິບັດ ການຫຍັບຍ້າຍທີ່ດິນ. ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ຈະຖືກໃຫ້ຄຳປຶກສາ ໂດຍອຳນາດການປົກຄອງຂັ້ນບ້ານທີ່ກ່ຽວຂ້ອງ ແລະ ຄະນະກຳມະການຍ່ອຍວ່າດ້ວຍການຈັດສັນຍົກຍ້າຍ(VRS), ຂັ້ນເມືອງ ແລະ ຂັ້ນແຂວງ. ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການຈະຖືກເຊີນ ເພື່ອເຂົ້າຮ່ວມກອງປະຊຸມປຶກສາຫາລື ໃນລະດັບຕົ້ນໆຂອງຂະບວນການ ແລະ ຈະໄດ້ຮັບການຊ່ວຍເຫຼືອ ດ້ານຂໍ້ມູນທີ່ກ່ຽວຂ້ອງ ກ່ຽວກັບ ການສະເໜີໂຄງການຍ່ອຍ ວ່າດ້ວຍການລິເລີ່ມລະບົບໂຄ່ງລ່າງເພື່ອຄຸ້ມຄອງຄວາມສ່ຽງຈາກໄພນ້ຳຖ້ວມໃນຕົວເມືອງ. ການເປີດເຜີຍຂໍ້ມູນຂ່າວສານ ຈະລວມ ໃນ ມື້ປິດບັນຊີການລົງທະບຽນ ສຳລັບແຕ່ລະ ຍ່ອຍ, ເກນຄຸນສົມບັດ ແລະ ສິດທິຕ່າງໆ, ຮູບແບບການທົດແທນຄ່າເສຍຫາຍ, ຂະບວນການແກ້ໃຂ ຄຳຮ້ອງ ແລະ ຂໍ້ຂັດຂ້ອງ.

ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ແລະ ປະຊາຊົນກຸ່ມຕ່າງໆ ຈະໄດ້ຮັບ ໂອກາດໃນການນຳສະເໜີແນວຄວາມຄິດຂອງພວກເຂົາ ແລະ ຄຳແນະນຳຂອງເຂົາເຈົ້າ ເຂົ້າໃນການວາງແຜນ ແລະ ຈັດຕັ້ງປະຕິບັດໂຄງການຍ່ອຍ. ສິ່ງເຫຼົ່ານີ້ຈະປະສົບຜົນສຳເລັດໂດຍອາໄສການມີສ່ວນຮ່ວມຢ່າງຕໍ່ເນື່ອງ ແລະ ການສົນທະນາກຸ່ມ (FGD) ກັບ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ, ເພື່ອຮັບປະກັນພາກສ່ວນທີ່ຖືກຜົນກະທົບມີບົດບາດໃນຂະບວນການ.

ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ຈະໄດ້ຮັບຜົນປະໂຫຍດຈາກຂະບວນການໃຫ້ຄຳປຶກສາຫາລືໂດຍສະເພາະໃນລະຫວ່າງການກຽມທີ່ກ່ຽວຂ້ອງກັບ ແຜນຈັດສັນຍົກຍ້າຍສະບັບຫຍໍ້ (ARAP) / ແຜນດຳເນີນການຈັດສັນຍົກຍ້າຍ (RAP). ມັນຈະລວມເອົາກອງປະຊຸມປຶກສາຫາລື ໃນຊ່ວງເລີ່ມຕົ້ນ ຂະບວນການ ເພື່ອສົນທະນາ ຜົນກະທົບທີ່ອາດເກີດຂຶ້ນ ແລະ ບັນດາມາດຕະການຫຼຸດຜ່ອນຜົນກະທົບ ໃນ ARAP/RAP, ແລະຊ່ວງກ່ອນການສະຫຼຸບ ARAP/RAP ເພື່ອໃຫ້ໝັ້ນໃຈວ່າ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ເຫັນດີ ກັບມາດຕະການຫຼຸດຜ່ອນຜົນກະທົບ ທີ່ໄດ້ສະເໜີ. ການຈັດຕັ້ງປະຕິບັດ ARAP/RAP, ກອງປະຊຸມປະຈຳເດືອນກັບ ບຸກຄົນ ແລະ ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ ເພື່ອເກັບກຳຄຳຄິດເຫັນເພື່ອເຮັດແນວໃດໃຫ້ຂະບວນການມີການປັບປຸງໃຫ້ດີຂຶ້ນ. ນອກນັ້ນ ຍັງມີການປະຊຸມໜ້າເຊິ່ງໜ້າ ກັບ ແຕ່ລະບຸກຄົນທີ່ຖືກຜົນກະທົບຈາກໂຄງການ, ລວມທັງການປະຊຸມເພື່ອລົງລາຍຊື່ ແລະ ເຊັນຕົກລົງໃນການຮັບຄ່າທົດແທນຄ່າເສຍຫາຍ.

ດັ່ງທີ່ກ່າວໄປກ່ອນໜ້ານີ້, ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ຈະມີສ່ວນຮ່ວມໃນຫຼາຍຄະນະກຳມະການ, ລວມເຖິງ ຄະນະກຳມະການ ແກ້ໄຂຄຳຮ້ອງ (ຈະຖືກສ້າງຂຶ້ນ), ເພື່ອຮັບປະກັນ ການມີສ່ວນຮ່ວມຂອງພວກເຂົາ ຂະບວນການຕັດສິນໃຈ ໂດຍອາໄສຜ່ານຂັ້ນຕອນຕ່າງໆ ຂອງ ແຜນຈັດສັນຍົກຍ້າຍສະບັບຫຍໍ້ (ARAP) / ແຜນດຳເນີນການຈັດສັນຍົກຍ້າຍ (RAP), ເຊິ່ງລວມມີການກະກຽມ ແລະ ການຈັດຕັ້ງປະຕິບັດ. ອີງຕາມ ການສຳເລັດ ໂຄງການຍ່ອຍ, ການສຳຫຼວດ ແມ່ນຄວນດຳເນີນພາຍໃຕ້ ກະຊວງໂຍທາທິການ ແລະ ຂົນສົ່ງ (MPWT) - ກົມໂຍທາທິການທາງນ້ຳ (DoW) - ໜ່ວຍງານບໍລິຫານໂຄງການ (PMU) ໃນບັນດາ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການເພື່ອເຂົ້າເຖິງ ລະດັບຄວາມພໍໃຈ ຂອງຂະບວນການ ແລະ ຜົນໄດ້ຮັບ ຂອງແຜນຈັດສັນຍົກຍ້າຍສະບັບຫຍໍ້ (ARAP) / ແຜນດຳເນີນການຈັດສັນຍົກຍ້າຍ (RAP).

## 7.0 ການຕິດຕາມກວດກາ ແລະ ການລາຍງານ

ວຽກງານການຕິດຕາມ ແມ່ນພາກສ່ວນຫຼັກ ຂອງການຈັດຕັ້ງປະຕິບັດໂຄງການ. ເຊັ່ນ ໜ່ວຍງານຄຸ້ມຄອງໂຄງການ PMU ກົມໂຍທາທິການທາງນ້ຳ (DoW) - ກະຊວງໂຍທາທິການ ແລະ ຂົນສົ່ງ (MPWT) ຈະມີ ພະນັກງານພຽງພໍ ແລະ ເຮັດວຽກເຕັມເວລາ ເຊິ່ງເປັນສ່ວນໜຶ່ງຂອງ ຂະບວນການຕິດຕາມພາຍໃນ. ພະນັກງານເຫຼົ່ານີ້ ຈະຕິດຕາມຂະບວນການ ຫຍັບຍ້າຍທີ່ດິນ ຫຼື ການສົ່ງຄືນທີ່ດິນ ໂດຍການຮ່ວມມືກັບ ອຳນາດການປົກຄອງ ຂັ້ນທ້ອງຖິ່ນ ຫຼື ຂັ້ນເມືອງ. ຖ້າ ຈຳເປັນ, ການສ້າງຄວາມສາມາດ ແມ່ນມີຄວາມຈຳເປັນຕໍ່ພະນັກງານ ໃນຂະບວນການຕິດຕາມ ເຊິ່ງລັດຖະບານຈະກຳນົດພະນັກງານ ມີ ໜຶ່ງຊຸດເຝິກອົບຮົມ.

### *ການຕິດຕາມພາຍໃນ*

ເນື້ອໃນຂອງການລາຍງານຕິດຕາມພາຍໃນນັ້ນ ຈະຖືກລາຍງານ ເປັຍປະຈຳເດືອນ ລວມມີ:

- ການຈ່າຍ ແລະ ໃຊ້ງົບປະມານ ເພື່ອການທົດແທນຄ່າເສຍຫາຍ ຈາກການຫຍັບຍ້າຍທີ່ດິນ ແລະ ຟື້ນຟູຊີວິດການເປັນຢູ່;

- ຊ່ວຍເຫຼືອກຸ່ມທີ່ບໍ່ສາມາດຊ່ວຍໂຕເອງໄດ້;
- ການປັບ ແລະ ຈັດສັນທີ່ດິນ;
- ຄຸນນະພາບ ແລະ ປະລິມານຂອງທີ່ດິນໃໝ່;
- ໄລຍະເວລາຈັດຕັ້ງປະຕິບັດກິດຈະກຳຕ່າງໆທີ່ກ່າວມາຂ້າງເທິງ;
- ນະໂຍບາຍຈັດຕັ້ງປະຕິບັດ ແລະ ລະບຽບ ໃນແຜນຈັດສັນຍົກຍ້າຍ;
- ການເຂົ້າຮ່ວມ ແລະ ການປຶກສາຫາລື ຄົນທີ່ຖືກຜົນກະທົບ ໃນຊ່ວງການເຮັດ ແຜນຈັດສັນຍົກຍ້າຍໂດຍຫຍໍ້ (ARAP) / ແຜນຈັດສັນຍົກຍ້າຍ (RAP); ແລະ
- ການຮັບພະນັກງານ, ການເຝິກອົບຮົມ, ຕາຕະລາງການເຮັດວຽກ ແລະ ການເຄື່ອນໃຫວການຈັດສັນຍົກຍ້າຍ ໃນຂັ້ນຕ່າງໆ.

ການຕິດຕາມເປັນໄຕມາດ ຈະໄດ້ເຮັດຕາມລາຍການທີ່ລະບຸເຈາະຈົງດັ່ງນີ້:

- ປັບປຸງການປະຕິບັດຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ;
- ຮັບປະກັນດ້ານປະສິດທິພາບ ແລະ ຄຸນນະພາບ ຂອງຂະບວນການປະເມີນຜົນດ້ານສິ່ງແວດລ້ອມ ແລະ ສັງຄົມ.
- ເຮັດບົດປະເມີນຜົນປະສິດທິພາບດ້ານສັງຄົມ ແລະ ສິ່ງແວດລ້ອມຂອງໂຄງການ Lao PDR SEA DRM; ແລະ
- ມອບໂອກາດ ເພື່ອລາຍງານຜົນ ການຈັດຕັ້ງປະຕິບັດ ມາດຕະການປ້ອງກັນຜົນກະທົບ ແລະ ການສະເໜີມາດຕະການຫຼຸດຜ່ອນ.

ກ່ຽວກັບການຈັດຕັ້ງ ປະຕິບັດໂຄງການຍ່ອຍ, ກະຊວງໂຍທາທິການ ແລະ ຂົນສົ່ງ (MPWT)- ກົມໂຍທາທິການທາງນ້ຳ (DoW)-ໜ່ວຍງານ ຄຸ້ມຄອງໂຄງການ (PMU) ຈະໄດ້ຕິດຕາມກວດດສອບກິດຈະກຳຕ່າງໆຮ່ວມກັນກັບພະແນກສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ/ສະຖາບັນຄົ້ນຄ້ວາໂຍທາທິການ ແລະ ຂົນສົ່ງ EDPD/PTRI ລະຫ່ວາງຊ່ວງການສຶກສາຄວາມເປັນໄປໄດ້ ແລະ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMP) ເພື່ອກຳນົດ ຂອບເຂດ ມາດຕະການຫຼຸດຜ່ອນຜົນກະທົບ ຈະໄດ້ຮັບຜົນສຳເລັດ. ການຕິດຕາມກວດສອບ ຈະສຸມໃສ 3 ຈຸດຫຼັກ: (i) ການຕິດຕາມກວດສອບການປະຕິບັດຫຼັກການ; (ii) ຕິດຕາມກວດສອບຜົນກະທົບ (iii) ຕິດຕາມກວດສອບ ຜົນກະທົບສະສົມ.

### ***ການຕິດຕາມຈາກພາຍນອກ***

ໂດຍການຮ່ວມກັນກັບການຕິດຕາມກວດສອບພາຍໃນໂດຍພະນັກງານ ກະຊວງໂຍທາທິການ ແລະ ຂົນສົ່ງ (MPWT) - ກົມໂຍທາທິການທາງນ້ຳ (DoW), ມັນມີຄວາມສຳຄັນ ທີ່ຈະລວມເອົາບັນດາຂະບວນການ ຕ່າງໆເພື່ອການຕິດຕາມ ແລະ ປະເມີນຜົນ (M&E) ຈາກພາຍນອກ. ການຕິດຕາມ ແລະ ປະເມີນຜົນ (M&E) ຈາກພາຍນອກມີໜ້າທີ່ເພື່ອຊ່ວຍ ການຕິດຕາມ ແລະ ປະເມີນຜົນຢ່າງເປັນປະຈຳໃນການຫຍັບຍ້າຍທີ່ດິນ ແລະ ການມອບຄືນທີ່ດິນໃຫ້ໂຄງການ, ເພື່ອຈະປະເມີນວ່າຈຸດປະສົງຈະບັນລຸຜົນສຳເລັດຫຼືບໍ່. ໂດຍການສຳຫຼວດຢ່າງເປັນທາງການ, ການສຳພາດບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ, ການສົນທະນາກຸ່ມ (FGD) ແລະ ວິທີການເກັບກຳຂໍ້ມູນອື່ນໆ, ການຕິດຕາມ ແລະ ປະເມີນຜົນ (M&E) ຈາກພາຍນອກ ຈະມີບົດບາດໃນການເບິ່ງພາບລວມທັງໝົດ

ຂອງຂະບວນການ ການຫຍັບຍ້າຍທີ່ດິນ ຫຼື ການມອບຄືນທີ່ດິນຂອງບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ. ການຕິດຕາມ ແລະ ປະເມີນຜົນ ຈາກພາຍນອກ ຈະຊ່ວຍແຈ້ງເຕືອນລ່ວງໜ້າໃຫ້ພາກສ່ວນບໍລິຫານໂຄງການ ແລະ ໃຫ້ຄໍາຄິດຄໍາເຫັນ ແລະ ເປັນຊ່ອງທາງໂອນຄໍາຮ້ອງ ຂອງ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ. ບັນດາໜ້າວຽກຂອງ ການຕິດຕາມ ແລະ ປະເມີນຜົນ ຈາກພາຍນອກລວມມີ:

- <u>ຄວາມຄືບໜ້າ</u>: ລວມເຖິງການກະກຽມ ແຜນຈັດສັນຍົກຍ້າຍສະບັບທ້າຍ (ARAP) ⁄ແຜນດໍາເນີນການຈັດສັນຍົກຍ້າຍ (RAP), ແລະການຈັດຕັ້ງປະຕິບັດການທົດແທນຄ່າເສຍຫາຍ;
- <u>ຄຸນນະພາບ</u>: ລວມເຖິງ ມີຫຍັງເພີ່ມເຕີມ ທີ່ເຮັດໃຫ້ ບຸກຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການພໍໃຈກັບ ການທົດແທນຄ່າເສຍຫາຍ ແລະ ການຟື້ນຟູຊີວິດການເປັນຢູ່;
- <u>ງົບປະມານການທົດແທນຄ່າເສຍຫາຍ</u>: ລວມເຖິງ ການຈ່າຍ ແລະ ການໃຊ້ ງົບປະມານ ເພື່ອ ທົດແທນຄ່າເສຍຫາຍ ໃນການຫຍັບຍ້າຍທີ່ດິນ
- <u>ຄົນຖືກຜົນກະທົບ</u>: ລວມມີ ສະຖານະພາບດ້ານເສດຖະກິດ ແລະ ສັງຄົມ ຂອງຄົນ ແລະ ຄົວເຮືອນ ທີ່ຖືກຜົນກະທົບຈາກໂຄງການ ໃນຕາຕອນ ກ່ອນ ແລະ ຫຼັງຈາກໂຄງການ ແລະ ການຟື້ນຟູເສກຖະກິດໃຫ້ຄົນຖືກຜົນກະທົບ;
- ຄຸນສົມບັດຂອງໜ່ວຍງານຕິດຕາມ ຈາກພາຍນອນ ຈະມາຈາກອົງກອນອິສະຫຼະ, ເຊັ່ນອົງການຈັດຕັ້ງມະຫາຊົນ (ອົງການບໍ່ຫວັງຜົນກໍາໄລ, ຄະນະກໍາມະການຊຸມຊົນ), ສະຖາບັນຄົ້ນຄ້ວາ ຫຼື ອົງການທີ່ປຶກສາ ໃນ ສປປ ລາວ. ຄວາມຮັບຜິດຊອບຫຼັກ ຂອງໜ່ວຍງານຕິດຕາມຈາກພາຍນອກແມ່ນຈະລວມມີ:
    - ພັດທະນາ ແຜນຈັດສັນຍົກຍ້າຍສະບັບທ້າຍ (ARAP) ⁄ ແຜນດໍາເນີນການຈັດສັນຍົກຍ້າຍ (RAP) ຮ່ວມກັບໜ່ວຍງານຕິດຕາມພາຍໃນ;
    - ສັງເກດທຸກດ້ານ ຂອງ ແຜນຈັດສັນຍົກຍ້າຍສະບັບທ້າຍ (ARAP) ⁄ ແຜນດໍາເນີນການຈັດສັນຍົກຍ້າຍ (RAP) ແລະ ການຈັດຕັ້ງປະຕິບັດ; ສະໜັບສະໜູນ ການລາຍງານ ການຕິດຕາມ ແລະ ປະເມີນຜົນ (M&E) ເຖິງທະນາຄານໂລກ ໂດຍຜ່ານ ຫ້ອງການຈັດສັນຍົກຍ້າຍຂອງໂຄງການ (PRO); ແລະ
    - ຊ່ວຍເຫຼືອໃຫ້ຄໍາປຶກສາດ້ານເຕັກນິກ ໃຫ້ຫ້ອງການຈັດສັນຍົກຍ້າຍຂອງໂຄງການ (PRO) ວ່າດ້ວຍການຕິດຕາມ ແລະ ວິເຄາະຂໍ້ມູນ.

## 8.0 ກອບການມອບທີ່ດິນແບບສະມັກໃຈ (VLD)

ອີງຕາມປະເພນີປະຕິບັດຂອງຊຸມຊົນດ ຊາວບ້ານອາດເລືອກການປະກອບສ່ວນທີດິນ ຫຼືຊັບສິນ ແບບສະມັກໃຈໂດຍບໍ່ມີການທົດແທນຄ່າເສຍຫາຍ, ພາຍໃຕ້ບາງເງື່ອນໄຂ. ອາດເປັນເລື່ອງປົກກະຕິ ຖ້າໂຄງການຍ່ອຍມີຜົນປະໂຫຍດໂດຍກົງເຖິງຜູ້ຖືກກະທົບ; ບົດກໍານົດໃນການມອດດິນຢ່າງສະມັກໃຈ ແມ່ນລະບຸໃນເອກະສານຊ້ອນທ້າຍ A2 ແລະ ຮ່າງແບບຟອມ ໃນເອກະສານຊ້ອນທ້າຍ A3 . ເຖິງຢ່າງໃດກໍ່ຕາມ ໂຄງການພື້ນຖານໂຄງລ່າງ ທີ່ຈະຖືກສະໜອງທຶນໂດຍໂຄງການ (ຕົວຢ່າງ: ການປ້ອງກັນຕາຝັ່ງເຈື່ອນ, ຝາຍ, ຮ່ອງລະບາຍນໍ້າ, ປະຕູນໍ້າ, ແລະສວນສາທາລະນະແຄມນໍ້າ) ຈະບໍ່ເປັນໄປຕາມຫຼັກການຂອງການປະກອບສ່ວນທີ່ດິນແບບສະມັກໃຈ ເນື່ອງຈາກມັນແມ່ນພື້ນຖານໂຄງລ່າງສະເພາະເຂດ.

1. **ຂອບເຂດການມອບທີ່ດິນຢ່າງສະມັກໃຈ**. ໃຊ້ສຳລັບຊຸ່ມຊົນທີ່ໄດ້ຮັບຜົນປະໂຫຍດທີ່ບໍ່ຕ້ອງມີການຫຍັບຍ້າຍທີ່ດິນແບບບໍ່ສະມັກໃຈ ແລະ ຂຶ້ນຢູ່ກັບຄວາມຕ້ອງການຂອງຊຸ່ມຊົນ. ການມອບທີ່ດິນແບບສະມັກໃຈ ຈະຖືກຍອມຮັບເວລາທີ່ເນື້ອທີ່ນ້ອຍ ຂອງສ່ວນບຸກຄົນ ແລະ ຊັບສິນ ບ່ອນທີ່ຜູ້ນຳໃຊ້ຖືກກະທົບຈາກການຕົກລົງມອບດິນແລະ ຊັບສິນຕ່າງໆຂອງພວກເຂົາໃນຮູບແບບສະມັກໃຈ ໃຫ້ໂຄງການຍ່ອຍ.ບໍ່ມີບຸກຄົນໃດ ຫຼືຄອບຄົວໃດ ສູນເສຍທີ່ດິນ ຫຼາຍກວ່າ **10%**, ຫຼືຊັບສິນອື່ນໆທີ່ມີມູນຄ່າຫຼາຍກວ່າ **800,000 ກີບ.** ຜູ້ຖືຄອງດິນທີ່ຢູ່ອາໄສ 300 $m^2$ ຫຼືນ້ອຍກວ່ານັ້ນຈະບໍ່ອະນຸຍາດໃຫ້ມອບທີ່ດິນແບບສະມັກໃຈ. ນອກເໜືອຈາກນັ້ນ, ອັດຕາສ່ວນຂອງເນື້ອທີ່ດິນທີ່ຈະມອບແບບສະມັກໃຈ ຕ້ອງບໍ່ມີສິ່ງປຸກສ້າງ ຈຳພວກບ້ານ, ຊັບສິນຄົງທີ່ອື່ນໆ. ດິນທີ່ຈະມອບແບບສະມັກໃຈນັ້ນກໍ່ຄວນຈະບໍ່ມີການລຸກລ້ຳຫຼືມີການຮຽກຮ້ອງໃດໆ ຈາກຜູ້ອາດມີສິດຄອບຄອງທີ່ດິນບຸກຄົນອື່ນ. ສຳຫຼັບໂຄງການຍ່ອຍປະເພດນີ້, ໜ່ວຍງານຈັດຕັ້ງປະຕິບັດຄວນຈັດເຮັດລາຍງານທີ່ສະແດງໃຫ້ເຫັນວ່າຜູ້ນຳໃຊ້ທີ່ດິນໄດ້ຮັບຂໍ້ມູນຄົບຖ້ວນກ່ຽວກັບໂຄງການຍ່ອຍ, ແລະ ກ່ຽວກັບສິດໃນການປະຕິເສດການມອບດິນແລະຊັບສິນອື່ນໆຂອງພວກເຂົາໂດຍບໍ່ມີການທົດແທນຄ່າເສຍຫາຍ. "**ບົດລາຍງານການມອບດິນແບບສະມັກໃຈ**".

2. **ການມອບໃຫ້ໂດຍສະມັກໃຈເປັນການກະທຳດ້ວຍຄວາມເຕັມໃຈໂດຍໄດ້ການແຈ້ງຂໍ້ມູນ.** ພະນັກງານໂຄງການຍ່ອຍຈະໝັ້ນໃຈວ່າການມອບດິນແບບສະມັກໃຈ ນັ້ນມີຂຶ້ນໂດຍການຮັບຮູ້ຂໍ້ມູນ, ທາງເລືອກຕ່າງໆ ກ່ອນໜ້າແລ້ວ ເຊິ່ງລວມມີການທົດແທນຄ່າເສຍຫາຍ ໃນການມູນຄ່າການຍົກຍ້າຍ, ແລະ ການມອບໂດຍບໍ່ມີການບີບບັງຄັບຫຼືຂົ່ມຂູ່. ປະຊາຊົນຜູ້ຖືກຜົນກະທົບຈາກໂຄງການ ມີສິດໃນການປະຕິເສດການມອບຊັບສິນ ແລະ ໄດ້ຮັບສິດ ແລະ ການທົດແທນຄ່າເສຍຫາຍ ສຳລັບທີດິນຂອງພວກເຂົາ ແລະ ຊັບສິນທີສູນເສຍ. ພວກເຂົາຈະໄດ້ຮັບຂໍ້ມູນຄົບຖ້ວນກ່ຽວກັບສິດ ແລະ ການເຂົ້າເຖິງຂະບວນການແກ້ໄຂຄຳຮ້ອງ ທີໄດ້ອະທິບາຍໃນບົດລາຍງານນີ້. ໜ່ວຍງານຄຸ້ມຄອງໂຄງການ ຜູ້ຊ່ຽວຊານດ້ານຄວາມປອດໄພທາງສັງຄົມ ຕ້ອງກວດກາລັກສະນະການມອບດິນແບບສະມັກໃຈຢ່າງລະອຽດກອ່ນເລີ່ມມີການກໍ່ສ້າງ.

3. **ຄວາມຖືກຕ້ອງ**. ການກວດກາຄວາມຖືກຕ້ອງຂອງການມອບທີ່ດິນແບບສະມັກໃຈຈະໄດ້ຮັບການບັນທຶກໃວ້ໃວ້ໃນລາຍການປະເມີນຄວາມເປັນໄປໄດ້ໃນການລົງທຶນໂຄງການຍ່ອຍ ແລະ ຈະລວມມີຢ່າງນ້ອຍສິ່ງຕໍ່ໄປນີ້:

   a) ການກວດກາ ແລະ ການເຮັດເອກະສານ ກ່ຽວກັບທີ່ດິນທີ່ຕ້ອງການສຳລັບໂຄງການນີ້ໄດ້ຮັບການມອບ ແບບສະມັກໃຈ ແລະ ທີ່ດິນທີຈະໄດ້ຮັບບໍລິຈາກຈະບໍ່ມີຂໍ້ຂັດແຍ່ງໃນຄວາມເປັນເຈົ້າຂອງ ຫຼື ມີພັນທະອື່ນໆພູກມັດ;

   b) ການກວດກາວ່າຈະບໍ່ມີຄົວເຮືອນໃດໄດ້ຮັບຄວາມເດືອດຮ້ອນຈາກການມອບດິນແບບສະມັກໃຈ (ຕົວຢ່າງ: ການມອບດິນແບບສະມັກໃຈບໍ່ໃຫ້ກາຍ 10%ຂອງເນື້ອທີ່ດິນທັງໝົດ) ຈະກຳນົດໃຫ້ກູ່ມພັດທະນາຊຸ່ມຊົນເຈລະຈາມາດຕະການແກ້ໄຂປັນຫາກ່ຽວກັບການດຳລົງຊີວິດ ເຊັ່ນການລົດຄ່າທຳນຽມຄ່າດຳເນີນງານ ແລະ ຄ່າ ບຳລຸງຮັກສາ ຫຼືການ ແບ່ງພື້ນທີ່ປູກຝັງ ຂອງສະມາຊິດຊຸມຊົນຜູ້ໄດ້ຮັບຜົນປະໂຫຍດອື່ນໆ;

   c) ການກວດກາການມອບດິນນັ້ນຈະບໍ່ເປັນການລົບລ້າງຜູ້ເຊົ່າ ຫຼື ແຮງງານ ຈາກດິນຕອນນັ້ນ ;

   d) ມີການປຶກສາຫາລືຢ່າງຈິງຈັງກັບຜູ້ມອບທີ່ດິນຢ່າງສະມັກໃຈກັບທຸກຜູ້ມອບດິນ ແບບຍຸດຕິທຳ. ເອກະສານຢັ້ງຢືນວ່າຜູ້ມອບມີ່ດິນເຫັນດີກັບໂຄງການຍ່ອຍ ແລະຜົນປະໂຫຍດຂອງໂຄງການ.

ແຍກການສົນທະນາກັບຜູ້ຍິງ ແລະ ກຸ່ມຊຸມຊົນຕາມຄວາມຈໍາເປັນເພື່ອອໍານວຍຄວາມສະດວກໃນການມີສ່ວນຮ່ວມ;

e) ໝັ້ນໃຈໄດ້ວ່າກົນໄກການເຮັດວຽກກິດຈະກໍາການລົງທຶນຂອງຊຸມຊົນມີການຈັດຕັ້ງປະຕິບັດ ແລະ ມີຄວາມສະເໝີພາບໃນການແກ້ໄຂຄໍາຮ້ອງຮຽນ, ເຊັ່ນດຽວກັບລະບົບການຕິດຕາມແລະການລາຍງານຂອງໂຄງການ; ແລະ

f) ການກວດກາວ່າໂຄງການຍ່ອຍທີ່ຕ້ອງນໍາໃຊ້ທີ່ດິນບໍ່ໄດ້ລະບຸສະເພາະພື້ນທີ່(ຂຶ້ນຢູ່ກັບລັກສະນະສະເພາະຂອງພື້ນທີ່ ຫຼື ທາງກາຍະພາບທີ່ສະເພາະເຈາະຈົງຂອງທີ່ດິນ).

4. **ເອກະສານ.** ພະນັກງານໂຄງການຍ່ອຍ ຈະຈັດເຮັດເອກະສານ ບົດລາຍງານການມອບດິນແບບສະມັກໃຈໃນແຕ່ລະຊຸມຊົນຜູ້ໄດ້ຮັບຜົນປະໂຫຍດ ທີ່ຮຽກຮ້ອງໃຫ້ມີການມອບດິນສ່ວນບຸກຄົນ. ພວກເຂົາຈະໃຫ້ຄວາມຍິນຍອມເປັນລາຍລັກອັກສອນສໍາຫຼັບການມອບທີ່ດິນ (ເບິ່ງຕົວຢ່າງ ໃນເອກະສານຊ້ອນທ້າຍ A3). ການມອບຈະໄດ້ຮັບການຢືນຢັນໂດຍພະຍານສອງຄົນທີ່ເປັນຜູ້ນໍາຊຸມຊົນ ແຕ່ບໍ່ໄດ້ເປັນຄົນໄດ້ຮັບຜົນປະໂຫຍດໂດຍກົງຈາກກິດຈະກໍາການລົງທຶນ, ເພື່ອໃຫ້ໝັ້ນໃຈວ່າການມອບທີ່ດິນແບບສະມັກໃຈໂດຍບໍ່ມີການບີບບັງຄັບ. ຂໍ້ມູນການກວດກາຄວາມສົມບູນຂອງການບໍລິຈາກທີ່ດິນໂດຍສະມັກໃຈຈະໄດ້ຮັບການກວດກາໃນລະຫວ່າງການອອກແບບລາຍລະອຽດຂອງໂຄງການຍ່ອຍ ແລະ ໄດ້ຮັບການປັບປຸງຕາມຄວາມຈໍາເປັນ.

5. **ການຕິດຕາມການມອບທີ່ດິນແບບສະມັກໃຈ.** ປັນຫາຂອງການມອບທີ່ດິນແບບສະມັກໃຈ ຈະຖືກຕິດຕາມໂດຍພະນັກງານໂຄງການຍ່ອຍ ແລະ ທະນາຄານໂລກທົບທວນແບບຟອມການຕົກລົງມອບທີ່ດິນແບບສະມັກໃຈ ແລະ ລົງສຸ່ມສໍາພາດ ຜູ້ມອບ. ໃນລະຫວ່າງການທົບທວນ, ທະນາຄານໂລກ ຈະກວດສອບຄວາມຖືກຕ້ອງຂອງການມອບທີ່ດິນແບບສະມັກໃຈຕາມຂັ້ນຕອນຂັ້ນເທິງທີ່ກ່າວມາ. ແບບຟອມເຫັນດີຕົກລົງ ຄວນມີໃນບົດລາຍງານແຜນຍົກຍ້າຍຈັດສັນ ເຊັ່ນ ເປັນເອກະສານຊ້ອນທ້າຍ ພ້ອມຕິດຄັດເອກະສານສໍາເນົາຕົ້ນສະບັບ ທີ່ມອບໃຫ້ ບຸກຄົນ ຫຼື ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການ ເພື່ອເປັນບ່ອນອ້າງອີງ.

6. **ລະບົບແກ້ໄຂຄໍາຮ້ອງຮຽນ.** ຄວາມຂັບຂ້ອງໃຈທີ່ຄາດວ່າຈະເກີດຂຶ້ນອາດກ່ຽວຂ້ອງກັບການບັງຄັບໃຫ້ມີການມອບທີ່ດິນ ຫຼືການມອບທີ່ດິນສ່ວນບຸກຄົນຫຼາຍກ່ວາ 10% ຂອງດິນທັງໝົດ, ເຊິ່ງໄປສູ່ບັນຫາຫຍຸ້ງຍາກ. ທຸກການຮ້ອງຮຽນ ຈະຖືກສົ່ງໄປຫາຄະນະກໍາມະການແກ້ໄຂຄໍາຮ້ອງ ເຊິ່ງສ້າງຂຶ້ນເພື່ອໂຄງການຍ່ອຍ. ຂັ້ນຕອນໃນການແກ້ໄຂຄໍາຮ້ອງຮຽນ ແມ່ນອະທິບາຍໃນ ພາກ 10.0.

## 9.0 ງົບປະມານ ເພື່ອຈັດຕັ້ງປະຕິບັດ ກອບນະໂຍບາຍການຈັດສັນຍົກຍ້າຍ

ງົບປະມານໃນການຈັດຕັ້ງປະຕິບັດ ກອບນະໂຍບາຍການຈັດສັນຍົກຍ້າຍ ແມ່ນຈະລວມມີ ການຫຍັບຍ້າຍທີ່ດິນ, ເຂດພັດທະນາຈັດສັນຍົກຍ້າຍ, ຄ່າໃຊ້ຈ່າຍໃນການທົດແທນຄ່າເສຍຫາຍ, ງົບປະມານເບັຍລ້ຽງ ແລະ ບໍລິຫານ, ການກະກຽມ ແຜນການຈັດສັນຍົກຍ້າຍ, ການປະເມີນມູນຄ່າຊັບສິນໂດຍຊ່ຽວຊານອິດສະຫຼະ, ແລະ ງົບປະມານສຸກເສີນ. ງົບປະມານໃນການຈັດຕັ້ງປະຕິບັດຖືກຄາດວ່າ ຄ່າຈະເປັນ (USD________) ຂອງ ຈໍານວນດອກເບ້ຍທັງໝົດ.

# ເອກະສານຊ້ອນທ້າຍ

# ເອກະສານຊ້ອນທ້າຍ A1

## ໂຄງຮ່າງ ແຜນການຈັດສັນຍົກຍ້າຍ

**ແຜນຈັດສັນ ແລະ ຍົກຍ້າຍ ສະບັບຫຍໍ້ (ARAP): ເນື້ອຫາ ແລະ ຂໍ້ມູນພາຍໃນເອກະສານທີ່ຕ້ອງການ**

**ພາກສະເໜີ**

- ໂຄງການ (ໜຶ່ງ ວັກ): ທີ່ໝາຍເຖິງ RPF ທີ່ກວມເອົາໂຄງການ ແລະ ນະໂຍບາຍ ແລະ ຫຼັກການສຳລັບ ARAP;
- ບອກລາຍອຽດໂດຍຫຍໍ້ ກ່ຽວກັບຈຸດປະສົງ ແລະ ຜົນປະໂຫຍດ ທີ່ຈະໄດ້ຮັບ ຈາກການພັດທະນາໂຄງການ;
- ອະທິບາຍບັນດາກິດຈະກຳຕ່າງໆ ທີ່ຈະກໍ່ໃຫ້ເກີດຜົນກະທົບທາງລົບ ໂດຍສະເພາະຕໍ່ "ການຈັດສັນຍົກຍ້າຍ" (ເຊັ່ນ ທີ່ກ່ຽວຂ້ອງກັບການສູນເສຍທີ່ດິນ: ຊັບສິນ ຫຼື ອົງປະກອບຂອງການດາລົງຊີວິດ ຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ – ບໍ່ສະເພາະພຽງແຕ່ ທາງດ້ານການຍົກຍ້າຍທາງກາຍະພາບເທົ່ານັ້ນ. ແຕ່ຍັງລວມເຖິງການສູນເສຍຕົ້ນໄມ້, ການຍ້າຍຮ້າງຮ້ານຄ້າແຄມທາງຊົ່ວຄາວ ແລະ ບັນດາເສັ້ນທາງ).

**ການສຳຫຼວດ ບຸກຄົນ ແລະ ຊັບສິນ ທີ່ຖືກຜົນກະທົບຈາກໂຄງການ**

- ອະທິບາຍລາຍລະອຽດໂດຍຫຍໍ້ ຂອງການລົງເກັບກຳຂໍ້ມູນ (ເຊັ່ນ ການສຳຫຼວດຄົວເຮືອນ ເປັນຕົ້ນ);
- ຕາຕະລາງ PAP ແລະ PAH, ລາຍລະອຽດຂອງການປະສານງານ, ຄອບຄົວທີ່ຖືກຜົນກະທົບ, ຊັບສິນ: ມູນຄ່າຂອງທີ່ຢູ່ອາໄສທີ່ຮັບຜົນກະທົບ/ໂຄງສ້າງບ້ານເຮືອນ/ຊັບສິນ;
- ອະທິບາຍການຈົດບັນທຶກແນວຄິດທີ່ມີຄວາມເຫັນທີ່ແຕກຕ່າງ, ແຫຼ່ງທີ່ມາຂອງຄວາມສ່ຽງຕໍ່ PAP ແລະຄວາມແຕກຕ່າງລະຫວ່າງປະຊາກອນ (ກຸ່ມຊົນເຜົ່າ ແລະ ກຸ່ມທີ່ມີຄວາມສ່ຽງ – ຜູ້ຍິງ, ໄວໜຸ່ມ ແລະເດັກນ້ອຍ, ຄົນສູງອາຍຸ, ຄົນພິການ, ຜູ້ທີ່ບໍ່ມີທີ່ດິນ, ຄົນທຸກຍາກ ເປັນຕົ້ນ) ຫຼື ສະຖານະພາບຂອງຜູ້ທີ່ເປັນຕົວແທນ ໃນການສຳຫຼວດ ທາງດ້ານເສດຖະກິດສັງຄົມທົ່ວໄປ.

**ການທົດແທນຄ່າເສຍຫາຍ**

- ແບບຟອມການທົດແທນຄ່າເສຍຫາຍ (ເຊັ່ນ ເງິນສົດ ຫຼື ຮູບແບບອື່ນໆ);
- ລາຍລະອຽດສຳລັບເງື່ອນໄຂຂອງຜູ້ທີ່ປະກອບສ່ວນແບບສະໝັກໃຈ (ຖ້າມີ) ປະກອບມີ:
  - ການປຶກສາຫາລືແບບອິດສະຫຼະ, ກ່ອນ ແລະ ໄດ້ຮັບຂໍ້ມູນ (FPIC) ທີ່ເຮັດໂດຍປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ທີ່ສະໝັກໃຈ, ບໍ່ໄດ້ຖືກບັງຄັບການຕັດສິນໃຈ ແລະ ຍິນຍອມທີ່ຈະປະກອບສ່ວນໃຫ້;
  - ບໍ່ມີຜົນກະທົບຮ້າຍແຮງຕໍ່ກັບມາດຖານການດຳລົງຊີວິດ; ບໍ່ມີການຍົກຍ້າຍທາງກາຍະພາບ ແລະປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ສູນເສຍຊັບສິນ ໜ້ອຍກວ່າ 10%;
  - ຄວາມພ້ອມຂອງວິທີການຮ້ອງທຸກ ແລະ ການທົດແທນຄ່າເສຍ;
  - ເອກະສານ ແລະ ກວດສອບຊັບສິນ ຫຼື ທີ່ດິນ ທີ່ປະກອບສ່ວນ.

**ການປຶກສາຫາລືກັບຜູ້ທີ່ຖືກຜົນກະທົບ**

- ອະທິບາຍໂດຍຫຍໍ້ ໃນການເຜີຍແຜ່ຂໍ້ມູນ ຂອງໂຄງການ ແລະ ຍິນດີທີ່ຈະຍອມຮັບຄຳຕິຊົມ;
- ການປຶກສາຫາລື ຈະເກີດຂຶ້ນຫຼັງຈາກທີ່ຮູ້ ຫຼື ລະບຸ ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ໄດ້ແລ້ວ;
  - ທາງເລືອກໃນການປຶກສາຫາລືກັບ ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ຊຸມຊົນ;
  - ການເຜີຍແຜ່ຂໍ້ມູນ ໃນມື້ປິດບັນຊີການລົງບຽນ ຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ; ຄວາມພ້ອມໃນການຮ້ອງທຸກ/ກົນໄກການໄກ່ເກ່ຍ (ລາຍລະອຽດ ໃນພາກທີ 10.0 ຂອງ RPF).
- ການກະກຽມສຳລັບເປີດເຜີຍຂໍ້ມູນ ມາດຕະຖານໃນການຈັດສັນຍົກຍ້າຍ; ຄວາມພ້ອມທີ່ຈະເຜີຍແຜ່, ທົບທວນຄືນ ແລະ ຮັບຄຳຄິດເຫັນຕ່າງໆ. ຫຼັງຈາກນັ້ນ ເຜີຍແຜ່ຜ່ານເວັບໄຊທ໌ ຂອງ ກະຊວງ ໂຍທາທິການ ແລະ ຂົນສົ່ງ ແລະ ທະນາຄານໂລກ.

**ພາລະບົດບາດຂອງແຕ່ລະພາກສ່ວນໃນວຽກງານການທົດແທນຄ່າເສຍຫາຍ**

- ໜ່ວຍງານທີ່ຮັບຜິດຊອບ;
- ວິທີການແຈ້ງເຕືອນຕໍ່ ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ;
- ກອບໄລຍະເວລາໃນການຈັດສັນຍົກຍ້າຍ (ກ່ອນທີ່ຈະໄດ້ຮັບເງິນການທົດແທນຄ່າເສຍຫາຍ);
- ຂັ້ນຕອນການກວດສອບ, ເປີດເຜີຍຂໍ້ມູນ ແລະ ພະຍານ ໃນການຈັດສັນຍົກຍ້າຍ (ເຊັ່ນ ແບບຟອມເພີ່ມເຕີມ ສຳລັບບັນທຶກ ແລະ ການມອບສິດຂອງພະຍານ);
- ຂະບວນການແກ້ໄຂຄຳຮ້ອງ ຫຼື ໄກ່ເກ່ຍ ການຍື່ນອຸທອນ.

**ການຈັດຕັ້ງປະຕິບັດ ຂອດການລາຍງານ ແລະ ຕິດຕາມກວດກາ**

- ພາກສ່ວນທີ່ຮັບຜິດຊອບໃນການລາຍງານ ແລະ ຕິດຕາມກວດກາ ສຳລັບ ARAP;
- ຜູ້ເຂົ້າຮ່ວມຕິດຕາມກວດກາຈາກພາກສ່ວນພາຍນອກ (ເຊັ່ນ CSOs ແລະ ສະຖາບັນຄົ້ນຄວ້າອື່ນໆ ເປັນຕົ້ນ);
- ບົດລາຍງານການສະຫຼຸບ ວຽກງານການປຶກສາຫາລື ກັບຊຸມຊົນ (ເອກະສານການລົງທະບຽນການເຂົ້າຮ່ວມ).

**ກອບໄລຍະເວລາ ແລະ ງົບປະມານ**

- ໄລຍະເວລາ ແລະ ກອບໜ້າວຽກ;
- ແຫຼ່ງທີ່ມາ ແລະ ການໃຊ້ຈ່າຍງົບປະມານ;
  - ລາຍຈ່າຍໃນການປຶກສາຫາລື;
  - ລາຍຈ່າຍສ່ວນບຸກຄົນ;
  - ລາຍຈ່າຍທີ່ໃຊ້ພາຍໃນຫ້ອງການ;
  - ເງິນທີ່ໃຊ້ໃນວຽກງານການທົດແທນຄ່າເສຍຫາຍ;
  - ລາຍຈ່າຍໃນຂອດໜ້າວຽກຕິດຕາມກວດກາ ແລະ ລາຍງານ.

**ແຜນດຳເນີນການຈັດສັນຍົກຍ້າຍ (RAP): ເນື້ອຫາ ແລະ ຂໍ້ມູນພາຍໃນເອກະສານທີ່ຕ້ອງການ**

**ພາກສະເໜີ**

- ອະທິບາຍຫຼັກການ ແລະ ນະໂຍບາຍຂອງໂຄງການໂດຍລວມ ທີ່ກ່ຽວພັນກັບ RAP;
- ອະທິບາຍຈຸດປະສົງຂອງໂຄງການການພັດທະນາ ແລະ ຜົນປະໂຫຍດທີ່ຈະໄດ້ຮັບໂດຍສັງເຂບ;
- ອະທິບາຍແຕ່ລະກິດຈະກຳ ທີ່ຈະມີຜົນກະທົບ ຈາກການຈັດສັນຍົກຍ້າຍ ແລະ ລວມໄປເຖິງການເຂົ້າເຖິງພື້ນທີ່ ໂຄງການ.

**ຂອບເຂດ**

- ລຳດັບຂັ້ນລາຍລະອຽດຂອງຂະໜາດ ແລະ ຄວາມຊັບຊ້ອນຂອງການຈັດສັນຍົກຍ້າຍ;
- ການເກັບກຳຂໍ້ມູນໃໝ່ ແລະ ຄວາມໜ້າເຊື່ອຖືຂອງຂໍ້ມູນ ປະກອບມີ:
    - ສະເໜີການຈັດສັນຍົກຍ້າຍ ແລະ ຜົນກະທົບທີ່ມີຕໍ່ກັບບຸກຄົນທີ່ຈະຍົກຍ້າຍ ແລະ ກຸ່ມຄົນອື່ນທີ່ໄດ້ຮັບຜົນກະທົບ;
    - ບັນຫາທາງດ້ານກົດໝາຍ ອາດຈະເກີດຂຶ້ນກັບການຈັດສັນຍົກຍ້າຍ.
- ທຸກໆບັນຫາ ຈະໄດ້ອະທິບາຍດັ່ງລຸ່ມນີ້. ເຊິ່ງບັນຫາທີ່ບໍ່ກ່ຽວຂ້ອງກັບໂຄງການ ຈະໄດ້ຮັບການຊີ້ແຈ້ງຕື່ມ;

**ນິຍາມຂອງໂຄງການຍ່ອຍ**

- ອະທິບາຍລາຍລະອຽດ ກ່ຽວກັບ ໂຄງການຍ່ອຍ ໂດຍສັງເຂບ;
- ກຳນົດພື້ນທີ່ ແລະ ຂອບເຂດ ຂອງ ໂຄງການຍ່ອຍ.

**ກຳນົດຜົນກະທົບທີ່ອາດຈະເກີດຂຶ້ນ**

- ອົງປະກອບ ຫຼື ກິດຈະກຳຕ່າງໆຂອງໂຄງການ ທີ່ກໍ່ໃຫ້ເກີດມີການຈັດສັນຍົກຍ້າຍ;
- ພື້ນທີ່ທີ່ໄດ້ຮັບຜົນກະທົບ ແລະ ພື້ນທີ່ໄດ້ຮັບຜົນສະທ້ອນ (ROI) ຈາກການກໍ່ສ້າງ ໂຄງການຍ່ອຍ;
- ພິຈາລະນາທາງເລືອກ ເພື່ອຫຼີກລ້ຽງ ຫຼື ຫຼຸດຜ່ອນບັນຫາການຈັດສັນຍົກຍ້າຍ;
- ບັນດາກົນໄກຕ່າງໆ ທີ່ຫຼຸດຜ່ອນບັນຫາການຈັດສັນຍົກຍ້າຍ ເທົ່າທີ່ຈະເຮັດໄດ້ ໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ.

**ຈຸດປະສົງຕົ້ນຕໍຂອງວຽກງານຈັດສັນຍົກຍ້າຍ**

- ກຳນົດວັດຖຸປະສົງ ແລະ ເປົ້າໝາຍ.

**ສຶກສາ ເສດຖະກິດ-ສັງຄົມ**

- ດຳເນີນກ່ອນໄລຍະ ກະກຽມໂຄງການຍ່ອຍ ແລະ ການມີສ່ວນຮ່ວມຂອງປະຊາຊົນທີ່ຈະຖືກຍົກຍ້າຍປະກອບດ້ວຍ:
    - ຜົນຂອງການສຳຫຼວດຄົວເຮືອນ ເຊິ່ງຄອບຄຸມດັ່ງລຸ່ມນີ້:

- ປະຊາຊົນທີ່ຢູ່ອາໄສໃນພື້ນທີ່ໄດ້ຮັບຜົນກະທົບ ເພື່ອອອກແບບວຽກງານການຈັດສັນຍົກຍ້າຍ ແລະ ບໍ່ໄດ້ລວມເຖິງການຫຼັ່ງໄຫຼຂອງຜູ້ຄົນຈາກພາຍນອກ ທີ່ຈະມີສິດໄດ້ຮັບການທົດແທນຄ່າເສຍຫາຍ ແລະ ຄວາມຊ່ວຍເຫຼືອໃນການຍົກຍ້າຍ;
- ບັນດາລັກສະນະທີ່ເປັນມາດຕະຖານອື່ນໆ ຂອງຜູ້ທີ່ຈະໄດ້ຮັບການຍົກຍ້າຍ ປະກອບດ້ວຍ ລາຍລະອຽດຂອງລາຍຮັບ, ແຮງງານ, ແລະ ໂຄງສ້າງພາຍໃນຄອບຄົວ; ຂໍ້ມູນພື້ນຖານກ່ຽວກັບວິຖີຊີວິດ (ເຊັ່ນ ລະດັບການຜະລິດ ແລະ ລາຍຮັບໄດ້ມາຈາກກິດຈະກໍາທາງດ້ານເສດຖິດ ໂດຍກົງ ແລະ ທາງອ້ອມ ຄືແນວໃດ) ແລະ ມາດຕະຖານການດໍາລົງຊີວິດ ລວມເຖິງ ສະຖານະທາງສຸຂະພາບ ແລະ ຊີວິດການເປັນຢູ່ທີ່ດີຂອງບຸກຄົນທີ່ຖືກຜົນກະທົບຈາກໂຄງການ (PAP) ແລະ ຄົວເຮືອນຖືກຜົນກະທົບຈາກໂຄງການ (PAH);
- ຄາດຄະເນການສູນເສຍຊັບສິນ (ເປັນ ທັງໝົດ ແລະ ບາງສ່ວນ) ແລະ ຂອບເຂດທີ່ຈະໄດ້ຮັບຜົນກະທົບ, ກາຍະພາບ ຫຼື ເສດຖະກິດ;
- ຂໍ້ມູນກ່ຽວກັບຄົນ ຫຼື ກຸ່ມຄົນທີ່ມີຄວາມສ່ຽງທີ່ຈະຖືກຜົນກະທົບ (OP 4.12 ວັກທີ 8) ເຊິ່ງບັນຍັດໄວ້ ສໍາລັບຜູ້ທີ່ຈະໄດ້;
- ປັບປຸງແກ້ໄຂຂໍ້ມູນໃໝ່ ທາງດ້ານວິຖີຊີວິດ ແລະ ມາດຕະຖານການດໍາລົງຊີວິດ ໃນການຍົກຍ້າຍຂອງ PAP ແລະ PAH ຢ່າງສະໝໍ່າສະເໝີ ດັ່ງນັ້ນ ຂໍ້ມູນໃນປັດຈຸບັນ ຈຶ່ງມີຄວາມຈໍາເປັນ ສໍາລັບເວລາໃນການຍົກຍ້າຍຂອງພວກເຂົາ.

- ນອກຈາກນັ້ນຍັງມີການສຶກສາອື່ນໆ ດັ່ງລຸ່ມນີ້:
  - ການຖືຄອງ ແລະ ລະບົບການໂອນຖ່າຍທີ່ດິນ ປະກອບດ້ວຍຊັບສິນທີ່ເປັນຊັບພະຍາກອນທາງທໍາມະຊາດ ທີ່ໄດ້ຈາກວິຖີຊີວິດ ແລະ ແຫຼ່ງອາຫານ ຂອງຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ, ບໍ່ໄດ້ລວມເຖິງການເກັບເຄື່ອງປ່າຂອງດົງ (ເຊັ່ນ ການຫາປາ, ທົ່ງຫຍ້າ ຫຼື ການນໍາໃຊ້ປະໂຫຍດຈາກປ່າ) ພາຍໃຕ້ກົນໄກການຄຸ້ມຄອງຕັດສັນທີ່ດິນ ໃນທ້ອງຖິ່ນ ແລະ ທຸກໆບັນຫາ ຈະເກີດຂຶ້ນ ໂດຍລະບົບການຖືຄອງທີ່ດິນຂອງໂຄງການ;
  - ຮູບແບບທາງສັງຄົມຂອງຊຸມຊົນທີ່ຈະໄດ້ຮັບຜົນກະທົບ ປະກອບດ້ວຍ ເຄືອຄ່າຍ ແລະ ລະບົບການສະໜັບສະໜູນທາງສັງຄົມ, ວ່າພວກເຂົາຈະໄດ້ຮັບຜົນກະທົບແນວໃດ ຈາກການກໍ່ສ້າງໂຄງການ;
  - ການປຶກສາຫາລືເປີດກວ້າງ ແລະ ການບໍລິການທາງສັງຄົມ ຈະໄດ້ຮັບການສຶກສາ;
  - ລັກສະນະທາງວັດທະນະທໍາ ແລະ ສັງຄົມ ຂອງຊຸມຊົນ ທີ່ຈະໄດ້ຮັບການຍົກຍ້າຍ ປະກອບດ້ວຍສະຖາບັນທີ່ເປັນທາງການ ແລະ ບໍ່ທາງການ (ເຊັ່ນ ອົງການຈັດຕັ້ງທາງສັງຄົມ ປະກອບມີ ອົງການຈັດຕັ້ງຊຸມຊົນ, ອົງການ ບໍ່ຫວັງຜົນກໍາໄລ ເປັນຕົ້ນ) ທີ່ອາດຈະກ່ຽວຂ້ອງກັບຍຸດທະສາດການປຶກສາຫາລື ແລະ ການອອກແບບ ແລະ ຈັດຕັງປະຕິບັດວຽກງານຈັດສັນຍົກຍ້າຍ.

**ກອບລະບຽບກົດໝາຍ**

- ຜົນການວິເຄາະກອບລະບຽບກົດໝາຍ ຈະຄອບຄຸມດັ່ງນີ້:

- ວາງກອບຄວາມອາດສາມາດ ແລະ ຄ່າຕອບແທນ ໃຫ້ຊັດເຈນ ກັບການປະເມີນມູນຄ່າ ແລະ ໄລຍະເວລາໃນການຈ່າຍເງິນການທົດແທນຄ່າເສຍຫາຍ;
- ຂັ້ນຕອນການນໍາໃຊ້ກົດໝາຍ ແລະ ຂະບວນການບໍລິການ ເຊິ່ງລວມທັງລາຍລະອຽດໃນການຮັກສາ ຜູ້ທີ່ຈະໄດ້ຮັບການຍົກຍ້າຍ (PAP ແລະ PAH) ໃນຂະບວນການຍຸດຕິທໍາ ແລະ ໄລຍະເວລາດໍາເນີນການປົກກະຕິ ສໍາລັບວິທີການດັ່ງກ່າວ, ແລະ ທຸກໆທາງເລືອກ ຂອງກົນໄກ ການແກ້ໄຂຂໍ້ຂັດແຍ່ງ ທີ່ອາດຈະກ່ຽວຂ້ອງກັບວຽກງານການຈັດສັນຍົກຍ້າຍຂອງໂຄງການ;
- ບັນດາກົດໝາຍຕ່າງໆ ທີ່ກ່ຽວຂ້ອງ (ເຊັ່ນ ກົດໝາຍຮີດຄອງປະເພນີ ແລະ ແບບປະເພນີ) ໃນການກໍາກັບການຖືຄອງທີ່ດິນ, ການປະເມີນມູນຄ່າຊັບສິນ ແລະ ການສູນເສຍ, ການທົດແທນຄ່າເສຍຫາຍ, ແລະ ສິດໃນການນໍາໃຊ້ຊັບພະຍາກອນທໍາມະຊາດ, ຈາກຮີດຄອງປະເພນີ ທີ່ກ່ຽວຂ້ອງກັບການຍົກຍ້າຍ, ກົດໝາຍປົກປັກຮັກສາສິ່ງແວດລ້ອມ ແລະ ນິຕິກໍາຕ່າງໆ ທີ່ກ່ຽວກັບ ສະຫວັດດີການສັງຄົມ;
- ບັນດາກົດໝາຍ ແລະ ນິຕິກໍາຕ່າງໆ ທີ່ກ່ຽວຂ້ອງກັບໜ່ວຍງານຮັບຜິດຊອບ ໃນການຈັດຕັ້ງປະຕິບັດວຽກງານຈັດສັນຍົກຍ້າຍ;
- ບັນດາຊ່ອງຫວ່າງທາງກົດໝາຍ, ຖ້າຫາກວ່າມີ, ລະບຽບການທີ່ມີການຄວບຄຸມຢ່າງເຫັນໄດ້ຊັດເຈນ ລະຫວ່າງກົດລະບຽບທ້ອງຖິ່ນ ແລະ ນະໂຍບາຍທາງດ້ານການຈັດສັນຍົກຍ້າຍ ຂອງທະນາຄານໂລກ (OP 4.12), ແລະ ບັນດາກົນໄກທີ່ເຮັດໃຫ້ເກີດຊ່ອງຫວ່າງ;
- ທຸກໆຂັ້ນຕອນຕ່າງໆ ທາງດ້ານກົດໝາຍ ທີ່ເຫັນວ່າຈໍາເປັນ ເພື່ອໃຫ້ການດໍາເນີນວຽກງານຈັດສັນຍົກຍ້າຍ ພາຍໃຕ້ການກໍ່ສ້າງໂຄງການ ໃຫ້ມີປະສິດທິພາບ ປະກອບດ້ວຍຂະບວນການ (ທີ່ເໝາະສົມ) ໃນການຮຽກຮ້ອງສິດທິການນໍາໃຊ້ທີ່ດິນຄືນ (ເຊັ່ນ ໄດ້ຄືນຈາກກົດໝາຍຮີດຄອງປະເພນີ ແລະ ສິດການນໍາໃຊ້ທີ່ດິນແບບປະເພນີ – ເພີ່ມເຕີມທີ່ OP 4.12, ວັກທີ 15 b).

## ກອບໜ້າວຽກອົງການຈັດຕັ້ງທີ່ກ່ຽວຂ້ອງ

- ຜົນການວິເຄາະກອບໜ້າວຽກອົງການຈັດຕັ້ງທີ່ກ່ຽວຂ້ອງ ຈະຄວບຄຸມດັ່ງນີ້:
  - ກໍານົດໜ່ວຍງານຮັບຜິດຊອບ ສໍາລັບວຽກງານຈັດສັນຍົກຍ້າຍ ແລະ ບັນດາອົງການຈັດຕັ້ງທາງສັງຄົມ ທີ່ມີໜ້າທີ່ໃນການຈັດດຕັ້ງປະຕິບັດໂຄງການ;
  - ປະເມີນຄວາມອາດສາມາດຂອງແຕ່ລະອົງການຈັດຕັ້ງທີ່ກ່ຽວຂ້ອງ ເຊັ່ນ ໜ່ວຍງານຮັບຜິດຊອບ ແລະ ບັນດາອົງການຈັດຕັ້ງມະຫາຊົນ (CSOs);
  - ທຸກໆຂັ້ນຕອນທີ່ສະເໜີ ເພື່ອເພີ່ມຂີດຄວາມສາມາດໃຫ້ກັບ ໜ່ວຍງານຮັບຜິດຊອບ ແລະ ບັນດາອົງການຈັດຕັ້ງມະຫາຊົນ (CSOs) ທີ່ມີໜ້າທີ່ໃນການຈັດດຕັ້ງປະຕິບັດໂຄງການ ວຽກງານຈັດສັນຍົກຍ້າຍໃຫ້ເກີດຜົນ.

## ສິດທີ່ຈະໄດ້ຮັບ

- ໃຫ້ນິຍາມຂອງຄົນທີ່ຈະໄດ້ຮັບການຍົກຍ້າຍ (ບຸກຄົນຖືກຜົນກະທົບຈາກໂຄງການ [PAP] ແລະ ຄົວເຮືອນຖືກຜົນກະທົບຈາກໂຄງການ [PAH]) ແລະ ບັນດາເກນຕ່າງໆ ທີ່ຈະນໍາມາພິຈາລະນາ ວ່າໃຜທີ່ຈະມີ

ສິດໄດ້ຮັບການທົດແທນຄ່າເສຍຫາຍ ແລະ ການຊ່ວຍເຫຼືອໃນການຍົກຍ້າຍ ຕາມລາຍຊື່ ໃນມື້ປິດບັນຊີການລົງທະບຽນ.

**ການປະເມີນທີ່ດິນ**

- ວິທີການໃນການປະເມີນຄ່າເສຍຫາຍ ເພື່ອກໍານົດມູນຄ່າທົດແທນ; ແລະ ອະທິບາຍເຖິງປະເພດ ແລະ ລະດັບຂັ້ນຂອງການທົດແທນຄ່າເສຍຫາຍ ໃຫ້ສອດຄ່ອງກັບລະບຽບກົດໝາຍ ແລະ ມາດຕະການອື່ນໆທີ່ວາງໄວ້ ເພື່ອໃຫ້ບັນລຸເປົ້າໝາຍໃນການວາງຄ່າທົດແທນ ສໍາລັບການສູນເສຍຊັບສິນ ຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ.

**ມາດຕະການຈັດສັນຍົກຍ້າຍ**

- ລະບຸລາຍລະອຽດອື່ນໆ ທີ່ລວມກັບການທົດແທນຄ່າເສຍຫາຍ ແລະ ມາດຕະການໃນການຈັດສັນຍົກຍ້າຍ ທີ່ຈະຊ່ວຍໃນແຕ່ລະປະເພດຜູ້ທີ່ຈະໄດ້ຮັບການຍົກຍ້າຍ (PAP ແລະ PAH) ເພື່ອໃຫ້ບັນລຸຕາມຈຸດປະສົງທີ່ວາງໄວ້ (OP 4.12 ວັກທີ 6). ນອກຈາກນີ້, ຄວາມເປັນໄປໄດ້ທາງເຕັກນິກ ແລະ ເສດຖະກິດ , ສ່ວນອື່ນໆ ທີ່ຈະໄດ້ຮັບນອກເໜືອຈາກການທົດແທນຄ່າເສຍຫາຍ ໃນການຍົກຍ້າຍ ຄວນຈະໃຫ້ເຂົ້າກັບເງື່ອນໄຂທາງວັດທະນະທໍາ ຂອງຜູ້ທີ່ຈະໄດ້ຮັບການຍົກຍ້າຍ ແລະ ການກະກຽມການປຶກສາຫາລືກັບເຂົາເຈົ້າ.

**ການເລືອກສະຖານທີ່, ກະກຽມ ສະຖານທີ່ ແລະ ຍົກຍ້າຍ**

- ບັນດາທາງເລືອກ ໃນການພິຈາລະນາສະຖານທີ່ຈັດສັນຍົກຍ້າຍ ແລະ ການຊີ້ແຈງໃນແຕ່ລະທາງເລືອກ ດັ່ງລຸ່ມນີ້:
    - ຄວາມຕ້ອງການທາງອົງກອນ ແລະ ເຕັກນິກວິຊາການ ໃນການກໍານົດ ແລະ ກະກຽມສະຖານທີ່ຍົກຍ້າຍ, ບໍ່ວ່າຈະເປັນເຂດຕົວເມືອງ ຫຼື ຊົນນະບົດ, ເຊິ່ງລວມເຖິງການປະສົມປະສານລະຫວ່າງທີ່ທໍາມາຫາກິນ, ຄວາມໄດ້ປຽບທາງດ້ານທີ່ຕັ້ງ ແລະ ປັດໄຈອື່ນໆ ທີ່ສາມາດນໍາມາປຽບທຽບກັບສະຖານທີ່ເກົ່າໄດ້ ບວກກັບໄລຍະເວລາໃນການຈັດຊື້, ໂອນຖ່າຍ ແລະ ແຫຼ່ງຊັບພະຍາກອນອື່ນໆອີກ.
    - ທຸກໆມາດຕະການທີ່ຈໍາເປັນ ເພື່ອປ້ອງກັນການເກງກໍາໄລ ທີ່ດິນ ແລະ ການຫຼັ່ງໄຫຼມາຈັບຈອງຂອງບຸກຄົນພາຍນອກ ເຂົ້າມາໃນພື້ນທີ່ໂຄງການ;
    - ຂັ້ນຕອນການຍົກຍ້າຍທາງກາຍະພາບ ພາຍໃຕ້ການກໍ່ສ້າງໂຄງການ ລວມທັງ ໄລຍະເວລາໃນການກະກຽມພື້ນທີ່ ແລະ ຖ່າຍຖອນ;
    - ການຮ່າງລະບຽບກົດໝາຍ ໃນການຈັດລະບຽບການຄອບຄອງ ແລະ ຖອນກໍາມະສິດທີ່ດິນ ໄປຍັງຜູ້ທີ່ຈະມີສິດຍົກຍ້າຍ.

**ອາຄານບ້ານເຮືອນ, ໂຄງລ່າງພື້ນຖານ ແລະ ການບໍລິການສັງຄົມ**

- ແຜນທີ່ວາງໄວ້ (ເພື່ອການຈັດຫາທຶນ ໃຫ້ PAH) ສໍາລັບອາຄານບ້ານເຮືອນ, ໂຄງລ່າງພື້ນຖານ (ເຊັ່ນ ນໍ້າປະປາ, ຖະໜົນຫົນທາງ) ແລະ ການບໍລິການທາງສັງຄົມອື່ນໆ (ເຊັ່ນ ໂຮງຮຽນ, ການບໍລິການທາງສຸຂາພິບານ ເປັນຕົ້ນ); ແຜນທີ່ວາງໄວ້ ເພື່ອທຽບເທົ່າກັບພື້ນຖານໂຄງລ່າງທີ່ຜູ້ໄດ້ຮັບຜົນກະທົບເຄີຍໄດ້ຮັບ;

ໃນການພັດທະນາການກໍ່ສ້າງ, ວິສະວະກຳ ແລະ ການອອກແບບທາງດ້ານສະຖາປັດຕະຍະກຳ ສຳລັບການກໍ່ສ້າງ ສິ່ງອຳນວຍຄວາມສະດວກໃຫ້ເຂົາເຈົ້າ.

**ການປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມ**

- ອະທິບາຍຂອບເຂດຂອງພື້ນທີ່ ທີ່ຈະຈັດສັນຍົກຍ້າຍ; ແລະ ການປະເມີນຜົນກະທົບທາງສິ່ງແວດລ້ອມ ໃນເຂດຈັດສັນຍົກຍ້າຍ ແລະ ມາດຕະການ ການຫຼຸດຜ່ອນ ແລະ ຈັດການກັບຜົນກະທົບດັ່ງກ່າວ (ສົມທົບກັບ ESMP ຫຼັກ ຂອງໂຄງການ ທີ່ກ່ຽວກັບການຈັດສັນຍົກຍ້າຍ).

**ການມີສ່ວນຮ່ວມຂອງຊຸມຊົນ**

- ອະທິບາຍລະອຽດ ສໍາລັບຍຸດທະສາດຂອງການປຶກສາຫາລື ແລະ ການມີສ່ວນຮ່ວມຂອງຄົວເຮືອນໄດ້ຮັບຜົນກະທົບຈາກໂຄງການ ແລະ ປະຊາຊົນເຈົ້າພາບ ໃນການອອກແບບ ແລະ ຈັດຕັ້ງປະຕິບັດວຽກງານຈັດສັນຍົກຍ້າຍ;
- ສະຫຼຸບບັນດາມູມມອງຕ່າງໆ ແລະ ຈະເຮັດແນວໃດໃຫ້ມູມມອງດັ່ງກ່າວນີ້ ເປັນສ່ວນໜຶ່ງຂອງການກະກຽມແຜນຈັດສັນຍົກຍ້າຍ;
- ທວນຄືນທາງເລືອກໃນການຈັດສັນຍົກຍ້າຍ ແລະ ຫາສ່ອງທາງໃຫ້ກັບຜູ້ທີ່ຈະໄດ້ຮັບການຍົກຍ້າຍ ໂດຍອີງຕາມ ຕົວເລືອກທີ່ຈະເປັນໄປໄດ້ ສໍາລັບພວກເຂົາ ປະກອບດ້ວຍ ຮູບແບບຂອງການທົດແທນຄ່າເສຍຫາຍ ແລະ ການຊ່ວຍເຫຼືອໃນການຍົກຍ້າຍ, ສໍາລັບການຍົກຍ້າຍ ອາດຈະເປັນແບບແຕ່ລະຄອບຄົວ ຫຼື ພາກສ່ວນຊຸມຊົນ ທີ່ມີຢູ່ກ່ອນໜ້ານັ້ນ ຫຼື ກຸ່ມເຄືອຍາດ, ເພື່ອຄວາມຄົງຕົວຂອງຮູບແບບຂອງອົງປະກອບແຕ່ລະກຸ່ມ ແລະ ການຮັກສາຮູບແບບທາງວັດທະນະທໍາ (ເຊັ່ນ ສະຖານທີ່ທາງຄວາມເຊື່ອ, ສັກກະລະບູຊາ , ຜີປ່າຊ້າ ເປັນຕົ້ນ);
- ການກະກຽມຮູບແບບການຈັດຕັ້ງທາງສັງຄົມ ໃຫ້ກັບຜູ້ທີ່ຈະໄດ້ຮັບການຍົກຍ້າຍ, ພວກເຂົາສາມາດແຈ້ງຂໍ້ຂ້ອງໃຈດັ່ງກ່າວ ກັບຜູ້ພັດທະນາໂຄງການ ໂດຍຜ່ານ ແຜນງານ ແລະ ການຈັດຕັ້ງປະຕິບັດ ແລະ ມາດຕະການຕ່າງໆ ເພື່ອໃຫ້ແນ່ໃຈວ່າປະຊາຊົນທີ່ມີຄວາມແຕກຕ່າງກັນທາງສະຖານະ (ເຊັ່ນ ກຸ່ມຊົນເຜົ່າ ແລະ ກຸ່ມທີ່ບໍ່ສາມາດຊ່ວຍໂຕເອງໄດ້:ຜູ້ຍິງ, ໄວໜຸ່ມ ແລະ ເດັກນ້ອຍ, ຄົນສູງອາຍຸ, ຄົນພິການ, ຜູ້ທີ່ບໍ່ມີທີ່ດິນ, ຄົນທຸກຍາກ ເປັນຕົ້ນ) ຈະໄດ້ຮັບການແກ້ໄຂ ຢ່າງພ້ອມພຽງ.

**ການລວມກັບປະຊາຊົນເຈົ້າພາບ**

- ການປຶກສາຫາລື ກັບຊຸມຊົນເຈົ້າພາບ ແລະ ລັດຖະບານທ້ອງຖິ່ນ;
- ການກຽມພ້ອມສຳລັບການຈ່າຍເງິນໃຫ້ກັບປະຊາຊົນເຈົ້າພາບ ຕໍ່ທີ່ດິນ ແລະ ຊັບສິນ ທີ່ຈະມອບໃຫ້ກັບຄົວເຮືອນໄດ້ຮັບຜົນກະທົບຈາກໂຄງການ;
- ກະກຽມສຳລັບການແກ້ໄຂບັນຫາຂໍ້ຂັດແຍ່ງລະຫວ່າງຊຸມຊົນເຈົ້າບ້ານ ແລະ ຄົວເຮືອນໄດ້ຮັບຜົນກະທົບຈາກໂຄງການ;
- ທຸກໆມາດຕະການທີ່ຈຳເປັນໃນວຽກງານບໍລິການເພີ່ມເຕີມ (ເຊັ່ນ ການສຶກສາ, ນໍ້າໃຊ້, ສຸຂະພາບ ແລະ ການສົ່ງເສີມການຜະລິດ) ໃນຊຸມຊົນເຈົ້າພາບ ເພື່ອເຮັດເຂົາເຈົ້າ ຢ່າງນ້ອຍ ໄດ້ເຂົ້າເຖິງ ກັບການບໍລິການຕ່າງໆ ດັ່ງທີ່ໄດ້ມອບໃຫ້ຄົວເຮືອນໄດ້ຮັບຜົນກະທົບຈາກໂຄງການ (ເຊັ່ນ ການຕັ້ງຖິ່ນຖານ ເປັນຕົ້ນ).

**ຂັ້ນຕອນການໄກ່ເກ່ຍ**

- ລະບຽບການໃນການເຂົ້າເຖິງ ແລະ ລາຄາສົມເຫດສົມຜົນ ສຳລັບການຍົກຍ້າຍຂອງບຸກຄົນທີ່ສາມ ແລະ ການກ້າວໄປເຖິງຂໍ້ຂັດແຍ່ງໃນການຈັດສັນຍົກຍ້າຍ; ກົນໄກການໄກ່ເກ່ຍ ຈະໄດ້ນຳມາປະຕິບັດໃນການຂໍຄວາມເຊື່ອເຫຼືອໃນການພິພາກສາ ໃນຂັ້ນສານ ແລະ ກົນໄກການແກ້ໄຂ ຂໍ້ຂັດແຍ່ງຂັ້ນພື້ນຖານ ໃນຂັ້ນຊຸມຊົນ.

**ພາລະບົດບາດຂອງອົງການຈັດຕັ້ງ**

- ກອບໜ້າທີ່ຂອງອົງການຈັດຕັ້ງ ເພື່ອການຈັດຕັງປະຕິບັດ ວຽກງານການຈັດສັນຍົກຍ້າຍ ເຊິ່ງປະກອບມີບັນດາໜ່ວຍງານຕ່າງໆ ທີ່ມີໜ້າທີ່ຮັບຜິດຊອບ ສຳລັບການສົ່ງມອບມາດຕະການຈັດສັນຍົກຍ້າຍ ແລະ ການໃຫ້ການບໍລິການ;
- ການກຽມພ້ອມຕ່າງໆ ເພື່ອໃຫ້ແນ່ໃຈ ໃນການປະສານງານກັບໜ່ວຍງານ ແລະ ອຳນາດການປົກຄອງທີ່ກ່ຽວຂ້ອງ ໃຫ້ມີສ່ວນຮ່ວມໃນການດຳເນີນງານຈັດສັນຍົກຍ້າຍ;
- ບັນດາມາດຕະການ (ປະກອບດ້ວຍ ການຊ່ວຍເຫຼືອທາງດ້ານວິຊາການ) ຈຳເປັນທີ່ຈະຕ້ອງໄດ້ສ້າງຄວາມເຂັ້ມແຂງ ທາງດ້ານຄວາມສາມາດຂອງ ໜ່ວຍງານທີ່ຮັບຜິດຊອບ ໃນການອອກແບບ ແລະ ດຳເນີນວຽກງານຈັດສັນຍົກຍ້າຍ ໃຫ້ມີປະສິດທິພາບ; ຕາມບົດບັນຍັດ ໜ່ວຍງານທີ່ກ່ຽວຂ້ອງ ຕ້ອງໄດ້ທຳການຊ່ວຍເຫຼືອ ສຳລັບການໂອນຍ້າຍ/ຍົກຍ້າຍ ໜ່ວຍງານທ້ອງຖິ່ນ ຫຼື ຄົວເຮືອນໄດ້ຮັບຜົນກະທົບຈາກໂຄງການ (ການຕັ້ງຖິ່ນຖານ) ແລະ ໃຫ້ການບໍລິການຕ່າງໆ ພາຍໃຕ້ການຄຸ້ມຄອງຂອງໂຄງການກໍ່ສ້າງ, ສຳລັບການຖ່າຍໂອນຄວາມຮັບຜິດຊອບອື່ນໆ ຈາກໜ່ວຍງານທີ່ຮັບຜິດຊອບ ໃຫ້ກັບພາກສ່ວນອື່ນ ຖ້າເຫັນວ່າມີຄວາມຈຳເປັນ.

**ໄລຍະເວລາຂອງການຈັດຕັ້ງປະຕິບັດ**

- ໄລຍະເວລາ ທີ່ກຳນົດເອົາທຸກກິດຈະກຳຂອງວຽກງານຈັດສັນຍົກຍ້າຍ ທີ່ສ້າງຂຶ້ນຜ່ານຂະບວນການຈັດຕັ້ງປະຕິບັດ ເຊິ່ງລວມເຖິງກຳນົດວັນສຳລັບການຈັດສັນຍົກຍ້າຍຂອງຄົວເຮືອນໄດ້ຮັບຜົນກະທົບຈາກໂຄງການ ແລະ ປະຊາຊົນເຈົ້າບ້ານ, ການຍົກເລີກບັນດາຮູບແບບຂອງການຊ່ວຍເຫຼືອ. ກອບໄລຍະເວລາຍັງສາມາດບອກໄດ້ວ່າວຽກງານຈັດສັນຍົກຍ້າຍ ເຊື່ອມໂຍງກັບວຽກງງານອື່ນໆ ຂອງໂຄງການຄືແນວໃດ.

### ແຜນລາຍຈ່າຍ ແລະ ງົບປະມານ

- ຕາຕະລາງ ສະແດງແຜນລາຍຈ່າຍທັງໝົດໂດຍປະມານ ທີ່ໃຊ້ເຂົ້າໃນກິດຈະກໍາຈັດສັນຍົກຍ້າຍທັງໝົດ ທີ່ປະກອບດ້ວຍເງິນສໍາຮອງເພື່ອ ກໍລະນີ ອັດຕາເງິນເຟີ້ ເພີ່ມຂຶ້ນ, ການເພີ່ມຂຶ້ນຂອງປະຊາກອນ ແລະ ພາລະຜູ້ມັດອື່ນໆ; ຕາຕະລາງໄລຍະເວລາສໍາລັບການໃຊ້ຈ່າຍ; ແຫຼ່ງທີ່ມາຂອງທຶນ; ແລະ ການກະກຽມສໍາລັບການໝູນວຽນຂອງທຶນ; ເງິນທຶນ ສໍາລັບການຈັດສັນຍົກຍ້າຍ, ຖ້າຫາກວ່າມີ ແຫຼ່ງທຶນອື່ນທີ່ນອກເໜືອຈາກໜ່ວຍງານທີ່ດໍາເນີນໂຄງການຢູ່.

### ການຕິດຕາມ ແລະ ປະເມີນຜົນ

- ການກະກຽມການລົງໄປຕິດຕາມກວດກາ ແລະ ປະເມີນຜົນ ໂດຍໜ່ວຍງານທີ່ຮັບຜິດຊອບ, ຮ່ວມມືກັບພາກສ່ວນຕິດຕາມກວດກາຈາກພາກສ່ວນອື່ນ ໂດຍການພິຈາລະນາຈາກທະນາຄານໂລກ ເພື່ອໃຫ້ໝັ້ນໃຈວ່າສາມາດປະຕິບັດແລ້ວຕາມກໍານົດເວລາ ແລະ ວັດຖຸປະສົງ;
- ດໍາເນີນການກວດສອບ ບັນດາຕົວຊີ້ວັດຕ່າງໆ ທີ່ສາມາດວັດແທກປັດໄຈການເຂົ້າ, ອອກ ແລະ ຜົນໄດ້ຮັບຈາກວຽກງານຈັດສັນຍົກຍ້າຍ;
- ການມີສ່ວນຮ່ວມຂອງຜູ້ທີ່ຖືກຜົນກະທົບ (PAP ແລະ PAH) ໃນຂະບວນການຕິດຕາມກວດກາ;
- ປະເມີນຜົນກະທົບຈາກການຈັດສັນຍົກຍ້າຍ ຫຼັງຈາກທີ່ໄດ້ມີການຈັດສັນຍົກຍ້າຍ ແລະ ບັນດາກິດຈະກໍາການພັດທະນາຕ່າງໆ ໄດ້ຮັບການຈັດຕັ້ງປະຕິບັດແລ້ວ ເພື່ອທີ່ຈະນໍາໃຊ້ຜົນຂອງການປະເມີນ ເພື່ອເປັນແນວທາງໃນການດໍາເນີນງານໃນຄັ້ງຕໍ່ໄປ.

# ເອກະສານຊ້ອນທ້າຍ A2

## ຫຼັກການການມອບດິນ

**ຂະບວນການລວມມີດັ່ງນີ້:**

1. ຂໍ້ມູນຢ່າງເປັນທາງການແລະການປະເມີນເບື້ອງຕົ້ນ ການກຳນົດຄວາມເໝາະສົມຂອງການມອບດິນແບບສະມັກໃຈໃນສະພາບການຂອງໂຄງການ. ກິດຈະກຳທີ່ຕ້ອງໃຫ້ການມອບດິນແບບສະມັກໃຈປະຕິບັດ ໃນຂັ້ນຕອນກັ່ນຕອງ ແລະ ການສຶກສາສະເພາະທີ່ດິນ ວ່າດ້ວຍບົດລາຍງານການປະກອບສ່ວນທີ່ດິນໃຫ້ໂຄງການຍ່ອຍ, ພະນັກງານຈະລາຍງານນາຍບ້ານ ແລະ ຊາວບ້ານ ຫຼືເຈົ້າຂອງທີ່ດິນ ຜ່ານການແຈ້ງການຢ່າງເປັນທາງການ ທີ່ສະຖານທີ່ເຂດດິນບ້ານນັ້ນໆ ທີ່ ມີການການມອບດິນແບບສະມັກໃຈ. ການບັນທຶກແລະເອກະສານ ກ່ຽວກັບເຫດຜົນຂອງການມອບດິນໃຫ້ໂຄງການ. ໜ່ວຍງານທີ່ໄດ້ຮັບມອບໝາຍດຳເນີນໂຄງການຈະຮັບພິຈາລະນາແລະຕິດຕາມລາຍລະອຽດເພື່ອເຮັດບ່ອນອ້າງອີງ:

   - ທີ່ດິນນີ້ຈະໃຊ້ເພື່ອຫັຍງ;
   - ເນື້ອທີ່ດິນເທົ່າໃດ ທີ່ໂຄງການຕ້ອງການໃນໄລະຊົ່ວຄາວ ແລະ ຖາວອນ;
   - ເນື້ອທີ່ດິນຈະມອບມີເນື້ອທີ່ເທົ່າໃດ;
   - ມີທາງເລືອກອື່ນບໍ່ໃນການບໍລິຈາກ (ຕົວຢ່າງ: ສິດນຳໃຊ້, ສິດໃນການໃຊ້ທາງຜ່ານດິນ);
   - ນິຍາມຂອງການມອບ;
   - ກຳນົດຄຸນລັກສະນະຂອງຜູ້ມອບ;
   - ຜູ້ຮັບປະໂຫຍດຈາກການມອບ; ແລະ
   - ລາຍລະອຽດອື່ນໆ ທີ່ກ່ຽວຂ້ອງກັບການມອບ.

**ການກະກຽມ ການສຳຫຼວດແຜນທີ່ ແລະ ຕາຕະລາງເວລາການຫຍັບຍ້າຍທີ່ດິນ.**

2. ພາຍຫຼັງເກັບກຳຂໍ້ມູນກ່ຽວຂ້ອງ ກັບທີ່ດິນ ແລະ ຊັບສິນ ທີ່ຈະຖືກຜົນກະທົບຈາກໂຄງການຍ່ອຍ, ຜູ້ຮັບຜິດຊອບຢ່າງເປັນທາງການ, ພ້ອມກັບຄວາມຊ່ວຍເຫຼືອ ຈາກບັນດາບຸກຄົນທີ່ກ່ຽວຂ້ອງ, ຈະກະກຽມແຜນທີ່ສຳຫຼວດ ແລະ ຕາຕະລາງເວລາການຫຍັບຍ້າຍທີ່ດິນ.

   ແຜນທີສຳຫຼວດ ສະແດງເນື້ອທີ່ດິນແຕ່ລະຕອນ ທີຈະຖືກຜົນກະທົບ, ແລະ ເນື່ອທີ່ດິນແຕ່ລະຕອນນັ້ນຄວນມີເລກລະຫັດກຳກັບ (ເປັນໂຕໜັງສື ຫຼື ໂຕເລກ).

**ແຜນວາດ A2.1 ຕົວຢ່າງແຜນທີສຳຫຼວດ.**




3. ການຢືນຢັນການບໍລິຈາກໂດຍສະມັກໃຈ. ເງື່ອນໄຂຕໍ່ໄປນີ້ຈະໄດ້ຮັບການຢືນຢັນຈາກຄະນະກຳມະການລວມເຖິງນາຍບ້ານ:

   a) ການຢືນຢັນຜູ້ຖືກກະທົບເຫັນດີມອບທີ່ດິນຫຼືຊັບສິນ,ການການປະຊຸມໜ້າເຊິ່ງໜ້າ;

   b) ບໍ່ມີໃຜຄວນເສຍຫຼາຍກ່ວາສິບເປີເຊັນ ຂອງຈຳນວນຊັບສິນທີ່ຜະລິດໄດ້;

   c) ການຄອບຄອງທີ່ດິນທັງໝົດຂອງຜູ້ຖືກກະທົບຄວນມີເທົ່າກັບຫຼືຫຼາຍກວ່າ 200 $m^2$; ແລະ

   d) ບໍ່ມີການຍົກຍ້າຍທາງກາຍະພາບທີ່ບໍ່ຈຳເປັນ.

4. ການປຶກສາຫາລືຂັ້ນບ້ານຂັ້ນຕົ້ນ. ພາຍໃຕ້ການນຳພາຂອງຫົວໜ້າໝູ່ບ້ານ, ຂະບວນການປຶກສາຫາລື ເພື່ອເຊື້ອເຊີນຜູ້ມີສ່ວນໄດ້ສ່ວນເສຍຕ່າງໆ, ລວມເຖິງ ເຈົ້າຂອງທີ່ດິນ ເພື່ອສົນທະນາ ແລະ ເພື່ອໃຫ້ສັດຈະທິເໝາະສົມໃນການມອບດິນໂດຍສະມັກໃຈ.

5. ການມອບໂອນ ແລະ ການ ຂຶ້ນຮູບທີ່ດິນ. ຂະບວນການ ການມອບດິນ ລວມມີ ຂັດຕອນທີ່ຈະແຈ້ງເພື່ອອະທິບາຍຂະບວນການທີ່ຄວນປະຕິບັດເພື່ອການໂອນດິນ, ແລະ ວິທີການທີເໝາະສົມໃນການໂອນ. ຂະບວນການລວມມີ ພິຈາລະນາດ້ານກົດໝາຍ ແລະ ຂໍ້ກຳນົດ ອີງໄສກອບກົດໝາຍ ຂອງ ສປປ ລາວ. ຂະບວນການຕັດສິນໃຈຈະອະທິບາຍຈະແຈ້ງ ແລະ ໂປ່ງໃສ .

6. ຂະບວນການກວດກາ (ແບບສຳຫຼວດ) ເພື່ອລະບຸຄວາມເປັນເຈົ້າຂອງ ແລະ ການນຳໃຊ້ທີ່ດິນ. ຫົວໜ້າໝູ່ບ້ານ ແລະ ຜູ້ຊ່ວຍ ຈະກວດສອບໃຫ້ໝັ້ນໃຈວ່າການສຶກສາທີ່ດິນຈະລວມເອົາ ການສຳຫຼວດສະເພາະ ເພື່ອຄວາມເຂົ້າໃຈປະເພດຂອງກຳມະສິດທີ່ດິນ. ການສຳຫຼວດສະເພາະ ຕ້ອງໄດ້ປະຕິບັດໃນແຕ່ລະຕອນດິນທີຖືກສະເໜີມອບເພື່ອຢືນຢັນ:

   a) ເຈົ້າຂອງທີ່ດິນ;

b) ຜູ້ນຳໃຊ້ທີ່ດິນ, ຫຼືພາກສ່ວນອື່ນ ທີ່ຖືຄອງດິນນັ້ນ (ບໍ່ວ່າຈະເປັນທາງກາຍະພາບ ຫຼື ເປັນຜູ້ຖືກຳມະສິດ ຊັບສິນ ຫຼື ເຮັດການຄ້າຂາຍ ທຳມາຫາກິນເຖິງດິນຕອນນັ້ນ);

c) ບໍ່ວ່າຈະເປັນຂໍ້ຮຽກຮ້ອງໃດໆກ່ຽວກັບກຳມະສິດການເປັນເຈົ້າຂອງ ຫຼື ການນຳໃຊ້;

d) ໂຄງສ້າງ ແລະ ຊັບສິນ ໃນທີ່ດິນ; ແລະ

e) ສິ່ງກີດຂວາງ ຕ່າງໆ ເທິງທີ່ດິນ.

7. ສິ່ງສຳຄັນຄື: (i) ກຳນົດສິທິ ທີ່ມີສິດໃນການໂອນ (ກຳມະສິດຖືຄອງທີ່ດິນ, ສິດນຳໃຊ້, ສິດຂ້າມຜ່ານ ແລະ ອື່ນໆ); ແລະ (ii) ກວດສອບ ສິດຂອງຜູ້ມອບໂອນ ວ່າເຂົາມີສິດໃນການມອບໂອນຫຼືບໍ່. ໃນຫຼາຍກໍລະນີ ໄດ້ມີການກວດກາຄວາມຖືກຕ້ອງຢ່າງລະອຽດ, ການຂັດແຍ່ງຍັງມີການເກີດຂຶ້ນໃນຂັ້ນຕອນສຸດທ້າຍ ໄດ້ມີພາກສ່ວນອື່ນເຂົ້າມາຮຽກຮ້ອງສິດດິນຕອນນັ້ນດ້ວຍເຫດຜົນທີ່ວ່າເຂົາກໍ່ມີສິດນຳໃຊ້ດິນເຊັ່ນດຽວກັນ. ໃນບາງກໍລະນີ -ແຕ່ບໍ່ແມ່ນທັງໝົດ- ຜູ້ມອບຈະມີເອກະສານສິດ ແຕ່ຫາກບໍ່ມະເອກະສານດັ່ງກ່າວ ສິດຄອບຄອງສາມາດກຳນົດຂຶ້ນໂດຍການໂອ້ລົມກັບນາຍບ້ານ,ຊຸມຊົນ ແລະ ເພື່ອນບ້ານ.

8. ການປຶກສາຫາລື ແລະ ການເປີດເຜີຍຂໍ້ມູນ. ການຕັດສິນໃນການມອບຕ້ອງເປັນໄປຕາມຄວາມເຂົ້າໃຈຢ່າງຄົບຖ້ວນກ່ຽວກັບໂຄງການຍ່ອຍ ແລະຜົນການເຫັນດີໃນການມອບດິນ. (ເຈົ້າຂອງ ແລະ ຜູ້ໃຊ້ທີ່ດິນ) ຈະຕ້ອງມີຂໍ້ມູນທີ່ຖືກຕ້ອງ ກ່ຽວກັບພື້ນທີ່ດິນ ທີ່ຈະໃຊ້ສຳລັບໂຄງການຍ່ອຍ, ໄລຍະເວລາຈະນຳໃຊ້ດິນນັ້ນ, ຜົນກະທົບຈາກໂຄງການ ເຖິງຄອບຄົວຜູ້ມອບດິນ. ມັນເປັນສິ່ງສຳຄັນທີ່ຕ້ອງມີການແຈ້ງເປັນລາຍລັກອັກສອນລ່ວງໜ້າ ເພື່ອລະບຸຕຳແໜ່ງ, ທີ່ຕັ້ງ ແລະເນື້ອທີ່ດິນ ທີ່ຕ້ອງນຳໃຊ້ໃນວັດຖຸປະສົງຂອງໂຄງການຍ່ອຍ.

9. ໃນກໍລະນີປະສົງຈະໃຫ້ບຸກຄົນທີ່ໄດ້ຮັບຜົນກະທົບຈາກການມອບທີ່ດິນແບບຖາວອນ ຫຼື ເປັນໄລຍະເວລາດິນ, ນີ້ຈະຕ້ອງມີການລະບຸຢ່າງຈະແຈ້ງ. ຄວນສັງເກດວ່າໃນຫຼາຍຫຼາຍຊຸມຊົນແນວຄິດໃນການມອບມີດິນເປັນເລື່ອງແປກ ແລະ ເຂົ້າໃຈໄດ້ຍາກ ແລະ ຕ້ອງມີການເບິ່ງແຍ່ງເພື່ອໃຫ້ແນ່ໃຈວ່າຄວາມໝາຍຂອງຂໍ້ນີ້ເຂົ້າໃຈໄດ້ທັງໝົດ. ນອກຈາກນີ້ຍັງມີຄວາມສຳຄັນທີ່ຈະຕ້ອງຕັດສິນໃຈວ່າຄວນຈະປຶກສາຫາລືໃຜຕື່ມອີກກ່ຽວກັບການມອບດິນ; ຕົວຢ່າງຄູ່ສົມລົດ, ຜູ້ອາວຸດໂສ.

10. ຄວນມີຂໍ້ຕົກລົງຢ່າງຈະແຈ້ງວ່າຝ່າຍໃດຈະຮັບຜິດຊອບຄ່າໃຊ້ຈ່າຍກັບທີ່ດິນທີ່ມອບໄປ. ເຊິ່ງລວມເຖິງຄ່າໃຊ້ຈ່າຍໃນການແທກ, ຄ່າເອກະສານ ແລະ ຄ່າທຳນຽມຕ່າງໆ, ພາສີມອບໂອນ, ຄ່າລົງທະບຽນ. ມັນຄວນລວມເຖິງຄ່າໃຊ້ຈ່າຍໃນການກວດແທກ/ໂອນກຳມະສິດທີ່ດິນທີ່ເຫຼືອຂອງຜູ້ຮັບໂອນ ແລະ ເອະສານທີ່ກ່ຽວຂ້ອງໃໝ່.

## ການສ້າງການຕົກລົງເຫັນດີ

1. ນາຍບ້ານ, ປະສານງານຮ່ວມກັບພະນັກງານໂຄງການຍ່ອຍ,ກວດກາຄວາມຍິນຍອມທີ່ໄດ້ຮັບແຈ້ງຫຼື ທາງເລືອກ ໂດຍບຸກຄົນ ທີ່ຕ້ອງການມອບດິນ ຫຼືຊັບສິນ. ໂດຍສະເພາະແມ່ນ, ສິ່ງເຫຼົ່ານີ້ ຈະໄດ້ຮັບການຢືນຢັນ ແລະ ບັນທຶກໄວ້ໃນບົດລາຍງານການມອບໃຫ້ໂດຍສະມັກໃຈ:

a) ດິນຕອນນີ້ຈະ ໃຊ້ໄວ້ເພື່ອຫຍັງ, ໂດຍຜູ້ໃດ ແລະ ດົນປານໃດ;

b) ພວກເຂົາຈະຖືກຫຼຸດສິດທິໃນການເປັນເຈົ້າຂອງ ຫຼື ສິດໃນການນຳໃຊ້, ແລະ ຄວາມໝາຍເຫຼົ່ານີ້ແມ່ນຫຍັງ;

c) ພວກເຂົາມີສິດປະຕິເສດການມອບດິນບໍ່;

d) ມີທາງເລືອກອື່ນໃນການນຳໃຊ້ທີ່ດິນຕອນນີ້ບໍ່;

e) ສິ່ງທີເຂົາເຈົ້າຕ້ອງເຮັດເພື່ອມອບທີ່ດິນ (ຕົວຢ່າງ: ເອກະສານຍິນຍອມ, ເອກະສານມອບຮັບ, ຄ່າທຳນຽມ)

f) ຜົນກະທົບເຖິງຄອບຄົບຂອງເຂົາຈາກການມອບ, ແລະ ພວກເຂົາຕ້ອງເຮັດແນວໃດ ຖ້າເຂົາ (ຫຼື ຄອບຄົວ ຂອງເຂົາເຈົ້າ) ຕ້ອງການດິນນັ້ນຄືນ;

g) ເງື່ອນໄຂທັງໝົດແມ່ນລະບຸໃວ້ໃນວັກທີສອງຂ້າງເທິງ.

2. ສິດໃນການປະຕິເສດຕ້ອງເປັນສິດອັນຊອບທຳ,ບໍ່ມີເງື່ອນໄຂ, ແລະ ຜູ້ມອບໂອນຕ້ອງສາມາດໃຊ້ສິດໃນຊຸມຊົນທ້ອງຖິ່ນ ແລະ ທາງບໍລິຫານຂັ້ນບ້ານ. ດ້ວຍເຫດຜົນນີ້, ມັນຈິງຈຳເປັນທີ່ຕ້ອງແນ່ໃຈວ່າການຕັດສິນໃຈໃນການມອບໂດຍບໍ່ມີການບີບບັງຄັບໃດໆ, ແຮງກົດດັນ ຈາກພາກສ່ວນຊຸມຊົນ ຫຼືອຳນາດບໍລິຫານບ້ານ. ສຳລັບທີ່ດິນສ່ວນລວມ, ການມອບຕ້ອງ ຂຶ້ນຢູ່ກັບຄວາມຍິນຍອມທີ່ໄດ້ຮັບແຈ້ງທີໃຊ້ຫຼືຄອບຄອງທີດິນລວມນັ້ນ.

3. ເອກະສານປະກອບທີເໝາະສົມ ໃນລະຫວ່າງຂະບວນການ ມອບດິນແບບສະມັກໃຈ ເພື່ອການລົງທຶນໃນໂຄງການຍ່ອຍ, ສິ່ງສຳຄັນຄືຕ້ອງໄຈ້ແຍກລະຫວ່າງ: (a) ຂໍ້ຕົກລົງໃນການມອບທີ່ດິນ ແລະ (b) ເອະສານທີ່ດຳເນີນການ ແລະ ເປັນຫຼັກຖານ ໃນການໂອນທີ່ດິນຕາມກົດໝາຍ. ເຖິງແມ່ນວ່າສິ່ງສຳຄັນຄືຕ້ອງມີຫຼັກຖານສະແດງເຈດຈຳນົງ ແລະ ຂໍ້ຕົກລົງ ໃນການບໍລິຈາກທີ່ດິນ ແຕ່ມີຄວາມສຳຄັນເທົ່າທຽມກັນເພື່ອ ໃຫ້ແນ່ໃຈວ່າ ໃນກໍລະນີທີ່ຈຳເປັນ ແລະ ເໝາະສົມວ່າ ທີ່ດິນ ໄດ້ຮັບການໂອນຕາມກົດໝາຍແລ້ວ. ເຖິງແມ່ນວ່າ ຂັ້ນຕອນການກ່ຽວກັບການໂອນທີ່ດິນຕາມກົດໝາຍນັ້ນມີຄວາມຊັບຊ້ອນ ແລະໃຊ້ເວລາດົນ ແຕ່ກໍ່ຕ້ອງໄດ້ລະບຸໃວ້.[ໃນສະຖານະການສະເພາະເຊັ່ນ ກໍລະນີທີ່ດິນ ຖືກມອບໂອນໄປໃຫ້ຊຸມຊົນອາດບໍ່ຈຳເປັນໂອນທີ່ດິນຕາມກົດໝາຍ ເຊິ່ງຈະສົ່ງຜົນກະທົບຕໍ່ຄວາມຍືນຍົງຂອງໂຄງສ້າງພື້ນຖານ ແລະ ບໍລິການ ແລະ ອາດສົ່ງຜົນກະທົບທາງລົບຕໍ່ສາຍພົວພັນລະຫວ່າງຊຸ່ມຊົນ] (ເອກະສານຊ້ອນທ້າຍ A3)

4. ນາຍບ້ານ ແລະ  ພະນັກງານໂຄງການຍ່ອຍຄວນ:

a) ກຳນົດເອກະສານທີ່ເໝາະສົມ ລວມເຖິງຂໍ້ຕົກລົງໃນການໂອນ ແລະ ເອກະສານທາງກົດໝາຍທີ່ຕ້ອງໃຊ້;

b) ຕ້ອງໝັ້ນໃຈໃນຂໍ້ຕົກລົງ:

- ມີການປຶກສາຫາລືກັນ;
- ກຳນົດເງື່ອນໄຂໃນການມອບໂອນ;
- ຢືນຢັນການຕັດສິນໃຈມອບໂອນເຮັດໄດ້ຢ່າງເສລີ ແລະ ບໍ່ໄດ້ຢູ່ພາຍໃຕ້ ການບັງຄັບ ຂົ່ມຂູ່, ຄວາມກົດດັນໃດໃດ ທັງນັ້ນ;
- ຕິດຄັດແຜນທີ່ລະບຸ ທີ່ຕັ້ງ ຂອງ ຕອນດິນ ທີ່ຈະມອບໂອນ (ຂອບເຂດ, ຈຸດພິກັດ);

- ກໍານົດວ່າໃຜຈະເປັນຄົນຮັບຜິດຊອບຄ່າໃຊ້ຈ່າຍໃນການມອບໂອນ (ເຊັ່ນຄ່າທໍານຽມ ດ້ານເອກະສານຮັບຮອງ, ພາສີ, ການອອກໜັງສື) ແລະ ເອກະສານ ສິດ ຄອບຄອງທີ່ດິນທີ່ເຫຼືອ;

c) ກວດສອບໃຫ້ແນ່ໃຈວ່າ ທຸກຝ່າຍທີ່ຈໍາເປັນລົງຊື່ໃນເອກະສານລວມເຖິງການໄດ້ຮັບຄວາມຍິນຍອມຈາກຄູ່ຜົວເມຍ ແລະ ລູກທີ່ມີອາຍຸບັນລຸນິຕິພາວະ;

d) ກວດສອບໃຫ້ແນ່ໃຈວ່າມີການຈົດທະບຽນ ຫຼື ບັນທຶກ ການ ມອບໂອນ ແລະ ຫົວຂໍ້ ໃນການລົງທະບຽນ ຫຼື ບັນທຶກ; ແລະ

e) ກວດສອບໃຫ້ແນ່ໃຈວ່າ ທີ່ດິນທີ່ເຫຼືອຢູ່ຫຼັງຈາກການມອບ ແມ່ນມີໃບຕາດອງກໍາມະສິດສິດທີ່ດິນຢ່າງຖືກຕ້ອງຄົບຖ້ວນ.

5. ເປັນສິ່ງສໍາຄັນໃນການຮັກສາ ບັນທຶກຂອງຂະບວນການທີ່ໄດ້ຮັບການປະຕິບັດຕາມ ເອະສານດັ່ງກ່າວອາດລວມເຖິງສິ່ງຕໍ່ໄປນີ້:

a) ຄໍາບອກເລົ່າລະບຸຕໍ່ແໜ່ງທີ່ຕັ້ງ ແລະ ປະລິມານ ຂອງເນື້ອທີ່ດິນທີ່ຂໍ ແລະໃຊ້ຕາມຈຸດປະສົງຂອງໂຄງການ, ຈະມີການບັນທຶກ ເວລາ ແລະ ສະຖານທີ່:

b) ບັນທຶກການປຶກສາຫາລື ທີ່ຈັດຂຶ້ນ ແລະ ສິ່ງທີ່ໄດ້ລະບຸໃວ້;

c) ສໍາເນົາບົດຄວາມ ລະອຽດ ທີ່ໃດ້ຈັດຕັ້ງປະຕິບັດ;

d) ສໍາເນົາບົດຄວາມຖະແຫຼງການທີ່ເປັນທາງການຂອງການມອບ, ການສ້າງຄວາມສະມັກໃຈ ຢ່າງຈະແຈ້ງ ຕາມທີ່ໄດ້ອະທິບາຍມາຂ້າງເທິງ, ແລະ ລົງລາຍຊື່ ເຈົ້າຂອງແຕ່ລະຄົນ ຫຼື ຜູ້ໃຊ້ທີ່ກ່ຽວຂ້ອງ;

e) ສໍາເນົາເອກະສານທັງໝົດ, ການລົງທະບຽນ ຫຼືບັນທຶກຫຼັກຖານການມອບໂອນທີ່ດິນ ຕາມກົດໝາຍ; ແລະ

f) ແຜນທີ່, ສະແດງເນື້ອທີ່ດິນ ແຕ່ລະຕອນ.

ໜ່ວຍງານບໍລິຫານໂຄງການຄວນເກັບຮັກສາ ບົດບັນທຶກພ້ອມເອກະສານປະກອບການມອບທີ່ດິນແຕ່ລະຕອນ. ເອກະສານດັ່ງກ່າວຈະຕ້ອງພ້ອມສໍາຫຼັບການທົບທວນຂອງທະນາຄານໂລກ ແລະ ສໍາລັບການທົບທວນໃນເລື່ອງຄວາມຂັດຂ້ອງໃຈທີ່ອາດເກີດຂຶ້ນ.

**ການແກ້ໄຂຄໍາຮ້ອງຮຽນ.**

ໂຄງການຍ່ອຍລະບຸໃວ້ວິທີການທີ່ຜູ້ມອບ (ແລະອາດເປັນບຸກຄົນທີ່ມີການໃຊ້ ຫຼື ຄອບຄອງທີ່ດິນທີ່ບໍ່ໄດ້ຮັບການຍອມຮັບໃນການມອບໂອນທີ່ດິນ) ອາດເພີ່ມຄວາມລະວັງແລະ ມາດຕະການ ເພື່ອໃຫ້ແນ່ໃຈວ່າການພິຈາລະນາ ແລະ ການຕອບສະໜອງຕໍ່ຂໍ້ຂັດຂ້ອງໃຈໃດ້ຢ່າງທັນການ. ຂະບວນການແກ້ໄຂຄໍາຮ້ອງຮຽນໃດ້ແກ່ການມີສ່ວນຮ່ວມຂອງຜູ້ກວດສອບ ທີ່ບໍ່ໄດ້ມີບໍ່ໄດ້ກ່ຽວຂ້ອງໂດຍກົງກັບໜ່ວຍງານບໍລິຫານໂຄງການ. ຂະບວນການຮ້ອງຮຽນໄປຈົນເຖິງເວລາໄດ້ຮັບການແກ້ໄຂຈະຕ້ອງບໍ່ມີຄ່າໃຊ້ຈ່າຍໃດໆ, ຈະບໍ່ມີການກີດກັ້ນການເຂົ້າມາມີສ່ວນຮ່ວມໃນຂະບວນການແກ້ໄຂຄໍາຮ້ອງຮຽນ ພາຍໃຕ້ກົດໝາຍຂອງປະເທດ.

# ເອກະສານຊ້ອນທ້າຍ A3

# ແບບຟອມການມອບດິນສະມັກໃຈ

**ແບບຟອມການມອບດິນສະມັກໃຈ**

| | |
|---|---|
| ແຂວງ/ ເຂດ: | |
| ເມືອງ: | |
| ບ້ານ: | |
| ໂຄງການຍ່ອຍ ID: | |

| | | |
|---|---|---|
| ຊື່ເຈົ້າຂອງດິນ: | ID ເລກລະຫັດ: | ຜົນປະໂຫຍດຈາກໂຄງການ: ແມ່ນ/ບໍ່ແມ່ນ |
| ເພດ: | ອາຍຸ: | ອາຊີບ: |
| ທີ່ຢູ່: | | |

| | | | | |
|---|---|---|---|---|
| ອະທິບາຍລັກສະນະດິນທີ່ຈະຖືກນຳໃຊ້ເພື່ອໂຄງການ: | ພື້ນທີ່ຖືກກະທົບ: | ເນື້ອທີ່ທັງໝົດ: | ອັດຕາສ່ວນດິນຖືກກະທົບທຽບກັບພື້ນທີ່ທັງໝົດ: | ລະຫັດແຜນທີ່, ຖ້າມີ: |

| | | |
|---|---|---|
| ອະທິບາຍຜົນລະປູກແຕ່ລະປີຢູ່ດິນ ປະຈຸບັນ ແລະ ຖືກຜົນກະທົບຈາກໂຄງການ: | | |
| | ລາຍລະອຽດ | ຈຳນວນ |
| ຕົ້ນໄມ້ທີ່ຈະຖືກທຳລາຍ | | |
| ໄມ້ກິນໝາກ | | |
| ຕົ້ນໄມ້ເສດຖະກິດອື່ນໆ ຫຼືໃຊ້ສຳຫຼັບປຸກບ້ານ | | |
| ປ່າມີຕົ້ນໄມ້ໃຫຍ່ | | |
| ອື່ນໆ | | |
| ອະທິບາຍຊັບສິນອື່ນໆ ທີ່ຈະສູນເສຍຫຼືຕ້ອງຍ້າຍເພື່ອຈັດຕັ້ງປະຕິບັດໂຄງການ: | | |
| ມູນຄ່າຊັບສິນທີ່ມອບໃຫ້: | | |

1. ໂດຍການລົງລາຍຊື່ຫຼືຈ້ຳນິ້ວມືລົງໃນຟອມນີ້, ຜູ້ນຳໃຊ້ດິນ ຫຼື ເຈົ້າຂອງທີ່ດິນ ເຫັນດີ ມອບຊັບສິນໃຫ້ໂຄງການຍ່ອຍ. ການມອບແມ່ນສະມັກໃຈ. ຖ້າຜູ້ນຳໃຊ້ດິນ ຫຼື ເຈົ້າຂອງທີ່ດິນ ບໍ່ຕ້ອງການມອບຊັບສິນຂອງເຂົາໃຫ້ໂຄງການ, ເຂົາຄວນຈະປະຕິເສດ ການລົງລາຍຊື່ ຫຼືຈ້ຳນິ້ວມື, ແລະ ໃຫ້ຖາມການທົດແທນຄ່າເສຍຫາຍ.

| | |
|---|---|
| ວັນທີ: .............................. | ວັນທີ: .............................. |
| ລາຍເຊັນຂອງຕົວແທນ PMOຂັ້ນເມືອງ | ລາຍເຊັນຂອງຜູ້ເສຍຫາຍ<br>(ສໍາລັບຄົວເຮືອນທີ່ຖືກກະທົບ, ຕ້ອງມີລາຍເຊັນ ຈາກທັງຜູ້ເປັນຜົວ ແລະ ຜູ້ເປັນເມຍ) |

# ເອກະສານຊ້ອນທ້າຍ A4

## ບົດບັນທຶກກອງປະຊຸມປຶກສາຫາລື ຢູ່ທີ່ແຂວງຫຼວງພະບາງ ແລະ ແຂວງ ບໍລິຄໍາໄຊ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ
ພະແນກ ໂຍທາທິການ ແລະ ຂົນສົ່ງ ເລກທີ........................../ພຍທຂ-ຂຫພບ

ນະຄອນຫຼວງພະບາງ,ວັນທີ...........................

**ບົດບັນທຶກ**

**ກອງປະຊຸມປຶກສາຫາລືກັບ ບັນດາພະແນກການທີ່ກ່ຽວຂ້ອງ, ບັນດາຫ້ອງການທີ່ກ່ຽວຂ້ອງ ແລະ ປະຊາຊົນທີ່ຢູ່ຂອງໂຄງການຄຸ້ມຄອງຄວາມສ່ຽງ ໄພພິບັດ ທີ່ແຂວງ ຫລວງພະບາງ ລະຫວ່າງວັນທີ 15-16/08/2019**

- ອີງຕາມ ທິດຊີ້ນຳຂອງທ່ານລັດຖະມົນຕີ ກະຊວງ ໂຍທາທິການ ແລະ ຂົນສົ່ງ 27/06/2018.
- ອີງຕາມ ແຈ້ງການຂອງຫ້ອງການກະຊວງ ໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 14334/ຫກ.ສລ, 14335/ຫກ.ສລ, ແລະ 14338/ຫກ.ສລ ວັນທີ 29/06/2018.

1. **ຄວາມເປັນມາຂອງໂຄງການ**

ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນ້ຳຖ້ວມ ແມ່ນໄດ້ຮັບເງິນເພີ້ມຈາກທະນາຄານໂລກ ເຊິ່ງເມື່ອກ່ອນແມ່ນໄດ້ເຮັດການສຶກສາ ຢູ່ ເມືອງໄຊ ແຂວງ ອຸດົມໄຊ ແລະ ຕົກມາຮອດຕົ້ນປີ 2019ທາງທະນາຄານໂລກໄດ້ໃຫ້ເພີ້ມເຕີມ ແລະ ຂະຫຍາຍໂຄງການໄປສອງແຂວງເພີ້ມ ຄື ແຂວງ ຫລວງພະບາງ, ແຂວງ ບໍລິຄຳໄຊ ແລະ ເພີ້ມເຕີມໃຫ້ແຂວງອຸດົມໄຊ ໃນບ້ວງທັງຫມົດ 25ລ້ານໂດລາສະຫະລັດ. ບ້ວງເງິນເພີ້ມດັ່ງກ່າວນີ້ ແມ່ນສຸມໃສ່ໃນການ ກໍ່ສ້າງຕ້ານເຈື່ອນ ແລະ ປະຕູກັ້ນນ້ຳ ເຊິ່ງສາມາດປິດເປີດໄດ້ ໃນກໍລະນີນ້ຳຖ້ວມຕົວເມືອງ ແລະ ສາມາດດູດນ້ຳອອກໄດ້.

ນອກນັ້ນ ໂຄງການກໍມີງົບປະມານຈຳນວນຫນຶ່ງເພື່ອ ປັບປຸງສວນສາທາລະນະ ພາຍໃນເມືອງທີ່ກ່ຽວຂ້ອງກັບໂຄງການ.

2. **ຈຸດປະສົງຂອງການປຶກສາຫາລື**

ກອງປະຊຸມປຶກສາຫາລືໃນຄັ້ງນີ້ ແມ່ນການສະເຫນີຂໍ້ມູນຂ່າວສານຈ□ານວນຫນຶ່ງໃຫ້ບັນດາພະແນກ, ຫ້ອງການ ແລະ ບ້ານທີ່ຢູ່ຂົງເຂດ ຂອງໂຄງການ ໃຫ້ຮັບຮູ້ຂໍ້ມູນຂ່າວຂອງໂຄງການ , ຊອກຮູ້ຄວາມຄິດ ແລະ ຄວາມເຈົ້າໃຈຂອງເຂົາເຈົ້າຕໍ່ກັບໂຄງການ ແລະ ກໍ່ມີການສ□າພາດເພີ້ມເຕີມບັນດາບ້ານ ທີ່ຢູ່ໃນຂົງເຂດຂອງໂຄງການ ໃນນັ້ນ ເລັ່ງໃສ່ສະຫະພັນແມ່ຍິງເປັນຫລັກ.

## 3. ວິທີຈັດຕັ້ງປະຕິບັດ

ພະແນກ ຄົ້ນຄວ້າສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ ຂອງ ສະຖາບັນຄົ້ນຄວ້າ ໂຍທາທິການ ແລະ ຂົນສົ່ງ ຮ່ວມກັບ ກົມ ທາງນໍ້າ ຂື້ນສະເຫນີ ຄວາມເປັນມາຂອງໂຄງການ, ສະຖານທີ່ຕັ້ງຂອງໂຄງການ ດ້ວຍຮູບພາບ ແລະ ແຜນທີ່, ພ້ອມນັ້ນ ກໍສະເຫນີຫນ້າວຽກທີ່ຕ້ອງຈັດຕັ້ງປະຕິບັດ ເຊັ່ນ: ກອບຫນ້າວຽກ ທາງດ້ານສິ່ງແວດລ້ອມ ແລະ ສັງຄົມ, ນະໂຍບາຍກ່ຽວກັບການຍົກຍ້າຍ ແລະ ຊົດເຊີຍ, ກອບຫນ້າວຽກກ່ຽວກັບການຄຸ້ມຄອງຊົນເຜົ່າ ໃນກໍລະນີຖືກກະທົບຮ້າຍແຮງ.

ຫລັງຈາກນັ້ນ ກໍໄດ້ສະເຫນີຄ□າຖາມທີ່ກ່ຽວຂ້ອງກັບວຽກ ສິ່ງແວດລ້ອມ ແລະ ສັງຄົມໃຫ້ຜູ້ທີ່ເຂົ້າຮ່ວມມີຄໍາຄິດຄໍາເຫັນ ແລະ ສະເຫນີແຜນໃນການຈັດຕັ້ງປະຕິບັດຮ່ວມກັນໃນຕໍ່ຫນ້າ. ລາຍລະອຽດຜູ້ເຂົ້າຮ່ວມ (ໃບຊ້ອນທ້າຍ 1 )

## 4. ເນື້ອໃນຂອງການປຶກສາຫາລື

- ປັບປຸງນະໂຍບາຍວ່າດ້ວຍການຍົກຍ້າຍ ແລະ ຊົດເຊີຍ
  + ສໍາຫລວດເກັບກໍາຂໍ້ມູນຜູ້ທີ່ຖືກຜົນກະທົບຈາກໂຄງການ
  + ສ້າງແຜນຍົກຍ້າຍ ແລະ ຊົດເຊີຍ ພ້ອມງົບປະມານ:
    - ສ້າງລາຄາຫົວຫນ່ວຍ
    - ສ້າງມູນຄ່າທົດແທນແຕ່ລະ ຄອບຄົວ
    - ຂັ້ນຕອນ ແລະ ວິທີ ຊົດເຊີຍ,
    - ການສະເຫນີ ແລະ ການແກ້ໄຂຄໍາຮ້ອງທຸກ
    - ການສ້າງຕັ້ງຄະນະກໍາມະການ ຂັ້ນບ້ານ: ເມືອງ, ແຂວງ ແລະ ສູນກາງ
- ປັບປຸງກອບນະໂຍບາຍວ່າດ້ວຍຊົນເຜົ່າ ໃນກໍລະນີຖ້າກະທົບຈາກໂຄງການ (ສ້າງແຜນຟື້ນຟູ ແລະ ປັບປຸງຊີວິດການເປັນຢູ່ຂອງຊົນເຜົ່າ)ກໍລະນີ ຖືກຜົນກະທົບ ເຮັດໃຫ້ມີການຍົກຍ້າຍ, ສູນເສຍລາຍໄດ້ ແລະ ແຕະຕ້ອງຜົນປະໂຫຍດຫນັກຫນ່ວງ

-ເສຍຄ່າຊົດເຊີຍ

-ຟື້ນຟູຊີວິດການເປັນຢູ່

-ສ້າງອາຊີບ ໃຫ້ສາມາດລ້ຽງກຸ້ມຕົນເອງ

-ເສຍຄ່າປ່ອຍການຕ່າງໆ ຖ້າຫາກຖືກ ຕໍ່ຄອບຄົວທີ່ອ່ອນແອ

- ບັນດາທ່ານ ຮູ້ໂຄງການດັ່ງກ່າວນີ້ ມາກ່ອນບໍ? ແລະະ ຮູ້ມາຈາກໃສ
- ຜ່ານມາທາງສະຫະພັນແມ່ຍິງມີສ່ວນຮ່ວມໃນໂຄງການໃດບໍ່? ໂຄງການປະເພດໃດ?
- ສະຫະພັນແມ່ຍິງມີຈຸດປະສົງຢາກມີສ່ວນຮ່ວມໃນໂຄງການນີ້ບໍ່? ມີຫຍັງແດ່?
- ເລື້ອງຜົນກະທົບຕໍ່ສິ່ງແວດລ້ອມ ທ່ານກັງວົນບັນຫາໃດແດ່? ໂຄງການນີ້ ຕ້ອງໄດ້ສຶກສາບັນຫາໃດແດ່ ເປັນຫລັກ?
- ເລື້ອງຜົນກະທົບຕໍ່ຊຸມຊົນ ຫລື ບ່ອນທໍາມາຫາກິນ ທ່ານກັງວົນເລື້ອງໃດເປັນຕົ້ນຕໍ?
- ບັນຫາຊົນເຜົ່າເດ ທ່ານຄິດວ່າມີຜົນກະທົບຫຍັງບໍເປັນຫລັກ? ທ່ານມີວິທີແກ້ໄຂແນວໃດບໍ່?

- ການຮ້ອງທຸກ ຮ້ອງຟ້ອງ ບັນດາທ່ານບໍ່ເຂົ້າໃຈຫຍັງແດ່?
- ບັນຫາອື່ນໆ ທີ່ທ່ານສົນໃຈອີກ ມີຫຍັງແດ່?

## 5. ເນື້ອໃນທີ່ໄດ້ຮັບຈາກການປຶກສາຫາລືຂອງຜູ້ເຂົ້າຮ່ວມ

### 5.1. ຄໍາເຫັນຂອງຜູ້ເຂົ້າຮ່ວມຈາກບັນດາພະແນກການ ແລະ ບັນດາຫ້ອງການຂອງເມືອງທີ່ກ່ຽວຂ້ອງ

- ຕາງໜ້າພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໃຫ້ຄໍາເຫັນວ່າ ດິນປຸກສ້າງລຽບຕາມແຄມນໍ້າ ແມ່ນໄດ້ມີການອອກໃບຕາດິນຫ່າງຈາກແຄມນໍ້າ 15 ແມັດ ແຕ່ດິນລຸ່ມນໍ້າເຊິ່ງຕິດກັບສາຍນໍ້າແມ່ນຂຶ້ນກັບການຄຸ້ມຄອງຂອງເມືອງ ໂດຍເມືອງເປັນຜູ້ເກັບພາສີ ທີ່ດິນ ແຕ່ບໍ່ມີໃບຕາດິນ ມີແຕ່ເອກະສານນໍາໃຊ້ ແລະ ຜ່ານທາງແຂວງໄດ້ເຮັດແຈ້ງການໃຫ້ຜູ້ທີ່ໃຊ້ດິນແຄມນໍ້າ ແມ່ນບໍ່ມີການຊົດເຊີຍ ຖ້າຫາກປຸກສ້າງສິ່ງໃດໜຶ່ງ.
- ບັນດາຊົນເຜົ່າທີ່ອາໄສຢູ່ລຽບຕາມໂຄງການແມ່ນບໍ່ມີ ຊົນເຜົ່າອື່ນ ສ່ວນໃຫຍ່ແມ່ນເຜົ່າລາວລຸ່ມ.
- ປະທານກອງປະຊຸມ ສະເໜີໃຫ້ແຈ້ງຜົນຄາດຄະເນທີ່ຈະໄດ້ຮັບຈາກໂຄງການຫລັງຈາກກໍ່ສ້າງສໍາເລັດແລ້ວມີດ້ານດີແນວໃດ ເພື່ອຈະໄດ້ເຮັດການປຶກສາຫາລືກັບບ້ານ ທີ່ກ່ຽວຂ້ອງກັບໂຄງການ.
- ຕາງໜ້າ ຫ້ອງການທ່ອງທ່ຽວແຂວງ ໃຫ້ຄໍາເຫັນວ່າ ການເກັບກໍາຂໍ້ມູນຜູ້ທີ່ຖືກກະທົບຕ້ອງໄດ້ເກັບກໍາຢ່າງລະອຽດ ຫລັງຈາກນັ້ນ ຕ້ອງສະຫລຸບປະເພດຜົນກະທົບ ແລະ ເຮັດບົດບັນທຶກຮ່ວມກັບເຈົ້າຂອງຊັບສິນ ໂດຍມີພະຍານທີ່ກ່ຽວຂ້ອງຮັບຮູ້ ແລະ ເຊັນຮ່ວມກັນ ເພື່ອບໍ່ໃຫ້ມີຂໍ້ຂັດແຍ່ງໃນຕໍ່ໜ້າ.
- ສະເໜີໃຫ້ໂຄງການ ກໍ່ສ້າງຕ້ານເຈື່ອນຕາມນໍ້າຄານເຮັດເສັ້ນທາງຢູ່ຕາມແລວຂອງຕ້ານເຈື່ອນເພື່ອເຮັດໃຫ້ນັກທ່ອງທ່ຽວສາມາດຍ່າງ ທ່ຽວຊົມວິວຕາມແມ່ນໍ້າຄານ.
- ຫ້ອງການຄຸ້ມຄອງມໍລະດົກ ໃຫ້ຄໍາເຫັນວ່າ ໂຄງການຕັ້ງຢູ່ເຂດຄວບຄຸມມໍລະດົກ ດັ່ງນັ້ນ ຈຶ່ງຮຽກຮ້ອງໃຫ້ມີການສຶກສາຜົນກະທົບ ຕໍ່ມໍລະດົກວ່າມີຫຍັງຈະເກີດຫລັງຈາກສໍາເລັດການກໍ່ສ້າງ ແລະ ສໍາຫລວດວ່າລຽບຕາມແຄມນໍ້າ ມີມໍລະດົກອັນໃດແດ່ທີ່ຈະຖືກກະທົບຈາກໂຄງການ.
- ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການຄວນແຍກອອກຈາກການປະເມີນຜົນກະທົບຕໍ່ມໍລະດົກ.
- ຜົນກະທົບຕໍ່ກັບວິຖີການດໍາລົງຊີວິດຂອງປະຊາຊົນລຽບຕາມນໍ້າຄານກໍ່ຄວນໄດ້ສຶກສາຫາກວ່າຖືກກະທົບ ແລະ ພວກເຂົາບໍ່ສາມາດສືບຕໍ່ອາຊີບດັ່ງກ່າວຕໍ່ໄປໄດ້.
- ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນີ້ ແມ່ນມີຄວາມຈໍາເປັນ ແລະ ຕ້ອງການຫລາຍ ເພື່ອຮັກສາຕົວເມືອງມໍລະດົກໃນອານາຄົດ ແຕ່ຢາກໃຫ້ມີການແຕ່ງຕັ້ງຄະນະກໍາມະການປະສານງານຢູ່ແຕ່ລະຂັ້ນ ເພື່ອຄວາມສະດວກໃນການເຮັດວຽກຮ່ວມກັນ ຢູ່ແຕ່ລະໄລຍະ ຂອງໂຄງການ.

- ລາຄາຫົວໜ່ວຍໃນການຊົດເຊີຍຄວນເປັນລາຄາພາຍໃນທ້ອງຕະຫລາດ ໃນເວລາດັ່ງກ່າວ ບໍ່ໃຫ້ກາຍ ຫົກເດືອນກ່ອນຊົດເຊີຍ.

- ສະຫະພັນແມ່ຍິງກັງວົນວ່າ ການປຶກສາຫາລື ແລະ ຊົດເຊີຍອາດມີອຸປະສັກ ເພາະວ່າເວລາເຮັດກອງປະຊຸມປຶກສາຫາລືຂັ້ນບ້ານ ອາດມີຜູ້ເຂົ້າຮ່ວມບໍ່ຄົບ ເຮັດໃຫ້ບໍ່ມີຄວາມເຂົ້າໃຈ ແລະ ແກ່ຍາວໂຄງການ, ການຈັດກອງປະຊຸມປຶກສາຫາລືໃນຄັ້ງນີ້ ແມ່ນເຫັນດີ ແລະ ມີຫມາຍຄວາມສຳຄັນຫລາຍສຳລັບບັນດາພະແນກ ແລະ ຫ້ອງການທີ່ໄດ້ເຂົ້າຮ່ວມ ສະຫະແມ່ຍິງແຂວງກໍ່ໄດ້ສະ ເໜີວ່າ: ຜ່ານມາແມ່ນໄດ້ເຂົ້າຮ່ວມການເຜີຍແຜ່ກ່ຽວກັບໂຄງການນີ້ມາ ຄ່າວໆແລ້ວສະເໜີໃນການປະຊາສຳພັນໃຫ້ພໍ່ແມ່ປະຊາຊົນເຂົ້າໃຈຕື່ມກ່ຽວກັບໂຄງການໂດຍການມີສ່ວນຮ່ວມຂອງສະຫະພັນແມ່ຍິງແຂວງ, ເມືອງ ແລະ ບ້ານເພື່ອການສຶກສາອົບຮົມແນວຄິດໃຫ້ມີ ການເປີດກວ້າງຫຼາຍຂື້ນ.

- ການວາງແຜນໂຄງການຄວນມີຮູບພາບ ຫລື ແບບສະແດງຢູ່ບໍລິເວນຂອງໂຄງການ ເພື່ອເຮັດໃຫ້ປະຊາຊົນ ແລະ ຜູ້ອື່ນມີຄວາມເຂົ້າໃຈ ແລະ ສົນໃຈນຳ
- ຕາງໜ້າ ຈາກບໍລິສັດກໍ່ສ້າງຕາຝັ່ງເຈື່ອນປະຈຸບັນຢູບ້ານ ຄືລີໃຫ້ຄຳເຫັນວ່າ: ຄວາມຫຍຸ້ງຍາກໃນເວລາກໍ່ສ້າງມີ ຄື: 1. ການສັນຈອນເພື່ອຂົນວັດສະດຸເຂົ້າຫາເຂດຂອງໂຄງການແມ່ນຫຍຸ້ງຍາກເພາະເປັນລົດບັນທຸກຫນັກ ເພາະເມືອງ ໃຫ້ນຳໃຊ້ສະເພາະແຕ່ລົດບັນທຸກເບົາເທົ່ານັ້ນ, 2. ບໍ່ສາມາດເຮັດວຽກກາງຄືນໄດ້ ເພາະມີນັກທ້ອງທ່ຽວຫລາຍ ອັນເປັນອຸປະສັກ ຢ້ານເກີດອຸປະຕິເຫດ. ສ່ວນຕົ້ນໄມ້, ພືນລະປູກ ແລະ ຮ່ອມທາງເຂົ້າເຮືອນຂອງປະຊາຊົນ ທີ່ຖືກກະທົບຈາກໂຄງການແມ່ນສາມາດແກ້ໄຂ ແລະ ປະຊາຊົນກໍ່ບໍ່ຂັດຂ້ອງຫຍັງ, 3. ໃນເວລາອອກແບບແລ້ວບໍ່ສາມາດເຮັດຕາມແບບໄດ້ເນື່ອງຈາກຖານຂອງການອອກແບບແມ່ນເລິກ ແຕ່ການກໍ່ສ້າງຕົວຈິງບໍ່ສາມາດຂຸດໄດ້ເພາະນໍ້າເລິກ.

## 5.2. ຄຳເຫັນຂອງຜູ້ເຂົ້າຮ່ວມຈາກບັນດາບ້ານທີ່ກ່ຽວຂ້ອງກັບໂຄງການ

- **ຕາງໜ້າບ້ານອາໄພ:** ແມ່ນເຫັນດີ ດິນທີ່ຖືກກະທົບສ່ວນໃຫຍ່ ແມ່ນດິນແຄມນໍ້າ ເຊິ່ງເຮັດສວນເປັນບາງຄັ້ງຄາວ. ສະເຫນີໃຫ້ມີການອອກແບບ ແລະ ຄຸ້ມຄອງການກໍ່ສ້າງຢ່າງເຄັ່ງຄັດ.
- **ຕາງໜ້າບ້ານ ໜື່ນນາ**: ສະເຫນີໃຫ້ມີການກໍ່ສ້າງ ຈາກບ້ານອາໄພຈົນເຖິງບ້ານໜື່ນນາ(ສົ້ນຂົວເກົ່າ) ຢູ່ ເພາະວ່າ ເບື້ອງ ບ້ານ ພັນຫລວງ ແມ່ນໄດ້ສຳເລັດການກໍ່ສ້າງແລ້ວ ແລະ ສາຍນໍ້າກະທົບໃສ່ເບື້ອງກົງກັນຂ້າມ (ບ້ານ ໜື່ນນາ).
- **ຕາງໜ້າ ບ້ານ ພັນຫລວງ:** ເຫັນດີນຳບ້ານອື່ນທີ່ສະເຫນີຜ່ານມາ ແຕ່ຢາກສະເຫນີໃຫ້ມີການປັກຫລັກຫມາຍຂອບເຂດຂອງໂຄງການ ເພື່ອຈະໄດ້ກະກຽມ ແລະ ເກັບກຳຂໍ້ມູນທີ່ດິນ ລຽບແຄມນໍ້າກະກຽມໄວ້ໃຫ້ໂຄງການ. ສະເຫນີໃຫ້ເຮັດຕ້ານເຈື່ອນເພີ້ມເຕີມຢູ່ເຂດຕໍ່ຫນ້າວັດ ໂພນສະ ອາດ ຫາປາກຫ້ວຍກັ້ງ ຕື່ມເພາະມີການເຊາະເຈື່ອນຫລາຍໃນໄລຍະຜ່ານມາ.

- **ຕາງໜ້າບ້ານຊຽງທອງ:** ສະເໜີ ຢາກໃຫ້ມີການກໍ່ສ້າງຈາກປາກຄານລົງຫາ ຂັ້ນໃດວັດຊຽງທອງ(ເບື້ອງແຄມນ້ຳຂອງ) ເພາະເຂດດັ່ງກ່າວມີການເຊາະເຈື່ອນຫຼາຍ.
- **ຕາງໜ້າ ບ້ານ ວັດໜອງ (ບ່ອນເຮັດປະຕູປິດເປີດນ້ຳ):** ປະຊາຊົນແມ່ນເຫັນດີ ແລະ ເປັນເອກະພາບກັບປະຊາຊົນ.
- **ຕາງໜ້າ ບ້ານ ສາຍລົມ:** ສະເໜີໃຫ້ກໍ່ຕ້ານເຈື່ອນເພີ້ມເຕີມຢູ່ປາກຫ້ວຍໂຮບເພາະໄລຍະຜ່ານມາມີການເຊາະເຈື່ອນຮຸນແຮງເຂດວັດພະບາດເຊິ່ງເຮັດໃຫ້ເຮືອນປະຊາຊົນເຈື່ອນລົງນ້ຳໝົດຫລັງ.

**5.3. ຄຳເຫັນຂອງຜູ້ເຂົ້າຮ່ວມຈາກ ສະຫະພັນແມ່ຍິງຂອງບັນດາບ້ານທີ່ກ່ຽວຂ້ອງກັບໂຄງການ**

- ສະຫະພັນແມ່ຍິງນະຄອນຫຼວງພະບາງບໍ່ເຄີຍຮູ້ມາກ່ອນວ່າຈະມີໂຄງການຄຸ້ມຄອງຄວາມສ່ຽງໄພພິ ບັດດັ່ງກ່າວເກີດຂື້ນຢູ່ທີ່ນະຄອນຫຼວງພະບາງ, ແຕ່ເມື່ອຮູ້ວ່າຈະມີໂຄງການເຂົ້າເຈົ້າກໍ່ກຽມພ້ອມທີ່ຈະໃຫ້ຄວາມຮ່ວມມືໃນການປຸກລະດົມ ແລະ ສຶກສາອົບຮົມແນວຄິດຂອງພໍ່ແມ່ປະຊາຊົນໃຫ້ເຂົ້າໃຈໃນຈຸດປະສົງຂອງໂຄງການ ແລະ ເຮັດແນວໃດເພື່ອຈະໃຫ້ໂຄງການເກີດຂື້ນໂດຍໄວ,
- ບັນຫາຫຼັກໃນເຂດຕົວເມືອງນະຄອນຫຼວງພະບາງແມ່ນເລື່ອງການຖິ້ມຂີ້ເຫຍື້ອຊະຊາຍ, ນ້ຳເສຍໃນຕົວເມືອງ ແລະ ບັນຫານ້ຳຖ້ວມໃນທຸກໆປີ,
- ຂໍ້ສະເໜີ ຢາກມີການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນ, ແກ້ໄຂບັນຫານ້ຳເປື້ອນ ແລະ ປັບປຸງທິວທັດແຄມນ້ຳ ເພື່ອເຮັດເປັນບ່ອນຄ້າຂາຍ ຂອງປະຊາຊົນທີ່ອາໃສຢູ່ລຽບຕາມແຄມແມ່ນ້ຳຄານ ແລະ ນ້ຳຂອງ ໃນຂົງເຂດນະຄອນຫຼວງພະບາງ.

## 6. ຜົນໄດ້ຮັບຈາກການປຶກສາຫາລື

ກອງປະຊຸມໃນຄັ້ງນີ້ໄດ້ຈັດຂື້ນທີ່ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຫຼວງພະບາງ ເປັນເວລາ02ມື້, ຊຶ່ງມື້ທີ່1 ມີຜູ້ເຂົ້າຮ່ວມຈາກພະແນກການ ແລະ ຫ້ອງການທີ່ກ່ຽວຂ້ອງກັບໂຄງການທັງໝົດ 22 ຄົນ, ເປັນຍິງ 05 ຄົນ, ມື້ທີ2 ມີຜູ້ເຂົ້າຮ່ວມຈາກບັນດາບ້ານທີ່ຢູ່ໃນໂຄງການຈຳນວນທັງໝົດ 33 ຄົນ, ເປັນຍິງ 14 ຄົນ.

- ໃນການປຶກສາຫາລືກັນໃນຄັ້ງນີ້ເຫັນວ່າທຸກຂະແໜງການທີ່ກ່ຽວຂ້ອງທີ່ຖືກເຊີນເຂົ້າຮ່ວມກອງປະ
ຊຸມໃນຄັ້ງນີ້ແມ່ນເຫັນດີເປັນເອກະພາບກັນໃນກອງປະຊຸມໃນຄັ້ງນີ້ແຕ່ລາຍລະອຽດຂອງຈັດຕັ້ງປະຕິບັດຕົວຈິງແມ່ນໃຫ້ມີການສົມທົບເຊິ່ງກັນແລະກັນ ເປັນໄປແຕ່ລະໄລຍະຂອງໂຄງການ.
- ທ່ານປະທານກອງປະຊຸມສະເໜີໃຫ້ໂຄງການນີ້ ເກີດຂື້ນໄວໆໂດຍສະເພາະແມ່ນໃນປີຊີມາເຖິງນີ້
- ໂຄງການນີ້ແມ່ນມີປະໂຫຍດຢ່າງຫລວງຫລາຍໃນການພັດທະນາຕົວເມືອງແບບຍືນຍົງ

- ໃຫ້ເຜີຍແຜ່ຂະຫຍາຍເນື້ອໃນ ຈິດໃຈຂອງກອງປະຊຸມໃນຄັ້ງໃຫ້ລົງໄປທົ່ວເຖິງປະຊາຊົນທີ່ຢູ່ໃນຂົງເຂດຂອງໂຄງການ.

## 7. ແຜນວຽກໃນຕໍ່ໜ້າ

- ສະເໜີໃຫ້ບັນດາບ້ານ ທີ່ກ່ຽວຂ້ອງເກັບກຳຂໍ້ມູນເນື້ອທີ່ດິນແຄມນ້ຳເພື່ອ ຕອບສະໜອງໃຫ້ໂຄງ ການເພີ້ມເຕີມ.
- ສະເໜີໃຫ້ບັນດາບ້ານ ນຳເອົາເນື້ອໃນຈິດໃຈ ຂອງກອງປະຊຸມຄັ້ງນີ້ໄປເຜີຍແຜ່ຂະຫຍາຍລົງສູ່ສະມາຊິກບ້ານ ໃຫ້ທົ່ວເຖິງ ເພື່ອໃຫ້ເຂົ້າໃຈໄວ້ກ່ອນ.
- ສະເໜີໃຫ້ແຕ່ລະພະແນກ ແລະ ຫ້ອງການທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ໃຫ້ມີການປະສານງານກັນຕື່ມໃນຄັ້ງຕໍ່ໆໄປ ພ້ອມກັບຕອບສະໜອງຂໍ້ມູນທີ່ຈຳເປັນໃຫ້ໂຄງການ.

**ຕາງໜ້າ ກົມທາງນ້ຳ ຕາງໜ້າສະຖາບັນຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ**

**ຕາງໜ້າພະແນກ ຍທຂ ແຂວງຫລວງພະບາງ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ພະແນກ ໂຍທາທິການ ແລະ ຂົນສົ່ງ

# ບົດບັນທຶກ

**ກອງປະຊຸມປຶກສາຫາລືກັບ ບັນດາພະແນກການທີ່ກ່ຽວຂ້ອງ, ບັນດາຫ້ອງການທີ່ກ່ຽວຂ້ອງ ແລະ ປະຊາຊົນທີ່ຢູ່ຂອງໂຄງການຄຸ້ມຄອງຄວາມສ່ຽງ ໄພພິບັດ ທີ່ແຂວງ ບໍລິຄຳໄຊ**

**ລະຫວ່າງວັນທີ 20-21/08/2019**

**8. ຄວາມເປັນມາຂອງໂຄງການ**

ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນ້ຳຖ້ວມ ແມ່ນໄດ້ຮັບເງິນເພີ້ມຈາກທະນາຄານໂລກ ເຊິ່ງເມື່ອກ່ອນແມ່ນໄດ້ເຮັດການສຶກສາ ຢູ່ ເມືອງໄຊ ແຂວງ ອຸດົມໄຊ ແລະ ຕົກມາຮອດຕົ້ນປີ 2019ທາງທະນາຄານໂລກໄດ້ໃຫ້ເພີ້ມເຕີມ ແລະ ຂະຫຍາຍໂຄງການໄປສອງແຂວງເພີ້ມ ຄື ແຂວງ ຫລວງພະບາງ, ແຂວງ ບໍລິຄຳໄຊ ແລະ ເພີ້ມເຕີມໃຫ້ແຂວງອຸດົມໄຊ ໃນບ້ວງທັງຫມົດ 25ລ້ານໂດລາສະຫະລັດ. ບ້ວງເງິນເພີ້ມດັ່ງກ່າວນີ້ ແມ່ນສຸມໃສ່ໃນການ ກໍ່ສ້າງຕ້ານເຈື່ອນ ແລະ ປະຕູກັ້ນນ້ຳ ເຊິ່ງສາມາດປິດເປີດໄດ້ ໃນກໍລະນີນ້ຳຖ້ວມຕົວເມືອງ ແລະ ສາມາດດູດນ້ຳອອກໄດ້.

ນອກນັ້ນ ໂຄງການກໍມີງົບປະມານຈຳນວນຫນຶ່ງເພື່ອ ປັບປຸງສວນສາທາລະນະ ພາຍໃນເມືອງທີ່ກ່ຽວຂ້ອງກັບໂຄງການ.

**9. ຈຸດປະສົງຂອງການປຶກສາຫາລື**

ກອງປະຊຸມປຶກສາຫາລືໃນຄັ້ງນີ້ ແມ່ນການສະເຫນີຂໍ້ມູນຂ່າວສານຈຳນວນຫນຶ່ງໃຫ້ບັນດາພະແນກ, ຫ້ອງການ ແລະ ບ້ານທີ່ຢູ່ຂົງເຂດ ຂອງໂຄງການ ໃຫ້ຮັບຮູ້ຂໍ້ມູນຂ່າວຂອງໂຄງການ , ຊອກຮູ້ຄວາມຄິດ ແລະ ຄວາມເຈົ້າໃຈຂອງເຂົາເຈົ້າຕໍ່ກັບໂຄງການ ແລະ ກໍ່ມີການສ□າພາດເພີ້ມເຕີມບັນດາບ້ານ ທີ່ຢູ່ໃນຂົງເຂດຂອງໂຄງການ ໃນນັ້ນ ເລັ່ງໃສ່ສະຫະພັນແມ່ຍິງເປັນຫລັກ.

**10. ວິທີຈັດຕັ້ງປະຕິບັດ**

ພະແນກ ຄົ້ນຄວ້າສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ ຂອງ ສະຖາບັນຄົ້ນຄວ້າ ໂຍທາທິການ ແລະ ຂົນສົ່ງ ຮ່ວມກັບ ກົມ ທາງນໍ້າ ຂື້ນສະເຫນີ ຄວາມເປັນມາຂອງໂຄງການ, ສະຖານທີ່ຕັ້ງຂອງໂຄງການ ດ້ວຍຮູບພາບ ແລະ ແຜນທີ່, ພ້ອມນັ້ນ ກໍສະເຫນີຫນ້າວຽກທີ່ຕ້ອງຈັດຕັ້ງປະຕິບັດ ເຊັ່ນ: ກອບຫນ້າວຽກ ທາງດ້ານສິ່ງແວດລ້ອມ ແລະ ສັງຄົມ, ນະໂຍບາຍກ່ຽວກັບການຍົກຍ້າຍ ແລະ ຊົດເຊີຍ, ກອບຫນ້າວຽກກ່ຽວກັບການຄຸ້ມຄອງຊົນເຜົ່າ ໃນກໍລະນີຖືກກະທົບຮ້າຍແຮງ.

ຫລັງຈາກນັ້ນ ກໍໄດ້ສະເຫນີຄໍາຖາມທີ່ກ່ຽວຂ້ອງກັບວຽກ ສິ່ງແວດລ້ອມ ແລະ ສັງຄົມໃຫ້ຜູ້ທີ່ເຂົ້າຮ່ວມມີຄໍາຄິດຄໍາເຫັນ ແລະ ສະເຫນີແຜນໃນການຈັດຕັ້ງປະຕິບັດຮ່ວມກັນໃນຕໍ່ຫນ້າ.

ກອງປະຊຸມໃນເທື່ອນີ້ ໄດ້ແບ່ງກຸ່ມປຶກສາຫາລືກັນ ພ້ອມກັບວາດແຜນທີ່ນໍ້າຖ້ວມ ຂອງບ້ານທີ່ກ່ຽວຂ້ອງກັບນໍ້າຖ້ວມ.

ລາຍລະອຽດຜູ້ເຂົ້າຮ່ວມ (ໃບຊ້ອນທ້າຍ 1 )

## 11. ເນື້ອໃນຂອງການປຶກສາຫາລື

- ກອບຫນ້າວຽກທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ບ້ວງງົບປະມານເພີ້ມ ໂດຍຫຍໍ້
- ກອກາບຫນ້າວຽກນະໂຍບາຍວ່າດ້ວຍການຍົກຍ້າຍ ແລະ ຊົດເຊີຍ
  + ສໍາຫລວດເກັບກໍາຂໍ້ມູນຜູ້ທີ່ຖືກຜົນກະທົບຈາກໂຄງການ
  + ສ້າງແຜນຍົກຍ້າຍ ແລະ ຊົດເຊີຍ ພ້ອມງົບປະມານ:
    - ສ້າງລາຄາຫົວຫນ່ວຍ
    - ສ້າງມູນຄ່າທົດແທນແຕ່ລະ ຄອບຄົວ
    - ຂັ້ນຕອນ ແລະ ວິທີ ຊົດເຊີຍ,
    - ການສະເຫນີ ແລະ ການແກ້ໄຂຄໍາຮ້ອງທຸກ
    - ການສ້າງຕັ້ງຄະນະກໍາມະການ ຂັ້ນບ້ານ: ເມືອງ, ແຂວງ ແລະ ສູນກາງ
- ປັບປຸງກອບນະໂຍບາຍວ່າດ້ວຍຊົນເຜົ່າ ໃນກໍລະນີຖ້າກະທົບຈາກໂຄງການ (ສ້າງແຜນຟື້ນຟູ ແລະ ປັບປຸງຊີວິດການເປັນຢູ່ຂອງຊົນເຜົ່າ)ກໍລະນີ ຖືກຜົນກະທົບ ເຮັດໃຫ້ມີການຍົກຍ້າຍ, ສູນເສຍລາຍໄດ້ ແລະ ແຕະຕ້ອງຜົນປະໂຫຍດຫນັກຫນ່ວງ
- ເສຍຄ່າຊົດເຊີຍ
- ຟື້ນຟູຊີວິດການເປັນຢູ່
- ສ້າງອາຊີບ ໃຫ້ສາມາດລ້ຽງກຸ້ມຕົນເອງ
- ເສຍຄ່າປ່ວຍການຕ່າງໆ ຖ້າຫາກຖືກ ຕໍ່ຄອບຄົວທີ່ອອ່ນແອ
- ບັນດາທ່ານ ຮູ້ໂຄງການດັ່ງກ່າວນີ້ ມາກ່ອນບໍ? ແລະະ ຮູ້ມາຈາກໃສ
- ຜ່ານມາທາງສະຫະພັນແມ່ຍິງມີສ່ວນຮ່ວມໃນໂຄງການໃດບໍ່? ໂຄງການປະເພດໃດ?
- ສະຫະພັນແມ່ຍິງມີຈຸດປະສົງຢາກມີສ່ວນຮ່ວມໃນໂຄງການນີ້ບໍ່? ມີຫຍັງແດ່?

- ເລື້ອງຜົນກະທົບຕໍ່ສິ່ງແວດລ້ອມ ທ່ານກັງວົນບັນຫາໃດແດ່? ໂຄງການນີ້ ຕ້ອງໄດ້ສຶກສາບັນຫາໃດແດ່ ເປັນຫລັກ?
- ເລື້ອງຜົນກະທົບຕໍ່ຊຸມຊົນ ຫລື ບ່ອນທຳມາຫາກິນ ທ່ານກັງວົນເລື້ອງໃດເປັນຕົ້ນຕົ້ນຕໍ?
- ບັນຫາຊົນເຜົ່າເດ ທ່ານຄິດວ່າມີຜົນກະທົບຫຍັງບໍເປັນຫລັກ? ທ່ານມີວິທີແກ້ໄຂແນວໃດບໍ?
- ການຮ້ອງທຸກ ຮ້ອງຟ້ອງ ບັນດາທ່ານບໍ່ເຂົ້າໃຈຫຍັງແດ່?
- ບັນຫາອື່ນໆ ທີ່ທ່ານສົນໃຈອີກ ມີຫຍັງແດ່?

## 12. ເນື້ອໃນທີ່ໄດ້ຮັບຈາກການປຶກສາຫາລືຂອງຜູ້ເຂົ້າຮ່ວມ

### 12.1. ຄຳເຫັນຂອງຜູ້ເຂົ້າຮ່ວມຈາກບັນດາພະແນກການ ແລະ ບັນດາຫ້ອງການຂອງເມືອງທີ່ກ່ຽວຂ້ອງ

- ຕາງໜ້າ ແນວລາວສ້າງຊາດ ຂອງເມືອງປາກຊັນ ໃຫ້ຄຳເຫັນວ່າ: ສ່ວນໃຫຍ່ແມ່ນເຫັນດີກັບການສະເໜີຂອງ ໂຄງການເພື່ອເຮັດຕ້ານເຈື່ອນ ແລະ ປະຕູປິດເປີດນ້ຳ ເພື່ອປ້ອງກັນນ້ຳຖ້ວມ ຊຶ່ງໄລຍະຜ່ານມາການໄກ່ເກ່ຍ ແມ່ນມີຄວາມຫຍຸ້ງຍາກ ຍ້ອນວ່າທາງອຳນາດການປົກຄອງຂອງບ້ານ ແລະ ເມືອງ ແມ່ນບໍ່ຮູ້ມູນແຕ່ເບື້ອງຕົ້ນຂອງໂຄງການ ແລະ ການໄກ່ເກ່ຍກໍ່ຊັກຊ້າ ບໍ່ໄດ້ຕາມແຜນ.
- ຢາກສະເໜີໃຫ້ມີຂໍ້ມູນຂອງໂຄງການເພີ່ມເຕີມ ເພື່ອຈະໄດ້ນຳໄປເຜີຍແຜ່ໃຫ້ລູກບ້ານເຂົ້າ ແລະ ພ້ອມນີ້ກໍຂໍໃຫ້ໝາຍ ຂອງເຂດຂອງໂຄງການ ເພື່ອໃຫ້ມີຄວາມສະດວກໃນການເກັບກຳຂໍ້ມູນ
- ຢາກໃຫ້ສາມອົງການຈັດຕັ້ງມະຫາຊົນມີສ່ວນຮ່ວມເຂົ້າໃນ ວຽກງານການຍົກຍ້າຍ ແລະ ຊົດເຊີຍ ພ້ອມນັ້ນ ກໍ່ຢາກໃຫ້ມີສ່ວນຮ່ວມ ການຕິດຕາມ ແລະ ກວດກາ ແລະ ແກ້ໄຂຄຳຮ້ອງຟ້ອງຂອງໂຄງການ
- ສະຫະພັນແມ່ຍິງ ຂອງແຂວງໄດ້ໃຫ້ຄຳເຫັນວ່າ: ຜ່ານມາແມ່ນໄດ້ມີສ່ວນຮ່ວມເປັນຄະນະຊີ້ນຳຂອງໂຄງການ ADB ຢູ່ຂັ້ນແຂວງ ແຕ່ບໍ່ໄດ້ລົງເລິກຢູ່ຂັ້ນພື້ນຖານ ສະນັ້ນຈຶ່ງບໍ່ສາມາດເກັບກ□າ ສະພາບຂອງການຍົກຍ້າຍ ຫລື ຊົດເຊີຍອື່ນໆ.
- ຜົນກະທົບສ່ວນໃຫຍ່ຈາກໂຄງການໄລຍະຜ່ານມາ ແມ່ນດິນສວນ ແລະ ຮ້ານຂາຍເຄື່ອງ ແລະ ອາຊີບດັ່ງກ່າວກໍເປັນຂອງເພດຍິງ ດັ່ງຢາກໃຫ້ໂຄງການມີການສ້າງອາຊີບເສີມພວກເຂົາເຈົ້າ ເພື່ອຊົດເຊີຍ ຫລື ສ້າງອາຊີບເສີມ ທົດແທນຜົນກະທົບຕ່າງໆ ທີ່ອາດຈະເກີດຂຶ້ນ
- ຕາງໜ້າ ຈາກຫ້ອງການ ພັດທະນາຕົວເມືອງ ປາກຊັນ: ຢາກໃຫ້ໂຄງການມີອັດຕາກິນ ໃນການລົງໄກ່ເກ່ຍ ຂໍ້ຂັດຂ້ອງໝອງໃຈ ຂອງປະຊາຊົນ.
- ຜົນກະທົບຕໍ່ກັບເຮືອນ, ດິນ ແລະ ຊັບສິນຕົ້ນໄມ້ອື່ນໆ ແມ່ນມີຫລາຍ ແຕ່ການຊົດເຊີຍແມ່ນຢາກໃຫ້ຄິດໄລ່ ບົນພື້ນຖານມູນຄ່າຂອງຫ້ອງຕະຫລາດ ແລະ ໃນນັ້ນ ຜູ້ທີ່ລະເມີດໃນການປຸກສ້າງຢູ່ເຂດສະຫງວນກໍບໍ່ສົມຄວນໃຫ້ມີການຊົດເຊີຍ
- ຄຳເຫັນຂອງ ຫົວໜ້າ ຫ້ອງການ ຍທຂ ເມືອງປາກຊັນ: ຕາຝັ່ງຕາມລຳແມ່ນ້ຳ ແມ່ນມີການເຊາະເຈື່ອນ ແລະ ງົບປະມານໃນການກໍ່ສ້າງ ແລະ ສ້ອມແປງ

- ຫົວໜ້າພະແນກ ຍທຂ ແຂວງ: ໃຫ້ຄຳເຫັນວ່າໄພພິບັດ ອັນຮ້າຍກວ່າໝູ່ພາຍໃນແຂວງ ສ່ວນໃຫຍ່ແມ່ນໄພນ້ຳຖ້ວມ ປະມານ 5 ບ້ານ ແຕ່ບ້ານດັ່ງກ່າວກໍບໍ່ໄດ້ຍົກຍ້າຍໄປບ່ອນໃໝ່ ເພາະເຂົາເຂົ້າຢູ່ເຮືອນຮ້ານທີ່ສູງ ສົມຄວນ, ພວກເຂົາມີຄວາມຫຍຸ້ງໃນການໄປມາ ເພື່ອທຳມາຫາກິນ ແລະ ໄປຕະຫລາດເປັນຕົ້ນ.
- ຫົວໜ້າຂະແໜງທາງນ້ຳໃຫ້ຄຳເຫັນວ່າ: ຄວນສ້າງສູນບັນເທົາທຸກ ເພື່ອພັກຜ່ອນ ແລະ ເກັບມ້ຽນເຄື່ອງໃຊ້ສອຍສ່ວນຕົວ ໃນໄລຍະເວລາຂອງນ້ຳຖ້ວມ.

## 12.2. ຄຳເຫັນຕໍ່ໂຄງການປັບປຸງທາງ 13 ໃຕ້

- ຜ່ານມາໄດ້ມີຫລາຍບຸກຄົນໃຊ້ດິນຖົມທາງເຂົ້າເຮືອນ ຫລື ກິດຈະກຳ ຄ້າຂາຍ ອັນກໍໃຫ້ເກີດນ້ຳຖ້ວມເຮືອນໃກ້ຄຽງ ແລະ ສວນຈຳນວນໜຶ່ງ, ບໍ່ຮູ້ວ່າ ການຖົມດິນຕ້ອງໄດ້ຮັບອະນຸຍາດຈາກຂະແໜ ໂຍທາທິການ ແລະ ຂົນສົ່ງ ຫລື ບໍ?
- ຄຳເຫັນ ຂອງຫົວໜ້າ ຫ້ອງການ ຍທຂ ເມືອງ ປາກຊັນ: ຜົນກະທົບຢູ່ລຽບຕາມທາງ 13 ເໜືອອາດຈະມີຫລາຍຕໍ່ກັບ ເນື້ອທີ່ດິນປຸກສ້າງ, ເຮືອນ, ຮ້ານຂາຍເຄື່ອງ ແລະ ຕົ້ນໄມ້ ແຕ່ໃນນັ້ນ ຜ່ານມາກໍ່ໄດ້ອອກໃບຕາດິນຢູ່ນອກເຂດສະຫງວນ ຂອງທາງແລ້ວ, ສະເພາະຜູ້ທີ່ລະເມີດໃນການປຸກສ້າງກໍຈະມີການສຳຫລວດ ແລະ ກວດກາຄືນວ່າຈຳເປັນບໍທີ່ຈະໄດ້ການຊົດເຊີຍ. ໃນນັ້ນ ຜົນກະທົບຕໍ່ລະບົບນ້ຳປະປາ ແລະ ເສົາໄຟຟ້າກໍ່ຈະໄດ້ມີການສຳຫລວດຄືນຕື່ມອີກ. ການຄາດຄະເນມູນຄ່າໃນການຊົດເຊີຍ ຕ້ອງໄດ້ສົມທົບກັບອຳນາດການປົກຄອງ ເພື່ອຄາດຄະເນມູນຄ່າຊົດໃຫ້ແທດເໝາະກັບສະພາບຕົວຈິງ ແລະ ບໍ່ໃຫ້ມີຂໍ້ຂັດແຍ່ງຢູ່ຂັ້ນທ້ອງຖິ່ນ
- ຄວາມສ່ຽງຕໍ່ກັບອຸປະຕິເຫດໃນເວລາດຳເນີຣການກໍ່ສ້າງທາງ 13 ໃຕ້ ແມ່ນລະບົບປ້າຍເຕືອນທີ່ບໍ່ພຽງພໍເພື່ອນເຕືອນໃຫ້ຜູ້ຂັບຂີ່ຕາມເສັ້ນທາງ
- ສະເໜີໃຫ້ມີການເຮັດຂົວກວ້າງກວ່າເກົ່າເພື່ອເຊື່ອມຕໍ່ໃສ່ເສັ້ນທາງ ຊ່ວງທີ່ມີການຂະຫຍາຍໜ້າທາງ ແລະ ໃນນັ້ນກໍ່ເພື່ອຫລຸດຜ່ອນອຸປຕິເຫດນຳ

## 12.3. ຄຳເຫັນຂອງຜູ້ເຂົ້າຮ່ວມຈາກບັນດາບ້ານທີ່ກ່ຽວຂ້ອງກັບໂຄງການ

- ຜ່ານມາທາງບ້ານ ແມ່ນບໍ່ຮູ້ຂໍ້ມູນຂ່າວສານກ່ຽວກັບ ໂຄງການໃໝ່ ຂອງທາງທະນາຄານໂລກດັ່ງກ່າວນີ້.
- ປະຕູປິດເປີດນ້ຳ ຢູ່ ບ້ານປາກປີງ ແມ່ນຍັງບໍ່ສາມາດຕັນນ້ຳຂອງທີ່ໄຫລເຂົ້າໄດ້100 ເປີເຊັນເທື່ອ ສະເໜີໃຫ້ມີການປັບປຸງຄືນຕື່ມ
- ໃນປີ 1996 ນ້ຳແມ່ນຖ້ວມໜັກກວ່າໝູ່ ຫລັງຈາກທີ່ມີການກໍ່ສ້າງເສັ້ນທາງກໍ່ເຮັດນ້ຳຖ້ວມ ມີຄວາມຖີ່ດີນກວ່າເກົ່າ.
- ໃນປີ 2018 ທີ່ຜ່ານມາ ນ້ຳໄດ້ຖ້ວມ ໃຊ້ເວລາ ປະມານ 2 ເດືອນ ອັນເຮັດໃຫ້ໄຮ່ນາ, ຮົ້ວສວນ ແລະ ເຮັດໃຫ້ຜົນລະປູກ ແລະ ສັດລ້ຽງລົ້ມຕາຍ ເປັນຈຳນວນຫລາຍ.

- ເນື້ອທີ່ດິນຢູ່ບໍລິເວນປະຕູນ້ຳ ແມ່ນດິນສາທາລະນະລັດ ບໍ່ມີດິນສ່ວນບຸກຄົນ ສາມາດເຮັດການກໍ່ສ້າງໄດ້
- ການກໍ່ສ້າງຕ້ານເຈື່ອນ ສ່ວນໃຫຍ່ອາດຈະກະທົບຕໍ່ດິນສວນ ຢູ່ບໍລິເວນແຄມຝັ່ງນ້ຳຂອງ
- ຄວາມເລິກເວລານ້ຳຖ້ວມ ແມ່ນປະມານ 80ຊມ ເທົ່ານັ້ນ.
- ນ້ຳຖ້ວມສ່ວນໃຫຍ່ ແມ່ນຖ້ວມໃນລະຫວ່າງ ເດືອນ ກັນຍາ ແລະ ຕຸລາ ຂອງທຸກໆປີ ໃນນັ້ນຜົນກະທົບອັນຫລັກ ແມ່ນເນື້ອທີ່ນາຖືກເສຍຫາຍ
- ປະຕູປິດເປີດນ້ຳ ທີ່ມີໃນປະຈຸບັນແມ່ນນ້ອຍ ເວລານ້ຳລົງ ນ້ຳຈາກຕົວເມືອງແມ່ນໄຫລອອກຊ້າ
- ປະຕູປິດເປີດນ້ຳ ປະຈຸບັນ ແມ່ນມີພຽງແຕ່ສາມປະຕູ ເຊິ່ງບໍ່ພຽງພໍໃນການຕັນນ້ຳ,ຕ້ອງການໃຫ້ສ້າງເພີ້ມອີກສາມປະຕູຄື: ຢູ່ຫ້ວຍນ້ຳແມ່ລູກ, ຫ້ວຍນ້ຳ ສອງແມ່ລູກ ແລະ ຫ້ວຍນາງນີ.
- ນ້ຳຖ້ວມສາເຫດຍ້ອນມາຈາກນ້ຳຂອງຍົ່ງເຂົ້າບໍລິເວນປາກນ້ຳ ທີ່ບໍ່ມີການປິດເປີດ ເຊິ່ງຜ່ານມາມີ ແຕ່ສາມປະຕູ ແຕ່ກໍບໍ່ພຽງພໍ ເພື່ອຄວບຄຸມບໍ່ໃຫ້ນ້ຳໄຫລເຂົ້າໄດ້
- ການປິດເປີດ ປະຕູນ້ຳທີ່ມີແລ້ວກໍບໍ່ໄດ້ຈັດລະບົບ ເພື່ອປິດເປີດໄດ້ຕາມປົກກະຕິ
- **ຕາງໜ້າ ບ້ານ ໂພສີ:** ເປັນບ້ານຢູ່ລຽບຕາມລຳນ້ຳຂອງ ເປັນບ້ານທີ່ຢູ່ຫຼຸບ ເຊິ່ງນ້ຳຖ້ວມຍ້ອນຝົນຕົກຫນັກ ແລະ ນ້ຳຊັບໄຫລເຂົ້າເພີ້ມທາງຫ້ວຍນາງນີ ເຊິ່ງເວລາຝົນຕົກໃນປີຜ່ານມາ ແມ່ນກະທົບຕໍ່150 ຄອບຄົວ.
- **ບ້ານ ປາກຊັນເຫນືອ:** ຜົນກະທົບເນື່ອງຈາກການກໍ່ສ້າງຕ້ານເຈື່ອນແມ່ນບໍ່ມີຜົນກະທົບຫຍັງເພາະປະຊາຊົນທີ່ປຸກຕູບ ແລະ ຮ້ານຂາຍເຄື່ອງສ່ວນໃຫຍ່ແມ່ນບໍ່ໄດ້ອະນຸຍາດໃຫ້ປຸກ ແລະ ປຸກກໍ່ໄດ້ມີການເຊັນສັນຍາຮ່ວມກັນແລ້ວວ່າປຸກຊົ່ວຄາວ ຖ້າມີໂຄງການແມ່ນໃຫ້ຍົກຍ້າຍ ໂດຍບໍ່ມີການຊົດເຊີຍ.
- ຜົນກະທົບ ທີ່ອາດຈະເກີດຂື້ນ ໃນເວລາຈັດຕັ້ງປະຕິບັດໂຄງການ ແມ່ນກະທົບຕໍ່ຜູ້ປະກອບອາຊີບ ລ້ຽງປາກະຊັງ ຕາມແຄມຝັ່ງແມ່ນນ້ຳຂອງ.
- ສະເຫນີໃຫ້ໂຄງການລິເລີ້ມໄວໆ ເພື່ອບໍ່ໃຫ້ຕາຝັ່ງເຈື່ອນຫລາຍກວ່າເກົ່າ.
- **ບ້ານ ໂນນສະອາດ:** ການປິດເປີດນ້ຳ ບໍ່ຖືກກັບເວລານ້ຳຂື້ນ ນ້ຳລົງ
- ວິທີ ແລະ ຂັ້ນຕອນໃນຮ້ອງຟ້ອງ ແລະ ແກ້ ໄຂຄຳຮ້ອງຟ້ອງ ແມ່ນມີຄວາມເຂົ້າ ແລະ ສາມາດປະຕິບັດໄດ້ ໃນກໍລະນີມີໂຄງການເກີດຂື້ນ

## 12.4. ຄຳເຫັນຂອງຜູ້ເຂົ້າຮ່ວມຈາກ ສະຫະພັນແມ່ຍິງຂອງບັນດາບ້ານທີ່ກ່ຽວຂ້ອງກັບໂຄງການ

- ສະເຫນີຢາກໃຫ້ມີການຝຶກອາຊີບ ໃນການລ້ຽງສັດ ແລະ ປູກຝັງ ໃຫ້ກັບປະຊາຊົນທີ່ຖືກກະທົບຈາກນ້ຳຖ້ວມ
- ຢາກໃຫ້ສະຫະພັນ ແມ່ຍິງຂອງບ້ານ ມີສ່ວນຮ່ວມໃນການຕິດ ກວດກາ ແລະ ແກ້ໄຂ ຄຳຮ້ອງທຸກຮ່ວມກັບ ໂຄງການ.

13. ຜົນໄດ້ຮັບຈາກການປຶກສາຫາລື

ກອງປະຊຸມໃນຄັ້ງນີ້ໄດ້ຈັດຂື້ນທີ່ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຫຼວງພະບາງ ເປັນເວລາ02ມື້, ຊຶ່ງມື້ທີ່1 ມີຜູ້ເຂົ້າຮ່ວມຈາກພະແນກການ ແລະ ຫ້ອງການທີ່ກ່ຽວຂ້ອງກັບໂຄງການທັງໝົດ 22 ຄົນ, ເປັນຍິງ 05 ຄົນ, ມື້ທີ2 ມີຜູ້ເຂົ້າຮ່ວມຈາກບັນດາບ້ານທີ່ຢູ່ໃນໂຄງການຈຳນວນທັງໝົດ 33 ຄົນ, ເປັນຍິງ 14 ຄົນ.

- ໃນການປຶກສາຫາລືກັນໃນຄັ້ງນີ້ເຫັນວ່າທຸກຂະແໜງການທີ່ກ່ຽວຂ້ອງທີ່ຖືກເຊີນເຂົ້າຮ່ວມກອງປະ
  ຊຸມໃນຄັ້ງນີ້ແມ່ນເຫັນດີເປັນເອກະພາບກັນໃນກອງປະຊຸມໃນຄັ້ງນີ້ແຕ່ລາຍລະອຽດຂອງຈັດຕັ້ງປະຕິບັດຕົວຈິງແມ່ນໃຫ້ມີການສົມທົບເຊິ່ງກັນແລະກັນ ເປັນໄປແຕ່ລະໄລຍະຂອງໂຄງການ.
- ທ່ານປະທານກອງປະຊຸມສະເໜີໃຫ້ໂຄງການນີ້ ເກີດຂື້ນໄວໆໂດຍສະເພາະແມ່ນໃນປີຊີມາເຖິງນີ້
- ໂຄງການນີ້ແມ່ນມີປະໂຫຍດຢ່າງຫລວງຫລາຍໃນການປັບປຸງ ແລະ ພັດທະນາຕົວເມືອງປາກຊັນ

14. ແຜນວຽກໃນຕໍ່ຫນ້າ

- ສະເໜີໃຫ້ບັນດາບ້ານ ທີ່ກ່ຽວຂ້ອງເກັບກຳຂໍ້ມູນເນື້ອທີ່ດິນແຄມນ້ຳເພື່ອ ຕອບສະຫນອງໃຫ້ໂຄງ ການເພີ້ມເຕີມ.
- ສະເໜີໃຫ້ບັນດາບ້ານ ນຳເອົາເນື້ອໃນຈິດໃຈ ຂອງກອງປະຊຸມຄັ້ງນີ້ໄປຜັນຂະຫຍາຍລົງສູ່ສະມາຊິກບ້ານ ໃຫ້ທົ່ວເຖິງ ເພື່ອໃຫ້ເຂົ້າໃຈໄວ້ກ່ອນ.
- ສະເໜີໃຫ້ແຕ່ລະພະແນກ ແລະ ຫ້ອງການທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ໃຫ້ມີການປະສານງານກັນຕື່ມໃນຄັ້ງຕໍ່ໆໄປ ພ້ອມກັບຕອບສະຫນອງຂໍ້ມູນທີ່ຈຳເປັນໃຫ້ໂຄງການ.

**ຕາງຫນ້າ ກົມທາງນ້ຳ** **ຕາງຫນ້າສະຖາບັນຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ**

**ຕາງຫນ້າພະແນກ ຍທຂ ແຂວງບໍລິຄ□າໄຊ**